ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC



ບົດລາຍງານປະຈຳປີ
ANNUAL REPORT
2022

I. ຂໍ້ມູນການເງິນທີ່ສຳຄັນ (5 ປີຄືນຫຼັງ) 1
1. ຜົນການດຳເນີນງານ 1
2. ຂໍ້ມູນດ້ານການເງິນ 2
3. ອັດຕາສ່ວນຕົວຊີ້ບອກການດຳເນີນງານ ຈຳນວນໜຶ່ງ (ຕົວເລກແຍກກິດຈະການ ຕ່າງຫາກ) 3
II. ຄຳເຫັນຂອງຜູ້ບໍລິຫານ 4
1. ຄຳເຫັນຂອງທ່ານປະທານສະພາບໍລິຫານ 4
2. ຄຳເຫັນຂອງທ່ານຜູ້ອຳນວຍການ ທຄຕລ 6
3. ຄຳເຫັນຂອງຄະນະກຳມະການກວດສອບ 8
4. ຄຳເຫັນຂອງຄະນະກຳມະການຄຸ້ມຄອງຄວາມສ່ຽງ 9
5. ຄຳເຫັນຂອງຄະນະກຳມະການຄຸ້ມຄອງບໍລິຫານ 10
6. ຄຳເຫັນຂອງຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ 11
III. ຂໍ້ມູນກ່ຽວກັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 12
1. ປະຫວັດການສ້າງຕັ້ງ ແລະ ການເຕີບໃຫຍ່ຂະຫຍາຍຕົວ 12
2. ວິໃສທັດ 13
3. ພາລະກິດ 14
4. ຄຸນຄ່າຫຼັກ 14
5. ບໍລິສັດໃນເຄືອຂ່າຍ 14
IV. ສະພາບເສດຖະກິດໃນປີ 2022 ແລະ ແນວໂນ້ມສຳລັບປີ 2023 15
1. ສະພາບການພື້ນເດັ່ນຂອງສາກົນ ແລະ ພາກພື້ນ 15
2. ສະພາບເສດຖະກິດມະຫາພາກຂອງ ສປປ ລາວ 2022 15
3. ແນວໂນ້ມ ແລະ ທິດທາງສຳລັບປີ 2023 19
1. ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບໃນການດຳເນີນທຸລະກິດ: 5 ໂຄງການ 20
2. ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ: 5 ໂຄງການ 20
3. ການພັດທະນາບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ: 4 ໂຄງການ 20
4. ການສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານຕ້ານການຟອກເງິນໃຫ້ເຂັ້ມແຂງ: 5 ໂຄງການ 20
5. ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ: 1 ໂຄງການ 20
6. ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ : 6 ໂຄງການ 20
7. ການຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ: 5 ໂຄງການ 20
8. ການພັດທະນາຜະລິດຕະພັນ ແລະ ເພື່ອຫັນສູ່ການບໍລິການ ໃນຮູບແບບ Digital Banking: 2 ໂຄງການ 20

9. ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ: 3 ໂຄງການ 20
10. ການພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ: 2 ໂຄງການ 20
11. ການພັດທະນາໂຄງການ PCI Compliance 20
V. ຜົນການດຳເນີນທຸລະກິດຕົ້ນຕໍໃນແຕ່ລະດ້ານ 21
1. ພາບລວມການດຳເນີນງານຂອງ ທຄຕລ ໃນປີ 2022 21
2. ຊັບສິນ ແລະ ໜີ້ສິນ 22
3. ການລະດົມທຶນ 22
4. ການຂະຫຍາຍ ແລະ ການຄຸ້ມຄອງສິນເຊື່ອ: 24
5. ລາຍຮັບ ແລະ ລາຍຈ່າຍ 26
6. ກຳໄລ ແລະ ຂາດທຶນ 28
7. ເງິນປັນຜົນ 28
8. ການຊື້-ຂາຍຮຸ້ນຂອງ ທຄຕລ ຢູ່ໃນຕະຫຼາດຫຼັກຊັບ 29
VI. ໂຄງປະກອບການຈັດຕັ້ງ 31
1. ຜູ້ຖືຮຸ້ນ 31
2. ສະພາບໍລິຫານ 31
3. ຄະນະກຳມະການຂອງສະພາບໍລິຫານ 32
4. ຄະນະອຳນວຍການ 42
5. ການປ່ຽນແປງສຳຄັນ 49
6. ຄ່າຕອບແທນ 49
VII. ກອງປະຊຸມຜູ້ຖືຮຸ້ນ ແລະ ການປະຕິບັດໜ້າທີ່ຂອງສະພາບໍລິຫານ 50
1. ກອງປະຊຸມຜູ້ຖືຮຸ້ນ ແລະ ການຈັດຕັ້ງປະຕິບັດ 50
2. ການປະຕິບັດໜ້າທີ່ຂອງສະພາບໍລິຫານ: 50
3. ການປະຕິບັດໜ້າທີ່ຂອງຄະນະກຳມະການຂັ້ນສະພາບໍລິຫານ 52
VIII. ບົດລາຍງານຄວາມຍືນຍົງ 55
1. ພາບລວມການພັດທະນາແບບຍືນຍົງຂອງການຄຸ້ມຄອງບໍລິຫານ 55
2. ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານ 55
3. ການຄວບຄຸມພາຍໃນ 59
4. ການຄຸ້ມຄອງຄວາມສ່ຽງ 59
5. ການດຳເນີນງານດ້ານເສດຖະກິດ 61

6. ການດຳເນີນງານດ້ານສິ່ງແວດລ້ອມ 62
7. ການອຸປະຖຳສັງຄົມ 63
IX. ຜູ້ກວດສອບອິດສະຫຼະ 64
1. ການບໍລິການ ແລະ ມູນຄ່າກວດສອບ 64
2. ບົດລາຍງານຂອງຜູ້ກວດສອບອິດສະຫຼະ 65
1. ຂໍ້ມູນກ່ຽວກັບທະນາຄານ 82
2. ເຫດການສຳຄັນຕ່າງໆ ໃນໄລຍະປີປັດຈຸບັນ 82
3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ 83
4. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງຂໍ້ສົມມຸດຖານ 100
5. ລາຍຮັບສຸດທິຈາກດອກເບ້ຍ 103
6. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ 104
7. ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ 104
8. ຂາດທຶນສຸດທິຈາກການຊື້-ຂາຍອະນຸພັນ 105
9. ລາຍຮັບອື່ນໆຈາກການດຳເນີນງານ 105
10. ລາຍຈ່າຍພະນັກງານ 105
11. ລາຍຈ່າຍອື່ນໆຈາກການດຳເນີນງານ 106
12. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ (“ທຫລ”) 106
13. ເງິນຝາກຢູ່ທະນາຄານອື່ນ 107
14. ເງິນໃຫ້ກູ້ຢືມແກ່ລູກຄ້າ 107
15. ເງິນຮອສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນໃຫ້ກູ້ຢືມແກ່ລູກຄ້າ 109
16. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ 109
17. ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ 109
18. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ 111
19. ຊັບສົມບັດ ແລະ ອຸປະກອນ 113
20. ຊັບສົມບັດຖິ່ງທີ່ບໍ່ມີຕົວຕົນ 114
21. ສິດນຳໃຊ້ຊັບສິນ 114
22. ຊັບສິນອື່ນໆ 115
23. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ 115
24. ໜີ້ຕ້ອງສົ່ງລູກຄ້າ 116

25. ເງິນກູ້ຢືມຈາກ ທະນາຄານອື່ນ 116
26. ອາກອນ 118
27. ໜີ້ສິນອື່ນໆ 120
28. ທຶນຈົດທະບຽນ 121
29. ສຳຮອງຕາມລະບຽບການ 122
30. ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ 122
31. ໜີ້ສິນທີ່ອາດເກີດຂຶ້ນ ແລະ ຂໍ້ຜູກພັນ 122
32. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ 123
33. ກຳໄລຕໍ່ຮຸ້ນ 124
34. ເງິນປັນຜົນ 125
35. ນະໂຍບາຍບໍລິຫານຄວາມສ່ຽງ 125
36. ການບໍລິຫານທຶນ 126
37. ເຫດການທີ່ເກີດຂຶ້ນຫຼັງມື້ທີ່ອອກເອກະສານລາຍງານ 127
38. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕາຕ່າງປະເທດ ທຽບເທົ່າເງິນກີບລາວໃນທ້າຍປີ 127

X. ສາຂາ ແລະ ໜ່ວຍບໍລິການ 128
1. ສຳນັກງານໃຫຍ່ ແລະ ສາຂາ 128
2. ໜ່ວຍບໍລິການ 129
3. ຫ້ອງແລກປ່ຽນ 133
4. ຕົວແທນບໍລິການໂອນເງິນດ່ວນຊຸມຊົນ (BCOME) 134

XI. ລາງວັນ ແລະ ການຍອມຮັບ 135

XII. ບັນດາທະນາຄານຕົວແທນ 136

I. ຂໍ້ມູນການເງິນທີ່ສຳຄັນ (5 ປີຄືນຫຼັງ)

1. ຜົນການດຳເນີນງານ

ຂໍ້ມູນທາງການເງິນທີ່ສຳຄັນ ຕາມການກວດສອບມາດຖານສາກົນ ແຕ່ປີ 2018-2022 (ແຍກກິດຈະການ ຕ່າງຫາກ)

ຫົວໜ່ວຍ: ລ້ານກີບ

ເນື້ອໃນ	2022	2021	2020	2019	2018
ລາຍຮັບດອກເບ້ຍສຸດທິ	1.270.883	752.597	1.090.203	958.756	930.987
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	364.145	278.198	213.181	215.907	236.664
ລາຍຮັບການຄ້າສຸດທິ	-38.154	4.084	42.236	34.749	49.719
ລາຍຮັບຈາກການດຳເນີນງານອື່ນໆ	121.260	180.385	37.834	116.012	47.107
ລາຍຮັບທັງໝົດຈາກການດຳເນີນງານ	**1.718.134**	**1.215.264**	**1.383.454**	**1.325.424**	**1.264.477**
ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ລູກຄ້າ	-912.720	-649.075	-474.399	-314.919	-221.957
ເກັບຄືນ/ລາຍຈ່າຍການເຊື່ອມຄ່າຈາກການລົງທຶນທາງການເງິນ	-	-	-39.501	-20.650	-27.246
ຂາດທຶນສຸດທິຈາກການຊື້-ຂາຍອະນຸພັນ	-	-	-	-1.204	-
ລາຍຮັບສຸດທິຈາກການດຳເນີນງານ	**805.414**	**566.189**	**869.554**	**988.651**	**1.015.274**
ລາຍຈ່າຍພະນັກງານ	-329.249	-305.806	-324.020	-300.612	-331.775
ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ	-112.823	-81.350	-77.007	-71.619	-
ຄ່າຫລຸ້ຍຫ້ຽນສິດນຳໃຊ້ຊັບສິນ	-7.898	-8.040	-6.690	-6.650	-71.991
ລາຍຈ່າຍອື່ນໆຈາກການດຳເນີນງານ	-195.263	-175.296	-182.420	-179.284	-152.252
ລາຍຈ່າຍທັງໝົດຈາກການດຳເນີນງານ	**-645.233**	**-570.492**	**-590.137**	**-558.165**	**-556.018**
ສ່ວນແບ່ງກຳໄລໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	**36.898**	**16.888**	**-**	**-**	**-**
ກຳໄລກ່ອນອາກອນ	**197.079**	**12.585**	**279.417**	**430.486**	**-459.256**
ອາກອນກຳໄລ	31.111	-1.175	-56.381	-101.004	-105.600
ກຳໄລສຸດທິພາຍໃນປີ	**228.190**	**11.410**	**223.036**	**329.482**	**353.656**

2. ຂໍ້ມູນດ້ານການເງິນ

ເນື້ອໃນ	2022	2021	2020	2019	2018
ເງິນສົດ ແລະ ເງິນຝາກຢູ່ ທະນາຄານ ແຫ່ງ ສປປ ລາວ	27.786.294	19.022.276	12.836.829	9.202.045	5.334.240
ເງິນຝາກຢູ່ທະນາຄານອື່ນ	11.855.719	9.182.845	4.355.395	4.493.536	3.733.419
ເງິນກູ້ໃຫ້ແກ່ລູກຄ້າ	47.235.372	32.372.070	30.762.417	27.490.492	24.366.860
ເງິນລົງທຶນຕ່າງໆ	5.748.355	6.008.327	4.530.540	4.099.607	4.318.262
ຊັບສິນບັດຖິ່ ແລະ ອຸປະ ກອນ	540.325	563.503	601.572	455.721	449.238
ຊັບສິນບັດຖິ່ທີ່ບໍ່ມີຕົວຕົນ	283.285	293.321	245.873	245.042	246.596
ສິດນຳໃຊ້ຊັບສິນ	52.028	55.713	57.005	54.814	-
ຊັບສິນອາກອນລໍຖ້າຊຳລະສະສາງ	116.520	61.030	37.015	34.521	29.099
ຊັບສິນອື່ນໆ	875.117	677.906	470.734	471.430	464.931
ລວມຍອດຊັບສິນ	**94.493.015**	**68.236.991**	**53.897.380**	**46.547.208**	**38.942.645**
ໜີ້ຕ້ອງສົ່ງທະນາຄານ	6.639.183	5.269.436	3.482.800	4.063.635	3.413.129
ໜີ້ຕ້ອງສົ່ງລູກຄ້າ	80.994.071	57.169.169	45.043.495	36.419.928	29.915.142
ກູ້ຢືມຈາກທະນາຄານແຫ່ງ ສປປ ລາວ	4.105.783	3.354.623	2.962.101	3.705.378	3.349.266
ໜີ້ຕ້ອງສົ່ງອາກອນໃນປີ	21.907	-	23.726	41.309	41.065
ໜີ້ຕ້ອງສົ່ງສັນຍາເຊົ່າ	26.553	29.595	23.059	14.249	-
ໜີ້ສິນອື່ນໆ	347.558	282.022	222.197	210.577	239.533
ລວມໜີ້ສິນ	**92.135.055**	**66.104.845**	**51.757.378**	**44.455.076**	**36.958.135**
ທຶນຈົດທະບຽນ	1.038.617	1.038.617	1.038.617	1.038.617	1.038.617
ຄັງສະສົມຕາມລະບຽບການ	836.635	831.667	753.399	604.423	439.550
ການປະເມີນຄືນຜົນປະໂຫຍດ ພະນັກງານຫຼັງອອກການທີ່ກຳນົດ ໄວ້	9.040	11.416	-12.616	-	-
ກຳໄລສະສົມ	473.668	250.446	360.602	449.092	506.343
ລວມຍອດທຶນ	**2.357.960**	**2.132.146**	**2.140.002**	**2.092.132**	**1.984.510**
ລວມໜີ້ສິນ ແລະ ທຶນ	**94.493.015**	**68.236.991**	**53.897.380**	**46.547.208**	**38.942.645**

3. ອັດຕາສ່ວນຕົວຊີ້ບອກການດຳເນີນງານ ຈຳນວນໜຶ່ງ (ຕົວເລກແຍກກິດຈະການ ຕ່າງຫາກ)

ເນື້ອໃນ	2022	2021	2020	2019	2018
ລາຍຮັບດອກເບ້ຍສຸດທິ/ຊັບສິນທັງໝົດ	1,34%	1,10%	2,02%	2,06%	2,39%
ລາຍຮັບດອກເບ້ຍ/ຊັບສິນທີ່ກໍ່ໃຫ້ເກີດດອກເ	5,89%	6,05%	5,21%	5,29%	5,66%
ລາຍຈ່າຍດອກເບຍ /ໜີ້ສິນທີ່ມີດອກເບ້ຍ	2,50%	2,99%	3,39%	3,49%	3,55%
ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ/ລາຍຮັບ	29,91%	26,16%	17,30%	18,57%	20,46%
ລາຍຈ່າຍຈາກການດຳເນີນງານ/ລາຍຮັບທັງໝົດຈາກການດຳເນີນງານ	37,55%	46,94%	42,66%	42,15%	43,97%
ກຳໄລສຸດທິຕໍ່ຊັບສິນ (ROA)	0,24%	0,02%	0,41%	0,71%	0,91%
ກຳໄລສຸດທິຕໍ່ທຶນ (ROE)	9,68%	0,54%	10,28%	15,75%	17,82%
ອັດຕາສ່ວນເງິນກູ້ຕໍ່ເງິນຝາກທັງໝົດ	49,33%	48,67%	60,90%	67,47%	73,82%
ໜີ້ NPL ຕໍ່ເງິນກູ້ທັງໝົດ	3,36%	3,85%	2,96%	2,94%	2,99%
ອັດຕາຜົນຕອບແທນຕໍ່ຮຸ້ນ (ກີບ)	1.099	55	1.074	1.558	1.703
ອັດຕາຄວາມພຽງພໍຂອງທຶນ	6,29%	7,37%	8,55%	10,51%	10,64%

ຫົວໜ່ວຍ: ລ້ານກີບ

	2022	2021	2020	2019	2018
ກຳໄລສຸດທິພາຍໃນປີ	228.190	11.410	223.036	329.482	353.656
ລວມຍອດຊັບສິນ/ໜີ້ສິນ	94.493.015	68.236.991	53.897.380	46.541.455	38.942.645
ຍອດສິນເຊື່ອ	42.808.801	30.080.974	29.216.946	26.987.990	24.338.369
ຍອດເງິນຝາກ	86.782.335	61.802.739	47.974.516	40.002.840	32.968.912

II. ຄຳເຫັນຂອງຜູ້ບໍລິຫານ

1. ຄຳເຫັນຂອງທ່ານປະທານສະພາບໍລິຫານ



ຮຽນ : ບັນດາທ່ານທີ່ນັບຖື ແລະ ຮັກແພງ,

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງທີ່ໄດ້ຕາງໜ້າໃຫ້ສະພາບໍລິຫານ ທຄຕລ ມີຄຳເຫັນຢູ່ໃນປຶ້ມລາຍງານປະຈຳປີ 2022 ສະບັບນີ້. ຂ້າພະເຈົ້າ ຂໍລາຍງານໃຫ້ບັນດາທ່ານຊາບວ່າ: ສະພາບໍລິຫານ ທຄຕລ ຊຸດປະຈຸບັນ ໄດ້ຮັບການແຕ່ງຕັ້ງໂດຍກອງປະຊຸມຜູ້ຖືຮຸ້ນ ທຄຕລ ຄັ້ງວັນທີ 29/10/2021, ປະກອບດ້ວຍສະມາຊິກທັງໝົດ 9 ທ່ານ (ມີ 4 ທ່ານ ໄດ້ສືບຕໍ່ມາຈາກສະພາບໍລິຫານຊຸດກ່ອນ). ໃນນີ້ມີສະມາຊິກອິດສະຫຼະ 4 ທ່ານ, ສະມາຊິກທີ່ບໍ່ແມ່ນຜູ້ບໍລິຫານ 3 ທ່ານ ແລະ ສະມາຊິກທີ່ເປັນຜູ້ບໍລິຫານ 2 ທ່ານ ເຊິ່ງຖືວ່າເປັນໂຄງປະກອບທີ່ສອດຄ່ອງກັບນິຕິກຳທີ່ຜູ້ຄຸ້ມຄອງໄດ້ກຳນົດອອກ.

ມາຮອດໄລຍະກາງເດືອນ 6 ປີ 2022 ສະພາບໍລິຫານຍັງຄົງເຫຼືອສະມາຊິກ 8 ທ່ານ ເນື່ອງຈາກທ່ານ ປອ. ບຸນເຫຼືອ ສິນໄຊ ວໍຣະວົງ ປະທານສະພາບໍລິຫານ ໄດ້ຮັບການແຕ່ງຕັ້ງເປັນຜູ້ວ່າການທະນາຄານແຫ່ງ ສປປ ລາວ ເຊິ່ງທ່ານໄດ້ມີໜັງສືແຈ້ງຕໍ່ສະພາບໍລິຫານ ເພື່ອຢຸດປະຕິບັດໜ້າທີ່ໃນສະພາບໍລິຫານ ທຄຕລ. ສາລັບຕຳແໜ່ງປະທານສະພາບໍລິຫານທີ່ວ່າງລົງນັ້ນແມ່ນທ່ານ ຄຳສຸກ ສູນດາລາ ຮອງປະທານສະພາບໍລິຫານ ໄດ້ຮັບມອບໝາຍເປັນຮັກສາການປະທານສະພາບໍລິຫານ.

ຕໍ່ມາໃນເດືອນ 8 ປີດຽວກັນ ສະພາບໍລິຫານຍັງຄົງເຫຼືອສະມາຊິກ 7 ທ່ານ ເນື່ອງຈາກທ່ານ ຄຳພຸດ ສິດທິລາດ ຜູ້ອຳນວຍການ ທຄຕລ ເຊິ່ງເປັນສະມາຊິກສະພາບໍລິຫານ ໄດ້ຖືກຍົກຍ້າຍໄປຮັບໜ້າທີ່ໃໝ່ຢູ່ທະນາຄານແຫ່ງ ສປປ ລາວ. ສະພາບໍລິຫານ ໄດ້ແຕ່ງຕັ້ງທ່ານນາງ ສາຍສະໝອນ ຈັນທະຈັກ ເປັນຜູ້ອຳນວຍການ ທຄຕລ ເຊິ່ງຕໍ່ມາໄດ້ຖືກແຕ່ງຕັ້ງເປັນສະມາຊິກສະພາບໍລິຫານ ໂດຍກອງປະຊຸມຜູ້ຖືຮຸ້ນ ຄັ້ງວັນທີ 22 ພະຈິກ 2022 ເຮັດໃຫ້ສະມາຊິກສະພາບໍລິຫານ ມີຈຳນວນ 8 ທ່ານ.


ສະພາບໍລິຫານ ໄດ້ແຕ່ງຕັ້ງ 4 ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ: ຄະນະກຳມະການຄຸ້ມຄອງບໍລິຫານ, ຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ແລະ ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ. ແຕ່ລະຄະນະກຳມະການປະກອບດ້ວຍສະມາຊິກສະພາບໍລິຫານ 3 ທ່ານ ເພື່ອເຮັດໜ້າທີ່ພິຈາລະນາແກ້ໄຂ ແລະ ໃຫ້ທິດຊີ້ນຳແກ່ຄະນະອຳນວຍການ ທຄຕລ ໃນການດຳເນີນງານແຕ່ລະດ້ານ. ສະມາຊິກສະພາບໍລິຫານແຕ່ລະທ່ານ ໄດ້ປະກອບສ່ວນປະຕິບັດພາລະບົດບາດຂອງຕົນຢູ່ໃນກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຂອງບັນດາຄະນະກຳມະການເຫຼົ່ານີ້.

ເຖິງຈະມີການປ່ຽນແປງດ້ານບຸກຄະລາກອນໃນສະພາບໍລິຫານຂ້ອນຂ້າງຫຼາຍກໍຕາມ ແຕ່ຕະຫຼອດ ປີ 2022 ທີ່ຜ່ານມາສະພາບໍລິຫານ ກໍໄດ້ປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ໂດຍສະເພາະແມ່ນການນຳພາຄະນະອຳນວຍການ ທຄຕລ ຈັດຕັ້ງປະຕິບັດບັນດາມະຕິຂອງກອງປະຊຸມຜູ້ຖືຮຸ້ນໃຫ້ປະກົດເປັນຈິງ. ໃນນີ້ໄດ້ເປີດກອງປະຊຸມສະພາບໍລິຫານທັງໝົດ 10 ຄັ້ງ ອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ເຊິ່ງອີງຕາມນິຕິກຳທີ່ກ່ຽວຂ້ອງສະພາບໍລິຫານຕ້ອງຈັດກອງປະຊຸມຂອງຕົນຢ່າງໜ້ອຍ 3 ເດືອນຕໍ່ຄັ້ງ. ໃນກອງປະຊຸມແຕ່ລະຄັ້ງສະພາບໍລິຫານໄດ້ປະຕິບັດບົດບາດສຳຄັນໃນການພິຈາລະນາຮັບຮອງບັນຫາສຳຄັນຕ່າງໆ, ອັນທີ່ພື້ນເດັ່ນ ແມ່ນໄດ້ຮັບຮອງການປັບປຸງບຸກຄະລາກອນໃນລະດັບຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການຂອງ ທຄຕລ ໂດຍອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານວິຊາສະເພາະ ແລະ ການຈັດຕັ້ງ; ໄປຄຽງຄູ່ກັນນັ້ນ ໂດຍປະຕິບັດຕາມນະໂຍບາຍສິນເຊື່ອຂອງ ທຄຕລ ສະພາບໍລິຫານ ກໍ່ຍັງໄດ້ເປັນເຈົ້າການພິຈາລະນາການປ່ອຍກູ້ ຕາມຂອບເຂດສິດທີ່ໄດ້ກຳນົດໄວ້ໃນນະໂຍບາຍ ແລະ ລະບຽບການທີ່ກ່ຽວຂ້ອງ ອັນໄດ້ຍົກສູງຄວາມຮອບຄອບໃນການພິຈາລະນາການສະເໜີກູ້ຢືມເງິນທີ່ມີມູນຄ່າສູງ ເພື່ອຮັບປະກັນຄຸນນະພາບສິນເຊື່ອ ແລະ ປ້ອງກັນບັນດາຄວາມສ່ຽງທາງດ້ານສິນເຊື່ອ ພ້ອມທັງໃຫ້ການຊີ້ນຳແກ່ຄະນະອຳນວຍການ ທຄຕລ ໃນການຄຸ້ມຄອງທຸລະກິດທຸກດ້ານ ໃຫ້ມີຄວາມຮັດກຸມ ໃນໄລຍະທີ່ເສດຖະກິດມະຫາພາກຍັງພົບຄວາມຫຍຸ້ງຍາກ ເຊິ່ງຖືກຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ແລະ ຄວາມຂັດແຍ້ງໃນເອີຣົບຕາເວັນອອກ.

ສຳລັບໃນປີ 2023 ນີ້ ອີງໃສ່ສະພາບເສດຖະກິດທີ່ເລີ່ມກັບມາສູ່ແນວໂນ້ມດ້ານບວກ ສືບເນື່ອງຈາກການເປີດປະເທດ ຂ້າພະເຈົ້າເຊື່ອໝັ້ນວ່າ ສະພາບໍລິຫານ, ຄະນະຜູ້ບໍລິຫານ ແລະ ພະນັກງານ ທຄຕລ ທຸກຖ້ວນໜ້າຈະສືບຕໍ່ຄຸ້ມຄອງ ແລະ ພັດທະນາ ທຄຕລ ຢ່າງມີຜົນສຳເລັດ ເພື່ອຮັບປະກັນການບັນລຸແຜນຍຸດທະສາດ ແລະ ວິໄສທັດ ທີ່ວ່າ **ທຄຕລ ເປັນທະນາຄານທີ່ເຂັ້ມແຂງ, ທັນສະໄໝ, ໄດ້ມາດຕະຖານສາກົນ**.

ດ້ວຍຄວາມນັບຖື,

ຮັກສາການປະທານສະພາບໍລິຫານ ທຄຕລ



ຄຳສຸກ ສຸນດາລາ

2. ຄຳເຫັນຂອງທ່ານຜູ້ອຳນວຍການ ທຄຕລ



ບັນດາທ່ານຜູ້ຖືຮຸ້ນ ແລະ ລູກຄ້າຜູ້ມີອຸປະການະຄຸນ ທີ່ນັບຖື ແລະ ຮັກແພງ.

ຂໍສະແດງຄວາມຂອບໃຈທີ່ບັນດາທ່ານໄດ້ໃຫ້ຄວາມສົນໃຈການລາຍງານ ແລະ ຂໍ້ມູນຂ່າວສານຂອງ ທຄຕລ.

ກ່ອນອື່ນໝົດ ຂ້າພະເຈົ້າ ຂໍລາຍງານໃຫ້ທ່ານຊາບວ່າ ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງທີ່ໄດ້ຮັບຄວາມໄວ້ວາງໃຈຈາກການຈັດຕັ້ງ ທີ່ໄດ້ມອບໝາຍໃຫ້ຂ້າພະເຈົ້າເປັນຜູ້ອຳນວຍການ ທຄຕລ ພາຍຫຼັງທີ່ທ່ານຜູ້ອຳນວຍການຄົນກ່ອນໄດ້ຖືກຍົກຍ້າຍໄປຮັບໜ້າທີ່ໃໝ່ຢູ່ທະນາຄານແຫ່ງ ສປປ ລາວ. ພິທີມອບຮັບໜ້າທີ່ໄດ້ຈັດຂຶ້ນໃນວັນທີ 2 ສິງຫາ 2022 ແລະ ຂ້າພະເຈົ້າ ກໍໄດ້ເຂົ້າປະຕິບັດໜ້າທີ່ໃນວັນທີ 3 ສິງຫາ 2022.

ໃນປີ 2022, ສະພາບເສດຖະກິດໂລກ ແລະ ພາກພື້ນມີການຜັນແປຢ່າງສະລັບຊັບຊ້ອນ ເປັນຕົ້ນແມ່ນບັນຫາຂໍ້ຂັດແຍ່ງໃນເອີຣົບຕາເວັນອອກ, ການແຜ່ລະບາດຂອງພະຍາດໂຄວິດ 19; ສຳລັບຢູ່ພາຍໃນປະເທດ ສະພາບການເງິນ- ເງິນຕາຍັງພົບຂໍ້ຫຍຸ້ງຍາກຫຼາຍດ້ານເຊັ່ນ: ອັດຕາເງິນເຟີ້ສູງ, ອັດຕາແລກປ່ຽນເໜັງຕີງແຮງ ແລະ ສະພາບຄວາມຫຍຸ້ງຍາກ ອື່ນໆ. ທັງໝົດເລົ່ານັ້ນລ້ວນແຕ່ສິ່ງຜົນກະທົບບໍ່ໜ້ອຍຕໍ່ການດຳເນີນທຸລະກິດຂອງ ທຄຕລ.

1. ໄດ້ສຸມໃສ່ແກ້ໄຂບັນຫາທີ່ລໍ້ແຫຼມຂອງ ທຄຕລ ໂດຍສະເພາະແມ່ນໜີ້ບໍ່ເກີດດອກອອກຜົນໃຫ້ຄ່ອຍໆຫຼຸດລົງເທື່ອລະກ້າວ ດ້ວຍຫຼາຍວິທີການທີ່ເໝາະສົມໃນເງື່ອນໄຂໃໝ່;
2. ໄດ້ສຸມໃສ່ປັບປຸງ ແລະ ພັດທະນາການໃຫ້ບໍລິການທຸກປະເພດຜະລິດຕະພັນໃຫ້ດີຂຶ້ນ ເພື່ອຕອບໂຈດກັບຄວາມຕ້ອງການຂອງລູກຄ້າໃນສະພາບແວດລ້ອມທີ່ມີການແຂ່ງຂັນສູງຂຶ້ນ ບົນພື້ນຖານຄວາມທັນສະໄໝ, ວ່ອງໄວ,ໝັ້ນໃຈ ແລະ ສາມາດກວດສອບໄດ້.
3. ໂຈະການປ່ອຍກູ້ໃຫ້ໂຄງການໄລຍະຍາວ ຍົກເວັ້ນ ໂຄງການທີ່ມີແຫຼ່ງລາຍຮັບແນ່ນອນ (ມີສັນຍາຊື້ຂາຍແນ່ນອນ) ແລະ ໂຄງການ ຫຼື ກິດຈະການທີ່ລັດຊຸກຍູ້ຕາມນະໂຍບາຍມະຫາພາກ ເຊັ່ນ: ການຜະລິດເພື່ອສົ່ງອອກ ແລະ ການຜະລິດເພື່ອທົດແທນການນຳເຂົ້າ;
4. ສືບຕໍ່ລົງຕິດຕາມໂຄງການຂອງລູກຄ້າສິນເຊື່ອ ແລະ ຕິດຕາມຫຼັກຊັບຄ้ຳປະກັນ ເພື່ອແກ້ໄຂລູກຄ້າສິນເຊື່ອທີ່ເປັນຄວາມສ່ຽງ ແລະ ລູກຄ້າທີ່ເປັນໜີ້ເສຍ; ພ້ອມກັນນີ້ໄດ້ມີການວ່າຈ້າງບໍລິສັດທີ່ປຶກສາທາງດ້ານກົດໝາຍ ເພື່ອທົບທວນ ແລະ ສ້າງສັນຍາເງິນກູ້ຊ່ວຍ ທຄຕລ ໃຫ້ມີຄວາມຮັດກຸມຍິ່ງຂຶ້ນ;
5. ການຈັດຊື້ ແລະ ການລົງທຶນທີ່ມີມູນຄ่ำສູງ ກ່ຳໄດ້ມີການພິຈາລະນາ ແລະ ຈັດລຽງຕາມບຸລິມະສິດ, ລາຍການໃດທີ່ບໍ່ທັນຈຳເປັນເລັ່ງດ່ວນ ກ່ຳໄດ້ມີການໂຈະໄວ້ກ່ອນ;
6. ໄດ້ປັບປຸງກົງຈັກການຈັດຕັ້ງຄືນໃໝ່ ທີ່ຮັດກຸມກວ່ເກົ່ຳ ເພື່ອຮັບປະກັນການດຳເນີນທຸລະກິດ ແລະ ເພື່ອປະຢັດຕົ້ນທຶນທີ່ບໍ່ຈຳເປັນຂອງ ທຄຕລ;

ສຳລັບໄລຍະທີ່ຂ້າພະເຈົ້າເຂົ້າຮັບໜ້າທີ່ເປັນຜູ້ອຳນວຍການ ຂ້າພະເຈົ້າໄດ້ເອົາໃຈໃສ່ລົງຕິດຕາມການບໍລິຫານຄຸ້ມຄອງຢູ່ຂັ້ນທ້ອງຖິ່ນຂອງບັນດາສາຂາ ເພື່ອກຳແໜ້ນສະພາບການດຳເນີນງານ ແລະ ສະພາບແນວຄິດຈິດໃຈຂອງພະນັກງານ ແລະ ສະພາບທຸລະກິດຂອງລູກຄ้າເງິນກ้ູຈຳນວນໜຶ່ງ ເພື່ອນຳມາປັບປຸງການຄຸ້ມຄອງບໍລິຫານໃຫ້ສອດຄ่ອງ; ໄດ້ນຳພາ ທຄຕລ ເຂົ້າເປັນສະມາຊິກອົງການປະກັນສັງຄົມແຫ່ງຊາດ ເພື່ອປະຕິບັດພັນທະສະຫວັດດີການພື້ນຖານຂອງພະນັກງານຕາມກົດໝາຍ. ນອກຈາກນີ້ ທຄຕລ ຍັງໄດ້ປັບປຸງນະໂຍບາຍ ສຳລັບພະນັກງານຈຳນວນໜຶ່ງ ເພື່ອແກ້ໄຂຊີວິດການເປັນຢູ່ຂອງພະນັກງານໃຫ້ດີຂຶ້ນ.

ສຳລັບດ້ານການບໍລິການ ທຄຕລ ໄດ້ເນັ້ນໃສ່ການບໍລິການທີ່ທັນສະໄໝ ໄປຕາມລວງຂອງຍຸກດ້ານດິຈິຕອນ ເພື່ອນຳສະເໜີປະສົບການໃໝ່ໆໃຫ້ແກ່ລູກຄ้າບຸກຄົນ ແລະ ລູກຄ้ານິຕິບຸກຄົນ ໂດຍເນັ້ນໃສ່ການບໍລິການທາງເອເລັກໂຕນິກ ເພື່ອອຳນວຍ

ຄວາມສະດວກໃຫ້ແກ່ລູກຄ້າ ແລະ ຍົກລະດັບການສ້າງລາຍຮັບຈາກຄ່າທຳນຽມຢ່າງຕໍ່ເນື່ອງ. ໃນນີ້ ທຄຕລ ໄດ້ຂະຫຍາຍການບໍລິການຮັບຊຳລະຜ່ານລະບົບເອເລັກໂຕນິກໃຫ້ແກ່ຫຼາຍໆພາກສ່ວນ, ມີການເພີ່ມຈຳນວນຕູ້ເອທີເອັມ, ຕູ້ຝາກເງິນ ແລະ ຂະຫຍາຍຈຳນວນຫ້າງຮ້ານທີ່ຮັບຊຳລະດ້ວຍ QR Scan ໃນຂອບເຂດທົ່ວປະເທດ. ໄປຄຽງຄູ່ກັນນັ້ນ ທຄຕລ ຍັງໄດ້ເອົາໃຈໃສ່ການຄຸ້ມຄອງຄຸນນະພາບສິນເຊື່ອ ແລະ ການແກ້ໄຂໜີ້ເສຍ ດ້ວຍຫຼາຍວິທີການ ເຮັດໃຫ້ ທຄຕລ ສາມາດເກັບລາຍຮັບຄືນໄດ້ໃນລະດັບທີ່ໜ້າພໍໃຈ.

ດ້ວຍເຫດນີ້, ຜົນດຳເນີນງານຂອງ ທຄຕລ ໃນປີ 2022 ໄດ້ມີຜົນສຳເລັດດີຂຶ້ນເມື່ອທຽບໃສ່ປີຜ່ານມາ ແລະ ສາມາດລື່ນແຜນການທີ່ໄດ້ວາງໄວ້ ເຊິ່ງ ທຄຕລ ຈະສະເໜີການຈ່າຍເງິນປັນຜົນປະຈຳປີ 2022 ໃຫ້ແກ່ຜູ້ຖືຮຸ້ນ ຕາມລະບຽບການ ແລະ ຂັ້ນຕອນ

ນະໂອກາດນີ້ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງຕໍ່ການນຳທຸກຂັ້ນທີ່ໄດ້ເອົາໃຈໃສ່ຊຸກຍູ້ ແລະ ຊີ້ນຳ-ນຳພາ ທຄຕລ ມາໂດຍຕະຫຼອດ, ຕະຫຼອດເຖິງບັນດາລູກຄ້າຜູ້ມີອຸປາທະລະຄຸນທີ່ຍາມໃດກໍ່ໄດ້ໃຫ້ຄວມເຊື່ອໝັ້ນ ແລະ ໃຊ້ບໍລິການຂອງ ທຄຕລ ດ້ວຍດີສະເໝີມາ. ໃນປີ 2023 ນີ້ ຄາດວ່າພວກເຮົາຍັງຈະສືບຕໍ່ປະເຊີນກັບສິ່ງທ້າທາຍຫຼາຍດ້ານ ແຕ່ຂ້າພະເຈົ້າ ພ້ອມດ້ວຍຄະນະຜູ້ບໍລິຫານ ແລະ ພະນັກງານ ທຄຕລ ທັງໝົດ ຈະສຸມທຸກຄວາມສາມາດ ແລະ ກຳລັງແຮງ ສັງລວມ ເພື່ອບັນລຸເປົ້າໝາຍການດຳເນີນງານ ແລະ ຮັກສາຜົນປະໂຫຍດສູງສຸດຂອງອົງກອນແລະຜູ້ຖືຮຸ້ນ.

ດ້ວຍຄວາມນັບຖື,

ຜູ້ອຳນວຍການ ທຄຕລ

ສາຍສະໝອນ ຈັນທະຈັກ

3. ຄຳເຫັນຂອງຄະນະກຳມະການກວດສອບ



ຄະນະກຳມະການກວດສອບຂອງ ທຄຕລ ປະກອບດ້ວຍສະມາຊິກສະພາບໍລິຫານ 3 ທ່ານ, ໃນນັ້ນມີສະມາຊິກອິດສະຫຼະ 2 ທ່ານ ແລະ ອີກ 1 ທ່ານ ເປັນສະມາຊິກທີ່ບໍ່ແມ່ນຜູ້ບໍລິຫານ ເຊິ່ງສາມາດຮັບປະກັນຄວາມເປັນອິດສະຫຼະໃນການປະຕິບັດພາລະບົດບາດຂອງຄະນະກຳມະການ ໃນການຊີ້ນຳວຽກງານກວດສອບພາຍໃນຂອງ ທຄຕລ ແລະ ກຳນົດນະໂຍບາຍ ກ່ຽວກັບ ວຽກງານກວດສອບພາຍໃນດັ່ງກ່າວ, ພິຈາລະນານຳສະເໜີການແຕ່ງຕັ້ງຜູ້ກວດສອບອິດສະຫຼະ, ປະສານງານກັບຜູ້ກວດສອບພາຍນອກທີ່ມາຈາກຜູ້ຄຸ້ມຄອງແຕ່ລະພາກສ່ວນ ແລະ ອົງການລັດທີ່ກ່ຽວຂ້ອງ. ທັງໝົດນີ້ ກໍເພື່ອຮັບປະກັນວຽກງານຂອງ ທຄຕລ ໄດ້ດຳເນີນທຸລະກຳດ້ານການເງິນ-ການທະນາຄານ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມກົດໝາຍ, ລະບຽບການ ແລະ ຫຼັກການບັນຊີທີ່ໄດ້ກຳນົດໄວ້.

ໃນໄລຍະປີ 2022 ທີ່ຜ່ານມາ, ຄະນະກຳມະການກວດສອບ ໄດ້ຈັດກອງປະຊຸມຂອງຕົນຂຶ້ນຢ່າງເປັນປົກກະຕິຕາມຮອບວຽນ ທີ່ໄດ້ກຳນົດໄວ້ໃນລະບຽບຂອງ ທຄຕລ, ນອກຈາກນັ້ນກໍ່ໄດ້ມີການຕິດຕາມຜົນການກວດສອບຂອງບັນດາຜູ້ກວດສອບຈາກແຕ່ລະພາກສ່ວນ ໃນນັ້ນລວມມີ: ຜູ້ກວດສອບຈາກ ທຫລ, ຜູ້ກວດສອບຈາກອົງການກວດສອບແຫ່ງລັດ, ຜູ້ກວດສອບຂອງກຸ່ມສ່ວຍສາອາກອນ ແລະ ຜູ້ກວດສອບອິດສະຫຼະທີ່ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນ ໄດ້ແກ່ບໍລິສັດ PwC. ຄະນະກຳມະການ ຍັງໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ຊີ້ນຳ ທຄຕລ ໃນການແກ້ໄຂບັນດາຂໍ້ພິບເຫັນ ຫຼື ຄຳແນະນຳຂອງຜູ້ກວດສອບ ເພື່ອປັບປຸງແຕ່ລະວຽກງານໃຫ້ດີຂຶ້ນຕາມຂໍ້ພິບເຫັນ ຫຼື ຄຳແນະນຳດັ່ງກ່າວ.

ໂດຍລວມເຫັນວ່າ ທຄຕລ ໄດ້ປະຕິບັດຕາມຫຼັກການບັນຊີ ແລະ ການເຄື່ອນໄຫວບົນພື້ນຖານລະບຽບຫຼັກການໄດ້ເປັນຢ່າງດີ. ສຳລັບບັນດາຄຳແນະນຳຂອງຜູ້ກວດສອບພາຍນອກ, ຄະນະກຳມະການກວດສອບ ກໍ່ໄດ້ມີທິດຊີ້ນຳໃຫ້ຄະນະຜູ້ບໍລິຫານ ທຄຕລ ນຳໄປປັບປຸງແກ້ໄຂຢ່າງສອດຄ່ອງ. ນອກຈາກນີ້ກໍຍັງເຫັນໄດ້ວ່າ ຜ່ານການເຄື່ອນໄຫວຂອງຄະນະກຳມະການກວດສອບນັ້ນ ບັນດາຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ທຄຕລ ທີ່ກ່ຽວຂ້ອງ ໄດ້ໃຫ້ຄວາມສະດວກເປັນຢ່າງດີຕໍ່ການປະຕິບັດໜ້າທີ່ຂອງຄະນະກຳມະການ ເປັນຕົ້ນແມ່ນການໃຫ້ຂໍ້ມູນ ແລະ ເຂົ້າເຖິງ ບັນດາເອກະສານຕ່າງໆ ທີ່ຄະນະກຳມະການໄດ້ສະເໜີຂໍ.

ດ້ານວຽກງານເປີດເຜີຍຂໍ້ມູນ ກໍເຫັນໄດ້ວ່າ ທຄຕລ ໄດ້ດຳເນີນການເປີດເຜີຍຂໍ້ມູນຢ່າງເປັນປົກກະຕິ ໂດຍສອດຄ່ອງກັບລະບຽບການເປີດເຜີຍຂໍ້ມູນ ເຊິ່ງຊ່ວຍໃຫ້ຜູ້ຖືຮຸ້ນ, ນັກລົງທຶນ ແລະ ສັງຄົມທົ່ວໄປ ສາມາດເຂົ້າເຖິງບັນດາຂໍ້ມູນການດຳເນີນທຸລະກິດ ແລະ ຮັບຮູ້ບັນດາການເຄື່ອນໄຫວທີ່ສຳຄັນຂອງ ທຄຕລ ໃນແຕ່ລະໄລຍະໄດ້ເປັນຢ່າງດີ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານຄະນະກຳມະການກວດສອບ

ສອນໄຊ ສີລາເພັດ

4. ຄຳເຫັນຂອງຄະນະກຳມະການຄຸ້ມຄອງຄວາມສ່ຽງ



ຄະນະກຳມະການຄຸ້ມຄອງຄວາມສ່ຽງຂອງ ທຄຕລ ປະກອບດ້ວຍສະມາຊິກ ສະພາບໍລິຫານ 3 ທ່ານ, ໃນນັ້ນມີສະມາຊິກອິດສະຫຼະ 2 ທ່ານ ແລະ ອີກ 1 ທ່ານ ເປັນ ສະມາຊິກທີ່ບໍ່ແມ່ນຜູ້ບໍລິຫານ ເຊິ່ງໂຄງປະກອບດັ່ງກ່າວສາມາດຮັບປະກັນປະສິດຕິ ພາບໃນການຄົ້ນຄວ້າພິຈາລະນາບັນດາວຽກງານຄຸ້ມຄອງຄວາມສ່ຽງຂອງ ທຄຕລ ຕາມ ລະບຽບຫຼັກການທີ່ໄດ້ວາງໄວ້.

ໃນປີ 2022 ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ເອົາໃຈໃສ່ຕິດຕາມ ການອອກລະບຽບການ ແລະ ນະໂຍບາຍ ກ່ຽວກັບ ວຽກງານຄຸ້ມຄອງຄວາມສ່ຽງຂອງ ທຄຕລ ໂດຍສະເພາະແມ່ນໄດ້ຕິດຕາມ ແລະ ຊີ້ນຳການຈັດຕັ້ງປະຕິບັດບັນດາໂຄງການ ແລະ ແຜນງານສຳຫຼັບການກຽມນຳໃຊ້ຫຼັກການບາເຊ ⅡⅡ ເຊິ່ງ ທຄຕລ ໄດ້ດຳເນີນມາ ນັບແຕ່ປີ 2018. ຄະນະກຳມະການຄຸ້ມຄອງຄວາມສ່ຽງ ກໍ່ຍັງໄດ້ມີການຕິດຕາມການຈັດຕັ້ງປະຕິບັດວຽກຄຸ້ມຄອງຄວາມສ່ຽງຂອງ ທຄຕລ ເຊິ່ງ ທຄຕລ ໄດ້ສ້າງຕົວຊີ້ວັດບັນດາຄວາມສ່ຽງແຕ່ລະດ້ານ. ໂດຍລວມແລ້ວບັນດາຕົວຊີ້ວັດຕ່າງໆ ສ່ວນຫຼາຍກໍ່ຢູ່ໃນລະດັບ ທີ່ສາມາດຍອມຮັບໄດ້.

ແຕ່ເຖິງຢ່າງໃດກໍ່ຕາມ ຍັງມີຕົວຊີ້ວັດຈຳນວນໜ້ອຍໜຶ່ງທີ່ເກີນລະດັບຍອມຮັບໄດ້ ແລະ ຈຳເປັນຕ້ອງໄດ້ຮັບການຕິດຕາມ ຢ່າງໃກ້ຊິດເຊັ່ນ: ການປ່ອຍກູ້ໃຫ້ບາງຂະແໜງການເສດຖະກິດເກີນຂອບເຂດທີ່ລະບຽບກຳນົດໄວ້ ແລະ ການນຳໃຊ້ແຫຼ່ງທຶນໄລຍະ ສັ້ນເຂົ້າໃນການປ່ອຍກູ້ໄລຍະຍາວ. ຕໍ່ບັນດາລາຍການເຫຼົ່ານີ້ ຄະນະຜູ້ບໍລິຫານ ທຄຕລ ໄດ້ຊີ້ແຈງ ແລະ ເຫັນວ່າມີເຫດຜົນເໝາະສົມ ເຊິ່ງຄະນະກຳມະການຄຸ້ມຄອງຄວາມສ່ຽງ ຍັງໄດ້ມີຄຳເຫັນໃຫ້ ທຄຕລ ນຳໄປຄົ້ນຄວ້າເພດຕະການຫາທາງແກ້ໄຂ ເຊິ່ງເຫັນວ່າ ສັດສ່ວນທີ່ເກີນລະດັບຍອມຮັບໄດ້ນັ້ນ ກໍ່ມີທ່າອ່ຽງຫຼຸດລົງຢ່າງຕໍ່ເນື່ອງ ເຖິງວ່າຈະຍັງຄົງຢູ່ໃນລະດັບທີ່ຕ້ອງໄດ້ເອົາໃຈໃສ່ກໍ່ຕາມ.

ນອກຈາກນີ້, ຄະນະກຳມະການຄຸ້ມຄອງຄວາມສ່ຽງ ຍັງໄດ້ໃຫ້ທິດຊີ້ນຳ, ຕິດຕາມການຄົ້ນຄວ້ານະໂຍບາຍ ແລະ ຮັບຮອງ ນະໂຍບາຍຈຳນວນໜຶ່ງທີ່ຕິດພັນກັບການຄຸ້ມຄອງຄວາມສ່ຽງ ເພື່ອຍົກລະດັບວຽກງານຄຸ້ມຄອງຄວາມສ່ຽງຂອງ ທຄຕລ ໄປຕາມ ຫຼັກການບາເຊ ⅡⅡ ແລະ ການປະຕິບັດຂອງສາກົນ.

ດ້ວຍຄວາມນັບຖື,

ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ

ທສຈ. ປອ. ທອງເພັດ ຈັນທະນີວົງ

5. ຄຳເຫັນຂອງຄະນະກຳມະການຄຸ້ມຄອງບໍລິຫານ



ຄະນະກຳມະການຄຸ້ມຄອງບໍລິຫານຂອງ ທຄຕລ ປະກອບດ້ວຍສະມາຊິກ ຈຳນວນ 4 ທ່ານ ເຊິ່ງໃນນັ້ນມີ ສະມາຊິກທີ່ເປັນຜູ້ບໍລິຫານ 2 ທ່ານ ແລະ ສະມາຊິກ ອິດສະຫຼະ 2 ທ່ານ. ຄະນະກຳມະການນີ້ມີພາລະບົດບາດສຳຄັນໃນການຊ່ວຍສະພາ ບໍລິຫານຕິດຕາມ ແລະ ຊີ້ນຳຄະນະອຳນວຍການຂອງ ທຄຕລ ແລະ ພະແນກການທີ່ ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດແຜນທຸລະກິດໃນແຕ່ລະໄລຍະ.

ຕະຫຼອດປີ 2022 ຄະນະກຳມະການຄຸ້ມຄອງບໍລິຫານໄດ້ເປີດກອງປະຊຸມ ຢ່າງເປັນປົກກະຕິ ເພື່ອຮັບຟັງການລາຍງານຜົນດຳເນີນງານຂອງແຕ່ລະພະແນກການທີ່ ມີບົດບາດສຳຄັນໃນການຈັດຕັ້ງປະຕິບັດແຜນທຸລະກິດຕົ້ນຕໍຂອງ ທຄຕລ ເປັນຕົ້ນ ແມ່ນວຽກງານສິນເຊື່ອ, ວຽກງານບໍລິຫານທຶນ, ວຽກງານບໍລິຫານ-ການເງິນ, ວຽກ ງານບັນຊີ, ວຽກງານຄົ້ນຄ້ວາ ແລະ ພັດທະນາ ແລະອື່ນໆ. ພ້ອມທັງໄດ້ໃຫ້ທິດຊີ້ນຳແກ່ ແຕ່ລະພາກສ່ວນ ເພື່ອປັບປຸງ-ແກ້ໄຂບັນຫາຂໍ້ຫຍຸ້ງຍາກຕ່າງໆ ເພື່ອໃຫ້ສາມາດບັນລຸຜົນດຳເນີນທຸລະກິດຕາມແຜນການທີ່ວາງໄວ້.

ນອກຈາກນີ້, ຄະນະກຳມະການຄຸ້ມຄອງບໍລິຫານ ຍັງໄດ້ປະຕິບັດບົດບາດສຳຄັນໃນການຄົ້ນຄວ້າບັນດານິຕິກຳສຳຄັນໆ ຂອງ ທຄຕລ ທີ່ຕິດພັນກັບວຽກງານຄຸ້ມຄອງບໍລິຫານກ່ອນນຳເຂົ້າສະເໜີຕໍ່ກອງປະຊຸມສະພາບໍລິຫານ.

ໄປຄຽງຄູ່ກັນກັບການຊີ້ນຳຂອງຄະນະກຳມະການຄຸ້ມຄອງບໍລິຫານນັ້ນ ໃນແຕ່ລະໄຕຣມາດ ທຄຕລ ກໍ່ໄດ້ຈັດກອງປະຊຸມ ທົບທວນຜົນດຳເນີນທຸລະກິດປະຈຳໄຕຣມາດ ເຊິ່ງບັນດາພະແນກ ແລະ ສາຂາ ໃນຂອບເຂດທົ່ວປະເທດ ໄດ້ລາຍງານການດຳເນີນ ງານຂອງຕົນເອງ ແລະ ສະເໜີແຜນດຳເນີນງານໃນຕໍ່ໜ້າ ເພື່ອໃຫ້ຄະນະອຳນວຍການໄດ້ຮັບຊາບ ແລະ ມີຄຳເຫັນຊີ້ນຳ. ນອກຈາກ ນີ້, ກອງປະຊຸມທົບທວນ ຍັງເປີດໂອກາດໃຫ້ແກ່ການແລກປ່ຽນບົດຮຽນ ແລະ ປະສົບການຂອງແຕ່ລະພາກສ່ວນທີ່ເຂົ້າຮ່ວມກອງ ປະຊຸມ, ພ້ອມນັ້ນກໍ່ເປັນເວທີສຳລັບແລກປ່ຽນຄຳຄິດເຫັນ ກ່ຽວກັບ ການປັບປຸງແກ້ໄຂບັນຫາ ແລະ ການປະສານງານພາຍໃນ ໃຫ້ ດີຂຶ້ນ ເພື່ອຮັບປະກັນຄວາມຄ່ອງຕົວໃນການດຳເນີນງານແຕ່ລະດ້ານ.

ເຫັນໄດ້ວ່າການຕິດຕາມ ແລະ ໃຫ້ຄຳຊີ້ນຳແກ່ ທຄຕລ ໃນການດຳເນີນທຸລະກິດ ແລະ ການປະຕິບັດແຜນການໃນແຕ່ລະ ດ້ານໄດ້ຮັບການເອົາໃຈໃສ່ເປັນຢ່າງດີ ທັງໃນລະດັບສະພາບໍລິຫານ ໂດຍຜ່ານຄະນະກຳມະການຄຸ້ມຄອງບໍລິຫານ ແລະ ໃນລະດັບ ຂອງຄະນະອຳນວຍການ ໂດຍຜ່ານກອງປະຊຸມທົບທວນປະຈຳໄຕຣມາດ ເພື່ອພ້ອມກັນເຮັດໃຫ້ການດຳເນີນທຸລະກິດຂອງ ທຄຕລ ສອດຄ່ອງ ແລະ ບັນລຸຜົນຕາມຄາດໝາຍແຜນການທີ່ໄດ້ວາງໄວ້.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານຄະນະກຳມະການຄຸ້ມຄອງບໍລິຫານ

ລັດດາວັນ ຊົງວິໄລ

6. ຄຳເຫັນຂອງຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ



ຄະນະກຳມະການກຳນົດຄ່າຕອບແທນ ປະກອບດ້ວຍສະມາຊິກສະພາບໍລິຫານ ຈຳນວນ 3 ທ່ານ, ມີສະມາຊິກທີ່ມາຈາກຄະນະອຳນວຍການ ທຄຕລ 1 ທ່ານ, ສະມາຊິກທີ່ບໍ່ແມ່ນຜູ້ບໍລິຫານ 1 ທ່ານ ແລະ ອີກ 1 ທ່ານ ແມ່ນສະມາຊິກອິດສະຫຼະ ເຊິ່ງດຳລົງຕຳແໜ່ງປະທານຄະນະກຳມະການນີ້. ບົດບາດຕົ້ນຕໍຂອງຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ ແມ່ນການພິຈາລະນາເປົ້າໝາຍບຸກຄະລາກອນສຳລັບການປັບປຸງຄະນະຜູ້ບໍລິຫານ ແລະ ສະພາບໍລິຫານຂອງ ທຄຕລ ພ້ອມທັງຄົ້ນຄວ້າ ແລະ ຕິດຕາມການປະຕິບັດເງິນເດືອນ ແລະ ຄ່າຕອບແທນໃຫ້ແກ່ພະນັກງານ ແລະ ຜູ້ບໍລິຫານ ທຄຕລ ທຸກລະດັບໃຫ້ສອດຄ່ອງກັບນະໂຍບາຍທີ່ໄດ້ວາງໄວ້.

ໃນຮອບປີ 2022 ທີ່ຜ່ານມາ, ຄະນະກຳມະການ ໄດ້ປະຕິບັດໜ້າທີ່ຂອງຕົນຢ່າງເປັນປົກກະຕິ ແຕ່ອີງໃສ່ການຍົກຍ້າຍໜ້າທີ່ຂອງທ່ານປະທານສະພາບໍລິຫານ ແລະ ທ່ານຜູ້ອຳນວຍການ ທຄຕລ ເຊິ່ງທັງສອງທ່ານລ້ວນແຕ່ເປັນສະມາຊິກຂອງຄະນະກຳມະການນີ້ໃນໄລຍະໂຕມາດ 2 ແລະ ໄຕມາດ 3 ເຮັດໃຫ້ບົດບາດຂອງຄະນະກຳມະການ ໄດ້ປະຕິບັດຜ່ານກອງປະຊຸມສະພາບໍລິຫານໂດຍກົງ.

ບັນຫາສຳຄັນທີ່ຕິດພັນກັບບົດບາດຂອງຄະນະກຳມະການທີ່ໄດ້ມີການພິຈາລະນາຮັບຮອງ ລວມມີການຮັບຮອງການຍົກຍ້າຍໜ້າທີ່ຂອງທ່ານຜູ້ອຳນວຍການ ທຄຕລ ຄົນກ່ອນ ແລະ ການຮັບຮອງການແຕ່ງຕັ້ງຜູ້ອຳນວຍການຄົນປະຈຸບັນ, ຮັບຮອງການຍົກຍ້ານຮອງຜູ້ອຳນວຍການ ທຄຕລ 1 ທ່ານ, ສະເໜີຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານ 1 ທ່ານ ເພື່ອປ່ຽນແທນສະມາຊິກທີ່ໄດ້ຍົກຍ້າຍໜ້າທີ່ ແລະ ຮັບຮອງການປັບປຸງນະໂຍບາຍນ້ຳມັນທຽວການສຳລັບພະນັກງານ ທຄຕລ.

ການປັບປຸງບຸກຄະລາກອນຂັ້ນສູງຂ້າງເທິງນັ້ນ ແມ່ນອີງຕາມຄວາມຮຽກຮ້ອງຕ້ອງການທາງດ້ານວຽກງານ ແລະ ການຕົກລົງຂອງການຈັດຕັ້ງທີ່ກ່ຽວຂ້ອງ. ສຳລັບການປັບປຸງນະໂຍບາຍນ້ຳມັນທຽວການສຳລັບພະນັກງານ ທຄຕລ ກໍ່ ເພື່ອໃຫ້ສອດຄ່ອງກັບລະດັບການເໜັງຕີງຂອງລາຄານ້ຳມັນໃນແຕ່ລະໄລຍະ ເຊິ່ງການແຕ່ງຕັ້ງສະມາຊິກສະພາບໍລິຫານ ແລະ ການປັບປຸງນະໂຍບາຍນ້ຳມັນທຽວການນີ້ ໄດ້ຖືກຮັບຮອງໂດຍກອງປະຊຸມຜູ້ຖືຮຸ້ນ ຢ່າງສອດຄ່ອງກັບນິຕິກຳແລ້ວ.

ນອກຈາກນີ້ຍັງເຫັນໄດ້ວ່າໃນໄລຍະປີ 2022 ການປະຕິບັດນະໂຍບາຍເບ້ຍປະຊຸມໃຫ້ແກ່ບັນດາສະມາຊິກສະພາບໍລິຫານ ກໍ່ສອດຄ່ອງກັບລະບຽບ ແລະ ຢູ່ໃນຂອບເຂດທີ່ໄດ້ຜ່ານການເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ. ສຳລັບການປະຕິບັດນະໂຍບາຍເງິນເດືອນ ແລະ ນະໂຍບາຍຕ່າງໆໃຫ້ແກ່ຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ທຄຕລ ກໍ່ຖືວ່າເປັນໄປຕາມກົດລະບຽບທີ່ກຳນົດໄວ້.

ດ້ວຍຄວາມນັບຖືຢ່າງສູງ,

ປະທານຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ

ຄຳສຸກ ສູນດາລາ

III. ຂໍ້ມູນກ່ຽວກັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

1. ປະຫວັດການສ້າງຕັ້ງ ແລະ ການເຕີບໃຫຍ່ຂະຫຍາຍຕົວ

1.1. ການສ້າງຕັ້ງ

ທະນະຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຖືກສ້າງຕັ້ງຂຶ້ນ ຕາມຂໍ້ຕົກລົງສ້າງຕັ້ງທະນາຄານ ສະບັບເລກທີ 129/ທຄຕລ, ລົງວັນທີ 01 ພະຈິກ 1989 ອອກໂດຍທະນາຄານແຫ່ງລັດ (ທະນາຄານແຫ່ງ ສປປ ລາວ ໃນປະຈຸບັນ) ຊຶ່ງໃນເວລານັ້ນ ທຄຕລ ມີຊື່ວ່າ ທະນະຄານການຄ້າຕ່າງປະເທດລາວ. ແຕ່ເຄົ້າກຳເນີດຂອງ ທຄຕລ ແມ່ນເລີ່ມມີມານັບຕັ້ງແຕ່ການສະຖາປະນາ ສປປ ລາວ ໃນປີ 1975 ໂດຍໃນໄລຍະປີ 1975 – 1989 ທຄຕລ ເປັນພະແນກໜຶ່ງຂອງທະນາຄານແຫ່ງລັດທີ່ຮັບຜິດຊອບການຊຳລະຕ່າງປະເທດ ແລະ ຄຸ້ມຄອງເງິນກູ້ຢືມ ແລະ ເງິນຊ່ວຍເຫຼືອຈາກຕ່າງປະເທດ. ໂດຍປະຕິບັດຕາມແນວທາງປ່ຽນແປງໃໝ່ຂອງພັກ ແລະ ອີງຕາມຄວາມຮຽກຮ້ອງຕ້ອງການທາງທຸລະກິດໃນໄລຍະໃໝ່, ລັດຖະບານ ຈຶ່ງໄດ້ເຫັນດີຫັນ ທຄຕລ ມາເປັນທະນາຄານທຸລະກິດຢ່າງເຕັມຮູບແບບໃນວັນທີ 1 ພະຈິກ 1989 ຕາມຂໍ້ຕົກລົງຂອງທະນາຄານແຫ່ງລັດດັ່ງກ່າວ.

ການຫັນເປັນທະນາຄານທຸລະກິດ ຖືໄດ້ວ່າເປັນຈຸດລິເລີ່ມແຫ່ງການດຳເນີນກິດຈະການທະນາຄານຂອງ ທຄຕລ ຢ່າງຄົບຊຸດຂຶ້ນກວ່າເກົ່າ ໂດຍມີການໃຫ້ບໍລິການຮັບຝາກ, ການປ່ອຍກູ້, ການຄ້ຳປະກັນ, ການຮຽກເກັບ ແລະ ການຊຳລະພາຍໃນ ແລະ ຕ່າງປະເທດ. ອັນໄດ້ເຮັດໃຫ້ ທຄຕລ ມີເງື່ອນໄຂພັດທະນາຕົນເອງຂຶ້ນເປັນກ້າວໆ ແລະ ກາຍເປັນທະນາຄານທຸລະກິດຂອງລັດທີ່ມີຄວາມເຂັ້ມແຂງ ແລະ ມີເງື່ອນໄຂຄົບຖ້ວນໃນການຈົດທະບຽນຢູ່ໃນຕະຫຼາດຫຼັກຊັບລາວ ເປັນທະນາຄານແຫ່ງທຳອິດ ຊຶ່ງໃນວັນທີ 23 ທັນວາ 2010 ທຄຕລ ໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ ແລະ ໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈຫ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ມາຮອດວັນທີ 15 ກໍລະກົດ 2011, ກະຊວງການເງິນ ໄດ້ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ Compagnie Financière de la BRED (COFIBRED) ຊຶ່ງເປັນບໍລິສັດໃນເຄືອຂອງ BRED ຊຶ່ງເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ.

ໃນປີ 2017 ທຄຕລ ໄດ້ມີການເພີ່ມທຶນ ໂດຍການສະເໜີຂາຍຮຸ້ນເພີ້ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ໃຫ້ແກ່ສາທາລະນະຊົນໃນຕະຫຼາດຫຼັກຊັບລາວ ຕາມການອະນຸຍາດຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ໃນວັນທີ 17 ສິງຫາ 2017 ຊຶ່ງສາມາດເພີ່ມທຶນຈົດທະບຽນໄດ້ຕື່ມຈຳນວນ 355.728.500.000 ກີບ (71.145.700 ຮຸ້ນ) ຕາມໃບຢັ້ງຢືນຂອງຕະຫຼາດຫຼັກຊັບ ລາວ ສະບັບເລກທີ 01 /ຕລຊລ, ລົງວັນທີ 15 ກັນຍາ 2017. ດັ່ງນັ້ນ, ທຶນຈົດທະບຽນຂອງ ທຄຕລ ຈຶ່ງໄດ້ເພີ່ມຂຶ້ນຈາກເດີມ 682.888 ລ້ານກີບ ມາເປັນ 1.038.617 ລ້ານກີບ.

ເພື່ອສືບຕໍ່ພັດທະນາຄານ ທຄຕລ ໃຫ້ເຕີບໃຫຍ່ຂະຫຍາຍຕົວຢ່າງໝັ້ນຄົງ ລັດຖະບານຈຶ່ງໄດ້ເປີດໂອກາດໃຫ້ມວນຊົນ ແລະ ນັກລົງທຶນທົ່ວໄປ ສາມາດຮ່ວມເປັນເຈົ້າຂອງ ທຄຕລ ໃຫ້ຫຼາຍຂຶ້ນດ້ວຍການຫຼຸດສັດສ່ວນການຖືຮຸ້ນຢູ່ ທຄຕລ ລົງ ເພື່ອສະເໜີຂາຍຮຸ້ນດັ່ງກ່າວໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ ເຊິ່ງໃນວັນທີ 11 ຕຸລາ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອະນຸມັດການຫຼຸດສັດສ່ວນຮຸ້ນດັ່ງກ່າວ ແລະ ອີງຕາມການຢັ້ງຢືນຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນວັນທີ 29 ພະຈິກ 2019 ໄດ້ຢັ້ງຢືນວ່າ ທຄຕລ ໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງ ທຄຕລ.

1.2.ທຶນຈົດທະບຽນ

ທຶນຈົດທະບຽນຂອງ ທຄຕລ ນະວັນທີ 31 ທັນວາ 2022 ແມ່ນ 1.038.617 ລ້ານກີບ (ນະວັນທີ 31 ທັນວາ 2021: 1.038.617 ລ້ານກີບ)

1.3.ໂຄງສ້າງການຖືຮຸ້ນ

ໂຄງສ້າງການຖືຮຸ້ນຂອງ ທຄຕລ ນະວັນທີ 31 ທັນວາ 2022 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	ຈຳນວນຮຸ້ນ	ສັດສ່ວນ
ລັດຖະບານ (ຕາງໜ້າໂດຍກະຊວງການເງິນ)	124.634.021	60%
ຄູ່ຮ່ວມຮຸ້ນທາງຍຸດທະສາດ (COFIBRED)	20.772.359	10%
ນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດອື່ນໆ (*)	62.316.920	30%
ລວມທັງໝົດ	**207.723.300**	**100%**

(*) ແຕ່ລະບຸກຄົນທຳມະດາ ຫຼື ອົງກອນ ແມ່ນອະນຸຍາດໃຫ້ຖືຮຸ້ນໄດ້ສູງສຸດ 2% ຂອງຈຳນວນຮຸ້ນທັງໝົດ.

1.4.ທຸລະກິດ

ທຸລະກິດຕົ້ນຕໍຂອງ ທຄຕລ ແມ່ນສະໜອງການບໍລິການລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງ ທຄຕລ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

1.5.ຫ້ອງການ ແລະ ສາຂາ

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນ ຫຼວງວຽງຈັນ. ນະວັນທີ 31 ທັນວາ 2022 ທະນາຄານມີ 01 ສຳນັກງານໃຫຍ່, 6 ບໍລິສັດຮ່ວມທຶນ, 20 ສາຂາ, 97 ໜ່ວຍບໍລິການ ແລະ 11 ຫ້ອງແລກປ່ຽນເງິນຕາ ທົ່ວ ສປປ ລາວ.

2. ວິໄສທັດ

ທຄຕລ ໄດ້ກຳນົດວິໄສທັດຂອງຕົນ ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ກ້າວສູ່ມາດຕະຖານສາກົນ.

3. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ແລະ ກ້າວສູ່ມາດຕະຖານສາກົນ, ພາລະກິດທີ່ສຳຄັນຂອງ ທຄຕລ ມີຄື: ພັດທະນາລະບົບບໍລິຫານອົງກອນທີ່ເຂັ້ມແຂງ ເນັ້ນການປັບປຸງທຸລະກິດທະນາຄານໃຫ້ແທດເໝາະ ກັບສະພາບການປ່ຽນແປງໃນໄລຍະໃໝ່ ຖືເອົາການສ້າງວັດທະນະທຳຄຸ້ມຄອງບໍລິຫານຄວາມສ່ຽງໃຫ້ເຂັ້ມແຂງ ແລະ ສອດຄ່ອງຕາມຫລັກການ Basel II, ຍົກສູງປະສິດທິພາບການດຳເນີນທຸລະກິດ, ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານບໍລິຫານທີ່ມີສັກກາຍະພາບ, ຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ, ໄດ້ມາດຕະຖານສາກົນ ທາງດ້ານລະບົບລາຍງານ, ນຳໃຊ້ລະບົບເທັກໂນໂລຊີທີ່ທັນສະໄໝ ແລະ ຍົກລະດັບຄວາມຮູ້, ຄວາມຊ່ຽວຊານສະເພາະດ້ານໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ.

4. ຄຸນຄ່າຫຼັກ

ທຄຕລ ຍຶດຖືຄຸນຄ່າຫຼັກ 5 ປະການ ດັ່ງລຸ່ມນີ້:

1) ຖືເອົາລູກຄ້າເປັນສູນກາງ;
2) ຍຶດໝັ້ນໃນຄວາມຊື່ສັດ;
3) ເຮັດວຽກຢ່າງມີປະສິດຕິພາບ;
4) ຮັບຮູ້ການປ່ຽນແປງ;
5) ມີຄວາມຮັບຜິດຊອບຕໍ່ສັງຄົມ;

5. ບໍລິສັດໃນເຄືອຂ່າຍ

ບັນດາບໍລິສັດໃນເຄືອຂ່າຍຂອງ ທຄຕລ ນະວັນທີ 31 ທັນວາ 2022 ມີດັ່ງນີ້:

ລຳດັບ	ຊື່ບໍລິສັດ	ປະເພດທຸລະກິດ	ທີ່ຕັ້ງ	ຮຸ້ນຂອງ ທຄຕລ	ຊື່ຄູ່ຮ່ວມຖືຮຸ້ນ
1	ທະນາຄານຮ່ວມທຸລະກິດ ລາວ-ຫວຽດ	ທະນາຄານ	ສປປ ລາວ	25%	- BIDV (65%) - ບໍລິສັດ ສຸກຮຸ່ງເຮືອງ (10%)
2	ບໍລິສັດປະກັນໄພລາວ-ຫວຽດ	ປະກັນໄພ	ສປປ ລາວ	35%	BIC (Vietnam)
3	ທະນາຄານລາວ-ຝຣັ່ງ	ທະນາຄານ	ສປປ ລາວ	30%	COFIBRED
4	ບໍລິສັດຫຼັກຊັບ ທຄຕລ-ກຸງໄທ	ຫຼັກຊັບ	ສປປ ລາວ	70%	KTZMICO
5	ທະນາຄານລາວ-ຈີນ	ທະນາຄານ	ສປປ ລາວ	39,87%	FUDIAN BANK
6	ບໍລິສັດ ລາວເມເຊີນນໍ ເພເມັ້ນ ເມັດເອີກ ຈຳກັດ	ການຄຸ້ມຄອງ ລະບົບຊຳລະສະ ສາງທຸລະກຳອີເລັກ ໂທຣນິກ	ສປປ ລາວ	20%	1. ທະນາຄານແຫ່ງ ສປປ ລາວ 25%; 2. ບໍລິສັດຢຸນຽງເພສາກົນ 15% 3. ທະນາຄານພັດທະນາລາວ 10% 4. ທະນາຄານສົ່ງເສີມກະສິກຳ 10% 5. ທະນາຄານຮ່ວມພັດທະນາ 5% 6. ທະນາຄານຮ່ວມທຸລະກິດລາວ-ຫວຽດ 5% 7. ທະນາຄານເອັສທີ ຈຳກັດ 5% 8. ທະນາຄານ ບີໄອຊີ ລາວ ຈຳກັດ 5%

IV. ສະພາບເສດຖະກິດໃນປີ 2022 ແລະ ແນວໂນ້ມສຳລັບປີ 2023

1. ສະພາບການພົ້ນເດັ່ນຂອງສາກົນ ແລະ ພາກພື້ນ

ອີງໃສ່ ສະພາບເສດຖະກິດໂລກທີ່ກຳລັງປະເຊີນກັບສິ່ງທ້າທາຍຕ່າງໆ ໂດຍສະເພາະ ການເພີ່ມຂຶ້ນຂອງອັດຕາເງິນເຟີ້ທົ່ວໂລກ, ບັນຫາຄ່າຄອງຊີບທີ່ເພີ່ມສູງຂຶ້ນ, ຄວາມບອບບາງທາງດ້ານງົບປະມານໃນຫຼາຍປະເທດ, ຂໍ້ຂັດແຍ່ງລະຫວ່າງ ລັດເຊຍ ແລະ ຢູເຄນ ລວມເຖິງການແຜ່ລະບາດຂອງພະຍາດໂຄວິດ-19 ໃນຫຼາຍປະເທດທີ່ກັບມາລະບາດຄືນ, ສິ່ງດັ່ງກ່າວໄດ້ສົ່ງຜົນກະທົບຕໍ່ໃຫ້ການຂະຫຍາຍຕົວຂອງເສດຖະກິດໂລກ ຈາກ 6,0% ໃນປີ 2021 ເປັນ 3,4% ໃນປີ 2022 (ຄາດຄະເນໃນປີ 2023 ແມ່ນ 2,8%). ໃນນີ້ ເສດຖະກິດບັນດາປະເທດມະຫາອຳນາດ ຂະຫຍາຍໂຕຊ້າລົງ ໂດຍສະເພາະເສດຖະກິດຂອງ ສະຫະລັດອາເມລິກາ ຈາກ 5,7% ເປັນ 2,1%, ສ ປ ຈີນ ຈາກ 8,1% ເປັນ 3,0%, ສະຫະພາບເອີລົບ ຈາກລະດັບ 5,9% ເປັນ 2,1%. ອັດຕາເງິນເຟີ້ທົ່ວໂລກເພີ່ມຈາກ 4,7% ໃນປີ 2021 ເປັນ 8,8% ໃນປີ 2022 ແລະ ມີແນວໂນ້ມຈະຫຼຸດລົງ 6,5% ໃນປີ 2023. ປັດໃຈຕົ້ນຕໍທີ່ສົ່ງຜົນກະທົບຕໍ່ ການເພີ່ມຂຶ້ນຂອງເງິນເຟີ້ມາຈາກການເພີ່ມຂຶ້ນຂອງລາຄານ້ຳມັນ ແລະ ກາສທຳມະຊາດ ໂດຍໄດ້ຮັບແຮງກົດດັນຈາກຂໍ້ຂັດແຍ່ງລະຫວ່າງລັດເຊຍ ແລະ ຢູເຄນ, ນອກຈາກນັ້ນ ການແຂງຄ່າຂອງສະກຸນເງິນໂດລາຍັງກະທົບຕໍ່ຕ່ອງໂສ້ການຜະລິດຂອງຫຼາຍປະເທດສົ່ງຜົນກະທົບຕໍ່ເງິນເຟີ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ

2. ສະພາບເສດຖະກິດມະຫາພາກຂອງ ສປປ ລາວ 2022

ອີງຕາມການລາຍງານຂອງ ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ສັງຄົມແຫ່ງຊາດ, ສະພາບເສດຖະກິດຂອງລາວໃນປີ 2022 ຄາດວ່າຈະຂະຫຍາຍຕົວຫຼຸດລົງຈາກ 4,0% (ຄາດຄະເນຕົ້ນປີ) ເປັນ 3,0% ໃນປີ 2022, ໃນຂະນະທີ່ກອງທຶນ ການເງິນສາກົນປະເມີນ (ອີງການ IMF) ປະເມີນການຂະຫຍາຍຕົວຂອງເສດຖະກິດລາວໃນລະດັບ 2,3%. ໂດຍລວມແລ້ວ, ສະພາບເສດຖະກິດລາວຍັງປະເຊີນກັບສິ່ງທ້າທາຍຫຼາຍຢ່າງ ເປັນຕົ້ນແມ່ນ ລະດັບໜີ້ສິນສາທາລະນະທີ່ຍັງສູງ, ຄັງສຳຮອງ ເງິນຕາຕ່າງປະເທດຈຳກັດ, ໃນຂະນະເງິນກີບສືບຕໍ່ອ່ອນຄ່າທຽບໃສ່ເງິນຕາຕ່າງປະເທດ ແລະ ອັດຕາເງິນເຟີ້ມີທ່າອ່ຽງເພີ່ມຂຶ້ນ. ນອກຈາກນີ້, ສະພາບຄວາມບໍ່ສະຫງົບໃນພາກພື້ນ ແລະ ສາກົນຍັງໄດ້ສົ່ງຜົນກະທົບທາງອ້ອມຕໍ່ການຂະຫຍາຍຕົວ ເສດຖະກິດຂອງ ສປປ ລາວ.

ເຖິງຢ່າງໃດກໍ່ຕາມ, ປັດໃຈທີ່ສະໜັບສະໜູນ ການເຕີບໂຕຂອງເສດຖະກິດລາວຍັງແມ່ນ ຂະແໜງພະລັງງານ ແລະ ບໍ່ແຮ່, ຮອງລົງມາແມ່ນຂະແໜງອຸດສາຫະກຳປຸງແຕ່ງ, ຂະແໜງຫັດຖະກຳ ລວມເຖິງຂະແໜງການທ່ອງທ່ຽວ ແລະ ການບໍລິການ ທີ່ໄດ້ຮັບຜົນປະໂຫຍດຈາກການເປີດປະເທດ ລວມເຖິງການເປີດນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ.

ຕາຕະລາງ 1: ການຂະຫຍາຍໂຕເສດຖະກິດ (%)

ລາຍລະອຽດ	2020	2021	2022
GDP	3,3	3,5	3,0
ກະສິກຳ	1,2	2,5	n/a
ອຸດສາຫະກຳ	9,2	6,1	n/a
ບໍລິການ	-1,2	1,4	n/a
ພາສີອາກອນຜະລິດຕະພັນ, ສຸດທິ	3,0	3,1	n/a

ແຫຼ່ງຂໍ້ມູນ: ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ 2022

ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ:

ໂດຍລວມອັດຕາເງິນເຟີ້ສະເລ່ຍ ໃນປີ 2022 ຢູ່ໃນລະດັບ 23% ທຽບໃສ່ປີ 2021 ຢູ່ລະດັບ 3,75% ໝວດທີ່ອັດຕາເງິນເຟີ້ເພີ່ມສູງຂຶ້ນກວ່າໝູ່ແມ່ນໝວດຄົມມະນາຄົມ-ຂົນສົ່ງ ອັນເນື່ອງຈາກໄດ້ຮັບຜົນກະທົບຈາກການເພີ່ມຂຶ້ນຂອງລາຄານ້ຳມັນ ແລະ ການອ່ອນຄ່າຂອງສະກຸນເງິນກີບ ສົ່ງຜົນໃຫ້ໝວດອື່ນໆ ມີອັດຕາເງິນເຟີ້ທີ່ເພີ່ມສູງຂຶ້ນເຊັ່ນກັນ. ນອກນັ້ນກໍຍັງມີປັດໄຈພາຍໃນເຊັ່ນ: ຖານການຜະລິດພາຍໃນບໍ່ເຂັ້ມແຂງ, ເງິນກີບອ່ອນຄ່າ, ຕົ້ນທຶນການຜະລິດສູງຂຶ້ນ, ການຄຸ້ມຄອງລາຄາສິນຄ້າຍັງຈຳກັດ ແລະ ອື່ນໆ

ໂດຍສະເລ່ຍໃນປີ 2022, ອັດຕາແລກປ່ຽນໃນລະບົບທະນາຄານ ສະກຸນເງິນໂດລາ ເພີ່ມຂຶ້ນ 47% ຈາກ 9.745,3 ກີບ/ໂດລາ ເປັນ 14.327,5 ກີບ/ໂດລາ. ໃນຂະນະທີ່ ອັດຕາແລກປ່ຽນນອກລະບົບ ເຫັນວ່າມີການໜ້ຽຕົ່ງສູງ ສະເລ່ຍ 15.782,7 ກີບ/ໂດລາ ເພີ່ມຂຶ້ນປະມານ 44,9% ຖ້າທຽບໃສ່ປີຜ່ານມາ, ສ່ວນຕ່າງອັດຕາແລກປ່ຽນລະຫວ່າງຕະຫຼາດນອກລະບົບ ແລະ ທະນາຄານ ຕ່າງກັນປະມານ 10,3% ເຊິ່ງການອ່ອນຄ່າຂອງເງິນກີບທຽບໃສ່ສະກຸນໂດລາ ຍັງມີແນວໂນ້ມເພີ່ມຂຶ້ນໃນຕໍ່ໜ້າ ໂດຍຈະສົ່ງຜົນກະທົບຕໍ່ເສດຖະກິດມະຫາພາກ ແລະ ຕໍ່ການດຳເນີນທຸລະກິດຂອງ ທຄຕລ. ສຳລັບອັດຕາແລກປ່ຽນກີບ/ບາດ, ໂດຍສະເລ່ຍໃນປີ 2022 ເພີ່ມຂຶ້ນ 26,2% ຈາກ 338,6 ກີບ/ບາດໃນປີ 2021 ເປັນ 427,4 ກີບ/ບາດ ໃນປີ 2022. ໃນຂະນະທີ່ອັດຕາແລກປ່ຽນນອກລະບົບ ສະເລ່ຍ 443 ກີບ/ບາດ ເພີ່ມຂຶ້ນ ປະມານ 29,8% ຈາກ 341,2 ກີບ/ບາດ, ສ່ວນຕ່າງລະຫວ່າງອັດຕາແລກປ່ຽນຕະຫຼາດກັບທະນາຄານແມ່ນ 3,65% (ຂໍ້ມູນຈາກເວບໄຊ ທະນາຄານແຫ່ງ ສປປ ລາວ, 2023).

ການນຳເຂົ້າ-ສົ່ງອອກ

ໃນປີ 2022, ມູນຄ່າການນຳເຂົ້າ ແລະ ສົ່ງອອກ ຂອງ ສປປ ລາວ ປະຕິບັດໄດ້ 15.006 ລ້ານໂດລາຂະຫຍາຍຕົວເພີ່ມຂຶ້ນ 11% ທຽບໃສ່ປີຜ່ານມາ, ໃນນີ້, ມູນຄ່າການສົ່ງອອກ ມີປະມານ 8.198 ລ້ານໂດລາ (ທຽບໃສ່ປີຜ່ານມາ 7.000 ລ້ານໂດລາ ສະຫະລັດ), ມູນຄ່າການນຳເຂົ້າມີປະມານ 6.808 ລ້ານໂດລາ ທຽບໃສ່ປີຜ່ານມາ (6.000 ລ້ານໂດລາ) ສົ່ງຜົນໃຫ້ດຸນການຄ້າ ເກີນດຸນປະມານ 1.390 ລ້ານໂດລາ (LTP, 2023). ຖ້າບໍ່ລວມຕົວເລກນຳເຂົ້າ ແລະ ສົ່ງອອກໄຟຟ້າກໍ່ຍັງຂາດດຸນ ການຄ້າຢູ່ປະມານ 928 ລ້ານໂດລາສະຫະລັດ.

ສິນຄ້າສົ່ງອອກທີ່ມີມູນຄ່າສູງກວ່າໝູ່ປະກອບມີ ມັນຕົ້ນ, ຄຳປະສົມ/ຄຳແທ່ງ, ເຈ້ຍ ແລະ ເຄື່ອງທີ່ເຮັດດ້ວຍເຈ້ຍ, ແຮ່ທອງ, ຢາງພາລາ, ນ້ຳຕານ, ແຮ່ເຫຼັກ, ໝາກກ້ວຍ ແລະ ອື່ນໆ. ປະເທດທີ່ສົ່ງອອກຕົ້ນຕໍໄດ້ແກ່ ສປ ຈີນ, ຮອງລົງມາແມ່ນ ໄທ, ຫວຽດນາມ , ອິດສະຕຣາລີ ແລະ ຣັງກິ້ງ.


ໃນຂະນະທີ່ສິນຄ້ານຳເຂົ້າທີ່ມີມູນຄ່າສູງສຸດໄດ້ແກ່ ນ້ຳມັນກາຊວນ, ອຸປະກອນກົນຈັກ, ພາຫະນະທາງບົກ, ນ້ຳມັນ ແອັດຊັງ, ເຫຼັກ ແລະ ເຄື່ອງທີ່ເຮັດດ້ວຍເຫຼັກ ເຊິ່ງການນຳເຂົ້າສ່ວນຫຼາຍແລ້ວມາຈາກໄທ, ຮອງລົງມາແມ່ນຈີນ, ຫວຽດນາມ, ສະຫະລັດອາເມລິກາ ແລະ ຍີ່ປຸ່ນ.

ສະພາບການຂອງຂະແໜງທະນາຄານ

ຂະແໜງການເງິນ-ການທະນາຄານເປັນຂະແໜງທີ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໄດ້ປະກອບສ່ວນສຳຄັນ ຕໍ່ການຂະຫຍາຍຕົວຂອງເສດຖະກິດ. ໃນປະຈຸບັນ, ມີທະນາຄານທຸລະກິດ 38 ແຫ່ງ ແລະ ເປັນທະນາຄານສະເພາະກິດ 01 ແຫ່ງ. ໃນຈຳນວນນີ້, 42,1% (16 ແຫ່ງ) ເປັນສາຂາທະນາຄານທຸລະກິດຕ່າງປະເທດ, ຮອງລົງມາແມ່ນກຸ່ມທະນາຄານ ທຸລະກິດທີ່ເປັນບໍລິສັດລູກຂອງສາຂາຂອງທະນາຄານຕ່າງປະເທດ ກວມເອົາ 21,1%, ກຸ່ມທະນາຄານເອກະຊົນ 18,4% ແລະ ກຸ່ມທະນາຄານທຸລະກິດລັດຮ່ວມທຶນ 13,2% ໃນຂະນະທີ່ທະນາຄານທຸລະກິດລັດມີ 01 ແຫ່ງ ເຊິ່ງກວມເອົາ 2,6% ຂອງຈຳນວນທະນາຄານທັງໝົດ.


ນອກຈາກນັ້ນ ຍັງມີສະຖາບັນການເງິນຈຸລະພາກທີ່ຮັບ ແລະ ບໍ່ຮັບຝາກເງິນ ພ້ອມທັງບໍລິສັດເຊົ່າສິນເຊື່ອຈຳນວນ 225 ແຫ່ງ ໃນນີ້ ປະມານ 43% ເປັນສະຖາບັນການເງິນທີ່ບໍ່ຮັບຝາກເງິນ, ຮອງລົງມາແມ່ນໂຮງຊວດຈຳ 20% ແລະ ສະຫະກອນສິນເຊື່ອ ແລະ ເງິນຝາກປະຫຍັດ (15,6%).

ຮູບສະແດງທີ 1: ສັດສ່ວນທະນາຄານທຸລະກິດໃນລາວ (2022)



ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ (2022)

ຮູບສະແດງທີ 2: ສັດສ່ວນສະຖາບັນການເງິນໃນລາວ (2022)




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ (2022)

ສ່ວນແບ່ງການຕະຫຼາດຂອງຂະແໜງທະນາຄານ

ໂດຍລວມແລ້ວໃນປີ 2022, ທະນາຄານທຸລະກິດລັດກວມສ່ວນແບ່ງການຕະຫຼາດຫຼາຍກວ່າທະນາຄານອື່ນ ໂດຍສັດສ່ວນທາງດ້ານຊັບສິນ, ເງິນຝາກ ແລະ ສິນເຊື່ອ ກວມເອົາ 33,7%, 38,3% ແລະ 35% ຕາມລຳດັບ, ຮອງລົງມາແມ່ນທະນາຄານ ເອກະຊົນ ໂດຍສັດສ່ວນທາງດ້ານເງິນຝາກ ແລະ ສິນເຊື່ອ ກວມ 22,4%, 24,9% ສ່ວນດ້ານຊັບສິນ, ທະນາຄານສາຂາຕ່າງປະເທດກວມສັດສ່ວນ 26,9%. (ຮູບສະແດງ 03)

ຮູບສະແດງທີ 3: ສ່ວນແບ່ງການຕະຫຼາດຂອງທະນາຄານໃນ ສປປ ລາວ (%)



ໝາຍເຫດ: ຂໍ້ມູນປີ 2022, ຕົວເລກລ່າສຸດແມ່ນເດືອນກັນຍາ 2022

ແຫຼ່ງຂໍ້ມູນ: https://www.bol.gov.la/Money_and_Banking ທະນາຄານແຫ່ງ ສປປ ລາວ 2022

ອັດຕາດອກເບ້ຍສະເລ່ຍ (ຫົວໜ່ວຍ % ຕໍ່ປີ)

ອັດຕາດອກເບ້ຍເງິນຝາກຂອງທະນາຄານທຸລະກິດທົ່ວປະເທດໃນປີ 2022 ເຫັນວ່າ ເງິນຝາກສະກຸນກີບມີທ່າອ່ຽງເພີ່ມຂຶ້ນເລັກໜ້ອຍ ທຽບໃສ່ປີ 2021 ໃນຂະນະທີ່ອັດຕາດອກເບ້ຍເງິນຝາກສະກຸນບາດ ແລະ ໂດລາ ມີທ່າອ່ຽງຫຼຸດລົງເລັກໜ້ອຍ. ໃນນີ້, ເງິນຝາກມີກຳນົດສະກຸນບາດ, ອັດຕາດອກເບ້ຍເງິນຝາກມີກຳນົດ 12 ເດືອນ ຫຼຸດລົງຈາກ 3,47%/ປີ ເປັນ 3,21%/ປີ, ຝາກມີກຳນົດໄລຍະ 60 ເດືອນ, ຫຼຸດລົງຈາກ 5,94% ເຫຼືອ 5,84%. ສຳລັບເງິນຝາກມີກຳນົດສະກຸນເງິນໂດລາ, ອັດຕາດອກເບ້ຍເງິນຝາກມີກຳນົດ 60 ເດືອນ, ຫຼຸດລົງຈາກ 6,81% ເຫຼືອ 6,73%.

ຕາຕະລາງ2: ສະເລ່ຍອັດຕາດອກເບ້ຍເງິນຝາກທົ່ວໄປຂອງລູກຄ້າ (%ຕໍ່ປີ)

	LAK		THB		USD	
	2021	2022	2021	2022	2021	2022
ເງິນຝາກປະຢັດ	1,71	1,72	0,98	0,90	1,13	1,10
ເງິນຝາກມີກຳນົດ						
ເງິນຝາກ 3 ເດືອນ	2,94	2,99	1,73	1,64	2,09	2,03
ເງິນຝາກ 6 ເດືອນ	3,76	3,80	2,51	2,37	2,83	2,77
ເງິນຝາກ 9 ເດືອນ	4,92	4,80	2,91	2,86	3,72	3,64
ເງິນຝາກ 12 ເດືອນ	5,33	5,35	3,47	3,21	3,74	3,72
ເງິນຝາກ 24 ເດືອນ	6,25	6,36	4,43	4,39	4,95	4,90
ເງິນຝາກ 36 ເດືອນ	6,82	6,83	5,15	5,19	5,88	5,91
ເງິນຝາກ 48 ເດືອນ	6,89	6,92	5,93	6,00	6,76	6,66
ເງິນຝາກ 60 ເດືອນ	6,96	6,97	5,94	5,84	6,81	6,73

ແຫຼ່ງຂໍ້ມູນ: ສັງລວມຈາກ website ຂອງ ທຫລ ໃນແຕ່ລະໄລຍະ

ສຳລັບ ອັດຕາດອກເບ້ຍເງິນກູ້ສະເລ່ຍໃນປີ 2022 ເຫັນວ່າມີແນວໂນ້ມຫຼຸດລົງທຸກສະກຸນເງິນ ໂດຍສະເພາະອັດຕາດອກເບ້ຍເງິນກູ້ໄລຍະສັ້ນສະກຸນກີບຫຼຸດລົງຈາກ 10%/ປີ ເປັນ 9,73%/ປີ, ສະກຸນບາດ ຫຼຸດລົງຈາກ 8,61%/ປີ ເປັນ 8,37%/ປີ ແລະ ສະກຸນໂດລາຫຼຸດຈາກ 8,22%/ປີ ເປັນ 8,06%/ປີ (ລາຍລະອຽດຕາຕະລາງ 3).

ຕາຕາລາງ 3: ສະເລ່ຍອັດຕາດອກເບ້ຍເງິນກູ້ (%/ປີ)

	LAK		THB		USD	
	2021	2022	2021	2022	2021	2022
ໄລຍະສັ້ນ 1 ປີ	10,0	9,73	8,61	8,37	8,22	8,06
ໄລຍະກາງ 1-3 ປີ	10,91	10,60	9,16	9,04	8,86	8,73
ໄລຍະຍາວ 3-6ປີ	11,01	10,55	9,66	9,45	9,25	9,12

ແຫຼ່ງຂໍ້ມູນ: ສັງລວມຈາກ website ຂອງ ທຫລ ໃນແຕ່ລະໄລຍະ

3. ແນວໂນ້ມ ແລະ ທິດທາງສຳລັບປີ 2023

ສະພາບເສດຖະກິດມະຫາພາກ 2023

ອີງຕາມລາຍງານຈາກອົງການ IMF, ເສດຖະກິດໂລກໃນປີ 2023 ຄາດວ່າຈະຂະຫຍາຍໂຕຊ້າລົງໃນອັດຕາ 2,8% ເຖິງແມ່ນວ່າອັດຕາເງິນເຟີ້ຈະມີແນວໂນ້ມຫຼຸດລົງ ເນື່ອງຈາກທະນາຄານກາງຂອງຫຼາຍປະເທດໄດ້ປັບຂຶ້ນອັດຕາດອກເບ້ຍ, ຂະແໜງການທະນາຄານມີຄວາມອ່ອນໄຫວ ເຊິ່ງໃນຕົ້ນປີທະນາຄານຫຼາຍແຫ່ງໄດ້ລົ້ມລະລາຍ, ເຊິ່ງລວມເຖິງບັນດາສະຖາບັນການເງິນຕ່າງໆ. ນອກຈາກນັ້ນ, ຂໍ້ຂັດແຍ່ງທາງການເມືອງລະຫວ່າງລັດເຊຍ ແລະ ຢູເຄນ ລວມເຖິງຫຼາຍໆປະເທດຍັງສືບຕໍ່ກົດດັນການຂະຫຍາຍຕົວຂອງເສດຖະກິດໂລກ.

ເສດຖະກິດ ສປປ ລາວ ຈະສືບຕໍ່ຟື້ນຕົວເທື່ອລະກ້າວ ໂດຍມີຂະແໜງການຊັບພະຍາກອນ, ພະລັງງານ ແລະ ການທ່ອງທ່ຽວ ເປັນປັດໄຈຂັບເຄື່ອນການຂະຫຍາຍຕົວ. ໃນປີ 2023, ເສດຖະກິດຄາດວ່າຈະຂະຫຍາຍຕົວໃນອັດຕາ 4%(IMF 2023). ພ້ອມນີ້, IMF ກໍ່ຄາດວ່າອັດຕາເງິນເຟີ້ຈະຫຼຸດລົງ ເປັນ 14% ໃນປີ 2023 ເນື່ອງຈາກການຫຼຸດລົງຂອງລາຄາອາຫານ ແລະ ລາຄານ້ຳມັນ. ເຖິງຢ່າງໃດກໍ່ຕາມ, ເສດຖະກິດມະຫາພາກຍັງບໍ່ມີຄວາມແນ່ນອນຫຼາຍດ້ານ, ເປັນຕົ້ນຂໍ້ຂັດແຍ່ງລະຫວ່າງປະເທດ ທີ່ສົ່ງຜົນກະທົບຕໍ່ການເໜັງຕີງລາຄາສິນຄ້າບາງລາຍການໃນການຕະຫຼາດໂລກ. ນອກຈາກນັ້ນ, ການເພີ່ມຂຶ້ນຂອງລະດັບໜີ້ສິນສາທາລະນະ, ການເກັບລາຍຮັບບໍ່ໄດ້ດີ, ການອ່ອນຄ່າຂອງເງິນກີບ ຍັງເປັນສິ່ງທ້າທາຍ ສຳລັບການຂະຫຍາຍຂອງເສດຖະກິດລາວໃນປີ 2023.

ທິດທາງ ແລະ ແຜນການ ທຄຕລ 2023

ປີ 2023 ຍັງຈະເປັນອີກປີໜຶ່ງທີ່ການດຳເນີນທຸລະກິດຂອງ ທຄຕລ ສືບຕໍ່ປະເຊີນກັບສິ່ງທ້າທາຍຫຍຸ້ງຍາກຫຼາຍດ້ານ ຈາກຜົນກະທົບໂດຍລວມຂອງສະພາບເສດຖະກິດພາກພື້ນ ແລະ ສາກົນ. ນອກຈາກນັ້ນ, ພາບລວມຂອງເສດຖະກິດ ສປປ ລາວ ກໍ່ຍັງສືບຕໍ່ປະເຊີນກັບຄວາມຫຍຸ້ງຍາກຫຼາຍດ້ານ ເປັນຕົ້ນແມ່ນບັນຫາດ້ານ ການເງິນ-ເງິນຕາ, ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄານ້ຳມັນ ແລະ ບັນຫາການຂາດແຄນງົບປະມານ ເຊິ່ງໄດ້ສົ່ງຜົນກະທົບຕໍ່ການດຳເນີນທຸລະກິດຂອງ ທຄຕລ. ສະນັ້ນ, ພາລະກິດທີ່ສຳຄັນໃນປີ 2023 ຈະໄດ້ສຸມໃສ່ການພັດທະນາປັບປຸງການບໍລິການ ໃຫ້ແທດເໝາະກັບໄລຍະໃໝ່, ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ, ປະຕິບັດຕາມຫຼັກການບາເຊ ອ 2, ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ, ພັດທະນາດ້ານລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ, ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພໄດ້ມາດຖານສາກົນ. ພ້ອມນັ້ນ, ກໍ່ເນັ້ນໃສ່ການພັດທະນາບຸກຄະລາກອນໃນແຕ່ລະດ້ານ ໃຫ້ມີຄຸນນະພາບ, ມີຄວາມຊຳນິຊຳນານສະເພາະດ້ານ, ເປັນມືອາຊີບດ້ານການບໍລິການທະນາຄານ ເພື່ອຮອງຮັບການປ່ຽນແປງຂອງ

ການພັດທະນາ ທຄຕລ ໃນທຸກດ້ານ, ສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິການ, ສ້າງປະສິດທິພາບທາງດ້ານການເງິນ ເພື່ອຜົນປະໂຫຍດສູງສຸດໃນແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ.

ເປົ້າໝາຍໃນການດຳເນີນງານ 2023

ເພື່ອແນໃສ່ການພັດທະນາຂອງ ທຄຕລ ໃຫ້ສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ໃນທຸກດ້ານ, ທຸກພາກສ່ວນຕ້ອງ ໄດ້ເອົາໃຈໃສ່ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດບັນດາແຜນງານ ແລະ ແຜນໂຄງການ ຂອງ ທຄຕລ ໃຫ້ບັນລຸ ຕາມເປົ້າໝາຍທີ່ວາງໄວ້, ເຊິ່ງພາຍໃນປີ 2023 ປະກອບມີ 11 ແຜນງານ ແລະ 38 ໂຄງການ, ເຊິ່ງລາຍລະອຽດຂອງ ບັນດາແຜນງານມີດັ່ງນີ້.

1. ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບໃນການດຳເນີນທຸລະກິດ: 5 ໂຄງການ
2. ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ: 5 ໂຄງການ
3. ການພັດທະນາບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ: 4 ໂຄງການ
4. ການສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານຕ້ານການຟອກເງິນໃຫ້ເຂັ້ມແຂງ: 5 ໂຄງການ
5. ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ: 1 ໂຄງການ
6. ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ : 6 ໂຄງການ
7. ການຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ: 5 ໂຄງການ
8. ການພັດທະນາຜະລິດຕະພັນ ແລະ ເພື່ອກ້າວສູ່ການບໍລິການ ໃນຮູບແບບ Digital Banking: 2 ໂຄງການ
9. ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ: 3 ໂຄງການ
10. ການພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ: 2 ໂຄງການ
11. ການພັດທະນາໂຄງການ PCI Compliance

V. ຜົນການດຳເນີນທຸລະກິດຕົ້ນຕໍໃນແຕ່ລະດ້ານ

1. ພາບລວມການດຳເນີນງານຂອງ ທຄຕລ ໃນປີ 2022

ໃນໄລຍະປີ 2022 ທຄຕລ ສາມາດປະຕິບັດວຽກງານທີ່ພົ້ນເດັ່ນຫຼາຍດ້ານເຊັ່ນ: ໄດ້ສຳເລັດການຈັດກອງປະຊຸມສະຫຼຸບຜົນການເຄື່ອນໄຫວວຽກງານຂອງ ທຄຕລ 3 ຄັ້ງ, ຈັດກອງປະຊຸມສະພາບໍລິຫານ 10 ຄັ້ງ ແລະ ກອງປະຊຸມຜູ້ຖືຮຸ້ນ ທຄຕລ ຈຳນວນ 2 ຄັ້ງ (ສະໄໝສາມັນ 1 ຄັ້ງ ແລະ ວິສາມັນ 1 ຄັ້ງ), ຄະນະບໍລິຫານງານ ທຄຕລ ໄດ້ເຂົ້າຮ່ວມປະຊຸມກອງທຶນການເງິນສາກົນ ແລະ ທະນາຄານໂລກ ປະຈຳປີ 2022 (IMF/WB Annual Meeting 2022) ທີ່ ນະຄອນຫຼວງ ວໍຊິງຕັນ, ປະເທດ ສ. ອາເມລິກາ; ເຂົ້າຮ່ວມແລກປ່ຽນ ແລະ ຖອດຖອນບົດຮຽນວຽກງານສິນເຊື່ອ-ແກ້ໄຂໜີ້ສິນ ກັບທະນາຄານ BIDV ທີ່ ສສ ຫວຽດນາມ 2 ຄັ້ງ; ຮັບຮອງເອກະສານລາຍງານການເງິນ ທຄຕລ ປະຈຳ 06 ເດືອນຕົ້ນປີ 2022 ທຄຕລ ທີ່ຜ່ານການທົບທວນຈາກຜູ້ສອບອິດສະຫຼະ; ຈັດຂັ້ນສາຂາ ແລະ ໜ່ວຍບໍລິການຂອງ ທຄຕລ ທົ່ວລະບົບ ປະຈຳປີ 2022. ພ້ອມນັ້ນ, ໃນປີ 2022 ທຄຕລ ໄດ້ເລີ່ມຈັດຕັ້ງປະຕິບັດ KPI ຂອງສາຂາທົ່ວລະບົບ ແລະ 2 ພະແນກສິນເຊື່ອ ເພື່ອເປັນເຄື່ອງມືໃນການປະເມີນຜົນການດຳເນີນງານປະຈຳປີ; ສຳເລັດການຍົກເລີກສັນຍາຮ້ານແລກປ່ຽນຕົວແທນທັງໝົດ ທີ່ຂຶ້ນກັບ ທຄຕລ ຕາມແຈ້ງການຂອງ ທຫລ; ດຳເນີນການຄົ້ນຄວ້າສ້າງຕັ້ງ ບໍລິສັດ ທຄຕລ ບໍລິຫານຊັບສິນ ຈຳກັດ; ສຳເລັດໂຄງການແຈກເງິນລາງວັນໃຫ້ລູກຄ້າທີ່ຕື່ມເງິນຄ່າໂທລະສັບຜ່ານແອັບ BCEL One. ດ້ານການຮ່ວມມືທາງດ້ານທຸລະກິດກັບພາກສ່ວນຕ່າງໆທີ່ສຳຄັນມີຄື: ເຊັນສັນຍາຮ່ວມມືວ່າດ້ວຍການໃຫ້ບໍລິການຂົນສົ່ງບັດ ATM ລະຫວ່າງ ທຄຕລ ແລະ ບໍລິສັດ ກັບຕັນເອັກເພຣສ; ສຳເລັດການພັດທະນາ Multiple Bank-Linked ໂດຍຮ່ວມກັບນັກພັດທະນາຈາກ ສ. ເກົາຫຼີ ໃນການນຳໃຊ້ລະບົບຊື້-ຂາຍຮຸ້ນ ສຳລັບບໍລິສັດຫຼັກຊັບໃຫ້ສາມາດເຊື່ອມຕໍ່ກັບທະນາຄານຕົວແທນ; ເປີດໂຕການຮ່ວມມືໃນການບໍລິການຮັບຊຳລະເງິນຂ້າມແດນ ແລະ ຖອນເງິນສົດຜ່ານຕູ້ ATM ດ້ວຍ QR Code ລະຫວ່າງ ທຄຕລ ແລະ GLN (ສ. ເກົາຫຼີ); ເປີດໂຕຟັງຊັ່ນໃໝ່ OneX ເຊິ່ງເປັນການຄ້າແບບເອເລັກໂທຣນິກທີ່ມີການຊື້-ຂາຍສິນຄ້າອອນລາຍໃນແອັບ BCEL One ຮ່ວມມືລະຫວ່າງ ທຄຕລ ແລະ ບໍລິສັດ Best Telecom ຈຳກັດ. ນອກຈາກນັ້ນ, ໄດ້ສຳເລັດການພັດທະນາເຄື່ອງມືດ້ານໄອທີ, ຜະລິດຕະພັນ, ການບໍລິການເພື່ອຮັບໃຊ້ພາຍໃນ ແລະ ຮັບໃຊ້ສັງຄົມ ຫຼາຍໂຄງການເຊັ່ນ: ຍົກລະດັບ Core Banking ໃໝ່ ໄລຍະທີ 2; ສ້າງພື້ນຖານໂຄງລ່າງລະບົບ Big Data; ພັດທະນາການໂອນເງິນຕ່າງປະເທດຜ່ານ BCEL One; ເປີດໂຕ OneCash ສຳລັບຄົນຕ່າງປະເທດ, ພັດທະນາລະບົບໂອນເງິນ MoneyGram ເຂົ້າຂັນຊີ BCEL ໃນໂຄງການ MoneyGram Digital Product; ອັບເດດຟັງຊັ່ນຕ່າງໆ ເຂົ້າໃນລະບົບ BCEL i-Bank ເຊັ່ນ: MyQR, OnePay, OneProof ແລະ ໂອນເງິນຕ່າງປະເທດ; ຍົກລະດັບລະບົບ SMS Banking ນຳໃຊ້ລະບົບ Open source; ສຳເລັດການສ້າງລະບົບຕື່ມແບບຟອມເປີດບັນຊີແບບອອນລາຍສຳລັບໂຄງການບັດນັກສຶກສາ; ສຳເລັດການພັດທະນາລະບົບລາຍງານສຳລັບຜູ້ບໍລິຫານ BCEL Dashboard; ສຳເລັດການເປີດນຳໃຊ້ລະບົບ Smart Tax ໃຫ້ສາມາດຮອງຮັບການຊຳລະເອກະສານພາສີຈາກ Lao National Single Window ແລະ ສຳເລັດການພັດທະນາລະບົບ LAO QR ຊຳລະຜ່ານລະບົບຂອງ LAPNet.

ພ້ອມດຽວກັນນັ້ນ, ໃນປີ 2022 ທຄຕລ ໄດ້ດຳເນີນການປັບປຸງໂຄງຮ່າງການຈັດຕັ້ງພາຍໃນຫຼາຍຂັ້ນ ເພື່ອເຮັດໃຫ້ກົງຈັກກະທັດຮັດ ແລະ ຄ່ອງໂຕຂຶ້ນ ໂດຍໂຮມບັນດາພະແນກການທີ່ມີພາລະບົດບາດໃກ້ຄຽງກັນເຂົ້າກັນ, ໂຮມຂະແໜງການຈຳນວນໜຶ່ງ ແລະ ສັບຊ້ອນບາງວຽກງານຄືນໃໝ່ ຄື: ໂຮມພະແນກການຕະຫຼາດ ແລະ ພະແນກບໍລິການລູກຄ້າລາຍໃຫຍ່ ເຂົ້າກັນເປັນ ພະແນກການຕະຫຼາດ ແລະ ບໍລິການລູກຄ້າລາຍໃຫຍ່. ພ້ອມທັງ, ໂອນວຽກງານປະເມີນການຕະຫຼາດ ໃຫ້ຂຶ້ນກັບພະແນກຄົ້ນຄວ້າ, ພັດທະນາ ແລະ ຄຸ້ມຄອງສາຂາ; ໂຮມພະແນກຄຸ້ມຄອງຄວາມສ່ຽງ ແລະ ພະແນກສະກັດກັ້ນການຟອກເງິນ ເຂົ້າກັນເປັນ ພະແນກຄຸ້ມຄອງຄວາມສ່ຽງ ແລະ ສະກັດກັ້ນການຟອກເງິນ; ໂຮມພະແນກຂາຍຜະລິດຕະພັນສິນເຊື່ອ ແລະ ພະແນກບໍລິຫານສິນເຊື່ອ ເຂົ້າກັນເປັນ ພະແນກຄຸ້ມຄອງສິນເຊື່ອ; ຍຸບເລີກພະແນກນິຕິກຳ ແລ້ວໂອນບັນດາໜ້າວຽກໄປຂຶ້ນກັບພະແນກຈັດຕັ້ງແລະພະນັກງານ, ພະແນກຫ້ອງການບໍລິຫານ-ການເງິນ ແລະ ພະແນກບໍລິຫານຊັບສິນແລະແກ້ໄຂໜີ້ສິນ ແລະ ໂອນຂະແໜງບໍລິການອອນລາຍຈາກສູນບັດ ໃຫ້ຂຶ້ນກັບສູນບໍລິການ. ນອກນັ້ນ, ຍັງໄດ້ເປີດໜ່ວຍບໍລິການໃໝ່ອີກ 3 ແຫ່ງ ຄື: ໜ່ວຍບໍລິການໂພນພະເນົາ ຂຶ້ນກັບສາຂາໄຊເສດຖາ(ຍ້າຍຈາກໜ່ວຍບໍລິການໂພນຕ້ອງ); ໜ່ວຍບໍລິການເຂດພັດທະນາກວມລວມໄຊ

ເສດຖາ ຂຶ້ນກັບສາຂານະຄອນຫຼວງວຽງຈັນ(ຍ້າຍຈາກໜ່ວຍບໍລິການນ້ຳພຸ) ແລະ ໜ່ວຍບໍລິການເມືອງສະໜາມໄຊ ຂຶ້ນກັບສາຂາ ອັດຕະປື(ເປີດໃໝ່).


2. ຊັບສິນ ແລະ ໜີ້ສິນ

ໃນໄລຍະຜ່ານມາດ້ານຖານະການເງິນ ຂອງ ທຄຕລ ແມ່ນມີການເຕີບໂຕເພີ່ມຂຶ້ນໃນທຸກໆປີ ສິ່ງຜົນເຮັດໃຫ້ ຊັບສິນ/ໜີ້ ສິນ ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງເປັນຕົ້ນແມ່ນການຂະຫຍາຍສິນເຊື່ອ, ການລົງທຶນດ້ານຫຼັກຊັບ, ພັນທະບັດ, ເງິນຝາກລະຫວ່າງ ທະນາຄານ, ເງິນຝາກລູກຄ້າ ແລະ ຄັງຕ່າງໆກໍ່ເພີ່ມຂຶ້ນຕາມໆກັນ. ໃນໄລຍະ 5 ປີຜ່ານມາເຫັນໄດ້ວ່າຍອດຊັບສິນ/ໜີ້ສິນ ທຄຕລ ມີອັດຕາການຂະຫຍາຍຕົວສູງ ໂດຍສະເພາະແມ່ນປີ 2022 ເພີ່ມຂຶ້ນ 38%, ປີ 2021 ເພີ່ມຂຶ້ນ 26%, ປີ 2019 ເພີ່ມຂຶ້ນ 20%, ປີ 2020 ເພີ່ມຂຶ້ນ 16% ແລະ ປີ 2018 ເພີ່ມຂຶ້ນ 9%.

ຕາຕະລາງ : ຊັບສິນ/ໜີ້ສິນແຕ່ລະປີ

ໜ່ວຍ: ລ້ານກີບ

ລາຍການ	2022	2021	2020	2019	2018
ຍອດຊັບສິນ/ໜີ້ສິນ	94.493.015	68.236.991	53.970.407	46.626.704	38.993.293



3. ການລະດົມທຶນ


ວຽກງານການລະດົມທຶນ ຖືເປັນວຽກງານໜຶ່ງທີ່ສຳຄັນຂອງ ທຄຕລ ເນື່ອງຈາກແຫຼ່ງທຶນສ່ວນໃຫຍ່ແມ່ນມາຈາກເງິນຝາກ ເຊິ່ງໃນລະໄຍຜ່ານມາເຖິງປະຈຸບັນ ການລະດົມເງິນຝາກຂອງ ທຄຕລ ໄດ້ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງໂດຍສະເພາະແມ່ນເງິນຝາກ ປະຢັດ ແລະ ເງິນຝາກມີກຳນົດ ທີ່ເພີ່ມຂຶ້ນຫຼາຍໃນປີ 2021 ແລະ ປີ 2022 ເນື່ອງຈາກສະພາບເສດຖະກິດມະຫາພາກມີຄວາມ ຫຍຸ້ງຍາກ ແລະ ຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ພາກທຸລະກິດຊະລໍການລົງທຶນ ເພື່ອປ້ອງກັນຄວາມ ສ່ຽງ ແລ້ວຫັນມາຝາກເງິນໄວ້ກັບທະນາຄານຫຼາຍຂຶ້ນ, ອີກປັດໄຈໜຶ່ງແມ່ນຍ້ອນຄວາມເຊື່ອໝັ້ນສູງຕໍ່ການບໍລິການຂອງທະນາຄານ, ການນຳໃຊ້ຜະລິດຕະພັນທາງດ້ານອີເລັກໂທນິກຕ່າງໆນັບມື້ນັບເພີ່ມຂຶ້ນ ເຮັດໃຫ້ມີເງິນໝຸນວຽນຢູ່ໃນລະບົບທະນາຄານຫຼາຍຂຶ້ນ ຈຶ່ງເປັນປັດໄຈເຮັດໃຫ້ເງິນຝາກຂອງທະນາຄານມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ ເຊິ່ງຊ່ວຍໃຫ້ການບໍລິຫານສະພາບຄ່ອງຂອງ ທຄຕລ ດີ ຂຶ້ນ ແລະ ຫຼຸດຜ່ອນການກູ້ຢືມເງິນຈາກພາກສ່ວນອື່ນທັງພາຍໃນ ແລະ ຕ່າງປະເທດ. ນອກຈາກນັ້ນ, ການປ່ຽນແປງຂອງອັດຕາ ແລກປ່ຽນເງິນຕາຕ່າງປະເທດ ກໍ່ເປັນອີກປັດໄຈຫຼັກທີ່ເຮັດໃຫ້ເງິນຝາກທັງໝົດທຽບເທົ່າສະກຸນເງິນກີບຂອງ ທຄຕລ ເພີ່ມຂຶ້ນ ໃນ ປີຜ່ານມາ ສູງເຖິງ 40%. ແຕ່ເຖິງເງິນຝາກຈະມີການເພີ່ມຂຶ້ນຢ່າງຕໍ່ເນື່ອງກໍ່ຕາມ ໃນຕໍ່ໜ້າ ທຄຕລ ຍັງຈະໄດ້ອອກແຮງໃນການ ລະດົມທຶນດ້ວຍຫຼາຍຮູບແບບ ເພື່ອຕອບສະໜອງຕາມຄວາມຕ້ອງການນຳໃຊ້ແຫຼ່ງທຶນທີ່ນັບມື້ເພີ່ມຂຶ້ນ, ໂດຍການສຶກສາພຶດຕິກຳ


ແລະ ຄວາມຕ້ອງການຂອງລູກຄ້າທີ່ປ່ຽນແປງໄປຕາມແຕ່ລະໄລຍະ, ສ້າງເງື່ອນໄຂອຳນວຍຄວາມສະດວກ, ວ່ອງໄວໃນການໃຫ້ບໍລິການ ແລະ ສາມາດຕອບສະໜອງຄວາມຕ້ອງການຂອງທຸກກຸ່ມລູກຄ້າ. ທາງດ້ານໂຄງສ້າງເງິນຝາກຂອງ ທຄຕລ ເງິນຝາກປະຢັດກວມອັດຕາສ່ວນສູງກວ່າໝູ່ 49%, ເງິນຝາກມີກຳນົດກວມ 30%, ເງິນຝາກກະແສລາຍວັນ 13 % ແລະ ເງິນຝາກອື່ນໆ 8% ຕາມລຳດັບ ຊຶ່ງມີລາຍລະອຽດລຸ່ມນີ້:

ຕາຕະລາງ : ເງິນຝາກແຕ່ລະປີ

ໜ່ວຍ: ລ້ານກີບ

ປະເພດເງິນຝາກ	2022	2021	2020	2019	2018
ເງິນຝາກກະແສລາຍວັນ	10.938.271	7.627.802	6.630.559	5.851.192	5.447.954
ເງິນຝາກປະຢັດ	42.874.328	28.428.750	21.324.874	16.442.065	13.092.788
ເງິນຝາກມີກຳນົດ	26.007.200	20.439.403	16.508.548	13.900.002	10.939.035
ເງິນຝາກທະນາຄານ ແລະ ສະຖາບັນການເງິນ	6.591.804	5.226.879	3.445.831	4.039.127	3.385.856
ເງິນຝາກຄ້ຳປະກັນ	370.732	79.905	64.704	104.854	103.279
ເງິນຝາກອື່ນໆ	-	-	-	-	-
ເງິນຝາກທັງໝົດ	**86.782.335**	**61.802.739**	**47.974.516**	**40.337.240**	**32.968.912**





4. ການຂະຫຍາຍ ແລະ ການຄຸ້ມຄອງສິນເຊື່ອ:


ການຂະຫຍາຍສິນເຊື່ອໃນປີ 2022 ທຽບໃສ່ປີຜ່ານມາເຫັນວ່າມີການຂະຫຍາຍເພີ່ມຂຶ້ນສູງ ເຊິ່ງປັດໄຈຫຼັກແມ່ນຈາກການປ່ຽນແປງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ ເຮັດໃຫ້ເງິນກູ້ທັງໝົດທຽບເທົ່າສະກຸນເງິນກີບ ຂອງ ທຄຕລ ມີການເພີ່ມຂຶ້ນເຖິງ 42%. ໃນໄລຍະປີຜ່ານມາເຫັນວ່າພາບລວມຂອງເສດຖະກິດມະຫາພາກຄ່ອຍໆປັບຕົວດີຂຶ້ນ ຂະແໜງການເສດຖະກິດຕ່າງໆໄດ້ເລີ່ມກັບມາເລີ່ມເປີດກິດຈະການຄືນເວົ້າລວມ ເວົ້າສະເພາະແມ່ນທຸລະກິດຂອງລູກຄ້າສິນເຊື່ອ ທຄຕລ ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ໄດ້ກັບມາດຳເນີນການຄືນ ແຕ່ເຖິງຢ່າງໃດກໍ່ຕາມ ທຄຕລ ກໍ່ຍັງໄດ້ສືບຕໍ່ປະຕິບັດນະໂຍບາຍຕໍ່ກັບລູກຄ້າສິນເຊື່ອຈຳນວນໜຶ່ງ ທີ່ໄດ້ຮັບຜົນກະທົບຈາກລະບາດຂອງພະຍາດໂຄວິດ-19 ໃນໄລຍະຜ່ານມາ ໂດຍສອດຄ່ອງກັບນະໂຍບາຍຂອງ ທຫລ ດ້ວຍຫຼາຍຮູບການເປັນຕົ້ນແມ່ນ: ເຍື້ອນຊຳລະຕົ້ນທຶນ, ດອກເບ້ຍ ແລະ ການປັບປຸງໂຄງສ້າງ ແຕ່ການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວກໍ່ໄດ້ມີການປະເມີນ ແລະ ຕິດຕາມສະພາບທຸລະກິດຂອງລູກຄ້າເປັນແຕ່ລະກໍລະນີ, ລູກຄ້າລາຍໃດທີ່ການດຳເນີນທຸລະກິດເລີ່ມກ້າວເຂົ້າສູ່ສະພາບປົກກະຕິ ທະນາຄານກໍ່ໄດ້ຄ່ອຍທະຍອຍຍົກເລີກນະໂຍບາຍດັ່ງກ່າວ. ໂດຍລວມແລ້ວສະພາບການຂະຫຍາຍສິນເຊື່ອ, ການສ້າງລາຍຮັບດ້ານດອກເບ້ຍ ແລະ ຄ່າທຳນຽມສິນເຊື່ອ ໃນປີຜ່ານມາແມ່ນມີແນວໂນ້ມທີ່ດີຂຶ້ນ ແຕ່ເຖິງຢ່າງໃດກໍ່ຕາມ ທຄຕລ ກໍ່ຍັງມີລາຍຈ່າຍໃນການສຳຮອງເງິນແຮ່ຄ່າເສື່ອມສິນເຊື່ອໃນລະດັບທີ່ສູງສົມຄວນ.


ທາງດ້ານໂຄງສ້າງສິນເຊື່ອຂອງ ທຄຕລ ຮອດທ້າຍປີ 2022 ສິນເຊື່ອຂະແໜງອຸດສາຫະກຳກວມ 54,32 %, ຂະແໜງບໍລິການ 13,24%, ຂະແໜງກໍ່ສ້າງ 11,96%, ຂະແໜງການຄ້າ 10,91%, ຂະແໜງປະກອບວັດຖຸເຕັກນິກ 4,10%, ຂະແໜງຂົນສົ່ງ-ໄປສະນີ 4,09%, ຂະແໜງກະສິກຳ-ປ່າໄມ້ 0,19% ແລະ ຂະແໜງຫັດຖະກຳກວມເອົາ 0,01% ຕາມລຳດັບ.

ຕາຕະລາງ : ເງິນກູ້ທັງໝົດແຍກຕາມຂະແໜງເສດຖະກິດ

ຫົວໜ່ວຍ: ລ້ານກີບ

ເງິນກູ້ທັງໝົດແຍກຕາມ ຂະແໜງ ເສດຖະກິດ	2022	2021	2020	2019	2018
ຂະແໜງອຸດສາຫະກຳ	23.252.832	16.367.536	15.005.256	14.173.290	12.667.799
ຂະແໜງບໍລິການ	5.667.984	4.609.807	4.410.484	3.429.182	2.816.368
ຂະແໜງການຄ້າ	4.672.093	3.830.878	4.068.776	4.097.109	4.248.032
ຂະແໜງກໍ່ສ້າງ	5.120.441	3.723.445	4.378.792	4.142.802	3.305.759
ຂະແໜງຂົນສົ່ງ-ໄປສະນີ	1.751.815	1.199.632	975.181	696.817	674.039
ຂະແໜງປະກອບອັດຖຸ ເຕັກນິກ	1.755.682	50.507	57.873	72.882	83.611
ຂະແໜງກະສິກຳ-ປ່າໄມ້	80.631	45.683	26.910	62.198	72.733
ຂະແໜງຫັດຖະກຳ	2.830	2.103	2.248	3.056	3.385
ຂະແໜງອື່ນໆ	504.493	251.383	291.426	310.654	466.643
ເງິນກູ້ທັງໝົດ	**42.808.801**	**30.080.974**	**29.216.946**	**26.987.990**	**24.338.369**





5. ລາຍຮັບ ແລະ ລາຍຈ່າຍ


➢ ລາຍຮັບ

ຜົນການດຳເນີນທຸລະກິດຂອງ ທຄຕລ ໃນປີ 2022 ທີ່ຜ່ານມາ ເຫັນວ່າສາມາດສ້າງລາຍຮັບເພີ່ມຂຶ້ນໃນຫຼາຍດ້ານເປັນຕົ້ນ ແມ່ນ ລາຍຮັບສຸດທິລາຍຮັບດອກເບ້ຍ ແລະ ລາຍຮັບສຸດທິຈາກຄ່າທຳນຽມ, ທາງດ້ານລາຍຮັບສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດໃນປີ 2022 ແມ່ນບໍ່ສາມາດສ້າງລາຍຮັບໄດ້ ເນື່ອງຈາກສະພາບການຊື້ຂາຍເງິນຕາມີຄວາມຫຍຸ້ງຍາກ ອັດຕາແລກປ່ຽນມີຄວາມຜັນຜວນສູງ. ສຳລັບໂຄງສ້າງລາຍຮັບສຸດທິໃນປີ 2022 ເຫັນໄດ້ວ່າ ລາຍຮັບສຸດທິດອກເບ້ຍ ຍັງກວມອັດຕາສ່ວນທີ່ສູງກວ່າໝູ່ 74%, ຮອງລົງມາແມ່ນລາຍຮັບສຸດທິຄ່າທຳນຽມ ກວມເອົາ 21% ເຊິ່ງມີແນວໂນ້ມເພີ່ມສູງຂຶ້ນໃນປີ 2021 ແລະ ປີ 2022, ທາງດ້ານລາຍຮັບອື່ນໆ ກວມ 10% ຕາມລຳດັບ.

ຕາຕະລາງ : ລາຍຮັບແຕ່ລະປີ

ຫົວໜ່ວຍ: ລ້ານກີບ

ເນື້ອໃນ	2022	2021	2020	2019	2018
ລາຍຮັບສຸດທິດອກເບ້ຍ	1.270.883	752.597	1.090.203	965.593	938.251
ລາຍຮັບສຸດທິຄ່າທຳນຽມ	364.145	278.198	213.181	219.486	239.620
ລາຍຮັບສຸດທິຊື້ຂາຍເງິນຕາຕ່າງປະເທດ	(38.154)	4.084	42.236	33.545	49.719
ລາຍຮັບອື່ນໆ	121.260	180.385	36.166	112.093	21.892
ລວມ	**1.718.134**	**1.215.264**	**1.381.786**	**1.330.717**	**1.249.482**




➢ **ລາຍຈ່າຍໃນການດຳເນີນງານ**

ຄຽງຄູ່ກັບກັບການສ້າງລາຍຮັບຂອງ ທຄຕລ ນັ້ນ ຍັງມີລາຍຈ່າຍທີ່ຕິດພັນໃນການບໍລິຫານ, ການດຳເນີນງານໃນທຸລະກິດ, ວຽກງານບໍລິການ, ດ້ານບຸກຄະລາກອນ ແລະ ການພັດທະນາວຽກງານຕ່າງໆ ໃຫ້ທັນສະໄໝ, ສະດວກສະບາຍ ແລະ ຮັບປະກັນຄວາມປອດໄພ. ສຳລັບໂຄງສ້າງລາຍຈ່າຍໃນການດຳເນີນງານໃນປີ 2022 ລາຍຈ່າຍດ້ານພະນັກງານກວມ 51%, ລາຍຈ່າຍບໍລິຫານກວມ 30% ແລະ ລາຍຈ່າຍຫຼ້ຍຫ້ຽນຊັບສິນຍັດ ກວມ 19% ຕາມລຳດັບ. ໃນຕໍ່ໜ້າ ທຄຕລ ກໍ່ຈະໄດ້ສືບຕໍ່ເອົາໃຈໃສ່ໃນການຄວບຄຸມລາຍຈ່າຍດ້ານຕ່າງໆທີ່ບໍ່ຈຳເປັນ ໃຫ້ຫຼຸດລົງ ທັງນີ້, ກໍ່ເພື່ອເພີ່ມປະສິດທິຜົນໃນການດຳເນີນງານໃຫ້ສູງຂຶ້ນ.

ຕາຕະລາງ : ລາຍຈ່າຍແຕ່ລະປີ

ຫົວໜ່ວຍ: ລ້ານກີບ

ເນື້ອໃນ	2022	2021	2020	2019	2018
ລາຍຈ່າຍພະນັກງານ	(329.249)	(305.806)	(324.020)	(303.632)	(334.693)
ລາຍຈ່າຍບໍລິຫານ	(195.263)	(175.296)	(182.420)	(182.001)	(156.134)
ລາຍຈ່າຍຫຼ້ຍຫ້ຽນ	(120.721)	(89.390)	(83.697)	(79.061)	(72.363)
ລວມ	**(645.233)**	**(570.492)**	**(590.137)**	**(564.694)**	**(563.190)**




6. ກຳໄລ ແລະ ຂາດທຶນ

ຈາກສະພາບເສດຖະກິດໂດຍລວມທີ່ເລີ່ມປັບຕົວດີຂຶ້ນ ແລະ ດ້ວຍຄວາມພະຍາຍາມໃນການແກ້ໄຂສະພາບການດຳເນີນທຸລະກິດພາຍໃນຂອງ ທຄຕລ ເຮັດໃຫ້ ຜົນການດຳເນີນທຸລະກິດໃນປີ 2022 ຄ່ອຍໆໄດ້ຮັບການປັບປຸງໃນຈັງຫວະທີ່ດີຂຶ້ນກວ່າປີທີ່ຜ່ານມາ ການສ້າງກຳໄລສາມັນຢັນລຸ ແລະ ລື່ນແຜນການທີ່ກຳນົດໄວ້.

ຕາຕະລາງ: ກຳໄລແຕ່ລະປີ

ຫົວໜ່ວຍ: ລ້ານກີບ

ລາຍການ	2022	2021	2020	2019	2018
ກຳໄລກ່ອນອາກອນ	197.079	12.585	299.594	462.762	427.280




7. ເງິນປັນຜົນ

ໃນໄລຍະປີ 2022 ຜົນການດຳເນີນທຸລະກິດຂອງ ທຄຕລ ໄດ້ຮັບການປັບປຸງໃຫ້ດີຂຶ້ນກວ່າປີທີ່ຜ່ານມາ. ທຄຕລ ໄດ້ເອົາໃຈໃສ່ສູ້ຊົນປະຕິບັດແຜນດຳເນີນທຸລະກິດ, ພັດທະນາຜະລິດຕະພັນໃໝ່ຫຼາຍຢ່າງເພື່ອເປັນທາງເລືອກໃຫ້ແກ່ຜູ້ໃຊ້ບໍລິການ

ແລະ ເປັນຊ່ອງທາງໃນການຊອກຫາແຫຼ່ງລາຍຮັບເພີ່ມຂຶ້ນ. ທັງນີ້ເພື່ອການສ້າງຄວາມເຂັ້ມແຂງດ້ານທຸລະກິດ, ຮັກສາຜົນປະໂຫຍດ, ສ້າງຄວາມໝັ້ນໃຈໃຫ້ຜູ້ຖືຮຸ້ນ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ມາລົງທຶນໃນຮຸ້ນຂອງ ທຄຕລ ໂດຍສະເພາະການແບ່ງເງິນປັນຜົນຈາກກຳໄລສຸດທິຂອງ ທຄຕລ ຫຼັງຈາກຫັກຄັງແຮຕ່າງໆ ເພື່ອຈັດສັນເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນໃນແຕ່ລະປີ, ຈາກຜົນການດຳເນີນງານໃນປີ 2022 ທຄຕລ ສະເໜີຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນໃນຈຳນວນ 100 ກີບ/ຮຸ້ນ ເຊິ່ງເປັນສັນຍານທີ່ດີຂຶ້ນກວ່າປີທີ່ຜ່ານມາ ທີ່ ທຄຕລ ບໍ່ໄດ້ຈ່າຍເງິນປັນຜົນ.

ຕາຕະລາງ : ເງິນປັນຜົນແຕ່ລະປີ ໜ່ວຍ: ກີບ


ເນື້ອໃນ	2022	2021	2020	2019	2018
ເງິນປັນຜົນ	100	-	560	813	991



8. ການຊື້-ຂາຍຮຸ້ນຂອງ ທຄຕລ ຢູ່ໃນຕະຫຼາດຫຼັກຊັບ

ດ້ານການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບ ເຫັນໄດ້ວ່າມີຫຼາຍບໍລິສັດທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ດຳເນີນເປີດການຊື້-ຂາຍຮຸ້ນໃນແຕ່ລະວັນ. ເຊິ່ງໃນນັ້ນ, ເຫັນໄດ້ວ່າ ຮຸ້ນຂອງ ທຄຕລ ແມ່ນໄດ້ສ້າງຄວາມສົນໃຈແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດຫຼາຍສົມຄວນ ເຊິ່ງສະແດງອອກໃນການຊື້-ຂາຍຕໍ່ວັນ. ສຳລັບໃນປີ 2022 ໂດຍສະເລ່ຍປະລິມານການຊື້-ຂາຍຮຸ້ນ ທຄຕລ ແມ່ນ 17.346 ຮຸ້ນ/ວັນ (ປະລິການການຊື້-ຂາຍຮຸ້ນໃນປີ ຈຳນວນ 4.301.800 ຮຸ້ນ, ເປັນຈຳນວນເງິນທັງໝົດ 20,60 ຕື້ກວ່າກີບ). ສ່ວນລາຄາຮຸ້ນຂອງ ທຄຕລ ສະເລ່ຍໝົດປີຢູ່ໃນລະດັບ 4.756 ກີບ/ຮຸ້ນ (ໃນນັ້ນ, ລາຄາສູງສຸດແມ່ນ 5.850 ກີບ/ຮຸ້ນ ແລະ ລາຄາຕ່ຳສຸດແມ່ນ 3.220 ກີບ/ຮຸ້ນ).


ລາຄາຮຸ້ນ ປີ 2022
7.000
6.000
5.000
4.000
3.000
2.000
1.000
0
5.850
3.220
1/4/2022
2/4/2022
3/4/2022
4/4/2022
5/4/2022
6/4/2022
7/4/2022
8/4/2022
9/4/2022
10/4/2022
11/4/2022
12/4/2022


ປະລິມານ ຊື້-ຂາຍ(ຮຸ້ນ) ປີ 2022
700.000
600.000
500.000
400.000
300.000
200.000
100.000
0
1/4/2022
2/4/2022
3/4/2022
4/4/2022
5/4/2022
6/4/2022
7/4/2022
8/4/2022
9/4/2022
10/4/2022
11/4/2022
12/4/2022

VI. ໂຄງປະກອບການຈັດຕັ້ງ

1. ຜູ້ຖືຮຸ້ນ

+ ລາຍຊື່ຜູ້ຖືຮຸ້ນແຕ່ 5% ຂຶ້ນໄປ

1) ລັດຖະບານແຫ່ງ ສປປ ລາວ ຕາງໜ້າໂດຍກະຊວງການເງິນ ຖືຮຸ້ນ 60% ຂອງຮຸ້ນ ທຄຕລ ທັງໝົດ;
2) ບໍລິສັດ COFIBRED (ຄູ່ຮ່ວມຮຸ້ນທາງຍຸດທະສາດ) ເຊິ່ງເປັນບໍລິສັດລູກຂອງກຸ່ມທະນາຄານ BRED ຈາກປະເທດຝຣັ່ງ ຖືຮຸ້ນ 10% ຂອງຮຸ້ນ ທຄຕລ ທັງໝົດ.
3) ສ່ວນນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ (ທັງບຸກຄົນ ແລະ ນິຕິບຸກຄົນ) ຖືຮຸ້ນລວມກັນເທົ່າກັບ 30% ຂອງຮຸ້ນ ທຄຕລ ທັງໝົດ, ແຕ່ສູງສຸດອະນຸຍາດໃຫ້ຖືບໍ່ກິນ 2% ຕໍ່ລາຍ.

+ ໂຄງສ້າງການຖືຮຸ້ນ

ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ທັນວາ 2022 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	ຈຳນວນຮຸ້ນ	ສັດສ່ວນ
ລັດຖະບານ (ຕາງໜ້າໂດຍກະຊວງການເງິນ)	124.634.021	60%
ຄູ່ຮ່ວມຮຸ້ນທາງຍຸດທະສາດ (COFIBRED)	20.772.359	10%
ນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດອື່ນໆ (*)	62.316.920	30%
ລວມທັງໝົດ	**207.723.300**	**100%**

(*) ແຕ່ລະບຸກຄົນທຳມະດາ ຫຼື ອົງກອນ ແມ່ນອະນຸຍາດໃຫ້ຖືຮຸ້ນໄດ້ສູງສຸດ 2% ຂອງຈຳນວນຮຸ້ນທັງໝົດ.

2. ສະພາບໍລິຫານ

ສະພາບໍລິຫານ ທຄຕລ ຊຸດປະຈຸບັນ ໄດ້ຖືກຮັບຮອງໂດຍກອງປະຊຸມວິສາມັນຜູ້ຖືຮຸ້ນ ທຄຕລ ຄັ້ງວັນທີ 29 ຕຸລາ 2021 ແລະ ວັນທີ 22 ພະຈິກ 2022 ເຊິ່ງສະມາຊິກສະພາບໍລິຫານທີ່ປະຕິບັດໜ້າທີ່ນະວັນທີ 31 ທັນວາ 2022 ມີລາຍຊື່ລຸ່ມນີ້:

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ບ່ອນປະຈຳການ	ວັນທີ່ແຕ່ງຕັ້ງ
1	ທ່ານ ຄຳສຸກ ສຸນດາລາ	ກຳມະການ ອິດສະຫລະ, ຮອງ ປະທານ, ຮັກສາການປະທານ	ບຸກຄົນອິດສະຫຼະ	ແຕ່ງຕັ້ງຄືນວັນທີ 29 ຕຸລາ 2021
2	ທ່ານ ນ. ສາຍສະໝອນ ຈັນທະຈັກ	ກຳມະການ	ຜູ້ອຳນວຍການ ທຄຕລ	ແຕ່ງຕັ້ງ ວັນທີ 22 ພະຈິກ 2022
3	ທ່ານ Stephane Mangiavacca	ກຳມະການ	COFIBRED	ແຕ່ງຕັ້ງຄືນວັນທີ 29 ຕຸລາ 2021
4	ທ່ານ ປະສົມພັດ ຄຳຕັນ	ກຳມະການ	ກະຊວງການເງິນ	ແຕ່ງຕັ້ງວັນທີ 29 ຕຸລາ 2021
5	ທ່ານ ຣສ ທອງເພັດ ຈັນທະນີວົງ	ກຳມະການ ອິດສະຫລະ	ຄະນະເສດຖະສາດ, ມ.ຊ	ແຕ່ງຕັ້ງວັນທີ 29 ຕຸລາ 2021
6	ທ່ານນາງ ລັດດາວັນ ຊິງວິໄລ	ກຳມະການ ອິດສະຫລະ	ສະຖາບັນຄົ້ນຄວ້າ ເສດຖະກິດແຫ່ງຊາດ	ແຕ່ງຕັ້ງວັນທີ 29 ຕຸລາ 2021

7	ທ່ານ ສອນໄຊ ສີລາເພັດ	ກຳມະການ ອິດສະຫລະ	ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ	ແຕ່ງຕັ້ງວັນທີ 29 ຕຸລາ 2021
8	ທ່ານ ວຽງສຸກ ຈຸນທະວົງ	ກຳມະການ	ຮອງຜູ້ອຳນວຍການ ທຄຕລ	ແຕ່ງຕັ້ງຄືນວັນທີ 29 ຕຸລາ 2021

ສະມາຊິກສະພາບໍລິຫານທີ່ໄດ້ຍົກຍ້າຍໜ້າທີ່ໃນໄລຍະປີ 2022 ປະກອບດ້ວຍ:

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ບ່ອນປະຈຳການ	ວັນທີ່ແຕ່ງຕັ້ງ
1	ທ່ານ ປອ. ບຸນເຫຼືອ ສົນໄຊ ວໍລະວົງ	ປະທານ	ກະຊວງການເງິນ	ແຕ່ງຕັ້ງຄືນວັນທີ 29 ຕຸລາ 2021 ແລະ ສິ້ນສຸດການເປັນເປັນທະ ທານສະພາບໍລິຫານ ທຄຕລ ວັນ ທີ 22 ມິຖຸນາ 2022 (ຮັບຕຳ ແໜ່ງຜູ້ວ່າການ ທຫລ)
2	ທ່ານ ຄຳພຸດ ສິດທິລາດ	ກຳມະການ	ຜູ້ອຳນວຍການ ທຄຕລ	ແຕ່ງຕັ້ງວັນທີ 29 ຕຸລາ 2021 ແລະ ສິ້ນສຸດການເປັນສະມາຊິກ ສະພາບໍລິຫານ ນັບແຕ່ວັນທີ 2 ສິງຫາ 2022 (ຍົກຍ້ານໄປຮັບໜ້ ທີ່ໃໝ່ຢູ່ ທຫລ)

ໝາຍເຫດ:

ໃນໄລຍະປີ 2022 ໄດ້ມີການປ່ຽນແປງໃນສະພາບໍລິຫານ ດັ່ງນີ້:

- ຮອດວັນທີ 22 ມິຖຸນາ 2022 ສະພາບໍລິຫານຍັງມີສະມາຊິກ 8 ທ່ານ ຈາກເດີມ 9 ທ່ານ ເນື່ອງຈາກປະທານສະພາ ບໍລິຫານໄດ້ມາຮັບໜ້າທີ່ໃໝ່ເປັນຜູ້ວ່າການ ທຫລ;
- ໄລຍະວັນທີ 2 ສິງຫາ ຫາ 22 ພະຈິກ 2022 ສະພາບໍລິຫານມີສະມາຊິກ 7 ທ່ານ ເນື່ອງຈາກ ທ່ານ ຄຳພຸດ ສິດທິ ລາດ ຍົກຍ້າຍໄປຮັບໜ້າທີ່ໃໝ່ຢູ່ ທຫລ;
- ນັບແຕ່ 22 ພະຈິກ ຫາເດືອນທັນວາ 2022 ທຄຕລ ມີສະມາຊິກສະພາບໍລິຫານ 8 ທ່ານ ໂດຍກອງປະຊຸມຜູ້ຖືຮຸ້ນ ໄດ້ຮັບຮອງການແຕ່ງຕັ້ງ ທ່ານ ນ. ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ເປັນສະມາຊິກສະພາບໍລິຫານ.

3. ຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ທຄຕລ ປະກອບດ້ວຍ 4 ຄະນະກຳມະການ ເຊິ່ງແຕ່ລະຄະນະກຳມະການປະກອບ ດ້ວຍສະມາຊິກສະພາບໍລິຫານ 3-4 ທ່ານ ຕາມລາຍລະອຽດດັ່ງລຸ່ມນີ້:

3.1. ຄະນະກຳມະການກວດສອບ

1. ທ່ານ ສອນໄຊ ສີລາເພັດ ກຳມະການສະພາບໍລິຫານ ທຄຕລ ເປັນປະທານ
2. ທ່ານ ຮສ ທອງເພັດ ຈັນທະນິວົງ ກຳມະການສະພາບໍລິຫານ ທຄຕລ ເປັນຮອງປະທານ
3. ທ່ານ ປະສົມເພັດ ຄຳຕັນ ກຳມະການສະພາບໍລິຫານ ທຄຕລ ເປັນກຳມະການ

3.2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

1. ທ່ານ ຮສ ທອງເພັດ ຈັນທະນິວົງ ກຳມະການສະພາບໍລິຫານ ທຄຕລ ເປັນປະທານ
2. ທ່ານ ປະສົມເພັດ ຄຳຕັນ ກຳມະການສະພາບໍລິຫານ ທຄຕລ ເປັນຮອງປະທານ
3. ທ່ານ ສອນໄຊ ສີລາເພັດ ກຳມະການສະພາບໍລິຫານ ທຄຕລ ເປັນກຳມະການ

3.3. ຄະນະກຳມະການຄັດເລືອກ ແລະ ຄະນະກຳມະການກຳນົດຄ່າຕອບແທນ:

1. ທ່ານ ຄຳສຸກ ສູນດາລາ	ຮອງປະທານສະພາບໍລິຫານ ທຄຕລ	ເປັນປະທານ
2. ທ່ານ ປອ.ບຸນເຫຼືອ ສົນໄຊວໍລະວົງ	ປະທານສະພາບໍລິຫານ ທຄຕລ	ຮອງປະທານ
3. ທ່ານ ຄຳພຸດ ສິດທິລາດ	ກຳມະການສະພາບໍລິຫານ ທຄຕລ	ເປັນກຳມະການ

3.4. ຄະນະກຳມະການຄຸ້ມຄອງບໍລິຫານ

1. ທ່ານນາງ ລັດດາວັນ ຊົງວິໄລ	ກຳມະການສະພາບໍລິຫານ ທຄຕລ	ເປັນປະທານ
2. ທ່ານ ຄຳພຸດ ສິດທິລາດ	ກຳມະການສະພາບໍລິຫານ ທຄຕລ	ເປັນຮອງປະທານ
3. ທ່ານ ສອນໄຊ ສີລາເພັດ	ກຳມະການສະພາບໍລິຫານ ທຄຕລ	ເປັນກຳມະການ
4. ທ່ານ ວຽງສຸກ ຈຸນທະວົງ	ກຳມະການສະພາບໍລິຫານ ທຄຕລ	ເປັນກຳມະການ

ປະຫວັດຂອງສະມາຊິກສະພາບໍລິຫານ



ທ່ານ ຄຳສຸກ ສຸນດາລາ

ຮອງປະທານສະພາບໍລິຫານ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 03/06/1945
ສັນຊາດ : ລາວ
ພາສາ : ລາວ, ອັງກິດ, ຝຣັ່ງ
ຕຳແໜ່ງ : ກຳມະການອິດສະຫຼະ

ປະຫວັດການສຶກສາ:

1993 : ມະຫາວິທະຍາໄລຈອດສ໌ທາວທີ່ນະຄອນວໍຊິງຕັນປະເທດສະຫະລັດອາເມລິກາ.
1985 : ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍທີ່ເມືອງປູເນ ປະເທດອິນເດຍ
1974 : ສູນຝຶກອົບຮົມລະຫວ່າງປະເທດ ທີ່ ເມືອງ ນາໂກຍາປະເທດຍີ່ປຸ່ນ.
1972 : ການຝຶກອົບຮົມ: ດ້ານເສດຖະສາດ ຈາກສະຖາບັນຄຸ້ມຄອງເສດຖະກິດ ຂອງອົງການສະຫະປະຊາຊາດ ທີ່ ບາງກອກປະເທດໄທ.
1969 : ຈົບອຸດົມ ແລະ ລະດັບປະລິນຍາຕຣີ ຈາກປະເທດ ອິດສະຕາລີ, ມະຫາວິທະຍາໄລມິວຊາວເວ.

ປະຫວັດການເຮັດວຽກ:

2015 : ເປັນທີ່ປຶກສາດ້ານການເງິນ ແລະ ການທະນາຄານ ຂອງບໍລິສັດລ້ານຊ້າງ ມິເນີໂຮນ ຈຳກັດ (ຊຶ່ງເປັນບໍລິສັດ ໃນເຄືອຂອງກຸ່ມບໍລິສັດໂອເຊຍນາ ແຫ່ງເມືອງ ເມວເບີນ ປະເທດອິດສະຕາລີ).
1995–1996 : ເປັນທີ່ປຶກສາຜູ້ອຳນວຍການ ທີ່ອົງການ ການເງິນລະຫວ່າງປະເທດ ກຸ່ມພາກພື້ນອາຊີຕາເວັນອອກ ສ່ຽງໃຕ້, ທີ່ນະຄອນວໍຊິງຕັນ ປະເທດອາເມລິກາ.
1990–1994 ແລະ 1997-2005 : ທະນາຄານແຫ່ງ ສປປ ລາວ.
1976–1989 : ຢູ່ທະນາຄານການຄ້າຕ່າງປະເທດລາວ
1970–1975 : ຢູ່ທະນາຄານພັດທະນາລາວ



ທ່ານ ນາງ ສາຍສະໝອນ ຈັນທະຈັກ
ກຳມະການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 15/03/1969
ສັນຊາດ : ລາວ
ພາສາ : ລາວ, ອັງກິດ
ຕຳແໜ່ງ : ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

ທິດສະດີການເມືອງ: ຊັ້ນສູງ.
2007 : ປະລິນຍາໂທ ສາຂາ ບໍລິຫານທຸລະກິດຕ່າງປະເທດ ຈາກປະເທດ ອົດສະຕາລີ (Flinders University, Australia).
1998 : ປະລິນຍາໂທ ສາຂາ ບໍລິຫານລັດ ຈາກປະເທດ ຍີ່ປຸ່ນ (Saitama University, Japan).
1993 : ປະລິນຍາໂທ ສາຂາ ເສດຖະກິດມະຫາພາກ ຈາກມະຫາວິທະຍາໄລ ກູບານ ປະເທດ ລັດເຊຍ (Kuban State University, Russia).

ປະຫວັດການເຮັດວຽກ:

08/2022–ປັດຈຸບັນ : ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.
09/2021–08/2022 : ຜູ້ອຳນວຍການໃຫຍ່, ຕະຫລາດຫລັກຊັບລາວ.
2015: ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ.
04/2010 : ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ.
2009 : ຮອງຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.
1993–1997 : ພະນັກງານກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.



ທ່ານ Stephane MANGIAVACCA

ກຳມະການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: : 11/07/1975

ສັນຊາດ : ຝຣັ່ງ

ພາສາ : ຝຣັ່ງ, ອັງກິດ, ສະເປນ, ຈີນ ແລະ ຍີ່ປຸ່ນ

ປະຫວັດການສຶກສາ:

1996-1999 : ສຶກສາທີ່ມະຫາວິທະຍາໄລ Ecole Nationale Superieure des Mines de Saint-Etienne

- ຈົບຊັ້ນສູງສາຂາ ວິສະວະກາສາດ ດວຍກຽດນິຍົມ
- ເຂົ້າຮວມໂຄງການແລກປຽນກຽວກັບວິສະວະກາສິ່ງແວດລອມ ທີ່ University of New Brunswick, ປະເທດ Canada
- ຫລັກສູດປະລິນຍາຕຣີເສດຖະສາດ

ປະຫວັດການເຮັດວຽກ:

01/2020 - ປະຈຸບັນ : ຫົວໜ້າຝ່າຍທຸລະກິດ່ຕ່າງປະເທດ, BRED Banque Populaire, ປະເທດ France.

2009-2010: ຫົວໜ້າຝ່າຍຄຸ້ມຄອງຄວາມສຽງ ແລະ ການປະຕິບັດຕາມ, BRED Banque Populaire, ປະເທດ France.

2001-2009 : ຜູ້ຈັດການອາວຸດໂສຝ່າຍກວດສອບ ທີ່ Central Audit, Banque Populaire - Natixis - Coface (BPCE GROUP)

1999-2001 : ຜູ້ຊ່ວຍອຽກກ່ຽວກັບການຄ້າ ທີ່ French Trade Commission, Guangzhou, China

1999 : ພະນັກງານຝຶກຫັດທີ່ EDF, French Company of Electricity, Lyon, France

1998 : ພະນັກງານຝຶກຫັດທີ່ The Yokohama Rubber Company, Hiratsuka, Japan

1997 : ພະນັກງານຝຶກຫັດທີ່ Pechiney-Aluminium, Issoire, France



ທ່ານ ປະສົມພັດ ຄຳຕັນ

ກຳມະການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 25/05/1970

ສັນຊາດ : ລາວ

ພາສາ : ອັງກິດ

ຕຳແໜ່ງ : ຮອງຫົວໜ້າກົມ, ກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ, ກະຊວງການເງິນ

ປະຫວັດການສຶກສາ:

2001-2003 : ປະລິນຍາໂທເສດຖະກິດ-ທຸລະກິດ ທີ່ວິທະຍາໄລກຸງຮີ, ປະເທດ ສ ເກົາຫຼີ

1987-1993 : ປະລິນຍາຕີຄຸ້ມຄອງກົນຈັກ ທີ່ມະຫາວິທະຍາໄລຊັບພະວິຊາ 2 ທັນວາ ສປປ ລາວ

ປະຫວັດການເຮັດວຽກ:

08/2020-ປະຈຸບັນ : ຮອງຫົວໜ້າກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ, ກະຊວງການເງິນ

2016-2020 : ຮອງຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳ, ກະຊວງການເງິນ

2013-2016 : ຫົວໜ້າພະແນກຄຸ້ມຄອງທຶນກູ້ຢືມ ແລະ ຊ່ວຍເຫຼືອຫຼ້າ, ກົມການເງິນຕ່າງປະເທດ, ກະຊວງການເງິນ

2008-2013 : ຫົວໜ້າຄຸ້ມຄອງໂຄງການກູ້ຢືມ ແລະ ຊ່ວຍເຫຼືອຫຼ້າ ຈາກທະນາຄານໂລກ ກະຊວງການເງິນ

2007-2008 : ຮອງຫົວໜ້າພະແນກສະຖິຕິການເງິນ, ກົມນະໂຍບາຍການເງິນ,ກະຊວງການເງິນ

1998-2007 : ວິຊາການກົມງົບປະມານ, ກະຊວງການເງິນ

1994-1998 : ວິຊາການກົມເງິນຕາຕ່າງປະເທດ, ກະຊວງການເງິນ



ທ່ານ ທອງເພັດ ຈັນທະນິວົງ

ກຳມະການອິດສະຫຼະ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 20/04/1962
ສັນຊາດ : ລາວ
ພາສາ : ອັງກິດ
ຕຳແໜ່ງ : ຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.

ປະຫວັດການສຶກສາ:

2018–2021 : ຄົ້ນຄວ້າປະລິນຍາເອກ ດ້ານການບັນຊີ (PhD Candidate) ຢູ່ມະຫາວິທະຍາໄລສີປະທຸມປະເທດໄທ;
2019 : ໄດ້ຮັບປະກາດສະນິຍະບັດ ນັກຊ່ຽວຊານບັນຊີລາວ;
1998–2002 : ຄົ້ນຄວ້າປະລິນຍາໂທ ດ້ານການພົວພັນສາກົນ ຢູ່ມະຫາວິທະຍາໄລ De Mons ປະເທດແບນຊິກ;
1998–2000: ຄົ້ນຄວ້າປະລິນຍາໂທ ດ້ານບໍລິຫານທຸລະກິດ ຢູ່ມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊັຍ (AIT) ປະເທດໄທ;
1996–1997 : ສຶກສາລະດັບປະລິນຍາຕີ ດ້ານບໍລິຫານທຸລະກິດ ໂຄງການຮ່ວມມືສະຖາບັນການເມືອງການປົກຄອງແຫ່ງຊາດ ແລະ ມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊັຍ (AIT) ປະເທດໄທ;
1981–1985. : ສຶກສາລະດັບປະລິນຍາຕີ ດ້ານຄະນິດສາດ ຢູ່ມະຫາວິທະຍາໄລແຫ່ງຊາດ.

ປະຫວັດການເຮັດວຽກ:

- ເປັນຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ (ຮັບຜິດຊອບຫຼັກສູດປະລິນຍາໂທ ແລະ ປະລິນຍາເອກ), ມະຫາວິທະຍາໄລແຫ່ງຊາດ
- ເປັນຮອງສາດສະດາຈານ ສາຂາບໍລິຫານທຸລະກິດ (ເລກທີ 304-178/ນຍ ລົງວັນທີ 04/09/2006)
- ເປັນປະທານຄະນະກຳມະທິການຫຼັກສູດ ການບັນຊີ ແລະ ການກວດສອບ (CPA) ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ
- ເປັນຄະນະບໍລິຫານງານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ
- ເປັນກຳມະການອິດສະຫຼະຂອງສະພາບໍລິຫານ ລັດວິສາຫະກິດ ລາວໂທລະຄົມ
- ເປັນຄະນະຄົ້ນຄວ້າ ແລະ ປັບປຸງລະບົບບັນຊີວິສາຫະກິດ, ຮູບແບບເອກະສານການລາຍງານການເງິນ, ການກຳນົດຜັງບັນຊີ ແລະ ເທັກນິກການບັນທຶກບັນຊີວິສາຫະກິດ (ກະຊວງການເງິນ)
- ເປັນອາຈານສອນຫຼັກສູດ ປະລິນຍາຕີນາໆຊາດ ແລະ ປະລິນຍາໂທ ສາຂາບໍລິຫານທຸລະກິດ, ການບັນຊີ, ການເງິນ ແລະ ການທະນາຄານ, ເສດຖະສາດ ຂອງ ມະຫາວິທະຍາໄລ ແຫ່ງຊາດ
- ເປັນອາຈານຮັບເຊີນຫຼັກສູດ MBA ມະຫາວິທະຍາໄລຂອນແກນ, ປະເທດໄທ
- ເປັນຄູຝຶກ ມາດຕະຖານການບັນທຶກບັນຊີສາກົນ (IFRS) ແລະ ມາດຖານການກວດສອບສາກົນ (AIS)



ທ່ານ ນ. ລັດຕາວັນ ຊິງວິໄລ

ກຳມະການອິດສະຫຼະ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 27/04/1982
ສັນຊາດ. : ລາວ
ພາສາ : ລາວ, ອັງກິດ
ຕຳແໜ່ງ : ວ່າການຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ.

ປະຫວັດການສຶກສາ:

2008–2009 : ຄົ້ນຄວ້າປະລິນຍາໂທ ດ້ານນະໂຍບາຍບໍລິຫານພາກລັດ ຢູ່ສະຖາບັນ GRIPS, ປະເທດຍີ່ປຸ່ນ;
2000–2005 : ສຶກສາລະດັບປະລິນຍາຕີ ດ້ານເສດຖະສາດ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ;
2004 : ນັກສຶກສາແລກປ່ຽນມະຫາວິທະຍາໄລແຫ່ງຊາດສິງກະໂປ, ປະເທດສິງກະໂປ.

ປະຫວັດການເຮັດວຽກ:

2020- ປັດຈຸບັນ : ວ່າການຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ
2019–2020 : ຮັກສາການຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ
2016–2019 : ຮອງຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ
2015–2016 : ຫົວໜ້າພະແນກຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ
2011–2015 : ຮອງຫົວໜ້າພະແນກຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ
2005–2011 : ຜູ້ຊ່ວຍນັກຄົ້ນຄວ້າ ຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ



ທ່ານ ສອນໄຊ ສີລາເພັດ

ກຳມະການອິດສະຫຼະ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 01/01/1977

ສັນຊາດ : ລາວ

ພາສາ : ລາວ, ອັງກິດ ແລະ ເຊັກໂກ

ຕຳແໜ່ງ : ປະທານ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ

ປະຫວັດການສຶກສາ:

2017–2021 : ສຶກສາ ແລະ ຄົ້ນຄວ້າປະລິນຍາເອກ ດ້ານການບັນຊີ (PhD Candidate) ມະຫາວິທະຍາໄລສີປະທຸມ, ປະເທດໄທ;

2013–2014 : ສຶກສາ ແລະ ຄົ້ນຄວ້າປະລິນຍາໂທ ດ້ານການເງິນ ຢູ່ວິທະຍາໄລເທັກໂນໂລຢີສັນຕະພົນປະເທດໄທ;

1995–2000 : ສຶກສາລະດັບປະລິນຍາຕີ ດ້ານບໍລິຫານທຸລະກິດ ວິທະຍາໄລຄອມເຊັນເຕີ;

1995–1998 : ສຶກສາລະດັບຊັ້ນສູງ ດ້ານການບັນຊີ ຢູ່ວິທະຍາໄລປາກປ່າສັກ;

06/2016 : ເປັນສະມາຊິກຂອງ CPA ອິດສະຕາລີ;

2018 : ເປັນສະມາຊິກຂອງ CPA ລາວ;

1999–2000 : ເປັນສະມາຊິກຂອງ Lao Institute of Chartered Public Accountants (LICPA).

ປະຫວັດການເຮັດວຽກ:

05/2022–ປັດຈຸບັນ : ເປັນປະທານ Lao Chamber of Professional Accountants and Auditor (LCPAA)

2015–05/2022 : ເປັນຮອງປະທານ Lao Chamber of Professional Accountants and Auditor (LCPAA)

01/2016–12/2017 : ເປັນປະທານ ASEAN Federation of Accountants (AFA)

01/2014–12/2015 : ຮອງເປັນປະທານ ASEAN Federation of Accountants (AFA)

07/2011–09/2014 : ເປັນຜູ້ອຳນວຍການ Ernst & Young Lao Limited

07/2008–06/2011 : ເປັນຜູ້ຈັດການອາວຸໂສຝ່າຍກວດສອບ Ernst & Young Lao Limited

08/2007–06/2008 : ເປັນຜູ້ຈັດການຝ່າຍກວດສອບ Ernst & Young Lao Limited

05/2004–08/2007 : ເປັນຜູ້ຈັດການຝ່າຍກວດສອບ PricewaterhouseCoopers (Lao) Ltd

2002–05/2004 : ເປັນພະນັກງານກວດສອບອາວຸໂສປະສົບການ PricewaterhouseCoopers (Lao) Ltd

2000–2001 : ເປັນພະນັກງານກວດສອບອາວຸໂສ PricewaterhouseCoopers (Lao) Ltd

1998–1999 : ເປັນພະນັກງານຜູ້ຊ່ວຍກວດສອບ PricewaterhouseCoopers (Lao) Ltd



ທ່ານ ວຽງສຸກ ຈຸນທະວົງ
ກຳມະການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 15/08/1964
ສັນຊາດ : ລາວ
ພາສາ : ລາວ, ອັງກິດ ແລະ ເຊັກໂກ
ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

2017 : ບຳລຸງທິດສະດີການເມືອງ 45 ວັນ ຈາກໂຮງຮຽນ ການເມືອງ - ການປົກຄອງ.
1982-1989 : ປະລິນຍາໂທ ສາຂາເສດຖະກິດການຄ້າ ຈາກສາທາລະນະລັດເຊັກ

ປະສົບການການເຮັດວຽກ:

2019 - ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ
2015 – 2019 : ເປັນຫົວໜ້າພະແນກຄຸ້ມຄອງສິນເຊື່ອ ແລະ ເປັນການມະການສະພາບໍລິຫານບໍລິສັດ ຫລັກຊັບ ທຄຕລ-ກທ (BCEL-KT)
2013 – 2015 : ຫົວໜ້າ ທຄຕລ ສາຂາຈຳປາສັກ
2011 – 2013 : ຫົວໜ້າ ທຄຕລ ສາຂາສາລະວັນ
2010 – 2011 : ວ່າການຫົວໜ້າ ທຄຕລ ສາຂາສາລະວັນ
2007 – 2010 : ວ່າການຫົວໜ້າ ທຄຕລ ສາຂາຈຳປາສັກ
2005 – 2007 : ວ່າການຮອງຫົວໜ້າສາຂາຈຳປາສັກ
2003 – 2005 : ຫົວໜ້າຂະແໜງສິນເຊື່ອ ສາຂາຈຳປາສັກ
2001 – 2002 : ຫົວໜ້າໜ່ວຍງານບໍລິການ ສາຂາຈຳປາສັກ
1996 – 2000 : ພະນັກງານວິຊາການສິນເຊື່ອ ທຄຕລ ສາຂາຈຳປາສັກ

➢ **ການຖືຮຸ້ນ ທຄຕລ ຂອງສະມາຊິກສະພາບໍລິຫານ**

ອີງຕາມບັນຊີລາຍຊື່ຜູ້ຖືຮຸ້ນຂອງ ທຄຕລ ທີ່ປິດໃນວັນທີ 22 ມີນາ 2023, ສະມາຊິກສະພາບໍລິຫານ ຍັງຄົງຖືຄອງຮຸ້ນ ຂອງ ທຄຕລ ດັ່ງນີ້:

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ຈຳນວນຮຸ້ນທີ່ຖື	ສັດສ່ວນ	ໝາຍເຫດ
1	ທ່ານ ຄຳສຸກ ສູນດາລາ	ກຳມະການອິດສະຫຼະ, ຮອງປະທານ	0		
2	ທ່ານ Stephane Mangiavacca	ກຳມະການ	0		
3	ທ່ານ ປະສົມເພັດ ຄຳຕັນ	ກຳມະການ	0		
4	ທ່ານ ຣສ.ປອ ທອງເພັດ ຈັນທະນີວົງ	ກຳມະການອິດສະຫຼະ	0		
5	ທ່ານ ນ. ລັດດາວັນ ຊົງວິໄລ	ກຳມະການອິດສະຫຼະ	0		
6	ທ່ານ ສອນໄຊ ສີລາເພັດ	ກຳມະການອິດສະຫຼະ	0		
7	ທ່ານ ວຽງສຸກ ຈຸນທະວົງ	ກຳມະການ	0		
8	ທ່ານ ນ. ສາຍສະໝອນ ຈັນທະຈັກ		0		

4. ຄະນະອຳນວຍການ

ລາຍຊື່ຂອງຄະນະອຳນວຍການຊຸດປະຈຸບັນ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ວັນທີແຕ່ງຕັ້ງ
1	ທ່ານ ນ. ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ສິງຫາ 2022
2	ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
3	ທ່ານ ກົງສັກ ສຸພອນສີ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພຶດສະພາ 2021
4	ທ່ານ ວຽງສຸກ ຈຸນທະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 18 ກຸມພາ 2019
5	ທ່ານ ນ. ບົວໄພວັນ ນັນດາວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພຶດສະພາ 2021
6	ທ່ານ ສາຍຈິດ ສິມມະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພຶດສະພາ 2021

ໝາຍເຫດ: ໄດ້ມີການປ່ຽນແປງຄະນະອຳຍວຍການໃນໄລຍະປີ 2022 ຕາມລາຍຊື່ດັ່ງນີ້

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ວັນທີແຕ່ງຕັ້ງ/ລາອອກ
1	ທ່ານ ຄຳພຸດ ສິດທິລາດ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 15 ມິຖຸນາ 2021 ຍົກຍ້າຍວັນທີ 02 ສິງຫາ 2022
2	ທ່ານ ນາລິນ ສີລາວົງສິດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພຶດສະພາ 2021 ຍົກຍ້າຍວັນທີ 23 ສິງຫາ 2022

ປະຫວັດຂອງຄະນະອຳນວຍການ



ທ່ານ ນາງ ສາຍສະໝອນ ຈັນທະຈັກ
ຜູ້ອຳນວຍການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 15/03/1969
ສັນຊາດ : ລາວ
ພາສາ : ລາວ, ອັງກິດ
ຕຳແໜ່ງ : ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

ທິດສະດີການເມືອງ: ຊັ້ນສູງ.

2007 : ປະລິນຍາໂທ ສາຂາ ບໍລິຫານທຸລະກິດຕ່າງປະເທດ ຈາກປະເທດ ອິດສະຕາລີ (Flinders University, Australia).

1998 : ປະລິນຍາໂທ ສາຂາ ບໍລິຫານລັດ ຈາກປະເທດ ຍີ່ປຸ່ນ (Saitama University, Japan).

1993 : ປະລິນຍາໂທ ສາຂາ ເສດຖະກິດມະຫາພາກ ຈາກມະຫາວິທະຍາໄລ ກູບານ ປະເທດ ລັດເຊຍ (Kuban State University, Russia).

ປະຫວັດການເຮັດວຽກ:

08/2022–ປັດຈຸບັນ : ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

09/2021–08/2022 : ຜູ້ອຳນວຍການໃຫຍ່, ຕະຫລາດຫລັກຊັບລາວ.

2015: ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ.

04/2010 : ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ.

2009 : ຮອງຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.

1993–1997 : ພະນັກງານກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.



ທ່ານ ກົງສັກ ສຸພອນສີ

ຮອງຜູ້ອຳນວຍການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 12/11/1977

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

2021 : ປະລິນຍາໂທ ບໍລິຫານການເງິນ ຈາກມະຫາວິທະຍາໄລແຫ່ງຊາດ

2018 : ຊັ້ນອານຸປະລິນຍາ ທິດສະດີການເມືອງ-ການປົກຄອງ ຈາກໂຮງຮຽນການເມືອງ-ການປົກຄອງ ນະຄອນຫລວງ ວຽງຈັນ.

ປະສົບການການເຮັດວຽກ:

2021-ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

2018 - 2021 : ເປັນຫົວໜ້າພະແນກກວດກາພາຍໃນ ທຄຕລ ສຳນັກງານໃຫຍ່

2016-2018 : ຮຽນທິດສະດີການເມືອງ-ການປົກຄອງ ຊັ້ນອານຸປະລິນຍາຢູ່ໂຮງຮຽນການເມືອງ - ການປົກຄອງ ນະຄອນຫລວງວຽງຈັນ

2014 – 2016 : ເປັນຫົວໜ້າ ທຄຕລ ສາຂາ ຫຼວງນ້ຳທາ

2013 – 2014 : ເປັນຫົວໜ້າ ທຄຕລ ສາຂາ ຫົວພັນ

2010 – 2013 : ວ່າການຫົວໜ້າ ທຄຕລ ສາຂາ ຫົວພັນ

2008 – 2010 : ຮອງຫົວໜ້າ ທຄຕລ ສາຂາ ອຸດົມໄຊ

2007 – 2008 : ເປັນຫົວໜ້າຂະແໜງບໍລິການ ທຄຕລ ສາຂາ ອຸດົມໄຊ

2005 - 2007 : ວ່າການຫົວໜ້າຂະແໜງສິນເຊື່ອ ທຄຕລ ສາຂາ ອຸດົມໄຊ

2001 – 2005 : ພະນັກງານວິຊາການຂະແໜງສິນເຊື່ອ ທຄຕລ ສາຂາ ອຸດົມໄຊ

2000 – 2001 : ພະນັກງານວິຊາການຂະແໜງບໍລິການ ທຄຕລ ສາຂາ ອຸດົມໄຊ



ທ່ານ ນັນທະລາດ ແກ້ວປະເສີດ

ຮອງຜູ້ອຳນວຍການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 16/08/1978

ສັນຊາດ : ລາວ

ພາສາ : ລາວ, ອັງກິດ ແລະ ຈີນ.

ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

2008–2010 : ຄົ້ນຄວ້າປະລິນຍາໂທ ດ້ານນະໂຍບາຍການຄ້າສາກົນ ຢູ່ປະເທດອາເມລິກາ.

2005–2006 : ຊັ້ນສູງດ້ານການຄ້າລະຫວ່າງປະເທດ ທີ່ວິທະຍາໄລ ວິກຕໍເລຍ ປະເທດອິດສະຕາລີ

2004 : ກຽມພາສາອັງກິດຢູ່ວິທະຍາໄລວຽງຈັນຄຼໍເລດ

1996–2000 : ສຶກສາຢູ່ມະຫາວິທະຍາໄລແຫ່ງຊາດ ຄະນະວິຊາ ພາສາອັງກິດ

ປະຫວັດການເຮັດວຽກ:

2014–ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

2012–2014 : ເປັນຫົວໜ້າສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ

2010–2012 : ເປັນຮັກສາການຫົວໜ້າສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ

2003–2007 : ເປັນວ່າການຮອງສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ

2001–2003 : ເປັນວິຊາການພະແນກເງິນໂອນຕ່າງປະເທດ

2001–2001 : ເປັນພະນັກງານວິຊາການພະແນກບັນຊີ

2000–2001 : ເປັນພະນັກງານວິຊາການພະແນກເງິນຝາກ ທຄຕລ ສຳນັກງານໃຫຍ່.



ທ່ານ ວຽງສຸກ ຈຸນທະວົງ

ຮອງຜູ້ອຳນວຍການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 15/08/1964

ສັນຊາດ : ລາວ

ພາສາ : ລາວ, ອັງກິດ ແລະ ເຊັກໂກ

ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ.

ປະຫວັດການສຶກສາ:

2017 : ບຳລຸງທິດສະດີການເມືອງ 45 ວັນ ຈາກໂຮງຮຽນ ການເມືອງ - ການປົກຄອງ.

1982-1989 : ປະລິນຍາໂທ ສາຂາເສດຖະກິດການຄ້າ ຈາກສາທາລະນະລັດເຊັກ

ປະສົບການການເຮັດວຽກ:

2019 - ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ

2015 – 2019 : ເປັນຫົວໜ້າພະແນກຄຸ້ມຄອງສິນເຊື່ອ ແລະ ເປັນການະການສະພາບໍລິຫານບໍລິສັດຫລັກຊັບ ທຄຕລ-ກທ (BCEL-KT)

2013 – 2015 : ຫົວໜ້າ ທຄຕລ ສາຂາຈຳປາສັກ

2011 – 2013 : ຫົວໜ້າ ທຄຕລ ສາຂາສາລະວັນ

2010 – 2011 : ວ່າການຫົວໜ້າ ທຄຕລ ສາຂາສາລະວັນ

2007 – 2010 : ວ່າການຫົວໜ້າ ທຄຕລ ສາຂາຈຳປາສັກ

2005 – 2007 : ວ່າການຮອງຫົວໜ້າສາຂາຈຳປາສັກ

2003 – 2005 : ຫົວໜ້າຂະແໜງສິນເຊື່ອ ສາຂາຈຳປາສັກ

2001 – 2002 : ຫົວໜ້າໜ່ວຍງານບໍລິການ ສາຂາຈຳປາສັກ

1996 – 2000 : ພະນັກງານວິຊາການສິນເຊື່ອ ທຄຕລ ສາຂາຈຳປາສັກ



ທ່ານ ນາງ ບົວໄພອັນ ນັນດາວົງ

ຮອງຜູ້ອຳນວຍການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 26/11/1971

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ.

ປະຫວັດການສຶກສາ:

2014 : ປະລິນຍາໂທ ດ້ານຄຸ້ມຄອງເສດຖະກິດ ຢູ່ສະຖາບັນການເມືອງ-ການປົກຄອງແຫ່ງຊາດ;

ປະສົບການການເຮັດວຽກ:

2021-ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ

1/1/2019-2021 : ເປັນຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່

2018–2019 : ເປັນວ່າການຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່

2015–2018 : ເປັນຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່

2013–2015 : ເປັນຮອງຫົວໜ້າ ທຄຕລ ສາຂານະຄອນຫຼວງວຽງຈັນ

2011–2013 : ເປັນຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່

2009–2011 : ເປັນວ່າການຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່

1997–2009 : ເປັນພະນັກງານວິຊາການພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່

1994–1997 : ເປັນພະນັກງານວິຊາການພະແນກຫ້ອງການບໍລິຫານ-ການເງິນ ທຄຕລ

1993–1994 : ເປັນພະນັກງານວິຊາການໜ່ວຍບໍລິການຕະຫຼາດເຊົ້າ II ທຄຕລ



ທ່ານ ສາຍຈິດ ສິມມະວົງ

ຮອງຜູ້ອຳນວຍການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 11/02/1972

ສັນຊາດ : ລາວ

ພາສາ : ລາວ, ອັງກິດ ແລະ ຝຣັ່ງ

ຕາແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

2014 : ປະລິນຍາໂທ ສາຂາຄຸ້ມຄອງເສດຖາກິດ ຈາກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ

ປະສົບການການເຮັດວຽກ:

2021-ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ

08/01/2018 : ເປັນຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ

2014-2018 : ວ່າການຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ

2013-2014 : ຮອງຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ

2010-2013 : ຫົວໜ້າຂະແໜງບໍລິຫານທົ່ວໄປ, ພະແນກຫ້ອງການ-ບໍລິຫານການເງິນ ທຄຕລ

2007-2010 : ວ່າການຫົວໜ້າຂະແໜງບໍລິຫານທົ່ວໄປ, ພະແນກຫ້ອງການ-ບໍລິຫານການເງິນ ທຄຕລ

2000-2006 : ຫົວໜ້າໜ່ວຍງານຮຽກເກັບແຊັກ, ພະແນກເງິນໂອນຕ່າງປະເທດ

1999-2000 : ຫົວໜ້າຫ້ອງແລກປ່ຽນ ຮຸ້ນສ່ວນສີຫອມ, ສູນບໍລິການ

1998-1999 : ຫົວໜ້າຫ້ອງແລກປ່ຽນຂ໊ອມິດຕະພາບ, ສູນບໍລິການ

1995-1998 : ພະນັກງານວິຊາການສູນບໍລິການ ທຄຕລ

ການຖືຮຸ້ນ ທຄຕລ ຂອງຄະນະອຳນວຍການ

ອີງຕາມບັນຊີລາຍຊື່ຜູ້ຖືຮຸ້ນຂອງ ທຄຕລ ທີ່ປິດໃນວັນທີ 22 ມີນາ 2023, ຄະນະອຳນວຍການ ຖືຄອງຮຸ້ນຂອງ ທຄຕລ ດັ່ງນີ້:

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ຈຳນວນຮຸ້ນທີ່ຖື	ສັດສ່ວນ	ໝາຍເຫດ
1	ທ່ານ ນ. ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ	0		
2	ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	10.325	0,005%	
3	ທ່ານ ກິງສັກ ສຸພອນສີ	ຮອງຜູ້ອຳນວຍການ	12.000	0,006%	
4	ທ່ານ ວຽງສຸກ ຈຸນທະວົງ	ຮອງຜູ້ອຳນວຍການ	0		
5	ທ່ານນາງ ບົວໄພວັນ ນັນດາວົງ	ຮອງຜູ້ອຳນວຍການ	13.000	0,006%	
6	ທ່ານ ສາຍຈິດ ສົມມະວົງ	ຮອງຜູ້ອຳນວຍການ	1.800	0,001%	

5. ການປ່ຽນແປງສຳຄັນ

+ ໄດ້ມີການແຕ່ງຕັ້ງທ່ານ ທ່ານ ນ. ສາຍສະໝອນ ຈັນທະຈັກ ເປັນຜູ້ອຳນວຍການ ທຄຕລ ແທນ ທ່ານ ຄຳພຸດ ສິດທິລາດ ທີ່ຍ້າຍໄປຮັບໜ້າທີ່ໃໝ່ຢູ່ ທຫລ ເຊິ່ງໄດ້ມີການມອບ-ຮັບໜ້າທີ່ກັນໃນວັນທີ 02 ສິງຫາ 2022;
+ ຮອງຜູ້ອຳນວຍການ 1 ທ່ານ (ທ່ານ ນາລິນ ສີລະວົງສິດ) ຍ້າຍໄປຮັບໜ້າທີ່ໃໝ່ຢູ່ ທຫລ ນັບແຕ່ວັນທີ 23 ສິງຫາ 2022;
+ ກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນປະຈຳປີ 2022 ຈັດຂຶ້ນໃນວັນທີ 22 ພະຈິກ 2022 ໄດ້ຮັບຮອງການແຕ່ງຕັ້ງ ທ່ານ ນ. ສາຍສະໝອນ ຈັນທະຈັກ ເປັນສະມາຊິກສະພາບໍລິຫານ ທຄຕລ.

6. ຄ່າຕອບແທນ

ຄ່າຕອບແທນໃຫ້ແກ່ສະພາບໍລິຫານ ແລະ ຄະນະອຳນວຍການ ແມ່ນໄດ້ປະຕິບັດຢ່າງສອດຄ່ອງກັບນະໂຍບາຍຄ່າຕອບແທນຕາມລະບຽບທີ່ກ່ຽວຂ້ອງ ຂອງ ທຄຕລ. ລວມເງິນເດືອນ ແລະ ຜົນປະໂຫຍດສຳລັບສະພາບໍລິຫານ ແລະ ຄະນະອຳນວຍການໃນປີ 2022 ເທົ່າກັບ 2.807 ລ້ານກີບ ສຳລັບປີ 2021 ເທົ່າກັບ 2.911 ລ້ານກີບ.

VII. ກອງປະຊຸມຜູ້ຖືຮຸ້ນ ແລະ ການປະຕິບັດໜ້າທີ່ຂອງສະພາບໍລິຫານ

1. ກອງປະຊຸມຜູ້ຖືຮຸ້ນ ແລະ ການຈັດຕັ້ງປະຕິບັດ

ໃນປີ 2022 ທຄຕລ ໄດ້ຈັດກອງປະຊຸມຜູ້ຖືຮຸ້ນ 02 ຄັ້ງ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ໃນວັນທີ 29 ເມສາ 2022 ແລະ ກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2022 ໃນວັນທີ 22 ພະຈິກ 2022 ເຊິ່ງທັງສອງກອງປະຊຸມຈັດຂຶ້ນທີ່ ນະຄອນຫຼວງວຽງຈັນ.

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 (ຈັດວັນທີ 29/04/2022) ໄດ້ມີມະຕິຮັບຮອງດັ່ງນີ້:

- ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນປະຈຳປີ 2021;
- ວາລະທີ 2: ຮັບຮອງເອົາບົດລາຍງານການດຳເນີນທຸລະກິດຂອງ ທຄຕລ ໃນປີ 2021 ແລະ ເອກະສານລາຍງານ ການເງິນປະຈຳປີ 2021 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ PWC, ການແບ່ງປັນກຳໄລຫຼັງອາກອນເຂົ້າຄັງຕ່າງໆ ຕາມລະບຽບການ ແລະ ຕົກລົງບໍ່ຈ່າຍເງິນປັນຜົນປະຈຳປີ 2021;
- ວາລະທີ 3: ຮັບຮອງແຜນການປະຈຳປີ 2022;
- ວາລະທີ 4: ຮັບຮອງການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ;
- ວາລະທີ 5: ຮັບຮອງການແຕ່ງຕັ້ງຜູ້ກວດສອບອິດສະຫຼະປະຈຳປີ 2022.

ກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2022 (ຈັດວັນທີ 22/11/2022) ໄດ້ມີມະຕິຮັບຮອງດັ່ງນີ້

- ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2021;
- ວາລະທີ 2: ຮັບຊາບການລາຍງານການດຳເນີນງານຂອງ ທຄຕລ ໄລຍະ 9 ເດືອນ ປີ 2022;
- ວາລະທີ 3: ຮັບຊາບການແຕ່ງຕັ້ງຜູ້ອຳນວຍການ ທຄຕລ;
- ວາລະທີ 4: ຮັບຮອງການແຕ່ງຕັ້ງ ຜູ້ອຳນວຍການ ເປັນສະມາຊິກສະພາບໍລິຫານ ທຄຕລ;
- ວາລະທີ 5: ຮັບຮອງການປັບປຸງນະໂຍບາຍນ້ຳມັນທຽວການສຳລັບພະນັກງານ ທຄຕລ;

ສຳລັບມະຕິຂອງກອງປະຊຸມຜູ້ຖືຮຸ້ນຂ້າງເທິງນັ້ນ ທຄຕລ ໄດ້ຈັດຕັ້ງປະຕິບັດຢ່າງສອດຄ່ອງແລ້ວ.

2. ການປະຕິບັດໜ້າທີ່ຂອງສະພາບໍລິຫານ:

2.1.ກອງປະຊຸມ

ໃນປີ 2022, ທຄຕລ ຈັດກອງປະຊຸມສະພາບໍລິຫານ ທຄຕລ ທັງໝົດ 10 ຄັ້ງ:

1) ຄັ້ງທີ 1: 02/02/2022;
2) ຄັ້ງທີ 2: 21/03/2022;
3) ຄັ້ງທີ 3: 05/10/2022;
4) ຄັ້ງທີ 4: 06/05/2022;
5) ຄັ້ງທີ 5: 01/06/2022;
6) ຄັ້ງທີ 6: 01/08/2022;
7) ຄັ້ງທີ 7: 18/08/2022;
8) ຄັ້ງທີ 8: 07/11/2022;
9) ຄັ້ງທີ 9: 23/12/2022;
10) ຄັ້ງທີ 10: 29/12/2022.

2.2. ການເຂົ້າຮ່ວມກອງປະຊຸມ

ຊື່ ແລະ ນາມສະກຸນ	ຕຳແໜ່ງ	ຮ່ວມປະຊຸມ	ຂາດປະຊຸມ	ໝາຍເຫດ
ທ່ານ ບຸນເຫຼືອ ສິນໄຊຈໍລະວົງ	ປະທານ	4	0	• ແຕ່ງຕັ້ງຄືນ ວັນທີ 29/10/2021 • ປະຕິບັດວຽກຮອດ ເດືອນ ມິຖຸນາ 2022;
ທ່ານ ຄຳສຸກ ສຸນດາລາ	ຮອງປະທານ. ຮັກສາການ ປະທານສະພາ ບໍລິຫານ	10	0	• ແຕ່ງຕັ້ງຄືນ ວັນທີ 29/10/2021 • ຂໍ້ຕົກລົງ ແຕ່ງຕັ້ງເປັນ ຮັກສາການ ປະທານ ກະຊວງການເງິນ 14/7/2022;
ທ່ານ ຄຳພຸດ ສິດທິລາດ	ສະມາຊິກ	4	0	• ແຕ່ງຕັ້ງ ວັນທີ 29/10/2021 • ຍົກຍ້າຍ 01 ສິງຫາ 2022
ທ່ານ Stephane Mangiavacca	ສະມາຊິກ	6	4	• ແຕ່ງຕັ້ງ ວັນທີ 29/10/2021 • ເຂົ້າຮ່ວມດ້ວຍການມອບສິດ; • ຂາດມີເຫດຜົນ;
ທ່ານ ປະສົມພັດ ຄຳຕັນ	ສະມາຊິກ	10	0	• ແຕ່ງຕັ້ງ ວັນທີ 29/10/2021
ທ່ານ ສອນໄຊ ສີລາພັດ	ສະມາຊິກ	8	2	• ແຕ່ງຕັ້ງ ວັນທີ 29/10/2021 • ຂາດມີເຫດຜົນ,
ທ່ານ ຮສ ທອງພັດ ຈັນທະນີວົງ	ສະມາຊິກ	9	1	• ແຕ່ງຕັ້ງ ວັນທີ 29/10/2021 • ຂາດມີເຫດຜົນ;
ທ່ານ ນ. ລັດດາວັນ ຊົງສີໄລ	ສະມາຊິກ	10	0	• ແຕ່ງຕັ້ງ ວັນທີ 29/10/2021
ທ່ານ ວຽງສຸກ ຈຸນທະວົງ	ສະມາຊິກ	9	1	• ຂາດມີເຫດຜົນ; • ແຕ່ງຕັ້ງຄືນ ວັນທີ 29/10/2021
ທ່ານ ນ. ສາຍສະໝອນ ຈັນທະຈັກ	ສະມາຊິກ	2	0	• ແຕ່ງຕັ້ງ ວັນທີ 22/11/2022

ໝາຍເຫດ:

- ໄລຍະເດືອນ 01-6/2022 ສະມາຊິກສະພາບໍລິຫານຊຸດເດີມມີ 9 ທ່ານ ປະຕິບັດໜ້າທີ່ຮອດ 22/06/2022 ທ່ານ ປະທານສະພາບໍລິຫານ ເລີ່ມໄປຮັບໜ້າທີ່ເປັນຜູ້ວ່າການ ທຫລ ໄດ້ຢຸດຕິໜ້າທີ່ເປັນປະທານສະພາບໍລິຫານ; ຫຼັງຈາກນັ້ນ ທຄຕລ ຍັງມີສະມາຊິກສະພາບໍລິຫານ 8 ທ່ານ;
- ເດືອນ 6-7/2022 ທຄຕລ ມີສະມາຊິກສະພາບໍລິຫານ 8 ທ່ານ ປະຕິບັດໜ້າທີ່ຮອດ 01/08/2022 ທ່ານ ຄຳພຸດ ສິດທິລາດ ຜູ້ອຳນວຍການ ທຄຕລ ໄປຮັບໜ້າທີ່ໃໝ່ຢູ່ ທຫລ; ຫຼັງຈາກນັ້ນ ສະມາຊິກສະພາບໍລິຫານຍັງ 7 ທ່ານ;
- ເດືອນ 8-11/2022 ທຄຕລ ມີສະມາຊິກສະພາບໍລິຫານ 7 ທ່ານ, ຈົນຮອດວັນທີ 22/11/2022 ໄດ້ມີກອງປະຊຸມ ຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ຮັບຮອງ ທ່ານ ນ. ສາຍສະໝອນ ຈັນທະຈັກ ເປັນສະມາຊິກສະພາບໍລິຫານ ທຄຕລ ຈຶ່ງມີສະມາຊິກສະພາບໍລິຫານ 8 ທ່ານ;
- 12/2022 ສະມາຊິກສະພາບໍລິຫານຊຸດເດີມມີ 8 ທ່ານ.

2.3. ມະຕິກອງປະຊຸມທີ່ສຳຄັນໃນກອງປະຊຸມສະພາບໍລິຫານ:

1) ຮັບຮອງການແຕ່ງຕັ້ງຄະນະກຳມະການຕ່າງໆຂອງສະພາບໍລິຫານ;
2) ຮັບຮອງການຄົ້ນຄວ້າສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນໜີ້ສິນ.
3) ຮັບຮອງການຍົກຍ້າຍ ທ່ານ ຄຳພຸດ ສິດທິລາດ ຜູ້ອຳນວຍການ ທຄຕລ ໄປຮັບໜ້າທີ່ໃໝ່ຢູ່ ທະນາຄານແຫ່ງ ສປປ ລາວ, ຮັບຮອງການແຕ່ງຕັ້ງ ທ່ານ ນ. ສາຍສະໝອນ ຈັນທະຈັກ, ເປັນຜູ້ອຳນວຍການ ທຄຕລ.

- ມອບໃຫ້ ທຄຕລ ເຮັດໃບສະເໜີ ເຖິງກະຊວງການເງິນຮັບຊາບການສັບຊ້ອນຍົກຍ້າຍ ແລະ ແຕ່ງຕັ້ງດັ່ງກ່າວ, ພ້ອມທັງສະເໜີໃຫ້ກະຊວງການເງິນ ອອກຂໍ້ຕົກລົງແຕ່ງຕັ້ງ ປະທານສະພາບໍລິຫານ ແທນ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ແລະ ພ້ອມກັບແຕ່ງຕັ້ງ ທ່ານ ນ. ສາຍສະໝອນ ຈັນທະຈັກ ເປັນສະມາຊິກສະພາບໍລິຫານ ທຄຕລ;

4) ຮັບຮອງການຍົກຍ້າຍ ທ່ານ ນາລິນ ສີລະວົງສິດ, ຮອງຜູ້ອຳນວຍການ ທຄຕລ ເພື່ອໄປຮັບໜ້າທີ່ໃໝ່ຢູ່ທະນາຄານແຫ່ງ ສປປ ລາວ;
5) ຮັບຮອງຜົນກວດສອບຖານະການເງິນ ທຄຕລ ປະຈຳປີ 2021 ແລະ 6 ເດືອນ/2022.
6) ຮັບຮອງແຜນທຸລະກິດ, ການກະກຽມຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2021 ແລະ ສະໄໝວິສາມັນ 2022.
7) ຮັບຮອງການປັບປຸງນະໂຍບາຍນ້ຳມັນ ໃຫ້ພະນັກງານ ທຄຕລ.
8) ຮັບຮອງ ນະໂຍບາຍ ຕ່າງໆ:

- ນະໂຍບາຍກວດກາພາຍໃນ ຂອງ ທຄຕລ,
- ຮັບຮອງ ການປັບປຸງ ນະໂຍບາຍສິນເຊື່ອ SME ຂອງ ທຄຕລ.
- ຮັບຮອງ ການປັບປຸງ ນະໂຍບາຍ ວ່າດ້ວຍການປັບປຸງບັນຊີ Nostro, Vostro, ບັນຊີລ່ວງໜ້າ-ລໍຖ້າ, ບັນຊີຄ້າງຮັບ- ຄ້າງຈ່າຍດອກເບ້ຍ, ບັນຊີນອກໃບລາຍງານຖານະການເງິນ ຂອງ ທຄຕລ;
- ຮັບຮອງ ນະໂຍບາຍການບໍລິຫານຄວາມສ່ຽງດ້ານຊື່ສຽງ ທຄຕລ;

9) ຮັບຮອງໃຫ້ ທຄຕລ ເປັນທະນາຄານຕົວແທນເພື່ອການຊຳລະໃນວຽງການຫຼັກຊັບ;
10) ຮັບຮອງ ເອກະສານອ້າງອີງນຳໃຊ້ກວດສອບປີ 2023 ຂອງ ທຄຕລ ແລະ ຮັບຮອງບໍລິສັດກວດສອບພາຍນອກ ທຄຕລ 2022.
11) ພິຈາລະນາ ແລະ ຮັບຮອງ ລາຍການສິນເຊື່ອ: 9 ລາຍການ.

3. ການປະຕິບັດໜ້າທີ່ຂອງຄະນະກຳມະການຂັ້ນສະພາບໍລິຫານ

3.1. ຄະນະກຳມະການກວດສອບ

ຄະນະກຳມະການກວດສອບ ໄດ້ດຳເນີນກອງປະຊຸມໃນປີ 2022 ຈຳນວນ 4 ຄັ້ງ. ນອກນັ້ນ ຄະນະກຳມະການ ໄດ້ເອົາໃຈໃສ່ໃນການຕິດຕາມ ວຽກງານຜ່ານຈົດໝາຍວຽນ ແລະ ບົດລາຍງານໃນແຕ່ລະໄລຍະ ເຊິ່ງການເຄື່ອນໄຫວສຳຄັນຂອງຄະນະກຳມະການມີດັ່ງນີ້:

- ຕິດຕາມພະນັກງານໃນການປະຕິບັດລະບຽບ, ສິດ, ຂັ້ນຕອນ, ຜ່ານວຽກງານການກວດກາປົກກະຕິ, ກວດກາສະເພາະກິດ, ກວດກາສະເພາະດ້ານ ແລະ ກວດກາສຸກເສີນຂອງບັນດາພະແນກ, ສູນ ແລະ ສາຂາ ທຄຕລ. ພ້ອມທັງຕິດຕາມການແກ້ໄຂຂໍ້ພົບເຫັນຈາກກວດກາພາຍໃນ-ພາຍນອກ ຂອງບັນດາພະແນກການ, ສາຂາ ທຄຕລ ທົ່ວລະບົບ;
- ຕິດຕາມວຽກງານການແກ້ໄຂຂໍ້ພົບເຫັນຂອງກວດສອບພາຍໃນ ແລະ ກວດສອບພາຍນອກ ຢ່າງເປັນປົກກະຕິ;
- ສຳເລັດການທົບທວນເອກະສານລາຍງານການເງິນ ທຄຕລ ປະຈຳປີ 2021, ປະຈຳ 06 ເດືອນຕົ້ນປີ 2022 ແລະ ໄຕມາດ 3/2022;

- ຄັດເລືອກເອົາບໍລິສັດກວດສອບພາຍນອກ ເພື່ອກວດສອບ ທຄຕລ ປະຈຳ 2023;
- ຕິດຕາມການລາຍງານປະກົດການຫຍໍ້ທໍ້, ວຽກງານການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃຫ້ແກ່ຄະນະບໍລິຫານງານ ແລະ ທະນາຄານແຫ່ງ ສປປ ລາວ;
- ຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດມາດຖານສາກົນ ດ້ານການລາຍງານການເງິນຂອງ ທຄຕລ (IFRS) ໃນແຕ່ລະໄລຍະ;
- ຮັບຮອງການປະກອບຄຳເຫັນ ແລະ ຕອບແບບສອບຖາມຕ່ໍ ຮ່າງ ຂໍ້ຕົກລົງວ່າດ້ວຍການກວດສອບທະນາຄານທຸລະກິດ.
- ໄດ້ສັງລວມວຽກງານຂອງຄະນະກຳມະການກວດສອບ ລາຍງານສະພາບໍລິຫານແຕ່ລະໄລຍະ;

3.2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການຄຸ້ມຄອງຄວາມສ່ຽງໄດ້ດຳເນີນກອງປະຊຸມໃນປີ 2022 ຈຳນວນ 4 ຄັ້ງ, ຄະນະກຳມະການໄດ້ເອົາໃຈໃສ່ໃນການຕິດຕາມ ວຽກງານຜ່ານບົດລາຍງານແຕ່ລະໄລຍະ ດັ່ງນີ້:

- ຕິດຕາມຕົວຊີ້ວັດຄວາມສ່ຽງ ແຕ່ລະດ້ານໃນການດຳເນີນງານຂອງ ທຄຕລ, ຕິດຕາມສັງລວມຄວາມສ່ຽງຫຼັກຂອງອົງກອນໃນດ້ານຕ່າງໆມີຈຳນວນ 14 ຕົວຊີ້ວັດຄວາມສ່ຽງ;
- ຕິດຕາມຄວາມຄືບໜ້າຂອງບັນດາໂຄງການຕ່າງໆທີ່ໄດ້ດຳເນີນການ ແລະ ນອນຢູ່ໃນໂຄງການຂອງ Basel II
- ຮັບຮອງການປັບປຸງ ນະໂຍບາຍວ່າດ້ວຍການບໍລິຫານຄວາມຕ່ໍເນື່ອງທາງທຸລະກິດ ທຄຕລ;
- ຮັບຮອງການປັບປຸງ ນະໂຍບາຍວ່າດ້ວຍການບໍລິຫານເຫດການສູນເສຍ ທຄຕລ
- ຮັບຮອງການປັບປຸງ ນະໂຍບາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງດ້ານການດຳເນີນງານ ທຄຕລ
- ຮັບຮອງການປັບປຸງ ນະໂຍບາຍວ່າດ້ວຍການປັບປຸງບັນຊີ Nostro, Vostro, ບັນຊີລ່ວງໜ້າ-ລໍຖ້າ, ບັນຊີຄ້າງຮັບ-ຄ້າງຈ່າຍ ດອກເບ້ຍ, ບັນຊີນອກໃບລາຍງານຖານະການເງິນຂອງ ທຄຕລ;
- ຮັບຮອງການປັບປຸງ ນະໂຍບາຍວ່າດ້ວຍ ການບໍລິຫານຄວາມສ່ຽງດ້ານຊື່ສຽງ ທຄຕລ.
- ໄດ້ສັງລວມວຽກງານຂອງຄະນະກຳມະການ ເພື່ອລາຍງານສະພາບໍລິຫານແຕ່ລະໄລຍະ;

3.3. ຄະນະກຳມະການຄຸ້ມຄອງບໍລິຫານ

ໃນປີ 2022 ຄະນະກຳມະການຄຸ້ມຄອງບໍລິຫານ ໄດ້ເປີດກອງປະຊຸມ 3 ຄັ້ງ, ເນື່ອງຈາກຄະນະກຳມະການມີການຍົກຍ້າຍ 1 ທ່ານ, ບໍ່ສະບາຍ 1 ທ່ານ, ແຕ່ຄະນະກຳມະການກໍ່ໄດ້ເອົາໃຈໃສ່ໃນການຕິດຕາມການປະຕິບັດງານຂອງ ທຄຕລ ຜ່ານບົດລາຍງານ ແລະ ໄດ້ຮັບຮອງບາງເນື້ອໃນທີ່ສຳຄັນດັ່ງນີ້:

- ຕິດຕາມການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດຂອງ ທຄຕລ ເປັນແຕ່ລະໄລຍະ;
- ຮັບຮອງແຜນການປະຈຳປີ 2022, ບັນຫາສຳຄັນອື່ນໆ ເພື່ອສະເໜີສະພາບໍລິຫານ ແລະ ກອງປະຊຸມສາມັນຜູ້ຖືຮຸ້ນ ຮັບຮອງຕາມລຳດັບ;
- ຕິດຕາມ ແລະ ໃຫ້ທິດຊີ້ນຳວຽກງານການບໍລິຫານທຶນ, ບັນຫາດ້ານສະພາບຄ່ອງ, ບັນຫາເງິນຕາ, ການນຳໃຊ້ທຶນ ແລະ ການບໍລິຫານເງິນຕາຕ່າງປະເທດ ເປັນແຕ່ລະໄລຍະ;
- ຕິດຕາມຄຸ້ມຄອງການບໍລິຫານສິນເຊື່ອໃຫ້ມີຄຸນນະພາບ, ການແກ້ໄຂໜີ້ NPL;
- ຮັບຮອງ - ມອບໃຫ້ຄະນະບໍລິຫານ ທຄຕລ ຄົ້ນຄວ້າການນຳໃຊ້ມາດຖານບັນຊີດຽວ (IFRS) ແລະ ນຳສະເໜີ ທຫລ ຕາມຂັ້ນຕອນ.
- ຮັບຮອງໃຫ້ ທຄຕລ ຄົ້ນຄວ້າ ແລະ ດຳເນີນການສະເໜີ ສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ;
- ຄະນະກຳມະການໄດ້ລາຍງານການດຳເນີນງານຂອງຄະນະກຳມະການຕ່ໍກອງປະຊຸມສະພາບໍລິຫານແຕ່ລະໄລຍະ;

3.4. ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ

ຄະນະກຳມະການບໍ່ໄດ້ເປີດກອງປະຊຸມ ເນື່ອງຈາກສະມາຊິກ 2 ທ່ານ ໃນຈຳນວນສະມາຊິກຄະນະກຳມະການ 3 ທ່ານ ໄດ້ຍົກຍ້າຍໜ້າທີ່ເຮັດໃຫ້ບໍ່ມີອົງປະຊຸມ ເຊິ່ງບົດບາດຂອງຄະນະກຳມະການນີ້ ໄດ້ປະຕິບັດໂດຍກົງຜ່ານກອງປະຊຸມສະພາບໍລິຫານ. ໃນນັ້ນບັນຫາສຳຄັນທີ່ໄດ້ມີການຄົ້ນຄວ້າໃນໄລຍະປີ 2022 ລວມມີ: ການຮັບຮອງການຍົກຍ້າຍຫນ້າທີ່ຂອງທ່ານຜູ້ອຳນວຍການ ທຄຕລ ຄົນກ່ອນ ແລະ ການຮັບຮອງການແຕ່ງຕັ້ງຜູ້ອຳນວຍການຄົນປະຈຸບັນ, ຮັບຮອງການຍົກຍ້ານຮອງຜູ້ອຳນວຍການ ທຄຕລ 1 ທ່ານ, ສະເໜີຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານ 1 ທ່ານ ເພື່ອປ່ຽນແທນສະມາຊິກທີ່ໄດ້ຍົກຍ້າຍໜ້າທີ່ ແລະ ຮັບຮອງການປັບປຸງນະໂຍບາຍນ້ຳມັນທຽວການສຳລັບພະນັກງານ ທຄຕລ.

VIII. ບົດລາຍງານຄວາມຍືນຍົງ

1. ພາບລວມການພັດທະນາແບບຍືນຍົງຂອງການຄຸ້ມຄອງບໍລິຫານ

ຄວາມຍືນຍົງ ຖືເປັນໜຶ່ງໃນອົງປະກອບທີ່ສຳຄັນໃນການດຳເນີນທຸລະກິດຂອງທະນາຄານ. ດັ່ງນັ້ນ, ເພື່ອຮັບປະກັນການດຳເນີນທຸລະກິດຕາມແນວທາງການພັດທະນາແບບຍືນຍົງ ທີ່ສອດຄ່ອງກັບ ການຈັດຕັ້ງປະຕິບັດຂອງສາກົນ, ທຄຕລ ເນັ້ນໜັກການໃຫ້ບໍລິການທາງດ້ານການເງິນ ບົນພື້ນຖານຄວາມຮັບຜິດຊອບດ້ານການດຳເນີນທຸລະກິດທີ່ຍືນຍົງ ແນໃສ່ເຮັດໃຫ້ທະນາຄານເປັນອົງກອນທີ່ໄດ້ຮັບຄວາມໄວ້ວາງໃຈຈາກລູກຄ້າ ກໍ່ຄື ຜູ້ມີສ່ວນໄດ້ສ່ວນເສຍທຸກຝ່າຍ ໂດຍການຄຳນຶງເຖິງຜົນປະໂຫຍດໄລຍະຍາວ ທີ່ມຸ່ງເນັ້ນໃສ່ການການດຳເນີນທຸລະກິດທີ່ຄຳນຶງເຖິງ ສິ່ງແວດລ້ອມ, ສັງຄົມ ແລະ ການຄຸ້ມຄອງບໍລິຫານ ເຊິ່ງເປັນປັດໄຈສຳຄັນທີ່ຊີ້ບອກໃຫ້ເຫັນການເຕີບໂຕທີ່ຍືນຍົງຂອງທະນາຄານ.

ທຄຕລ ໃຫ້ຄວາມສຳຄັນໃນການຫຼຸດຜ່ອນຜົນກະທົບດ້ານລົບ ແລະ ເສີມສ້າງຜົນກະທົບດ້ານບວກໃຫ້ກັບການດຳເນີນທຸລະກິດ ໂດຍນຳເອົາຫຼັກການພັດທະນາແບບຍືນຍົງຂອງສາກົນ ມາໝູນໃຊ້ເຂົ້າໃນການດຳເນີນທຸລະກິດຂອງ ທຄຕລ ເປັນຕົ້ນ ແມ່ນ ການຄຸ້ມຄອງບໍລິຫານ, ການຄຸ້ມຄອງຄວາມສ່ຽງ, ການຄວບຄຸມພາຍໃນ ຕະຫຼອດຮອດ ການດຳເນີນທຸລະກິດທີ່ສະໜັບສະໜຸນນະໂຍບາຍພາກລັດ, ການພັດທະນາໂຄງສ້າງພື້ນຖານທາງດ້ານການທັນເປັນເສດຖະກິດດິຈິຕອນຂອງປະເທດ ແລະ ວຽກງານອື່ນໆທີ່ປິ່ນອ້ອມ.

ນອກຈາກນັ້ນ, ທະນາຄານມີການດຳເນີນທຸລະກິດດ້ວຍຄວາມຮັບຜິດຊອບສູງ ແລະ ເຂັ້ມງວດໃນການປະຕິບັດຕາມລະບຽບກົດໝາຍ ເພື່ອພັດທະນາຜະລິດຕະພັນ ແລະ ບໍລິການທີ່ສາມາດອຳນວຍຄວາມສະດວກໃນການເສີມສ້າງໃຫ້ມີຄວາມຍືນຍົງ ເປັນຕົ້ນແມ່ນ: ດ້ານສິ່ງແວດລ້ອມ ແມ່ນໄດ້ເນັ້ນໃສ່ການຮັກສາສົມດຸນຂອງຊັບພະຍາກອນທຳມະຊາດ, ດ້ານສັງຄົມ ແມ່ນສຸມໃສ່ການພັດທະນາຄຸນນະພາບຊີວິດຂອງພະນັກງານ, ລູກຄ້າ ກໍ່ຄື ຊຸມຊົນ, ແລະ ດ້ານຄຸ້ມຄອງບໍລິຫານ ແມ່ນເສີມສ້າງການປະຕິບັດວຽກງານບົນພື້ນຖານການຄຸ້ມຄອງບໍລິຫານທີ່ດີ ທີ່ມີການສື່ສານໄປຍັງຜູ້ທີ່ມີສ່ວນໄດ້ສ່ວນເສຍທັງພາຍໃນ ແລະ ພາຍນອກອົງກອນຢ່າງທົ່ວເຖິງ.

2. ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານ

ທະນາຄານ ໃຫ້ຄວາມສຳຄັນແກ່ ວຽກງານການຄຸ້ມຄອງບໍລິຫານ (Corporate Governance: CG) ເພື່ອຍົກລະດັບວຽກງານດັ່ງກ່າວໃຫ້ທຽບເທົ່າພາກພື້ນ ກໍ່ຄື ສາກົນ ເຊິ່ງ ທຄຕລ ເປັນໜຶ່ງໃນບັນດາບໍລິສັດຈົດທະບຽນທີ່ສະໝັກໃຈເຂົ້າຮ່ວມ ການປະເມີນການຈັດຕັ້ງປະຕິບັດວຽກການຄຸ້ມຄອງບໍລິຫານອົງກອນທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຮ່ວມກັບຕະຫຼາດຫຼັກຊັບລາວ ຈັດຂຶ້ນເປັນແຕ່ລະໄລຍະ ເພື່ອຮັບປະກັນວ່າທະນາຄານມີການຈັດຕັ້ງປະຕິບັດຕາມຫຼັກການຄຸ້ມຄອງບໍລິຫານທີ່ດີ. ຜົນການປະເມີນ ໄດ້ຊີ້ໃຫ້ເຫັນວ່າ ທຄຕລ ໄດ້ຮັບຄະແນນສູງສຸດ ທຽບກັບ ບັນດາບໍລິສັດຈົດທະບຽນອື່ນໆໃນຕະຫຼາດຫຼັກຊັບລາວ. ເວົ້າສະເພາະ, ຜົນການປະເມີນສະແດງໃຫ້ຮູ້ວ່າ ທຄຕລ ສາມາດຈັດຕັ້ງປະຕິບັດວຽກງານການຄຸ້ມຄອງບໍລິຫານໄດ້ 72% ຂອງຄະແນນທີ່ເຮັດໄດ້ທັງໝົດ, ຮອງລົງມາແມ່ນສາມາດປະຕິບັດໄດ້ບາງສ່ວນ ເທົ່າກັບ 14% ແລະ ບໍ່ສາມາດປະຕິບັດໄດ້ 14% ຂອງ ຄະແນນທີ່ເຮັດໄດ້ທັງໝົດ. ໃນນັ້ນ, ຄະແນນການປະເມີນທີ່ແຍກເປັນແຕ່ລະພາກ ແມ່ນສາມາດປະຕິບັດໄດ້ດັ່ງນີ້:

- **ພາກທີ 1: ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ:** ທຄຕລ ສາມາດປະຕິບັດໄດ້ທັງໝົດ 12 ຄະແນນ ຄິດເປັນ 80% ຂອງຄະແນນລວມ, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ ເທົ່າກັບ 3 ຄະແນນ ຄິດເປັນ 20% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ 0% ໃນພາກດັ່ງກ່າວ.
- **ພາກທີ 2: ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ:** ໃນພາກນີ້ ທຄຕລ ສາມາດປະຕິບັດໄດ້ທັງໝົດ 8 ຄະແນນ ຄິດເປັນ 73%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ ເທົ່າກັບ 3 ຄະແນນ ຄິດເປັນ 27% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ 0% ຂອງຄະແນນທັງໝົດໃນພາກນີ້.
- **ພາກທີ 3: ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ:** ໃນພາກດັ່ງກ່າວ ທຄຕລ ສາມາດປະຕິບັດໄດ້ທັງໝົດ 26 ຄະແນນ ຄິດເປັນ 70.3%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ ເທົ່າກັບ 9 ຄະແນນ ຄິດເປັນ 24.3% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ 5.4% ຂອງຄະແນນທັງໝົດໃນພາກດັ່ງກ່າວ.

- **ພາກທີ 4: ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ:** ໃນພາກດັ່ງກ່າວນີ້, ທຄຕລ ສາມາດປະຕິບັດໄດ້ທັງໝົດ 26 ຄະແນນ ຄິດເປັນ 70%, ປະຕິບັດໄດ້ບາງສ່ວນ ເທົ່າກັບ 6 ຄະແນນ ຄິດເປັນ 16% ແລະ ບໍ່ສາມາດປະຕິບັດໄດ້ 14% ຂອງຄະແນນໃນພາກນີ້.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງບໍລິຫານ ມີຄວາມສອດຄ່ອງກັບມາດຕະຖານຂອງບັນດາປະເທດໃນພາກພື້ນ ແລະ ສາກົນ, ທຄຕລ ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດດັ່ງນີ້:

2.1. ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ

ທຄຕລ ສົ່ງເສີມ ແລະ ອຳນວຍຄວາມສະດວກ ແກ່ຜູ້ຖືຮຸ້ນທຸກໆຄົນ ບໍ່ວ່າຈະເປັນຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ຖືຮຸ້ນລາຍນ້ອຍ, ນັກລົງທຶນ, ສະຖາບັນ ຫຼື ຜູ້ຖືຮຸ້ນຕ່າງປະເທດ ເພື່ອໃຊ້ສິດຂອງຕົນຢ່າງເຕັມທີ່ ໂດຍສະເພາະສິດພື້ນຖານໃນການຊື້-ຂາຍ, ໄດ້ຮັບເງິນປັນຜົນຮຸ້ນ, ສິດເຂົ້າຮ່ວມປະຊຸມຜູ້ຖືຮຸ້ນ, ສິດໃນການມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມ, ສິດໃນການລົງຄະແນນສຽງ ຫຼື ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນ, ສິດສະເໜີຄຳເຫັນຕໍ່ກອງປະຊຸມ, ສິດໃນການເລືອກສະມາຊິກສະພາບໍລິຫານ/ກຳມະການ (ຕາມສັດສ່ວນຜູ້ຖືຮຸ້ນ ທີ່ຖືຮຸ້ນ 5% ຂຶ້ນໄປ) ລວມໄປເຖິງການເປີດເຜີຍຂໍ້ມູນຂອງ ທຄຕລ ຢ່າງຖືກຕ້ອງ, ໂປ່ງໃສ ໃຫ້ແກ່ຜູ້ຖືຮຸ້ນ.

ທຄຕລ ໃຫ້ຄວາມສຳຄັນແກ່ຜູ້ຖືຮຸ້ນທຸກໆຄົນຢ່າງເທົ່າທຽມກັນ ບໍ່ວ່າຈະເປັນຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ຖືຮຸ້ນລາຍນ້ອຍ, ນັກລົງທຶນ, ສະຖາບັນ ຫຼື ຜູ້ຖືຮຸ້ນຕ່າງປະເທດ ໂດຍທຸກພາກສ່ວນຈະໄດ້ຮັບການປະຕິບັດດ້ວຍຄວາມເປັນທຳ ແລະ ສະເໝີພາບດັ່ງນີ້:

- ສິດໃນການຈອງຮຸ້ນອອກໃໝ່, ຊື້, ຂາຍ ຫຼື ໂອນຮຸ້ນ: ທຄຕລ ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ ໂດຍຍຶດໝັ້ນໃນລະບຽບ, ກົດໝາຍ ຂອງຕະຫຼາດຫຼັກຊັບລາວ, ເຊິ່ງຜູ້ຖືຮຸ້ນທຸກພາກສ່ວນ ຈະໄດ້ຮັບການອຳນວຍຄວາມສະດວກໃນການໃຫ້ບໍລິການ ຊື້, ຂາຍ ຫຼື ໂອນຮຸ້ນ ຜ່ານບໍລິສັດຫຼັກສັບທີ່ ຈົດທະບຽນຖືກຕ້ອງຕາມກົດໝາຍຢ່າງເທົ່າທຽມກັນ, ຜູ້ຖືຮຸ້ນຈະໄດ້ຮັບສິດໃນການຈອງຊື້ຮຸ້ນໃໝ່ໃນອັດຕາສ່ວນ ແລະ ວິທີແບ່ງປັນຮຸ້ນ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ ກ່ອນສະເໜີຂາຍໃຫ້ແກ່ພາກສ່ວນພາຍນອກ.
- ສິດໃນການຮັບເງິນປັນຜົນ: ທຄຕລ ມີການຈັດສັນເງິນປັນຜົນໃຫ້ກັບຜູ້ຖືຮຸ້ນ ໃນອັດຕາທີ່ສົມເຫດສົມຜົນ, ສອດຄ່ອງຕາມລະບຽບ ຄຽງຄູ່ໄປກັບ ການຄຳນຶງເຖິງຄວາມພຽງພໍຂອງທຶນທີ່ຈະນຳໃຊ້ເຂົ້າໃນການເສີມສ້າງຄວາມໝັ້ນຄົງໃຫ້ແກ່ທະນາຄານຢ່າງຕໍ່ເນື່ອງ.
- ສິດໃນການຮັບຂໍ້ມູນຂ່າວສານ: ທຄຕລ ໄດ້ເອົາໃຈໃສ່ໃນການສື່ສານເຖິງ ຜູ້ຖືຮຸ້ນ ແລະ ນັກລົງທຶນ ໃຫ້ໄດ້ຮັບຂໍ້ມູນຂ່າວສານທີ່ພຽງພໍ ແລະ ທັນເວລາ ໂດຍການເປີດເຜີຍຂໍ້ມູນຜ່ານຕະຫຼາດຫຼັກຊັບ ລວມໄປເຖິງ ການເປີດເຜີຍຂໍ້ມູນຜ່ານເວັບໄຊຂອງ ທຄຕລ ເອງ.
- ສິດໃນການເຂົ້າຮ່ວມປະຊຸມຜູ້ຖືຮຸ້ນ: ທຄຕລ ໃຫ້ຄວາມສຳຄັນຕໍ່ການຮ່ວມປະຊຸມຜູ້ຖືຮຸ້ນເປັນບຸລິມະສິດ ໂດຍກ່ອນມີການຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ທຄຕລ ໄດ້ມີການແຕ່ງຕັ້ງຄະນະກຳມະການກະກຽມກອງປະຊຸມ ເຊິ່ງເຮັດໜ້າທີ່ຮັບຜິດຊອບດ້ານເນື້ອໃນກອງປະຊຸມ, ງົບປະມານ, ພິທີການ, ລົງທະບຽນແຂກ ແລະ ສະຖານທີ່, ກວດກາເອກະສານຂາຮຸ້ນພາຍໃນ, ຂາຮຸ້ນຕ່າງປະເທດ ແລະ ຂາຮຸ້ນບໍ່ມີໜ້າ, ກວດກາຂາຮຸ້ນ ແລະ ນັບຄະແນນສຽງ ລວມໄປເຖິງ ການສົ່ງໜັງສືແຈ້ງເຊີນ ເຖິງ ຜູ້ຖືຮຸ້ນລ່ວງໜ້າ ໂດຍກຳນົດລະອາລະທີ່ຈະມີການພິຈາລະນາ ແລະ ຮັບຮອງ ໃນໜັງສືແຈ້ງເຊີນດັ່ງກ່າວ.
- ສິດໃນການລົງຄະແນນສຽງ: ໃນການປະຊຸມຜູ້ຖືຮຸ້ນ, ທຄຕລ ໃຫ້ສິດຜູ້ຖືຮຸ້ນຢ່າງເທົ່າທຽມໃນການລົງຄະແນນສຽງ ລວມໄປເຖິງ ອະນຸຍາດໃຫ້ມີການລົງຄະແນນສຽງໂດຍບໍ່ເຂົ້າຮ່ວມການລົງຄະແນນສຽງ ຜ່ານການມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຊຶ່ງກຳນົດເອົາໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ສິດສະເໜີຄຳເຫັນຕໍ່ກອງປະຊຸມ: ທຸກໆວາລະກອງປະຊຸມ, ທຄຕລ ມີວາລະໃຫ້ຜູ້ຖືຮຸ້ນສະເໜີຄຳຖາມ ຫຼື ປະກອບຄຳເຫັນຕໍ່ກັບແຕ່ລະວາລະຢ່າງກົງໄປກົງມາ ຜ່ານສະພາບໍລິຫານ ແລະ ຜູ້ອຳນວຍການ ລວມໄປເຖິງ ຜູ້ກວດສອບພາຍນອກ (ທີ່ມີສິດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ທຄຕລ).

- ສິດໃນການເລືອກສະມາຊິກສະພາບໍລິຫານ/ຄະນະກຳມະການ: ທຄຕລ ອະນຸຍາດໃຫ້ຜູ້ຖືຮຸ້ນສາມາດເລືອກສະມາຊິກສະພາບໍລິຫານ/ຄະນະກຳມະການ ອີງຕາມຜົນຂອງການລົງມະຕິຕາມຄະແນນສຽງທີ່ຫຼາຍກວ່າເຄິ່ງໜຶ່ງ ແລະ ທຄຕລ ຍັງ ອະນຸຍາດໃຫ້ (ກຸ່ມ) ຜູ້ຖືຮຸ້ນ ທີ່ຖືຮຸ້ນ 5% ຂຶ້ນໄປຂອງ ທຄຕລ ມີສິດສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານ, ມີສິດສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ ທຄຕລ ເພື່ອພິຈາລະນາ, ພ້ອມກັນນັ້ນ ຜູ້ຖືຮຸ້ນທີ່ຖືຮຸ້ນ 10% ຂຶ້ນໄປຂອງ ທຄຕລ ມີສິດສະເໜີຕໍ່ສະພາບໍລິຫານເພື່ອຂໍເປີດກອງປະຊຸມວິສາມັນຜູ້ຖືຮຸ້ນໄດ້.

2.2. ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ

ທຄຕລ ໃຫ້ຄວາມສຳຄັນແກ່ນະໂຍບາຍ ແລະ ກົນໄກທີ່ພຽງພໍໃນການປົກປ້ອງ ແລະ ສົ່ງເສີມການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ ຢ່າງເທົ່າທຽມ, ເປັນທຳ ບໍ່ວ່າຈະເປັນ ຜູ້ຖືຮຸ້ນ, ຜູ້ບໍລິຫານ ແລະ ພະນັກງານ, ລູກຄ້າ, ຄູ່ຄ້າ, ເຈົ້າໜີ້, ໜ່ວຍງານລັດ ແລະ ມີຄວາມຮັບຜິດຊອບຕໍ່ສັງຄົມ ຜ່ານການຄຸ້ມຄອງການຕິດຕໍ່ພົວພັນ ລະຫວ່າງ ທຄຕລ ແລະ ຜູ້ທີ່ມີສ່ວນຮ່ວມໃນຕະຫຼາດຢ່າງເໝາະສົມ ດັ່ງນີ້:

- ຜູ້ຖືຮຸ້ນ: ທຄຕລ ເອົາໃຈໃສ່ຕໍ່ການດຳເນີນທຸລະກິດໃຫ້ຈະເລີນເຕີບໂຕ ຄຽງຄູ່ກັບຄວາມໝັ້ນຄົງ ມີຄວາມສາມາດໃນການແຂ່ງຂັນ ເພື່ອສ້າງມູນຄ່າໃຫ້ແກ່ ທຄຕລ ໃນຮູບແບບມູນຄ່າຮຸ້ນທີ່ສູງ ແລະ ການຈ່າຍເງິນປັນຜົນໃນອັດຕາທີ່ດຶງດູດ ລວມໄປເຖິງ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ.
- ຜູ້ບໍລິຫານ ແລະ ພະນັກງານ: ທຄຕລ ສົ່ງເສີມການພັດທະນາຄວາມຮູ້ ແລະ ປະສົບການຂອງຜູ້ບໍລິຫານ ຕະຫຼອດຮອດພະນັກງານ ທຄຕລ ທຸກລະດັບ ໃຫ້ມີປະສິດທິພາບ ໂດຍການຈັດໃຫ້ມີການຝຶກອົບຮົມວຽກງານສະເພາະດ້ານທັງພາຍໃນ ແລະ ການນຳສົ່ງພະນັກງານໄປຝຶກອົບຮົມວຽກງານວິຊາສະເພາະຈາກສາກົນ. ນອກຈາກນັ້ນ ກໍ່ຍັງໄດ້ເອົາໃຈໃສ່ຕໍ່ສຸຂະພາບຂອງພະນັກງານ ແລະ ຜູ້ບໍລິຫານໂດຍຈັດໃຫ້ມີສະຫວັດດີການທີ່ເໝາະສົມ, ສະຖານທີ່ເຮັດວຽກທີ່ສະອາດ, ປອດໄພ ລວມໄປເຖິງ ຊ່ອງທາງການຕິດຕໍ່ພົວພັນ, ຊ່ອງທາງການຮັບຄຳເຫັນ ຫຼື ຄຳຮ້ອງຟ້ອງຂອງພະນັກງານ.
- ລູກຄ້າ: ທຄຕລ ຍຶດຖືລູກຄ້າເປັນສູນກາງ ໃນການໃຫ້ບໍລິການທາງການເງິນ, ເພີ່ມຄວາມຫຼາກຫຼາຍທາງດ້ານຜະລິດຕະພັນ , ເພີ່ມຊ່ອງທາງການໃຫ້ບໍລິຫານ, ຊ່ອງທາງການຕິດຕໍ່ພົວພັນ, ຊ່ອງທາງການຮັບຄຳເຫັນ ຫຼື ຄຳຮ້ອງຟ້ອງ, ເພື່ອໃຫ້ລູກຄ້າມີຄວາມສະດວກສະບາຍ ແລະ ຄວາມເພິ່ງພໍໃຈໃນການໃຊ້ບໍລິການທະນາຄານ ບໍ່ວ່າຈະເປັນການໃຫ້ບໍລິຫານຜ່ານເຄົ້າເຕີ້ ບໍລິການ ຫຼື ການໃຫ້ບໍລິຫານອີເລັກໂທຣນິກ.
- ຄູ່ຄ້າ: ທຄຕລ ໃຫ້ຄວາມສຳຄັນຕໍ່ຄູ່ຄ້າຕາມກົດໝາຍ ແລະ ສັນຍາທີ່ຕົກລົງກັນ ສະແດງອອກໂດຍ ຂະບວນການຈັດຫາ, ຈັດຈ້າງ, ການເຊົ່າ, ການຊື້, ຄັດເລືອກຄູ່ຄ້າຢ່າງເປັນທຳ, ເປີດໂອກາດໃຫ້ຫຼາຍພາກສ່ວນສາມາດແຂ່ງຂັນໄດ້ຢ່າງເປັນທຳ, ມີຂະບວນການຄັດເລືອກທີ່ໂປ່ງໃສ ຫຼີກລ່ຽງການຮ່ວມມືກັບບໍລິສັດທີ່ເຮັດທຸລະກິດຜິດກົດໝາຍ, ມີນະໂຍບາຍການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ ໄວ້ໃນກົດລະບຽບກ່ຽວກັບຈັນຍາບັນຂອງທະນາຄານ.
- ເຈົ້າໜີ້: ທຄຕລ ເອົາໃຈໃສ່ໃນການປະຕິບັດບັນດາຂໍ້ກຳນົດ, ສັນຍາ ແລະ ຂໍ້ຜູກພັນຕ່າງໆຂອງເຈົ້າໜີ້ຢ່າງເຄັ່ງຄັດ, ປະຕິບັດຕາມການຊຳລະໜີ້, ດອກເບ້ຍ, ເງິນກູ້ ໃຫ້ເຈົ້າໜີ້ຖືກຕ້ອງ ແລະ ຄົບຖ້ວນ ຢ່າງກົງໄປກົງມາ.
- ໜ່ວຍງານລັດ: ທຄຕລ ໃຫ້ຄວາມສຳຄັນໃນການປະຕິບັດລະບຽບກົດໝາຍຢ່າງເຄັ່ງຄັດ ແລະ ໃຫ້ຄວາມຮ່ວມມືເປັນຢ່າງດີຕໍ່ກັບພາກສ່ວນກ່ຽວຂ້ອງ. ນອກນັ້ນ, ທຄຕລ ຍັງມີສ່ວນຊ່ວຍເຫຼືອໜ່ວຍງານລັດ ໃນການເຮັດໜ້າທີ່ເປັນຕົວແທນເກັບພາສີ - ອາກອນ ຕ່າງໆຂອງລັດ ຜ່ານລະບົບທະນາຄານ.
- ຄວາມຮັບຜິດຊອບຕໍ່ສັງຄົມ: ນອກຈາກການບໍລິການດ້ານການເງິນແລ້ວ, ທຄຕລ ຍັງມີສ່ວນຮ່ວມທາງສັງຄົມ ແລະ ສິ່ງແວດລ້ອມ ເຊິ່ງສະແດງໃຫ້ເຫັນໄດ້ຈາກການສົ່ງເສີມການພັດທະນາແບບຍືນຍົງ ຜ່ານຄຸນຄ່າຫຼັກ (Core Value) ຂອງ ທຄຕລ ໂດຍສະເພາະ ຄວາມຮັບຜິດຊອບຕໍ່ສັງຄົມ (Social Responsibility) ເຊິ່ງໄດ້ລະບຸວ່າ: “ທຸກຄົນເອົາໃຈໃສ່ຊ່ວຍເຫຼືອສັງຄົມ, ຊຸມຊົນ ແລະ ສິ່ງແວດລ້ອມ” ທີ່ສະແດງໃຫ້ເຫັນໄດ້ຈາກການເປັນສື່ກາງໃນການລະດົມເງິນຊ່ວຍເຫຼືອສັງຄົມ ຜ່ານໂຄງການ BCEL One Heart ເປັນຕົ້ນແມ່ນ ໂຄງການລະດົມທຶນຊ່ວຍເຫຼືອຜູ້ດ້ອຍໂອກາດ ຫຼື ປະຊາຊົນ

ຜູ້ທຸກຍາກ, ຊ່ວຍເຫຼືອດ້ານການອຳນວຍຄວາມສະດວກໃນການເຂົ້າເຖິງລະບົບການສຶກສາ, ຊ່ວຍເຫຼືອດ້ານການຫຼຸດຜ່ອນຜົນກະທົບຈາກໄພພິບັດຕ່າງໆ ເປັນຕົ້ນ.

2.3. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ທຄຕລ ໃຫ້ຄວາມສຳຄັນແກ່ການເປີດເຜີຍຂໍ້ມູນອີງຕາມ ລະບຽບການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ ໂດຍຂໍ້ມູນທີ່ເປີດເຜີຍຈະຕ້ອງມີຄວາມຖືກຕ້ອງ, ຄົບຖ້ວນ, ພຽງພໍ ແລະ ເຊື່ອຖືໄດ້ ເພື່ອໃຫ້ຜູ້ນຳໃຊ້ຂໍ້ມູນ ຫຼື ນັກລົງທຶນໄດ້ຮັບຂໍ້ມູນຢ່າງເທົ່າທຽມກັນ. ພ້ອມກັນນັ້ນ, ທຄຕລ ກໍ່ຍັງມີຄະນະກຳມະການທີ່ເຮັດໜ້າທີ່ໃນການເຜີຍແຜ່ຂໍ້ມູນ ເຊິ່ງເປັນທີມງານທີ່ມີຄວາມຮູ້ຄວາມສາມາດ ແລະ ປະສົບການທີ່ເໝາະສົມ ພ້ອມທັງຄວາມຮັບຜິດຊອບໃນການເຜີຍແຜ່ ຫຼື ລາຍງານບົດລາຍງານທາງການເງິນປະຈຳປີຂອງ ທຄຕລ.

- ຂໍ້ມູນຂອງ ທຄຕລ ແລະ ບໍລິສັດໃນກຸ່ມ: ທຄຕລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ວິໄສທັດ, ຈຸດປະສົງ, ເປົ້າໝາຍ ຫຼື ແຜນຍຸດທະສາດໃນການເຄື່ອນໄຫວວຽກງານ ຂອງ ທຄຕລ ຫຼື ບໍລິສັດໃນກຸ່ມຂອງຕົນ ຢ່າງໂປ່ງໃສໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງທະນາຄານ.
- ຂໍ້ມູນທາງການເງິນ: ທຄຕລ ໄດ້ເປີດເຜີຍຂໍ້ມູນທາງການເງິນ, ນະໂຍບາຍປັນຜົນ ໃນບົດສະຫຼຸບຜົນການເຄື່ອນໄຫວທຸລະກິດປະຈຳປີ ເຊິ່ງເປັນອີກໜຶ່ງພາກທີ່ສຳຄັນ. ໃນນັ້ນ, ທຄຕລ ກໍ່ໄດ້ປະຕິບັດຕາມມາດຕະຖານບັນຊີສາກົນ ແລະ ຜ່ານການກວດສອບຈາກຜູ້ກວດສອບພາຍນອກ ໂດຍຜ່ານຊ່ອງທາງທີ່ເຂົ້າເຖິງງ່າຍ ເຊັ່ນ: ເວັບໄຊຂອງທະນາຄານ.
- ຂໍ້ມູນທີ່ບໍ່ແມ່ນການເງິນ: ທຄຕລ ໄດ້ເປີດເຜີຍຂໍ້ມູນທີ່ບໍ່ແມ່ນການເງິນ ບໍ່ວ່າຈະເປັນວຽກງານຈັດກອງປະຊຸມ, ວຽກງານການພັດທະນາວຽກງານບໍລິການ ແລະ ພັດທະນາຜະລິດຕະພັນ, ການບໍລິການສັງຄົມ ທີ່ໄດ້ລະບຸ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງ ທຄຕລ ລວມໄປເຖິງ ຂໍ້ມູນກ່ຽວກັບປະຫວັດການສຶກສາ ແລະ ການຝຶກອົບຮົມຂອງສະມາຊິກສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງ ທຄຕລ.
- ທຄຕລ ໄດ້ເປີດເຜີຍຂໍ້ມູນຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ໃນປີ 2022 ທຄຕລ ໄດ້ດຳເນີນການເປີດເຜີຍຂໍ້ມູນດັ່ງນີ້:

ປະເພດເປີດເຜີຍຂໍ້ມູນ	ຈຳນວນຄັ້ງ
ການເປີດເຜີຍຂໍ້ມູນຕາມເຫດການ	16
ການເປີດເຜີຍຂໍ້ມູນຕາມຮອບວຽນເວລາ	2
ການເປີດເຜີຍຂໍ້ມູນຕາມການສະໝັກໃຈ	4
ການເປີດເຜີຍຂໍ້ມູນຕາມການຮຽກຮ້ອງ	0
ລວມ	**22**

2.4. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ທຄຕລ ເນັ້ນໜັກການຄຸ້ມຄອງບໍລິຫານທີ່ມີຄວາມຊັດເຈນທາງການປະຕິບັດວຽກງານຂອງຕົນ ສະແດງອອກຈາກການກຳນົດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຢ່າງຊັດເຈນຂອງ ຄະນະກຳມະການຂອງສະພາບໍລິຫານເຊິ່ງປະກອບມີ 04 ຄະນະກຳມະການ ຄື: 1) ຄະນະກຳມະການກວດສອບ, 2) ຄະນະກຳມະການຄຸ້ມຄອງຄວາມສ່ຽງ, 3) ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ ແລະ 4) ຄະນະກຳມະການຄຸ້ມຄອງບໍລິຫານ. ພ້ອມກັນນັ້ນ, ສະມາຊິກຄະນະກຳມະການຂອງສະພາບໍລິຫານແຕ່ລະຄະນະຕ້ອງເປັນສະມາຊິກສະພາບໍລິຫານ ແລະ ຕ້ອງປະກອບດ້ວຍຢ່າງໜ້ອຍ 03 ທ່ານ ທີ່ມີຄວາມຫຼາກຫຼາຍ, ຄວາມຮູ້ຄວາມສາມາດ ແລະ ປະສົບການທີ່ກ່ຽວຂ້ອງກັບຂະແໜງການທີ່ ທຄຕລ ດຳເນີນທຸລະກິດ.

3. ການຄວບຄຸມພາຍໃນ

ການມີລະບົບຄວບຄຸມພາຍໃນທີ່ດີ ມີຄວາມສຳຄັນຢ່າງຍິ່ງສຳລັບບໍລິສັດຈົດທະບຽນ ກໍ່ຄື ທຄຕລ ເພື່ອສາມາດປ້ອງກັນ ຄວາມສ່ຽງ ຫຼື ຄວາມເສຍຫາຍທີ່ອາດເກີດຂຶ້ນກັບອົງກອນ. ດັ່ງນັ້ນ, ທຄຕລ ຈຶ່ງໃຫ້ຄວາມສຳຄັນຕໍ່ວຽກງານດັ່ງກ່າວ ເພື່ອ ຮັບປະກັນວ່າ ທະນາຄານມີການຄວບຄຸມພາຍໃນທີ່ເໝາະສົມ ແລະ ພຽງພໍໃນການບໍລິຫານອົງກອນ ໃຫ້ບັນລຸເປົ້າໝາຍ ເຊິ່ງ ສະແດງອອກໃຫ້ເຫັນຈາກການຈັດຕັ້ງປະຕິບັດວຽກງານບົນພື້ນຖານການປະຕິບັດຕາມນະໂຍບາຍ, ລະບຽບ, ຄູ່ມື ແລະ ຄຳແນະ ນຳຕ່າງໆທີ່ຖືກກຳນົດຂຶ້ນ ເພື່ອເປັນບ່ອນອີງໃນການປະຕິບັດວຽກງານຂອງແຕ່ລະພາກສ່ວນ. ພ້ອມກັນນັ້ນ, ເພື່ອເຮັດໃຫ້ລະບົບ ການຄວບຄຸມພາຍໃນມີຄວາມເຂັ້ມແຂງ, ທຄຕລ ກໍ່ຍັງມີການສ້າງຕັ້ງບັນດາຄະນະກຳມະການຂັ້ນສະພາບໍລິຫານ ທີ່ມີການ ປະຕິບັດຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນຢ່າງຊັດເຈນ. ນອກຈາກນີ້, ການມີໂຄງສ້າງອົງກອນ ແລະ ສະພາບແວດລ້ອມທີ່ດີຍັງສົ່ງຜົນໃຫ້ ທຄຕລ ມີລະບົບການຄວບຄຸມພາຍໃນທີ່ມີປະສິດທິພາບ ສະແດງອອກໃຫ້ເຫັນຈາກການມີ ພາກສ່ວນກວດກາພາຍໃນທີ່ມີຄວາມເປັນເອກະລາດ ໂດຍສາມາດລາຍງານໂດຍກົງຕໍ່ ຄະນະກຳມະການກວດສອບ.

ພ້ອມກັນນັ້ນ, ເພື່ອຮັບປະກັນວ່າ ທະນາຄານມີການແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງບໍລິຫານທີ່ມີປະສິດທິພາບ, ທຄຕລ ຈຶ່ງມີການຄົ້ນຄ້ວາ ແລະ ປັບປຸງໂຄງສ້າງການຄຸ້ມຄອງບໍລິຫານ ໂດຍການປະເມີນຊ່ອງຫວ່າງ ການຈັດຕັ້ງປະຕິບັດຕົວຈິງ ຂອງ ທຄຕລ ທຽບກັບ ລະບຽບຫຼັກການພາຍໃນ ສປປ ລາວ, ຫຼັກການບາເຊ02, ຫຼັກການ 03 ສາຍປ້ອງກັນ (Three Lines of Defense) ແລະ ຫຼັກການປະຕິບັດທີ່ດີຈາກທະນາຄານສາກົນ ເພື່ອຮັບປະກັນວ່າ ທຄຕລ ມີໂຄງສ້າງທີ່ເຂັ້ມແຂງ ແລະ ໄດ້ ມາດຕະຖານສາກົນ ເຊິ່ງເຫັນໄດ້ວ່າ ການຈັດຕັ້ງປະຕິບັດຕາມລະບຽບຫຼັກການພາຍໃນ ສປປ ລາວ ໂດຍລວມແມ່ນສາມາດຈັດຕັ້ງ ປະຕິບັດໄດ້ໃນລະດັບດີ ໃນຂະນະທີ່ ການຈັດຕັ້ງປະຕິບັດຕາມຫຼັກການສາກົນ ແມ່ນຍັງມີບາງຈຸດທີ່ຕ້ອງໄດ້ຮັບການປັບປຸງ. ດັ່ງນັ້ນ , ທຄຕລ ຈຶ່ງໄດ້ສຸມໃສ່ການສົ່ງເສີມວັດທະນະທຳດ້ານການຄຸ້ມຄອງຄວາມສ່ຽງໃນທົ່ວອົງກອນ ໂດຍເນັ້ນໃສ່ການສ້າງຄວາມເຂົ້າໃຈ ໃຫ້ກັບພະນັກງານທຸກຂັ້ນ ຮັບຮູ້ເຖິງພາລະບົດບາດຂອງຕົນໃນວຽກງານຄຸ້ມຄອງຄວາມສ່ຽງ, ປັບປຸງໂຄງສ້າງການຄຸ້ມຄອງຄວາມ ສ່ຽງຂອງ ທຄຕລ ໃຫ້ທຽບເທົ່າກັບມາດຕະຖານສາກົນ ໂດຍການສ້າງຄວາມເຂັ້ມແຂງຂອງຂະບວນການຄຸ້ມຄອງຄວາມສ່ຽງຢ່າງ ເປັນລະບົບ ແລະ ສ້າງຄວາມຮ່ວມມືໃນການປະສານງານເຮັດວຽກກັບທຸກພະແນກ, ສູນ, ສາຂາ ທີ່ຕິດພັນກັບຄວາມສ່ຽງ ແນໃສ່ ເຮັດໃຫ້ການລາຍງານຄວາມສ່ຽງຈາກພາກສ່ວນກ່ຽວຂ້ອງມີປະສິດທິພາບຫຼາຍຂຶ້ນ. ພ້ອມກັນນັ້ນ, ກໍ່ໄດ້ສົ່ງເສີມໃຫ້ພະນັກງານທຸກ ລະດັບໄດ້ເຂົ້າຮ່ວມສຳມະນາຫົວຂໍ້ຕ່າງໆເພື່ອຍົກລະດັບທາງການວຽກງານການຄຸ້ມຄອງພາຍໃນຂອງອົງກອນ.

4. ການຄຸ້ມຄອງຄວາມສ່ຽງ

4.1. ການອອກນະໂຍບາຍກ່ຽວກັບວຽກງານຄຸ້ມຄອງຄວາມສ່ຽງ

ເນື່ອງຈາກວຽກງານການຄຸ້ມຄອງຄວາມສ່ຽງ ເປັນກົນໄກສຳຄັນທີ່ຈະເຮັດໃຫ້ອົງກອນສາມາດດຳເນີນທຸລະກິດ ແລະ ບັນລຸ ວັດຖຸປະສົງຢ່າງມີປະສິດທິພາບ ເພື່ອສ້າງຜົນຕອບແທນທີ່ຍືນຍົງ, ຄະນະຜູ້ບໍລິຫານ ທຄຕລ ຈຶ່ງໃຫ້ຄວາມສຳຄັນຕໍ່ວຽກງານ ດັ່ງກ່າວ ສະແດງໃຫ້ເຫັນໄດ້ຈາກຄວາມເອົາໃຈໃສ່ໃນການຍົກລະດັບໂຄງສ້າງການຄຸ້ມຄອງຄວາມສ່ຽງ ແລະ ສາມາດຈັດຕັ້ງ ປະຕິບັດວຽກງານຄຸ້ມຄອງຄວາມສ່ຽງໃຫ້ມີປະສິດທິພາບ ໂດຍການພັດທະນາ ແລະ ປັບປຸງບັນດານະໂຍບາຍທີ່ສຳຄັນໃນການຄຸ້ມ ຄອງຄວາມສ່ຽງ ເປັນຕົ້ນແມ່ນ ນະໂຍບາຍວ່າດ້ວຍການປະເມີນການຄວບຄຸມຄວາມສ່ຽງດ້ວຍຕົນເອງ, ນະໂຍບາຍວ່າດ້ວຍການ ກຳນົດຕົວຊີ້ວັດຄວາມສ່ຽງທີ່ສຳຄັນ, ໂຄງສ້າງການຄຸ້ມຄອງຄວາມສ່ຽງ ທຄຕລ (ສະບັບປັບປຸງ), ນະໂຍບາຍວ່າດ້ວຍການບໍລິຫານ ຄວາມຕໍ່ເນື່ອງທາງທຸລະກິດ (ສະບັບປັບປຸງ), ນະໂຍບາຍວ່າດ້ວຍການຄຸ້ມຄອງບັນຊີ Nostro-Vostro, ບັນຊີລ່ວງໜ້າ-ລໍຖ້າ ແລະ ຄ້າງຮັບ-ຄ້າງຈ່າຍ, ບັນຊີນອກໃບລາຍງານຖານະການເງິນ, ນະໂຍບາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງດ້ານຊື່ສຽງ (ສະບັບ ປັບປຸງ), ນະໂຍບາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງດ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ), ນະໂຍບາຍວ່າດ້ວຍການຄຸ້ມຄອງ ຄວາມສ່ຽງດ້ານການດຳເນີນງານ (ສະບັບປັບປຸງ), ນະໂຍບາຍ ວ່າດ້ວຍການບໍລິຫານເຫດການສູນເສຍ (ສະບັບປັບປຸງ), ນະໂຍບາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງດ້ານສິນເຊື່ອ (ສະບັບປັບປຸງ), ລະບຽບວ່າດ້ວຍຈັນຍາບັນສິນເຊື່ອ (ສະບັບປັບປຸງ), ລະບຽບວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ບັນຊີຜູ້ໃຊ້ງານ (ສະບັບປັບປຸງ), ລະບຽບວ່າດ້ວຍວຽກງານຕ້ານ ສະກັດກັ້ນການຟອກ

ເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ), ລະບຽບວ່າດ້ວຍການຄຸ້ມຄອງສື່ສ້າງສັນ, ແລະ ລະບຽບການ, ຄູ່ມືອື່ນໆທີ່ຕິດພັນກັບວຽກງານຄຸ້ມຄອງຄວາມສ່ຽງຂອງ ທຄຕລ.

ນອກຈາກນັ້ນ ກໍ່ຍັງໄດ້ສືບຕໍ່ ອອກມາດຕະການຕ່າງໆທີ່ກ່ຽວຂ້ອງ ຮັບມືບັນຫາການລະບາດລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ເປັນຕົ້ນແມ່ນ ການຮັກສາໄລຍະຫ່າງທາງສັງຄົມ, ການປະຊຸມທາງໄກ, ການສົ່ງເສີມໃຫ້ລູກຄ້າຊົມໃຊ້ຜະລິດຕະພັນອີເລັກໂທຣນິກ, ການປະຕິບັດມາດຕະການຢ່າງເຄັ່ງຄັດໃນການໃສ່ຜ້າອັດປາກ-ດັງ, ການວັດແທກອຸນຫະພູມ, ມີບ່ອນລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື, ການອະນາໄມສະຖານທີ່ ແລະ ມາດຕະການຕ່າງໆ ຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ຂອງລັດຖະບານທີ່ວາງອອກເປັນແຕ່ລະໄລຍະ.

ພ້ອມກັນນັ້ນ ເພື່ອເຮັດໃຫ້ໝັ້ນໃຈວ່າ ທຄຕລ ມີການຄຸ້ມຄອງຄວາມສ່ຽງທີ່ມີປະສິດທິພາບ ແລະ ສອດຄ່ອງຕາມມາດຕະຖານສາກົນ, ຈຶ່ງໄດ້ມີການພັດທະນາບັນດານິຕິກຳດ້ານການຄຸ້ມຄອງຄວາມສ່ຽງຈຳນວນໜຶ່ງ ທີ່ຢູ່ໃນຂັ້ນຕອນຂອງການຮ່າງ ເພື່ອເປັນພື້ນຖານໃນການຄຸ້ມຄອງຄວາມສ່ຽງ ຕາມຫຼັກການສາກົນ ເປັນຕົ້ນແມ່ນ ນະໂຍບາຍວ່າດ້ວຍຄຸ້ມຄອງຄວາມສ່ຽງດ້ານອັດຕາດອກເບ້ຍໃນບັນຊີທະນາຄານ, ນະໂຍບາຍວ່າດ້ວຍຄຸ້ມຄອງຄວາມສ່ຽງດ້ານສະພາບຄ່ອງ, ນະໂຍບາຍວ່າດ້ວຍການກຳນົດລາຄາໂອນທຶນພາຍໃນ ແລະ ນະໂຍບາຍວ່າດ້ວຍການປະເມີນຄວາມພຽງພໍຂອງທຶນພາຍໃນ.

ເພື່ອເປັນການຍົກລະດັບວຽກງານການຄຸ້ມຄອງຄວາມສ່ຽງອີງກອນ ທຄຕລ ຈຶ່ງມີແນວທາງໃນການຄຸ້ມຄອງຄວາມສ່ຽງທີ່ສອດຄ່ອງຕາມມາດຕະຖານສາກົນ, ໂດຍ ທຄຕລ ສືບຕໍ່ປະຕິບັດບັນດາໂຄງການຕ່າງໆທີ່ເປັນການຄຸ້ມຄອງຄວາມສ່ຽງດ້ານສິນເຊື່ອ, ດ້ານຕະຫຼາດ, ດ້ານການດຳເນີນງານ ແລະ ດ້ານອື່ນໆທີ່ສຳຄັນໃຫ້ສອດຄ່ອງຕາມມາດຕະຖານສາກົນ. ສຳລັບປີ 2023, ທຄຕລ ຈະໄດ້ເນັ້ນໃສ່ ການພັດທະນານະໂຍບາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງໃນການນຳໃຊ້ບໍລິການຈາກພາຍນອກ, ນະໂຍບາຍວ່າດ້ວຍການເຮັດປະກັນໄພ, ນະໂຍບາຍວ່າດ້ວຍການແລກປ່ຽນຂໍ້ມູນລະຫວ່າງ ພະແນກ/ສູນ/ສາຂາ ພາຍໃນ ທຄຕລ, ນະໂຍບາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງດ້ານຕະຫຼາດ, ການພັດທະນາບັນດາໂມເດວສິນເຊື່ອ, ການພັດທະນາລະບົບການບໍລິຫານຫຼັກຊັບຄ้ຳປະກັນ, ລະບົບການເກັບໜີ້ ແລະ ຂະບວນການບໍລິຫານເກັບກູ້ໜີ້, ລະບົບບໍລິຫານ ແລະ ຕິດຕາມ Portfolio, ການປັບປຸງໂຄງສ້າງການຄຸ້ມຄອງຄວາມສ່ຽງ ແລະ ການປັບປຸງບັນດານະໂຍບາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບການຄຸ້ມຄອງຄວາມສ່ຽງ ໃຫ້ມີຄວາມຮັດກຸມຫຼາຍຍິ່ງຂຶ້ນ.

ນອກຈາກນັ້ນ ເພື່ອຮັບປະກັນວ່າວຽກງານຄຸ້ມຄອງຄວາມສ່ຽງໄດ້ຮັບການຈັດຕັ້ງປະສິດທິພາບ ແລະ ສອດຄ່ອງຕາມມາດຕະຖານສາກົນ, ທຄຕລ ຈຶ່ງໄດ້ວ່າຈ້າງບໍລິສັດທີ່ໄດ້ມາດຕະຖານສາກົນເພື່ອຊ່ວຍເປັນທີ່ປຶກສາດ້ານການຈັດຕັ້ງປະຕິບັດຕາມຫຼັກການບາເຊ ll (Basel ll) ໂດຍໃນແຕ່ລະໄລຍະຂອງການຈັດຕັ້ງປະຕິບັດໂຄງການ ແມ່ນໄດ້ມີການຈັດການສຳມະນາກ່ຽວກັບແຕ່ລະວຽກງານໃຫ້ກັບ ຄະນະຜູ້ບໍລິຫານຂັ້ນສະພາບໍລິຫານ ແລະ ຄະນະອຳນວຍການ ຕະຫລອດຮອດ ພະນັກງານວິຊາການຢ່າງເປັນປົກກະຕິ.

4.2. ການກຽມຄວາມພ້ອມເພື່ອນຳໃຊ້ຫຼັກການບາເຊ ll

ແນໃສ່ສ້າງຄວາມເຂັ້ມແຂງພາຍໃນອີງກອນ ພ້ອມທັງປະຕິບັດຕາມແນວທາງຂອງ ທະນາຄານແຫ່ງ ສປປ ລາວ, ທຄຕລ ໄດ້ສືບຕໍ່ກຽມຄວາມພ້ອມໃນການຈັດຕັ້ງປະຕິບັດຕາມຫຼັກການບາເຊ ll (Basel ll) ເຊິ່ງສະແດງອອກໂດຍການກຳນົດ ແຜນແມ່ບົດການຈັດຕັ້ງປະຕິບັດຕາມຫຼັກການບາເຊ ll ທີ່ມີຢ່າງໜ້ອຍ 27 ໂຄງການ ທີ່ ທຄຕລ ຕ້ອງໄດ້ຈັດຕັ້ງປະຕິບັດ ແຕ່ທ້າຍປີ 2017 ຈົນເຖິງປີ 2025 ໂດຍໄດ້ມີການແບ່ງການກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດຕາມຫຼັກການບາເຊ ll ອອກເປັນ 03 ໄລຍະ ທີ່ເປັນໄລຍະປະຕິບັດຕາມຂໍ້ກຳນົດຂອງ ທຫລ ແລະ ໄລຍະຕໍ່ໜ້າ ທີ່ເປັນໄລຍະຂອງການຍົກລະດັບວຽກງານບາເຊ ຂອງ ທຄຕລ ຄື:

- ໄລຍະທີ 01 (ປີ 2017 - 2018): ເປັນໄລຍະກະກຽມຄວາມພ້ອມ ການຈັດຕັ້ງປະຕິບັດຕາມຫຼັກການບາເຊ ll ໃຫ້ມີປະສິດທິພາບ ແລະ ກະກຽມປະຕິບັດຕາມ ຂໍ້ກຳນົດຂອງ ທະນາຄານແຫ່ງ ສປປ ລາວ (ທຫລ) ໃນນາມເປັນ ໜຶ່ງ ໃນ 20 ທະນາຄານຕົວແບບ.

- ໄລຍະທີ 02 (ປີ 2019 - 2020): ເປັນໄລຍະທີ່ຕ້ອງໄດ້ເລີ່ມການຈັດຕັ້ງປະຕິບັດຕາມຂໍ້ກຳນົດຂອງ ທຫລ ທີ່ຄາດວ່າຈະເລີ່ມທົດລອງນຳໃຊ້ກັບ 20 ທະນາຄານຕົວແບບ ໃນປີ 2020 ເຖິງ ປີ 2023.
- ໄລຍະທີ 03 (ປີ 2021 - 2023): ເປັນໄລຍະທີ່ຕ້ອງໄດ້ຈັດຕັ້ງປະຕິບັດຕາມຂໍ້ກຳນົດຂອງ ທຫລ ໃນໄລຍະທົດລອງ ແລະ ເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດຕົວຈິງ ຕາມຂໍ້ກຳນົດຂອງ ທຫລ ທີ່ຄາດວ່າຈະຖືກປະກາດໃຊ້ຢ່າງເປັນທາງການ ໃນປີ 2023.
- ໄລຍະຕໍ່ໜ້າ (ປີ 2024 - 2025): ເປັນໄລຍະທີ່ຖືກກຳນົດຂຶ້ນມາເພື່ອຍົກລະດັບການຈັດຕັ້ງປະຕິບັດຕາມຫຼັກການບາເຊ II ຂອງ ທຄຕລ ໃຫ້ມີປະສິດທິພາບຍິ່ງຂຶ້ນ.

ດ້ານການຈັດຕັ້ງປະຕິບັດຕາແຜນແມ່ບົດທີ່ກ່າວມາຂ້າງເທິງ, ໃນປີ 2022 ທຄຕລ ສຳເລັດການຈັດຕັ້ງປະຕິບັດຫຼາຍໂຄງການທີ່ສຳຄັນ ເປັນຕົ້ນແມ່ນ 1) ໂຄງການພັດທະນາເຄື່ອງມືການບໍລິຫານເຫດການສູນເສຍພາຍໃນ, 2) ໂຄງການພັດທະນາການຄຸ້ມຄອງບໍລິຫານຂໍ້ມູນ, 3) ໂຄງການອະນຸມັດສິນເຊື່ອແບບທັນສະໄໝ, 4) ໂຄງການພັດທະນາລະບົບການຈັດອັນດັບສິນເຊື່ອ, 5) ໂຄງການພັດທະນາເຄື່ອງມືຄິດໄລ່ຊັບສິນທີ່ມີນ້ຳໜັກຄວາມສ່ຽງ, 6) ໂຄງການກຳນົດວິທີການລະບຸການຄວບຄຸມໂດຍອີງຕາມຄວາມສ່ຽງ, 7) ໂຄງການຍົກລະດັບວຽກງານການຄຸ້ມຄອງຄວາມສ່ຽງການດຳເນີນງານ, 8) ໂຄງການພັດທະນາເຄື່ອງມືການປະເມີນການຄວບຄຸມຄວາມສ່ຽງດ້ວຍຕົນເອງ, 9) ໂຄງການພັດທະນາເຄື່ອງມືຕົວຊີ້ວັດຄວາມສ່ຽງທີ່ສຳຄັນ, 10) ໂຄງການຄົ້ນຄວ້າພັດທະນາປັບປຸງນະໂຍບາຍ ແລະ ຂັ້ນຕອນ ກ່ຽວກັບການບໍລິຫານຄວາມສ່ຽງສິນເຊື່ອ, 11) ໂຄງການບໍລິຫານຊັບສິນ - ໜີ້ສິນ ແລະ 12) ໂຄງການກຳນົດລາຄາໂອນທຶນພາຍໃນ.

ສ່ວນໂຄງການອື່ນໆ ທີ່ກຳລັງເນີນງານ ໂດຍມີຄາດໝາຍໃຫ້ສຳເລັດພາຍໃນປີ 2023 ປະກອບມີ 1) ໂຄງການຍົກລະດັບວຽກງານການບໍລິຫານຊັບສິນ-ໜີ້ສິນ, 2) ໂຄງການສ້າງວິທີການຕັ້ງລາຄາການໂອນທຶນພາຍໃນ, 3) ໂຄງການຍົກລະດັບການຄຸ້ມຄອງຄວາມສ່ຽງດ້ານຕະຫຼາດ, 4) ໂຄງການພັດທະນາຂະບວນການປະເມີນຄວາມພຽງພໍຂອງທຶນ ແລະ 5) ໂຄງການຍົກລະດັບວຽກງານການຄຸ້ມຄອງຄວາມຕໍ່ເນື່ອງທາງທຸລະກິດ.

ພ້ອມກັນນັ້ນ, ທຄຕລ ຍັງຈະສືບຕໍ່ກະກຽມຈັດຕັ້ງປະຕິບັດບັນດາໂຄງການຕ່າງໆ ສຳລັບປີ 2023 ທີ່ຖືກກຳນົດລົງໃນແຜນແມ່ບົດການຈັດຕັ້ງປະຕິບັດຕາມຫຼັກການບາເຊ II ຂອງ ທຄຕລ ເປັນຕົ້ນແມ່ນ ໂຄງການພັດທະນາ A-card ແລະ B-card ສຳລັບລູກຄ້າລາຍຍ່ອຍ ແລະ ແບບຈຳລອງ PD ສຳລັບບໍລິສັດ, ໂຄງການພັດທະນາ ແລະ ນຳໃຊ້ວຽກງານການບໍລິຫານ ແລະ ການຕິດຕາມຄັງສິນເຊື່ອ, ໂຄງການນຳໃຊ້ລະບົບການຄຸ້ມຄອງຫຼັກຊັບຄ້ຳປະກັນ ແລະ ໂຄງການອື່ນໆ ແນໃສ່ການຈັດຕັ້ງປະຕິບັດທີ່ສອດຄ່ອງກັບມາດຕະຖານສາກົນຍິ່ງຂຶ້ນ.

5. ການດຳເນີນງານດ້ານເສດຖະກິດ

ທຄຕລ ໄດ້ເນັ້ນໜັກ ຍຸດທະສາດການພັດທະນາ ສ້າງຄວາມເຂັ້ມແຂງໃຫ້ກັບອົງກອນຢ່າງຮອບດ້ານເຊັ່ນ:

- **ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ຍືນຍົງ:** ໂດຍສະເພາະແມ່ນ 1) ການບໍລິຫານການເງິນ ແມ່ນສຸມໃສ່ພັດທະນາວຽກງານການລະດົມທຶນ, ບໍລິຫານທຶນໃນຮູບແບບຕ່າງໆທີ່ເປັນໄປຕາມເງື່ອນໄຂຕົວຈິງ, ປັບປຸງໂຄງສ້າງທຶນໃຫ້ເໝາະສົມ ເພື່ອເປັນພື້ນຖານໃນການຈັດລະດັບຄວາມໜ້າເຊື່ອຖື (Credit Rating), ຮັບປະກັນການນຳໃຊ້ທຶນທີ່ໄດ້ຄຸນນະພາບ ໂດຍນຳເອົາຍຸດທະສາດຂອງສິນເຊື່ອ ແລະ ບໍລິຫານທຶນ ໃຫ້ສອດຄ່ອງຊັດເຈນ, ສ້າງລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ໃຫ້ມີປະສິດທິຜົນຫຼາຍຂຶ້ນ, 2) ການຄຸ້ມຄອງບໍລິຫານທຶນ ແມ່ນມຸ່ງເນັ້ນການພັດທະນາລະບົບລາຍງານທີ່ໄດ້ມາດຕະຖານ IFRS, ລະບົບຄຸ້ມຄອງຄວາມສ່ຽງທີ່ສອດຄ່ອງກັບ ຫຼັກການ Basek II, ສ້າງເຄື່ອງມືຈັດການບໍລິຫານຄວາມສ່ຽງຈາກຕະຫຼາດ Market Risk, ລະບົບບໍລິຫານໂດຍນຳໃຊ້ອັດຕາສ່ວນທາງການເງິນເປັນເກນວັດແທກ ແລະ ລະບົບໄອທີທີ່ທັນສະໄໝເພື່ອຊ່ວຍສະໜອງຂໍ້ມູນ, 3) ການບໍລິຫານຊັບສິນບັດຄົງທີ່ ເພື່ອເຮັດໃຫ້ອັດຕາສ່ວນຊັບສິນບັດຄົງທີ່ ຕໍ່ຊັບສິນທັງໝົດຫຼຸດລົງ ແລະ ເຮັດໃຫ້ປະສິດທິພາບ ໃນການສ້າງອັດຕາສ່ວນຜົນຕອບແທນຕໍ່ຊັບສິນ (ROA) ເພີ່ມຂຶ້ນ ໄດ້ມາດຕະຖານຕາມລະບຽບ ທຫລ ແລະ ສາກົນກຳນົດ, 4) ພັດທະນາວຽກງານການຕະຫຼາດ ແລະ ການຂາຍຜະລິດຕະພັນ ໂດຍກຳນົດແຜນພັດທະນາການຂາຍຜະລິດຕະພັນ ທັນການຂາຍຜະລິດຕະພັນຢ່າງມີຈຸດ

ສຸມ ຫຼື ເປັນກຸ່ມລູກຄ້າເປົ້າໝາຍຢ່າງຊັດເຈນ ນອກນັ້ນ, ຍັງເຮັດວຽກງານການວິເຄາະການຕະຫຼາດ ເພື່ອວິເຄາະພຶດຕິກຳ ຂອງລູກຄ້າ ແລະ ຄວາມຕ້ອງການຂອງລູກຄ້າ ເພື່ອເປັນຂໍ້ມູນໃນການ ສົ່ງເສີມວຽກງານດ້ານການຕະຫຼາດ, 5) ສ້າງ ແລະ ປັບປຸງບັນດາຄູ່ມື, ແນະນຳ, ລະບຽບ ແລະ ນິຕິກຳ;

- **ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ:** ທຄຕລ ໄດ້ເອົາໃຈໃສ່ວຽກງານສິນເຊື່ອ ເປັນວຽກງານທີ່ສຳຄັນ ແລະ ເປັນແຫຼ່ງລາຍຮັບຫຼັກຂອງ ທຄຕລ, ຊຶ່ງມຸ່ງເນັ້ນການບໍລິຫານສິນເຊື່ອທີ່ມີຄວາມທັນສະໄໝ, ຄຸ້ມຄອງບໍລິຫານຄຸນນະພາບສິນເຊື່ອໃຫ້ຢູ່ໃນລະດັບຄວາມສ່ຽງທີ່ຍອມຮັບໄດ້, ຂະຫຍາຍສິນໃຫ້ມີຄວາມຫຼາກຫຼາຍ ແລະ ຕອບສະໜອງລູກຄ້າທຸກກຸ່ມ, ແກ້ໄຂໜີ້ເສຍເປັນວຽກບູລິມະສິດ ແລະ ຮັກສາອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ NPL ບໍ່ເກີນ 3%, ປັບປຸງພັດທະນານະໂຍບາຍ, ລະບຽບ ແລະ ເຄື່ອງມືໃນການຄຸ້ມຄອງບໍລິຫານຄວາມສ່ຽງ ຕາມຫຼັກການບາເຊ02, ພັດທະນາຄວາມເຂັ້ມແຂງດ້ານບຸກຄະລາກອນສິນເຊື່ອ ແລະ ການຮ່ວມມືກັບພາຍນອກ ເພື່ອຊອກຫາພັນທະມິດທຸລະກິດທັງພາຍໃນ ແລະ ຕ່າງປະເທດ;
- **ພັດທະນາບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ :** ການພັດທະນາບຸກຄະລາກອນເປັນສິ່ງທີ່ສຳຄັນ ເພື່ອຮອງຮັບການປ່ຽນແປງໃນໄລຍະໃໝ່, ຍຸກການແຂ່ງຂັນສູງ ແລະ ການນຳໃຊ້ເທັກໂນໂລພັດທະນາຊິ ທີ່ທັນສະໄໝໃນການປະຕິບັດວຽກງານໃຫ້ເກີດຜົນປະໂຫຍດສູງສຸດແກ່ອົງກອນເຊັ່ນ: ພັດທະນາບຸກຄະລາກອນໃຫ້ສອດຄ່ອງກັບວຽກງານຈຸດສຸມທີ່ຈະພັດທະນາ, ການພັດທະນາຄວາມຮູ້ດ້ານເທັກໂນໂລຍີໃຫ້ກັບສາຍງານຕ່າງໆຂອງອົງກອນ, ການວາງແຜນອັດຕາກຳລັງຄົນ, ການສັນຫາ ແລະ ການຄັດເລືອກຊັບພະຍາກອນມະນຸດ, ໂຄງການພັດທະນາເຄື່ອງມືຕິດຕາມ ແລະ ປະເມີນຜົນງານຂອງພະນັກງານຕາມມາດຕະຖານສາກົນ, ການບັນຈຸ ແລະ ຊັບຊ້ອນພະນັກງານ ຖືກຕາມລະດັບຄວາມຮູ້ຄວາມສາມາດ ແລະ ປະສົບການຂອງແຕ່ລະຄົນ (ຈັດຄົນໃຫ້ຖືກວຽກ ແລະ ຈັດວຽກໃຫ້ເໝາະສົມກັບຄົນ);
- **ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານຕ້ານການຟອກເງິນໃຫ້ເຂັ້ມແຂງ:** ສ້າງພື້ນຖານການຄຸ້ມຄອງຄວາມສ່ຽງ ແລະ ຕ້ານການຟອກເງິນໃຫ້ເຂັ້ມແຂງ ແລະ ສອດຄ່ອງກັບມາດຕະຖານສາກົນ, ພັດທະນາລະບົບ ແລະ ເຄື່ອງມືການຄຸ້ມຄອງຄວາມສ່ຽງ ແລະ ຕ້ານການຟອກເງິນໃຫ້ເຂັ້ມແຂງ ແລະ ສອດຄ່ອງກັບມາດຕະຖານສາກົນ, ເຊື່ອມຊຶມວັດທະນະທຳການຄຸ້ມຄອງຄວາມສ່ຽງໃຫ້ທົ່ວອົງກອນ, ສ້າງ ແລະ ປັບປຸງນະໂຍບາຍ, ລະບຽບການທີ່ກ່ຽວຂ້ອງໃຫ້ມີຄວາມຮັດກຸມ ແລະ ສອດຄ່ອງຕາມມາດຕະຖານສາກົນ, ຕິດຕາມຄຸ້ມຄອງ ແລະ ບໍລິຫານຄວາມສ່ຽງ, ພັດທະນາບຸກຄະລາກອນໃຫ້ມີຄວາມຮູ້ຄວາມສາມາດ ດ້ານການຫ້ັນເປັນການນຳໃຊ້ລະບົບເຂົ້າໃນການຄຸ້ມຄອງຄວາມສ່ຽງ ແລະ ຕ້ານການຟອກເງິນ;
- **ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ ແລະ ສ້າງມາດຕະຖານໃຫ້ເປັນທະນາຄານອາຊຽນ Qualifiled Asean Bank (QAB):** ພັດທະນາການຄຸ້ມຄອງບໍລິຫານ Corporate Governance (CG), ສ້າງມາດຕະຖານສາກົນໃຫ້ເປັນທະນາຄານອາຊຽນ Qualified Asean Bank (QAB);
- **ຍຸດທະສາດການຫ້ັນເປັນທັນສະໄໝ ໂດຍນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໆໃນການດຳເນີນທຸລະກິດ ກ້າວສູ່ຍຸກເສດຖະກິດດີຈິຕອລ:** ເປົ້າໝາຍເພື່ອຫ້ັນສູ່ການບໍລິການໃນຮູບແບບ Digital Banking;
- **ຍຸດທະສາດສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ:** ປັບປຸງ ແລະ ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ, ພັດທະນາ ແລະ ປັບປຸງ ລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ, ພັດທະນາລະບົບການຄຸ້ມຄອງຜູ້ບໍລິໂພກ ໃຫ້ມີຄວາມປອດໄພໃຫ້ສູງຂຶ້ນ ກ້າວເຂົ້າສູ່ມາດຕະຖານສາກົນ.

6. ການດຳເນີນງານດ້ານສິ່ງແວດລ້ອມ

ທຄຕລ ໄດ້ນຳແນວຄິດເລື່ອງການພັດທະນາແບບຍືນຍົງ ມາເປັນຕົ້ນແບບໃນການປະຕິບັດໃນອົງກອນ ໂດຍການນຳສົ່ງພະນັກງານເຂົ້າຮ່ວມຝຶກອົບຮົມ ໃນຫົວຂໍ້ Dialogue on Responsible Business Practice in Lao PDR ຫຼັກການໃນການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ ຈຸດປະສົງເພື່ອໃຫ້ເຂົ້າໃຈເຖິງການຂະຫຍາຍຕົວທາງເສດຖະກິດແບບຍືນຍົງ ລວມເຖິງການຄຸ້ມຄອງສິດທິມະນຸດ ແລະ ສິ່ງແວດລ້ອມ, ນອກນັ້ນ, ຍັງໄດ້ເຂົ້າຮ່ວມໃນການຝຶກອົບຮົມ ແລະ ຂະບວນການ ໃນການຮັກສາສິ່ງແວດລ້ອມ ອື່ນໆເປັນປະຈຳ.

- ທຄຕລ ຍັງໄດ້ມີສ່ວນຮ່ວມໃນການຮັກສາສິ່ງແວດລ້ອມ ໃນການບໍລິຫານວຽກງານພາຍໃນອົງກອນ ໂດຍການຫັນສູ່ຄວາມທັນສະໄໝ ໂດຍນຳໃຊ້ເຄື່ອງມືເທັກໂນໂລຊີທີ່ມີຄວາມທັນສະໄໝໃນການບໍລິການ ແລະ ການບໍລິຫານວຽກງານ ຫຼຸດຜ່ອນການນຳໃຊ້ເຈ້ຍ.
- ປູກຝັງແນວຄິດ ພະນັກງານ ໃນການຮັກສາສິ່ງແວດລ້ອມດ້ວຍການອອກລະບຽບກ່ຽວກັບການປະຢັດ ເຊິ່ງຂໍ້ກຳນົດສ່ວນໃຫຍ່ແມ່ນເນັ້ນໃສ່ການປະຢັດພະລັງງານ ແລະ ຍັງມີການຕິດແຜ່ນໂຄສະນາ ເພື່ອຫຼຸດຜ່ອນການນຳໃຊ້ວັດຖຸທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ໃນຫ້ອງນ້ຳ ແລະ ສະຖານທີ່ອື່ນໆ, ແຈ້ງການຫຼຸດຜ່ອນການນຳໃຊ້ ໄຟຟ້າ, ການຣີໄຊເຄິນອຸປະກອນເກົ່າທີ່ຍັງນຳໃຊ້ໄດ້.
- ເຂົ້າຮ່ວມຂະບວນການ ແລະ ກິດຈະກຳ ອະນາໄມສະຖານທີ່ ແລະ ປູກຕົ້ນໄມ້ ໃນວັນເທດສະການຕ່າງໆ.

7. ການອຸປະຖຳສັງຄົມ

ທຄຕລ ໄດ້ມີສ່ວນຮ່ວມໃນການຊ່ວຍເຫຼືອສັງຄົມໃນຫຼາຍຮູບແບບ ໃນນັ້ນ, ທີ່ພົ້ນເດັ່ນແມ່ນໂຄງການ BCEL OneHeart ແມ່ນໜຶ່ງໃນວຽກງານທີ່ເສີມຂະຫຍາຍ ແລະ ຕໍ່ຍອດວຽກງານໂຄງການ ຄວາມຮັບຜິດຊອບຕໍ່ສັງຄົມ Corporate Socail Responsibility ຫຼື CSR ຂອງ ທຄຕລ ເປັນຜະລິດຕະພັນທີ່ນຳໃຊ້ທ່າແຮງທາງດ້ານເທັກໂນໂລຊີ ແລະ ຄວາມທັນສະໄໝປະກອບເຂົ້າໃນວຽກງານການຊ່ວຍເຫຼືອສັງຄົມໂດຍບໍ່ຫວັງຜົນຕອບແທນ ເຊິ່ງເຮັດໜ້າທີ່ເປັນເຄື່ອງມື ແລະ ສື່ກາງໃນການຮັບບໍລິຈາກຊ່ວຍເຫຼືອສັງຄົມ ທີ່ອຳນວຍຄວາມສະດວກລະຫວ່າງ ຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໜັກໃຈບໍລິຈາກ, ນອກຈາກນັ້ນ, ຍັງນຳໃຊ້ງ່າຍ ສະດວກ, ວ່ອງໄວ ແລະ ມີຄວາມໂປ່ງໃສ ສາມາດກວດສອບຂໍ້ມູນຂອງການຮັບບໍລິຈາກໄດ້ ເຊິ່ງໄດ້ສ້າງຄວາມເຊື່ອໝັ້ນໃຫ້ກັບທັງຜູ້ໃຫ້ ແລະ ຜູ້ຮັບ ເຮັດໃຫ້ມີການສ່ວນຮ່ວມຕໍ່ສັງຄົມ ຂອງຫຼາຍພາກສ່ວນເພີ່ມຂຶ້ນ ເພື່ອປະກອບສ່ວນຊ່ວຍປັບປຸງສະຫວັດດີພາບ, ຄຸນນະພາບຊີວິດ, ສັງຄົມໃຫ້ດີຂຶ້ນ.

ມາຮອດປີ 2022 ມີໂຄງການເຂົ້າຮ່ວມ BCEL OneHeart ທັງໝົດ ຈຳນວນ 82 ໂຄງການ, ລວມເປັນວົງເງິນທັງໝົດຫລາຍກວ່າ 6.658.166.349 ກີບ ແລະ ມີຍອດລາຍການບໍລິຈາກ 58.547 ຄັ້ງ.

ນອກຈາກນັ້ນ, ຍັງມີການຊ່ວຍເຫຼືອ ໃນຮູບແບບອື່ນໆເຊັ່ນ: ການລົງຊ່ວຍເຫຼືອ ອຸປະກອນການແພດ ກັບໂຮງໝໍ ໃນຊ່ວງການແຜ່ລະບາດຂອງພະຍາດໂຄວິດ, ຊ່ວຍເຫຼືອເດັກຜູ້ດ້ອຍໂອກາດ ແລະ ສົມທົບທຶນກໍ່ສ້າງໂຮງຮຽນໃນເຂດຊົນນະບົດ, ການຊ່ວຍອຸປະຖຳອື່ນໆ ຈຳນວນ 78 ໂຄງການ, ລວມເປັນວົງເງິນ 605.620.990ກີບ.

IX. ຜູ້ກວດສອບອິດສະຫຼະ

1. ການບໍລິການ ແລະ ມູນຄ່າກວດສອບ

ກອງປະຊຸມຜູ້ຖືຮຸ້ນຂອງ ທຄຕລ ປະຈຳປີ 2021 ທີ່ຈັດຂຶ້ນໃນວັນທີ 29 ເມສາ 2022 ໄດ້ຮັບຮອງເອົາບໍລິສັດ PwC ເປັນຜູ້ກວດສອບອິດສະຫຼະຂອງ ທຄຕລ ປະຈຳປີ 2022 ໂດຍມີມູນຄ່າກວດສອບເທົ່າກັບ 920 ລ້ານກີບ ເຊິ່ງການບໍລິການກວດສອບລວມມີການກວດສອບຕາມມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວ ແລະ ພາສາອັງກິດ, ທົບທວນຖານະການເງິນປະຈຳ 6 ເດືອນ ແລະ ກວດສອບຖານະການເງິນປະຈຳປີ.

2. ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ("ທະນາຄານ") ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນະຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989. ໃນວັນທີ 23 ທັນວາ 2010, ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມ ໃບທະບຽນວິສາຫະກິດ ເລກທີ 0061/ຫຈຫ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ. ໃນວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13.657.759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED ("COFIBRED"). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150.235.349.000 ກີບໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນ ໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ (ຄິດເປັນຈຳນວນຮຸ້ນ 68.047.300 ຮຸ້ນ) ແລະ ສາທາລະນະຊົນ(ຄິດເປັນຈຳນວນຮຸ້ນ 3.098.400 ຮຸ້ນ) ໃນຕະຫຼາດຫຼັກຊັບລາວເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບໃບທະບຽນວິສາຫະກິດທະນາຄານສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017, ຕະຫລາດຫລັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນ ຈຳນວນ 355.728.500.000 ກີບ (ເທົ່າກັບ 71.145.700 ຮຸ້ນ) ອີງຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 0429 /ຫຈຫ, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານປັບໂຄງສ້າງຜູ້ຖືຮຸ້ນ ໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜຸນ ສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ໃນວັນທີ 29 ພະຈິກ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

ໂຄງສ້າງການຖືຮຸ້ນຂອງທະນາຄານ ໃນວັນທີ 31 ທັນວາ 2022 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	ຈຳນວນຮຸ້ນ	%
ລັດຖະບານ	124.634.021	60%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	20.772.359	10%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດອື່ນໆ	62.316.920	30%
	207.723.300	100%

ກິດຈະກຳຫຼັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກບັນດາອົງກອນ ແລະ ບຸກຄົນ; ສະໜອງເງິນກູ້ໄລຍະສັ້ນ, ກາງ ແລະ ຍາວ ໃຫ້ແກ່ບັນດາອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການດ້ານການຄ້າລະຫວ່າງປະເທດ, ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນ ໃນວັນທີ 31 ທັນວາ 2022 ແມ່ນ 1.038.617 ລ້ານກີບ (ໃນວັນທີ 31 ທັນວາ 2021: 1.038.617 ລ້ານກີບ).

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ທັນວາ 2022, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ຫົກ (6) ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, ຊາວ (20) ສາຂາຫລັກ, ເກົ້າສິບເຈັດ (97) ໜ່ວຍບໍລິການ ແລະ ສິບເອັດ (11) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ບໍລິສັດຮ່ວມທຶນ

ໃນວັນທີ 31 ທັນວາ 2022, ທະນາຄານມີ ຫົກ (06) ວິສາຫະກິດຂະໜາດນ້ອຍ ແລະ ວິສາຫະກິດປະສົມຄື:

ຊື່	ສ້າງຕັ້ງຕາມໃບທະບຽນວິສາຫະກິດເລກທີ	ຂະແໜງການ	% ຖືຮຸ້ນຂອງທະນາຄານ
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ (BCEL-KT)	1079/ຫຈທ ລົງວັນທີ 10 ກໍລະກົດ 2019 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ຫຼັກຊັບ	70%
ທະນາຄານຮ່ວມທຸລະກິດ ລາວ - ຫວຽດ	732/ຫຈທ ລົງວັນທີ 29 ສິງຫາ 2016 ອອກໂດຍກະຊວງ ອຸດສາຫະກຳ ແລະ ການຄ້າ	ການທະນາຄານ & ການເງິນ	25%
ທະນາຄານລາວ - ຝຣັ່ງ	0495/ຫຈທ ລົງວັນທີ 7 ມິຖຸນາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການທະນາຄານ & ການເງິນ	30%
ບໍລິສັດປະກັນໄພ ລາວ -ຫວຽດ	0600 ລົງວັນທີ 16 ສິງຫາ 2013 ໂດຍ ກະຊວງ ອຸດສະຫະ ກຳ ແລະ ການຄ້າ	ປະກັນໄພ	35%
ທະນາຄານ ລາວຈີນ ຈຳກັດ	041/ຫຈທ ລົງວັນທີ 27 ມັງກອນ 2014 ໂດຍ ກົມ ທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ	ການທະນາຄານ & ການເງິນ	39,87%
ບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ	0349/ຫຈທ ໄດ້ຮັບອະນຸມັດໂດຍ ກົມຄຸ້ມຄອງທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ ລົງວັນທີ 12 ມິນາ 2019	ການຄຸ້ມຄອງ ການຊຳລະສະສາງ ທຸລະກຳ (ເອເລັກໂຕຣນິກ)	20%

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2021 ແລະ ໃນວັນທີ ທີ່ອອກບົດລາຍງານສະບັບນີ້ປະກອບມີ:

ຊື່	ຕຳແໜ່ງ	ວັນທີແຕ່ງຕັ້ງ
ທ່ານ ຄຳສຸກ ສຸນດາລາ	ຮອງປະທານ	ແຕ່ງຕັ້ງຄືນວັນທີ 14 ກໍລະກົດ 2022
ທ່ານ ປະສົມພັດ ຄຳຕັນ	ສະມາຊິກ	ແຕ່ງຕັ້ງວັນທີ 3 ສິງຫາ 2021
ທ່ານ ສະຕີເຟັນ ມັງເຈຍອາກາ	ສະມາຊິກ	ແຕ່ງຕັ້ງວັນທີ 29 ພຶດສະພາ 2020
ທ່ານ ສາຍສະໝອນ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງວັນທີ 22 ພະຈິກ 2022
ທ່ານ ຣສ. ທອງເພັດ ຈັນທະນິວົງ	ສະມາຊິກ	ແຕ່ງຕັ້ງວັນທີ 3 ສິງຫາ 2021
ທ່ານ ນ. ລັດດາວັນ ຊົງວິໄລ	ສະມາຊິກ	ແຕ່ງຕັ້ງວັນທີ 3 ສິງຫາ 2021
ທ່ານ ສອນໄຊ ສີລາເພັດ	ສະມາຊິກ	ແຕ່ງຕັ້ງວັນທີ 3 ສິງຫາ 2021
ທ່ານ ວຽງສຸກ ຈຸນທະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2022 ແລະ ໃນວັນທີ ທີ່ອອກບົດລາຍງານສະບັບນີ້ປະກອບມີ:

ຊື່	ຕຳແໜ່ງ	ວັນທີແຕ່ງຕັ້ງ
ທ່ານ ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 2 ສິງຫາ 2022
ທ່ານ ກົງສັກ ສຸພອນສີ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພຶດສະພາ 2021
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ວຽງສຸກ ຈຸນທະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 18 ກຸມພາ 2019
ທ່ານ ນ. ບົວໄພວັນ ນັນດາວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພຶດສະພາ 2021
ທ່ານ ສາຍຈິດ ສິມມະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພຶດສະພາ 2021

ຕົວແທນທາງດ້ານກົດໝາຍ

ຕົວແທນຂອງທະນາຄານຕາມກົດໝາຍ ໄລຍະປີທີ່ສິ້ນສຸດວັນທີ 31 ທັນວາ 2022 ແລະ ໃນມື້ອອກເອກະສານລາຍງານການເງິນສະບັບນີ້ ແມ່ນທ່ານ ສາຍສະໝອນ ຈັນທະຈັກ – ຜູ້ອຳນວຍການ, ສຳລັບວຽກງານບໍລິຫານ-ການເງິນ ແລະ ບັນຊີ ສັງລວມ ແມ່ນທ່ານ ສາຍຈິດ ສິມມະວົງ.

ນັກກວດສອບ

ຜູ້ກວດສອບບັນຊີຂອງທະນາຄານ ແມ່ນ ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ.

ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫຼະ
ເຖິງ: ຄະນະບໍລິຫານແລະຜູ້ຖືຮຸ້ນຂອງທະນາຄານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ) ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2022 ໄດ້ສະແດງສະຖານະທາງການເງິນຂອງທະນາຄານ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບ ນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 3 ຂອງເອກະສານລາຍງານສະບັບນີ້.

ເອກະສານລາຍງານການເງິນທີ່ກວດສອບ

ເອກະສານລາຍງານການເງິນຂອງທະນາຄານປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2022;
- ໃບລາຍງານຜົນໄດ້ຮັບ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານຜົນໄດ້ຮັບສັງລວມ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ; ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs) ຄວາມຮັບຜິດຊອບຂອງພວກເຮົາ ພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບການກວດສອບ ເອກະສານລາຍງານ ການເງິນ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກ ຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກ ທະນາຄານ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງ ມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 3 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງ ພື້ນຖານການກະກຽມເອກະສານລາຍງານການເງິນ. ເອກະສານລາຍງານການເງິນນີ້ໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງ ທະນາຄານ ເຊິ່ງພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບ ຈາກ ຫຼັກການບັນຊີ ມາດຕະຖານການລາຍງານການເງິນສາກົນ ("IFRS"). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານ ລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມ IFRS. ທັ້ງ ນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ແມ່ນ ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດ ຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີປັດຈຸບັນ. ພວກເຮົາເຫັນວ່າມີເລື່ອງສຳຄັນໃນການກວດ ສອບເລື່ອງໜຶ່ງ ເຊັ່ນ: ການສຳຮອງຄ່າເສື່ອມມູນຄ່າ. ເລື່ອງດັ່ງກ່າວໄດ້ລະບຸໄວ້ໃນເອກະສານລາຍງານການເງິນ ເພື່ອສະແດງຄວາມ ເຫັນຂອງພວກເຮົາ ແລະ ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບແກ້ໄຂບັນຫາການກວດສອບສຳຄັນ
ສຳຮອງຄ່າເສື່ອມມູນຄ່າຂອງເງິນໃຫ້ກູ້ຢືມແກ່ລູກຄ້າ ອີງຕາມມບົດອະທິບາຍຂໍ້ 15 - ການສຳຮອງຄ່າເສື່ອມມູນຄ່າ. ໃນວັນທີ 31 ທັນວາ 2022 ເງິນໃຫ້ກູ້ຢືມແກ່ລູກຄ້າ ຈຳ ນວນ 42.808.801 ລ້ານກີບ (45% ຂອງຊັບສິນທັງໝົດ), ແລະ ຍອດເຫຼືອຂອງການສຳຮອງສຳລັບຄ່າເສື່ອມມູນຄ່າແມ່ນ 1.809.562 ລ້ານກີບ. ການສຳຮອງຄ່າເສື່ອມມູນຄ່າ ເງິນກູ້ໃຫ້ກູ້ຢືມແກ່ລູກຄ້າຖືວ່າ ເປັນສິ່ງທີ່ສຳຄັນໃນການກວດສອບຂອງພວກເຮົາ ເນື່ອງຈາກ ການຄາດຄະເນຂອງການສຳຮອງຄ່າເສື່ອມມູນຄ່າ ແມ່ນ ກ່ຽວຂ້ອງກັບການນຳໃຊ້ໃນການພິຈາລະນາ ແລະ ສົມມຸດຕິ ຖານ ຂອງຜູ້ບໍລິຫານໃນການລະບຸຫຼັກຖານຄ່າດ້ອຍຄ່າ ສຳລັບ ລູກຄ້າລາຍບຸກຄົນ ແລະ ລູກຄ້ານອມ ແລະ ການຄິດໄລ່ຄ່າ ເສື່ອມມູນຄ່າ ລວມເຖິງໄລຍະທີ່ບໍ່ແນ່ນອນໃນການຮັບຮູ້.	ພວກເຮົາໄດ້ດຳເນີນການຕາມຂັ້ນຕອນດັ່ງຕໍ່ໄປນີ້: • ທຳການປະເມີນຄວາມສ່ຽງທັງ ປັດໃຈພາຍໃນ ແລະ ພາຍນອກ ເຊິ່ງອາດສົ່ງຜົນກະທົບການດຳເນີນງານຂອງບຸກຄົນ ແລະ ກຸ່ມ ອຸດສາຫະກຳ ແລະ ກຸ່ມລູກຄ້າ ເຊິ່ງອາດສົ່ງຜົນກະທົບຕໍ່ການ ຕັດສິນໃຈ ແລະ ການປະເມີນຂອງຜູ້ບໍລິຫານ • ປະເມີນ ແລະ ທົດສອບເຕັກໂນໂລຍີ ຂໍ້ມູນທົ່ວໄປກ່ຽວກັບການ ຄວບຄຸມ ການເຂົ້າເຖິງໂປແກຼມ ແລະ ຂໍ້ມູນ, ການຄວບຄຸມ ຄວາມຄົບຖ້ວນຂອງຂໍ້ມູນຂອງລູກຄ້າທີ່ໃຊ້ໃນການຄິດໄລ່ ສຳຮອງຄ່າເສື່ອມມູນຄ່າ. • ປະເມີນ ແລະ ທົດສອບຄູ່ມືການຄວບຄຸມເງິນໃຫ້ກູ້ຢືມແກ່ລູກຄ້າ ແລະ ຂັ້ນຕອນການສຳຮອງສຳລັບຄ່າເສື່ອມມູນຄ່າດັ່ງຕໍ່ໄປນີ້; - ການເກີດຂຶ້ນຂອງເງິນໃຫ້ກູ້ຢືມ ແລະ ການອະນຸມັດເງິນໃຫ້ກູ້ ຢືມ - ການປະເມີນມູນຄ່າຫຼັກຊັບຄ้ຳປະກັນ - ຂໍ້ມູນທີ່ປ້ອນເຂົ້າໃນລະບົບ

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບແກ້ໄຂບັນຫາການກວດສອບສຳຄັນ
ຜູ້ບໍລິຫານໄດ້ຕັ້ງສຳຮອງຄ່າເສື່ອມມູນຄ່າເງິນໃຫ້ກູ້ຢືມແກ່ລູກຄ້າ ໂດຍຈັດປະເພດອອກເປັນ 2 ປະເພດ ຄື ຄ່າເສື່ອມມູນຄ່າ ລາຍບຸກຄົນ ແລະ ໂດຍລວມ. ສຳລັບຄ່າເສື່ອມມູນຄ່າລາຍບຸກຄົນແມ່ນຄິດໄລ່ໂດຍມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດວ່າຈະໄດ້ຮັບຈາກລູກຄ້າ. ສຳລັບຄ່າເສື່ອມມູນຄ່າໂດຍລວມ, ເງິນໃຫ້ກູ້ຢືມແກ່ລູກຄ້າໄດ້ຖືກຈັດເປັນກຸ່ມໂດຍອີງໃສ່ຄຸນລັກສະນະຄວາມສ່ຽງຂອງສິນເຊື່ອທີ່ຄ້າຍຄືກັນ. ເງິນສົດໃນອະນາຄົດຂອງກຸ່່ມເງິນໃຫ້ກູ້ຢືມແກ່ລູກຄ້າໄດ້ຖືກປະເມີນໂດຍລວມສຳລັບຄ່າເສື່ອມມູນຄ່າ ແລະ ຄາດຄະເນໂດຍອີງໃສ່ປະສົບການການສູນເສຍທີ່ຜ່ານມາ. ອີງຕາມຄວາມສຳຄັນ, ລະດັບຂອງຫົວຂໍ້ ແລະການຄາດຄະເນຢ່າງບໍ່ແນ່ນອນ, ບັນຊີສຳຮອງຄ່າເສື່ອມມູນຄ່າ ຂອງເງິນໃຫ້ກູ້ຢືມແກ່ລູກຄ້າແມ່ນບັນຫາສຳຄັນໃນການກວດສອບ.	• ການທົດລອງຕົວຢ່າງເງິນໃຫ້ກູ້ຢືມ ເຊິ່ງໄດ້ມີການຈັດປະເພດສຳຮອງຄ່າເສື່ອມມູນຄ່າເປັນລາຍບຸກຄົນ, ພວກເຮົາໄດ້ດຳເນີນການດັ່ງຕໍ່ໄປນີ້; - ສອບຖາມກັບຜູ້ບໍລິຫານກ່ຽວກັບຂັ້ນຕອນທີ່ກຳນົດ ແລະ ຈັດປະເພດເງິນໃຫ້ກູ້ຢືມ ເປັນ ຄ່າເສື່ອມລາຍບຸກຄົນ ຫຼື ໂດຍລວມ - ພິຈາລະນາສົມມຸດຕິຖານທີ່ນຳໃຊ້ເຂົ້າໃນການຄິດໄລ່ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດໄວ້ຈາກລູກຄ້າດ້ວຍເອກະສານສະໜັບສະໜູນເຊັ່ນ: ເງິນສົດໃນອະນາຄົດທີ່ຄາດໄວ້ຈາກລູກຄ້າ, ການປະເມີນມູນຄ່າຊັບສິນ. - ຄິດໄລ່ອັດຕາສ່ວນຫຼຸດ ແລະປະເມີນຄວາມເໝາະສົມຂອງອັດຕາສ່ວນຫຼຸດ ທີ່ໃຊ້ໃນການຄິດໄລ່ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດ - ປະເມີນຄວາມເໝາະສົມຂອງການສົມມຸດຕິຖານທີ່ໃຊ້ໃນການຄິດໄລ່ຄວາມເປັນໄປໄດ້ຂອງການຜິດນັດຊຳລະໜີ້ ອັດຕາການສູນເສຍ ສຳ ລັບການຄິດໄລ່ຂອງຄ່າເສື່ອມມູນຄ່າຂອງກຸ່່ມ ໂດຍການກວດກາໂດຍມີຫຼັກຖານປະກອບທີ່ກ່ຽວຂ້ອງ ແລະ ມີການປຶກສາຫາລືໂດຍລະອຽດກັບຜູ້ບໍລິຫານກ່ຽວກັບການສົມມຸດຕິຖານ - ຄິດໄລ່ຍອດເຫຼືອສຳຮອງສຳລັບຄ່າເສື່ອມມູນຄ່າຄົນໃໝ່ໃນມື້ສິ້ນສຸດຂອງບົດລາຍງານ • ນອກຈາກນີ້, ສຳລັບການປະເມີນຫຼັກຊັບຄ້ຳປະກັນທີ່ດຳເນີນການໂດຍຜູ້ປະເມີນລາຄາມືອາຊີບ ພວກເຮົາໄດ້ ກວດສອບຄຸນນະສົມບັດຂອງພວກເຂົາ ຈາກນັ້ນ ພວກເຮົາຈຶ່ງສຸ່ມຕົວຢ່າງການປະເມີນເຫຼົ່ານັ້ນ ເພື່ອກວດສອບວ່າຜູ້ບໍລິຫານໃຊ້ການປະເມີນຫລ້າສຸດໃນການຄິດໄລ່ສຳຮອງຄ່າເສື່ອມມູນຄ່າສຳລັບລູກຄ້າແຕ່ລະລາຍ. ຈາກຂັ້ນຕອນເຫຼົ່ານັ້ນ ພວກເຮົາພົບວ່າການພິຈາລະນາ ແລະ ສົມມຸດຕິຖານຂອງຜູ້ບໍລິຫານກ່ຽວກັບການຕັ້ງສຳຮອງຄ່າເສື່ອມມູນຄ່າມີຄວາມເໝາະສົມ.

ຂໍ້ມູນອື່ນ

ຜູ້ອຳນວຍການແມ່ນຮັບຜິດຊອບຕໍ່ກັບຂໍ້ມູນອື່ນໆເຊິ່ງປະກອບມີຂໍ້ມູນທີ່ຢູ່ໃນບົດລາຍງານປະຈຳປີ, ແຕ່ບໍ່ລວມຢູ່ໃນເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບ. ໃນບົດລາຍງານປະຈຳປີແມ່ນຄາດວ່າຈະສາມາດກະກຽມໃຫ້ພວກເຮົາພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບນີ້.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ເພື່ອໃຫ້ສອດຄ່ອງກັບການກວດສອບເອກະສານລາຍງານການເງິນ, ຄວາມຮັບຜິດຊອບຂອງພວກເຮົາຄືອ່ານ ແລະ ພິຈາລະນາຂໍ້ມູນອື່ນໆທີ່ມີຄວາມຂັດແຍ່ງຢ່າງເປັນສາລະສຳຄັນຕໍ່ກັບເອກະສານລາຍງານການເງິນ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ເມື່ອພວກເຮົາອ່ານບົດລາຍງານປະຈຳປີ, ຖ້າຫາກພວກເຮົາສະຫຼຸບໄດ້ວ່າມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນ, ພວກເຮົາຈະຕ້ອງແຈ້ງເລື່ອງດັ່ງກ່າວໃຫ້ຄະນະກຳມະການກວດສອບຮັບຮູ້.

ຄວາມຮັບຜິດຊອບຂອງຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ລະບຽບການການບັນຊີທີ່ກ່ຽວຂ້ອງ ແລະ ແຈ້ງການ ຂອງ ທະນາຄານແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 3 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງທະນາຄານ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບໄດ້ຊ່ວຍຜູ້ອຳນວຍການ ໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກຽມບົດລາຍງານການເງິນ.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດ

ຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.


ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ບໍລິຫານ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງທະນາຄານ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ ເຫດການ ຫຼື ສະພາບຕົວຈິງໃນອານາຄົດອາດເປັນສາເຫດໃຫ້ທະນາຄານບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບບັນຫາອື່ນໆ ຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກຜ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

ຈາກບັນຫາທີ່ປຶກສາກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາບັນຫາເຫຼົ່ານັ້ນແມ່ນບັນຫາທີ່ມີສາລະສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ, ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.



ໂດຍ: ອະພິສິດ ທ່ຽງຕົ້ງພິນໄຍ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 11 ເມສາ 2023

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ໃບລາຍງານຜົນໄດ້ຮັບ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022

	ບິດ ອະທິບາຍ	2022 ລ້ານກີບ	2021 ລ້ານກີບ
ລາຍຮັບດອກເບ້ຍ	5	3.116.126	2.244.913
ລາຍຈ່າຍດອກເບ້ຍ	5	(1.845.243)	(1.492.316)
ລາຍຮັບສຸດທິຈາກດອກເບ້ຍ	**5**	**1.270.883**	**752.597**
ລາຍຮັບຈາກຄ່າທຳນຽມ ແລະ ບໍລິການ	6	513.818	317.892
ລາຍຈ່າຍຈາກຄ່າທຳນຽມ ແລະ ບໍລິການ	6	(149.673)	(39.694)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ບໍລິການ	**6**	**364.145**	**278.198**
ກຳໄລສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ	7	(38.154)	3.913
ຂາດທຶນສຸດທິ ຈາກການຊື້-ຂາຍຫຼັກຊັບອະນຸພັນ	8	-	171
ລາຍຮັບອື່ນໆຈາກການດຳເນີນງານ	9	121.260	180.385
ລາຍຮັບຈາກການດຳເນີນງານ		**1.718.134**	**1.215.264**
ລາຍຈ່າຍໃນການສູນເສຍຂອງເງິນໃຫ້ກູ້ຢືມແກ່ລູກຄ້າ	15	(912.720)	(649.075)
ລາຍຮັບສຸດທິຈາກການດຳເນີນງານ		**805.414**	**566.189**
ລາຍຈ່າຍບຸກຄະລາກອນ	10	(329.249)	(305.806)
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	19, 20	(112.823)	(81.350)
ຄ່າຫຼ້ຍຫ້ຽນຂອງສິດນຳໃຊ້ຊັບສິນ	21	(7.898)	(8.040)
ລາຍຈ່າຍອື່ນໆໃນການດຳເນີນງານ	11	(195.263)	(175.296)
ລວມລາຍຈ່າຍໃນການດຳເນີນງານ		**(645.233)**	**(570.492)**
ສ່ວນແບ່ງກຳໄລໃນວິສາຫະກິດຂາອຸ້ນ ແລະ ວິສາຫະກິດປະສົມ	18	36.898	16.888
ກຳໄລກ່ອນອາກອນ		**197.079**	**12.585**
ລາຍຈ່າຍອາກອນກຳໄລ	26.1	31.111	(1.175)
ກຳໄລສຸດທິ ໃນປີ		**228.190**	**11.410**
ກຳໄລຕໍ່ຮຸ້ນ (ກີບ)	33	**1.099**	**55**

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ
ວັນທີ: 11 ເມສາ 2023

ອະນຸມັດໂດຍ:

ທ່ານ ສົມປະສົງ ໂພທິສານ
ຫົວໜ້າພະແນກກວດກາພາຍໃນ
ວັນທີ: 11 ເມສາ 2023

ອະນຸມັດໂດຍ:

ທ່ານ ສາຍຈິດ ສົມມະວົງ
ຮອງຜູ້ອຳນວຍການ
ວັນທີ: 11 ເມສາ 2023

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ໃບລາຍງານຜົນໄດ້ຮັບສັງລວມ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022

	ບິດ ອະທິບາຍ	2022 ລ້ານກີບ	2021 ລ້ານກີບ
ກຳໄລສຸດທິ ໃນປີ		**228.190**	**11.410**
ລາຍຮັບ(ລາຍຈ່າຍ)ສັງລວມອື່ນໆ			
ການປ່ຽນແປງໃນມູນຄ່າຍຸຕິທຳຂອງການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	16	-	1.534
ການສູນເສຍການປະເມີນຄືນຜົນປະໂຫຍດພະນັກງານ	27	(1.053)	22.498
ອາກອນກຳໄລທີ່ກ່ຽວຂ້ອງກັບອົງປະກອບຂອງລາຍຮັບສັງລວມອື່ນໆ	26.3	211	-
ລາຍຮັບ(ລາຍຈ່າຍ)ສັງລວມອື່ນໆສຳລັບປີ ຫັກອາກອນ		**(842)**	**24.032**
ລວມລາຍຮັບ(ລາຍຈ່າຍ)ສັງລວມອື່ນໆສຳລັບປີ ຫັກອາກອນ		**227.348**	**35.442**

ກະກຽມໂດຍ:

ທ່ານ ນ. ພູເສງທອງ ອານຸລັກຄຳ

ຫົວໜ້າພະແນກບັນຊີສັງລວມ
ວັນທີ: 11 ເມສາ 2023

ອະນຸມັດໂດຍ:

ທ່ານ ສົມປະສົງ ໂພທິສານ

ຫົວໜ້າພະແນກກວດກາພາຍໃນ
ວັນທີ: 11 ເມສາ 2023

ອະນຸມັດໂດຍ:

ທ່ານ ສາຍຈິດ ສົມມະວົງ

ຮອງຜູ້ອຳນວຍການ
ວັນທີ: 11 ເມສາ 2023

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ໃບລາຍງານຖານະການເງິນ
ໃນວັນທີ 31 ທັນວາ 2022

	ບິດ ອະທິບາຍ	2022 ລ້ານກີບ	2021 ລ້ານກີບ
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	12	27.786.294	19.022.276
ເງິນຝາກຢູ່ທະນາຄານອື່ນ	13	11.855.719	9.114.970
ເງິນໃຫ້ກູ້ຢືມແກ່ລູກຄ້າ	14	47.235.372	32.372.070
ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	16	90.123	91.657
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	17	4.967.151	5.273.352
ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ໂດຍການນຳໃຊ້ວິທີທຶນສ່ວນໄດ້ເສຍ -ສຸດທິ	18	691.081	643.318
ຊັບສິນບັດຄົງທີ່ ແລະ ອຸປະກອນ	19	540.325	563.503
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	20	283.285	293.321
ສິດໃນການນຳໃຊ້ຊັບສິນ	21	52.028	55.713
ອາກອນຊັບສິນເຍື່ອນຊຳລະ	26.3	116.520	37.015
ເງິນຈ່າຍລ່ວງໜ້າສຳລັບອາກອນກຳໄລ	26.2	-	24.015
ຊັບສິນອື່ນໆ	22	875.117	745.782
ລວມຊັບສິນ		**94.493.015**	**68.236.991**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນໆ	23	6.639.183	5.269.436
ເງິນຝາກຈາກລູກຄ້າ	24	80.994.071	57.169.169
ເງິນກູ້ຢືມຈາກທະນາຄານອື່ນ	25	4.105.783	3.354.623
ໜີ້ຕ້ອງສົ່ງອາກອນໃນປີ	26.2	21.907	-
ໜີ້ຕ້ອງສົ່ງສັນຍາເຊົ່າ		26.553	29.595
ໜີ້ສິນອື່ນໆ	27	347.558	282.022
ລວມໜີ້ສິນ		**92.135.055**	**66.104.845**
ທຶນ			
ທຶນຈົດທະບຽນ	28	1.038.617	1.038.617
ຄັງສະສົມຕາມລະບຽບການ	29	836.635	831.667
ລາຍການສັງລວມອື່ນ		9.040	11.416
ກຳໄລສະສົມ		473.668	250.446
ລວມທຶນ		**2.357.960**	**2.132.146**
ລວມໜີ້ສິນ ແລະ ທຶນ		**94.493.015**	**68.236.991**

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ພູແສງທອງ ອານຸລັກຄຳ	ທ່ານ ສົມປະສົງ ໂພທິສານ	ທ່ານ ສາຍຈິດ ສົມມະວົງ
ຫົວໜ້າພະແນກບັນຊີສັງລວມ	ຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການ
ວັນທີ: 11 ເມສາ 2023	ວັນທີ: 11 ເມສາ 2023	ວັນທີ: 11 ເມສາ 2023

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022

	ຫຸ້ນ ອະທິບາຍ	ທຶນຈົດ ທະບຽນ ລ້ານກີບ	ຄັງສະສົມຕາມ ລະບຽບການ ລ້ານກີບ	ລາຍການສັງລວມອື່ນ: ການປະເມີນຄືນຜົນ ປະໂຫຍດພະນັກງານ ຫຼັງອອກການທີ່ ກຳນົດໄວ້ ລ້ານກີບ	ລາຍການສັງລວມອື່ນ: ຄັງສຳຮອງສຳລັບ ຫຼັກຊັບມີໄວ້ ເພື່ອຂາຍ ລ້ານກີບ	ກຳໄລສະສົມ ລ້ານກີບ	ລວມ ລ້ານກີບ
ຍອດເຫລືອໃນວັນທີ 31 ທັນວາ 2020		**1.038.617**	**753.399**	**(12.616)**	**-**	**433.629**	**2.213.029**
ແບ່ງສ່ວນສຳລັບເງິນປັນຜົນທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ	34	-	-	-	-	(116.325)	(116.325)
ແບ່ງເຂົ້າຄັງສະສົມຕາມລະບຽບການພາຍໃນປີ 2020	29	-	78.268	-	-	(78.268)	-
ກຳໄລສຸດທິໃນປີ 2021		-	-	-	-	11.410	11.410
ການປະເມີນມູນຄ່າຄືນຂອງການລົງທຶນທາງການເງິນ - ປະເພດມີໄວ້ ເພື່ອຂາຍ		-	-	-	1.534		1.534
ການປະເມີນຄືນຜົນປະໂຫຍດພະນັກງານ	27	-	-	22.498	-	-	22.498
ອາກອນກຳໄລທີ່ກ່ຽວຂ້ອງກັບອົງປະກອບຂອງລາຍຮັບສັງລວມອື່ນໆ		-	-	-	-	-	-
ຍອດເຫລືອໃນວັນທີ 31 ທັນວາ 2021		**1.038.617**	**831.667**	**9.882**	**1.534**	**250.446**	**2.132.146**

ໃບລາຍງານຜົນປ່ຽນແປງໃນທຶນ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022

	ໝາຍ ອະທິບາຍ	ທຶນຈົດທະບຽນ ລ້ານກີບ	ຖັງສະສົມຕາມ ລະບຽບການ ລ້ານກີບ	ລາຍການສັງລວມອື່ນ: ການປະເມີນຄືນຜົນ ປະໂຫຍດ ພະນັກງານຫຼັງ ອອກການທີ່ກຳນົດ ໄວ້ ລ້ານກີບ	ລາຍການສັງລວມອື່ນ: ຖັງສຳຮອງ ສຳລັບຫຼັກ ຊັບມີໄວ້ ເພື່ອຂາຍ ລ້ານກີບ	ກຳໄລສະສົມ ລ້ານກີບ	ລວມ ລ້ານກີບ
ຍອດເຫລືອໃນວັນທີ 31 ທັນວາ 2021		**1.038.617**	**831.667**	**9.882**	**1.534**	**250.446**	**2.132.146**
ແບ່ງເຂົ້າຖັງສະສົມຕາມລະບຽບການພາຍໃນປີ 2021	29	-	4.968	-	-	(4.968)	-
ກຳໄລສຸດທິໃນປີ 2022		-	-	-	-	228.190	228.190
ການປະເມີນມູນຄ່າຄືນຂອງການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ		-	-	-	(1.534)	-	(1.534)
ການປະເມີນຄືນຜົນປະໂຫຍດພະນັກງານ	27	-	-	(1.053)	-	-	(1.053)
ອາກອນກຳໄລທີ່ກ່ຽວຂ້ອງກັບອົງປະກອບຂອງລາຍຮັບສັງລວມອື່ນໆ	26.3	-	-	211	-	-	211
ຍອດເຫລືອໃນວັນທີ 31 ທັນວາ 2022		**1.038.617**	**836.635**	**9.040**	**-**	**473.668**	**2.357.960**

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ

ຫົວໜ້າພະແນກບັນຊີສັງລວມ
ວັນທີ: 11 ເມສາ 2023

ອະນຸມັດໂດຍ:

ທ່ານ ສົມປະສົງ ໂພທິສານ

ຫົວໜ້າພະແນກກວດກາພາຍໃນ
ວັນທີ: 11 ເມສາ 2023

ອະນຸມັດໂດຍ:

ທ່ານ ສາຍຈິດ ສົມມະວົງ

ຮອງຜູ້ອຳນວຍການ
ວັນທີ: 11 ເມສາ 2023

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022

	ບິດ ອະທິບາຍ	2022 ລ້ານກີບ	2021 ລ້ານກີບ
ກິດຈະກຳການດຳເນີນງານ			
ກຳໄລກ່ອນຫັກອາກອນ		**197.079**	**12.584**
ດັດແກ້ສຳລັບ:			
ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	19, 20, 21	120.720	89.390
ລາຍຈ່າຍຄ່າເສື່ອມມູນຄ່າ	15	912.720	649.075
ລາຍຈ່າຍຜົນປະໂຫຍດພະນັກງານ	10	9.288	8.784
ສ່ວນແບ່ງກຳໄລໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	18	(36.898)	(16.888)
ຂາດທຶນຈາກເງິນຕາຕ່າງປະເທດ		1.532.273	(113.343)
ຂາດທຶນ/(ກຳໄລ)ຈາກການຂາຍແລະຊຳລະສະສາງ		6.359	12.340
ລາຍຮັບດອກເບ້ຍ	5	(3.116.126)	(2.244.913)
ລາຍຈ່າຍດອກເບ້ຍ	5	1.845.243	1.492.316
ລາຍຮັບເງິນປັນຜົນ	9	(1.918)	(3.835)
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການ ປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ		**1.468.742**	**(114.490)**
ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ			
ສ່ວນປ່ຽນແປງເງິນຝາກຢູ່ທະນາຄານອື່ນສຸດທິ		(1.486.073)	466.148
ສ່ວນປ່ຽນແປງເງິນໃຫ້ກູ້ຢືມແກ່ລູກຄ້າສຸດທິ		(13.983.518)	(4.276.295)
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		-	83.857
ສ່ວນປ່ຽນແປງໃນຊັບສິນອື່ນໆ		(192.252)	(197.048)
ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ			
ສ່ວນປ່ຽນແປງໃນເງິນຝາກກັບທະນາຄານອື່ນສຸດທິ		1.361.992	1.790.480
ສ່ວນປ່ຽນແປງໃນເງິນຝາກຈາກລູກຄ້າສຸດທິ		23.658.446	12.020.658
ສ່ວນປ່ຽນແປງໃນໜີ້ສິນອື່ນໆສຸດທິ		55.838	65.350
ສ່ວນປ່ຽນແປງໃນເງິນກູ້ຢືມຈາກທະນາຄານອື່ນສຸດທິ		(711.662)	311.146
ສ່ວນປ່ຽນແປງໃນໜີ້ສິນສັນຍາເຊົ່າສຸດທິ		-	2.218
ດອກເບ້ຍທີ່ໄດ້ຮັບ		694.112	1.093.618
ດອກເບ້ຍທີ່ໄດ້ຊຳລະ		(1.380.334)	(1.309.769)
ອາກອນທີ່ໄດ້ຊຳລະພາຍໃນປີ	26.2	(2.261)	(48.916)
ກະແສເງິນສົດສຸດທິຈາກການດຳເນີນງານ		**9.483.029**	**9.886.954**
ກິດຈະກຳການລົງທຶນ			
ການຊື້ ແລະ ປຸກສ້າງຊັບສົມບັດຖາວອນ ແລະ ສິ່ງກໍ່ສ້າງກຳລັງດຳເນີນ ແລະ ຊັບສົມບັດ ຖາວອນພວມເຄື່ອນຍ້າຍ		(80.409)	(40.928)
ການຊື້ສິດການນຳໃຊ້ຊັບສິນ	21	(5.364)	(2.431)
ການຊື້ຊັບສົມບັດຖາວອນທີ່ບໍ່ມີຕົວຕົນ	20	(1.784)	(53.953)
ຮັບເງິນຈາກການສະສາງ/ຂາຍຊັບສົມບັດຖາວອນ		7.468	-
ຈ່າຍເງິນໃຫ້ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	18	(18.498)	(13.360)
ເງິນປັນຜົນຮັບຈາກວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	18	7.633	1.364
ເງິນປັນຜົນຮັບຈາກການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	9	1.918	3.835
ຈ່າຍເງິນສຳລັບການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		(931.000)	-
ຮັບເງິນສຳລັບການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		1.465.537	1.738.371
ກະແສເງິນສົດສຸດທິທີ່ໄດ້ນຳໃຊ້ໃນກິດຈະກຳການລົງທຶນ		**445.501**	**1.632.898**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022

	ບິດ ອະທິບາຍ	2022 ລ້ານກີບ	2021 ລ້ານກີບ
ກິດຈະກຳທາງການເງິນ			
ຈ່າຍເງິນສຳລັບເງິນປັນຜົນ	34	-	(116.325)
ຈ່າຍເງິນສຳລັບການຊຳລະສັນຍາເຊົ່າ		(13.345)	(474)
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳທາງການເງິນ		**(13.345)**	**(116.799)**
ປ່ຽນແປງສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ		**9.915.185**	**11.403.055**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ	**30**	**25.799.885**	**14.396.829**
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	**30**	**35.715.070**	**25.799.885**
ລາຍການທີ່ບໍ່ແມ່ນເງິນສົດຈາກກິດຈະກຳການທາງດ້ານການເງິນ ແລະ ການລົງທຶນ;			
ການໄດ້ມາຂອງລາຍການການການຊື້ ແລະ ປຸກສ້າງຊັບສິນບັດຄົງທີ່ ແລະ ສິ່ງກໍ່ສ້າງກຳລັງດຳເນີນ ແລະ ຊັບສິນບັດຄົງທີ່ພວມເຄື່ອນຍ້າຍ		2.033	8.188
ການຊຳລະສະສາງກູ້ຢືມເງິນໃຫ້ລູກຄ້າ ແລະ ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		229.358	3.196.569
ການຊື້ສິດການນຳໃຊ້ຊັບສິນ		-	4.318

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ

ຫົວໜ້າພະແນກບັນຊີສັງລວມ
ວັນທີ: 11 ເມສາ 2023

ອະນຸມັດໂດຍ:

ທ່ານ ສົມປະສົງ ໂພທິສານ

ຫົວໜ້າພະແນກກວດກາພາຍໃນ
ວັນທີ: 11 ເມສາ 2023

ອະນຸມັດໂດຍ:

ທ່ານ ສາຍຈິດ ສົມມະວົງ

ຮອງຜູ້ອຳນວຍການ
ວັນທີ: 11 ເມສາ 2023

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ) ແມ່ນ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຢູ່ພາຍໃຕ້ ທະນາຄານແຫ່ງ
ສປປ ລາວ (BoL) ແລະ ຕະຫຼາດຫຼັກຊັບໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (LSX).

ທະນາຄານ ໄດ້ສ້າງຕັ້ງ ແລະ ມີພູມລຳເນົາຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ສຳນັກງານໃຫຍ່ຂອງ ທະນາຄານ ຕັ້ງຢູ່ ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ທັນວາ 2022, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ຫົກ (6) ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, ຊາວ (20) ສາຂາ ຫລັກ, ເກົ້າສິບເຈັດ (97) ໃໝ່ຍບໍລິການ ແລະ ສິບເອັດ (11) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ກິດຈະກຳຫລັກຂອງທະນາຄານ, ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ແມ່ນສະໜອງການບໍລິການດ້ານ ທະນາຄານ ແລະ ການບໍລິການດ້ານອື່ນໆ ປະກອບມີ:

- ການລະດົມທຶນ ແລະ ຮັບເງິນຝາກຈາກ ອົງກອນ ແລະ ບຸກຄົນ
- ປ່ອຍເງິນໃຫ້ກູ້ຢືມແກ່ ອົງກອນ ແລະ ບຸກຄົນ
- ບໍລິການແລກປ່ຽນເງິນຕາຕ່າງປະເທດ
- ການບໍລິການການຄ້າລະຫວ່າງປະເທດ
- ຂາຍຫຼຸດລາຄາຂອງຕາສານໜີ້
- ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ
- ປະກັນໄພ
- ຫຼັກຊັບ

ເອກະສານລາຍງານການເງິນ ແມ່ນຖືກນຳສະເໜີ ເປັນສະກຸນເງິນກີບ ແລະ ປັດໃຫ້ເປັນຫົວໜ່ວຍລ້ານເລກຖ້ວນ, ເວັ້ນ ເສຍແຕ່ໄດ້ລະບຸໄວ້ເປັນຢ່າງອື່ນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຮັບການຮັບຮອງຈາກສະພາຜູ້ອຳນວຍການ ໃນວັນທີ 11 ເມສາ 2023.

2. ເຫດການສຳຄັນຕ່າງໆ ໃນໄລຍະປີປັດຈຸບັນ

ທະນາຄານແຫ່ງ ສປປ ລາວ ໄດ້ແຈ້ງການເຖິງມາດຕະການແກ້ໄຂຊື່ອຄາວຂອງພະຍາດໂຄວິດ-19 ເຊັ່ນວ່າໄດ້ຍົກເວັ້ນການ ປະຕິບັດຕາມກົດລະບຽບຕາມສະບັບເລກທີ: 512/ທຫລ ສຳລັບທະນາຄານທຸລະກິດແລະ ສະຖາບັນການເງິນ, ລົງວັນທີ 29 ມິຖຸນາ 2018. ນີ້ໝາຍຄວາມວ່າຫຼັງຈາກປັບປຸງໂຄງສ້າງຂອງໃຫ້ກູ້ແລ້ວ, ທາງທະນະຄານສາມາດຈັດປະເພດລູກຄ້າເຫຼົ່ານີ້ເປັນກຸ່ມ

ຕາມແບບເດີມກ່ອນປັບປຸງໂຄງສ້າງໃໝ່. ການຍົກເວັ້ນດັ່ງກ່າວຍັງອະນຸຍາດໃຫ້ທະນາຄານທຸລະກິດປັບໂຄງສ້າງເງິນກູ້ທີ່ຖືກຈັດປະເພດ 'ເປັນເງິນກູ້ທີ່ບໍ່ເກີດເປັນລາຍໄດ້' ຫຼາຍກວ່າສອງຄັ້ງ ແລະ ປ່ອຍເງິນກູ້ໃຫ້ແກ່ລູກຄ້າທີ່ໄດ້ຮັບຜົນກະທົບຈາກພະຍາດ COVID-19.

ເພື່ອເປັນການຕອບສະໜອງ, ທະນາຄານໄດ້ນຳເອົາແຈ້ງການຂອງທະນາຄານແຫ່ງ ສປປ ລາວ ມາປັບໃຊ້ຢ່າງຕໍ່ເນື່ອງເຊັ່ນ: ການປັບໂຄງສ້າງເງິນກູ້ ແລະ ຕິດຕາມຜົນກະທົບຂອງພະຍາດໂຄວິດ-19 ຕໍ່ກັບລູກຄ້າຢ່າງໃກ້ຊິດທີ່ອາດຈະສົ່ງຜົນກະທົບເຖິງວົງເງິນກູ້ຂອງຕົນ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍການບັນຊີທີ່ໄດ້ນຳໃຊ້ໃນການກະກຽມເຂົ້າໃນເອກະສານລາຍງານການເງິນແມ່ນໄດ້ລະບຸໄວ້ດັ່ງລຸ່ມນີ້:

3.1 ພື້ນຖານໃນການກະກຽມ

ອີງຕາມກົດໝາຍ ແລະ ລະບຽບການກ່ຽວກັບການບັນຊີ ແລະ ການກວດສອບ ສຳລັບຂະແໜງການຫຼັກຊັບ, ທີ່ອອກໂດຍ ກະຊວງການເງິນ (MoF) ແລະ ຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ), ບັນດາບໍລິສັດທີ່ຈົດທະບຽນທີ່ຖືກລະບຸວ່າເປັນວິສາຫະກິດຮັບໃຊ້ຜົນປະໂຫຍດສາທາລະນະ (PIE) ແມ່ນຕ້ອງໄດ້ກະກຽມເອກະສານລາຍງານການເງິນຂອງຕົນຕາມມາດຕະຖານການລາຍງານການເງິນສາກົນ (IFRS).

ແຈ້ງການສະບັບເລກທີ 1137 /ກຊ ລົງວັນທີ 27 ເມສາ 2020 ອອກໂດຍກະຊວງການເງິນ, ແລະແຈ້ງການສະບັບເລກທີ 0009/ສຄຄຊ, ລົງວັນທີ 25 ພຶດສະພາ 2020, ອອກໂດຍ ສຄຄຊ, ເຊິ່ງໄດ້ຂະຫຍາຍເວລາສຳລັບບໍລິສັດຈົດທະບຽນ ເພື່ອກະກຽມແຜນປະຕິບັດງານການປະຕິບັດນຳໃຊ້ IFRS ໄປເປັນຈົນເຖິງວັນທີ 31 ທັນວາ 2025. ບໍລິສັດຈົດທະບຽນຕ້ອງໄດ້ປະຕິບັດຕາມມາດຕະຖານຂອງ IFRS ຢ່າງເຕັມຮູບແບບ ນັບແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ໃນຊ່ວງໄລຍະຂ້າມຜ່ານ, ວິສາຫະກິດຮັບໃຊ້ຜົນປະໂຫຍດສາທາລະນະ (PIE) ຕ້ອງສ້າງແຜນພັດທະນາເພື່ອຮັບຮອງເອົາ IFRS ແລະ ສົ່ງໃຫ້ກະຊວງການເງິນ ແລະ ສຄຄຊ ເພື່ອການຕິດຕາມກວດກາໃນທາງປະຕິບັດຕົວຈິງໃຫ້ບັນລຸ ຕາມແຜນຂອງວິສາຫະກິດໄດ້ວາງໄວ້.

ຕາມການປະກາດແຈ້ງການຂອງ MoF ແລະ ສຄຄຊ ທີ່ກ່າວມາຂ້າງເທິງ, ທະນາຄານ ກຳລັງສ້າງແຜນການທີ່ຈະຮັບຮອງເອົາ IFRS ຢ່າງເຕັມຮູບແບບໃນອີກສອງສາມປີຂ້າງໜ້າເປັນນະໂຍບາຍການບັນຊີຂອງທະນະຄານ.

ເອກະສານລາຍງານການເງິນແມ່ນຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ 3, ການນຳໃຊ້ຫຼັກການພື້ນຖານການບັນຊີ ອາດຈະແຕກຕ່າງຈາກຫຼັກການບັນຊີ ທີ່ຮັບຮອງເອົາໂດຍທົ່ວໄປໃນບັນດາປະເທດອື່ນໆ ແລະ ທີ່ບໍ່ຢູ່ໃນອຳນາດຄຸ້ມຄອງ ຂອງ ສປປ ລາວ. ເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ເຈດຕະນາ ສະແດງຖານະການເງິນ ແລະ ຜົນການດຳເນີນງານ ທີ່ບໍ່ຢູ່ໃນອຳນາດຄຸ້ມຄອງ ຂອງ ສປປ ລາວ. ດ້ວຍເຫດນີ້ເອກະສານລາຍງານການເງິນດັ່ງກ່າວນີ້ ຈະໃຫ້ຂໍ້ມູນສະເພາະຜູ້ທີ່ໄດ້ຮັບແຈ້ງກ່ຽວກັບນະໂຍບາຍການບັນຊີຂອງທະນາຄານເທົ່ານັ້ນ.

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍຜູ້ບໍລິຫານ ຕ້ອງມີການຄາດຄະເນ ແລະ ວາງຂໍ້ສົມມຸດຖານ ຫຼາຍປະການ ທີ່ມີຜົນກະທົບຕໍ່ ຈຳນວນທີ່ລາຍງານເປັນ ຊັບສິນ ແລະ ໜີ້ສິນ, ການເປີດເຜີຍຊັບສິນ ແລະ ໜີ້ສິນອາດເກີດຂຶ້ນໃນ ວັນທີ ຂອງເອກະສານລາຍງານການເງິນ ແລະ ຈຳນວນລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ. ເຖິງແມ່ນວ່າ ການ ຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການປະຕິບັດໃນປະຈຸບັນ, ແຕ່ຜົນໄດ້ຮັບ ຕົວຈິງອາດຈະແຕກຕ່າງຈາກການຄາດຄະເນ (ບົດອະທິບາຍຂໍ້ 15)

ເອກະສານລາຍງານການເງິນ ແມ່ນໄດ້ຖືກກະກຽມພາຍໃຕ້ຫຼັກການໃນການບັນທຶກໂດຍອີງຕາມມູນຄ່າຕົ້ນທຶນເບື້ອງຕົ້ນ, ຍົກເວັ້ນຊັບສິນທາງການເງິນບາງປະເພດ (ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ) ວັດມູນຄ່າດ້ວຍມູນຄ່າຍຸດຕິທຳ.

3.2 ການປ່ຽນຄ່າເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວໃນສະກຸນເງິນຕາຕ່າງປະເທດແມ່ນຖືກບັນທຶກເບື້ອງຕົ້ນຕາມອັດຕາແລກປ່ຽນໃນມື້ທີ່ລາຍ ການເຄື່ອນໄຫວນັ້ນເກີດຂຶ້ນ. ຊັບສິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດຈະຖືກປ່ຽນຄ່າເປັນສະກຸນເງິນກີບ ໃນອັດຕາ ແລກປ່ຽນໃນ ວັນທີລາຍງານ (ເບິ່ງລາຍການ ອັດຕາແລກປ່ຽນເງິນຕາຕ່າງປະເທດທີ່ໃຊ້ໃນການແລກປ່ຽນເງິນກີບ ໃນວັນທີ 31 ທັນວາ 2022 ແລະ 31 ທັນວາ 2021 ຕາມທີ່ສະແດງໃນ ບົດອະທິບາຍຂໍ້ 38). ຜົນຕ່າງຈາກອັດຕາແລກປ່ຽນທີ່ຍັງບໍ່ໄດ້ເກີດຂຶ້ນ ຈິງທີ່ເກີດຈາກການປ່ຽນຄ່າຊັບສິນ ແລະ ໜີ້ສິນທາງການເງິນ ໃນວັນທີຂອງໃບລາຍງານຖານະການເງິນແມ່ນຮັບຮູ້ເຂົ້າໃນໃບລາຍ ງານຜົນໄດ້ຮັບ.

3.3 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ

ລາຍຮັບຖືກຮັບຮູ້ໃນຂອບເຂດທີ່ອາດຈະເປັນໄປໄດ້ວ່າຜົນປະໂຫຍດທາງເສດຖະກິດຈະໄຫລເຂົ້າສູ່ທະນາຄານ ແລະ ລາຍ ຮັບສາມາດວັດແທກໄດ້ຢ່າງໜ້າເຊື່ອຖື, ຕ້ອງປະຕິບັດຕາມເງື່ອນໄຂການຮັບຮູ້ສະເພາະຕໍ່ໄປນີ້ກ່ອນທີ່ຈະຮັບຮູ້ລາຍຮັບ.

3.3.1 ລາຍຮັບ ແລະ ລາຍຈ່າຍດອກເບ້ຍ

ສຳລັບເຄື່ອງມືການເງິນທັງໝົດ ທີ່ຖືກວັດແທກດ້ວຍມູນຄ່າທຶນແບ່ງຈ່າຍ, ຊັບສິນທາງການເງິນທີ່ມີດອກເບ້ຍ ເຊິ່ງຈັດ ປະເພດເປັນເຄື່ອງມືທີ່ມີເພື່ອຂາຍ ແລະ ເຄື່ອງມືທາງການເງິນທີ່ຖືກກຳນົດໃນມູນຄ່າຍຸດຕິທຳ ຜ່ານກຳໄລ ຫລື ຂາດທຶນ, ລາຍໄດ້ ດອກເບ້ຍ ຫລື ລາຍຈ່າຍດອກເບ້ຍ ຖືກບັນທຶກໂດຍນຳໃຊ້ ອັດຕາດອກເບ້ຍທີ່ແທ້ຈິງ (EIR).

ການຄິດໄລ່ໄດ້ຄຳນຶງເຖິງທຸກເງື່ອນໄຂຕາມສັນຍາຂອງເຄື່ອງມືທາງການເງິນ (ຕົວຢ່າງ, ທາງເລືອກໃນການຈ່າຍລ່ວງໜ້າ) ແລະ ປະກອບມີຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍເພີ່ມ ເຊິ່ງສາມາດນຳໃຊ້ໂດຍກົງກັບເຄື່ອງມື ແລະ ເປັນສ່ວນໜຶ່ງຂອງ EIR, ແຕ່ບໍ່ແມ່ນ ການສູນເສຍສິນເຊື່ອໃນອະນາຄົດ.

ເມື່ອມູນຄ່າທີ່ບັນທຶກຂອງຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນ ທີ່ຄ້າຍຄືກັນໄດ້ຖືກຫຼຸດລົງໂດຍການສູນ ເສຍຄ່າເສື່ອມມູນຄ່າ, ລາຍໄດ້ຈາກດອກເບ້ຍຍັງຄົງຖືກຮັບຮູ້ໂດຍນຳໃຊ້ອັດຕາດອກເບ້ຍທີ່ໃຊ້ເພື່ອຫຼຸດກະແສເງິນສົດໃນອະນາຄົດ ເພື່ອຈຸດປະສົງຂອງການວັດແທກການສູນເສຍຄ່າເສື່ອມມູນຄ່າ.

3.3.2 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

ທະນາຄານມີລາຍໄດ້ຈາກຄ່າທຳນຽມ ແລະ ບໍລິການ ຈາກການບໍລິການດ້ານການເງິນຫລາກຫລາຍກັບລູກຄ້າ. ລາຍໄດ້ຄ່າທຳ ນຽມ ແລະ ບໍລິການ ແມ່ນຖືກຮັບຮູ້ເປັນຈຳນວນທີ່ສະທ້ອນໃຫ້ເຫັນເຖິງສິ່ງຕອບແທນທີ່ທະນາຄານຄາດວ່າຈະໄດ້ຮັບຈາກການສະໜອງການບໍລິການ.

ພັນທະການປະຕິບັດງານ ພ້ອມທັງກຳນົດເວລາຂອງຄວາມເພິ່ງພໍໃຈ, ໄດ້ຖືກກຳນົດ ແລະ ກຳນົດ, ໃນຊ່ວງເລີ່ມຕົ້ນຂອງສັນຍາ. ສັນຍາ ລາຍຮັບຂອງທະນາຄານບໍ່ລວມເອົາພັນທະການປະຕິບັດຫຼາຍຢ່າງ, ດັ່ງທີ່ໄດ້ອະທິບາຍເພີ່ມເຕີມໃນ ຂໍ້ 3.3.2.1 ແລະ 3.3.2.2 ຂ້າງລຸ່ມນີ້.

ເມື່ອທະນາຄານໃຫ້ການບໍລິການແກ່ລູກຄ້າ, ການພິຈາລະນາຈະຖືກຮຽກເກັບເງິນ ແລະ ໂດຍທົ່ວໄປຈະຄົບກຳນົດທັນທີ ເພິ່ງພໍໃຈໃນການບໍລິການ ທີ່ໃຫ້ໃນຊ່ວງເວລາໃດໜຶ່ງ ຫລື ເມື່ອສິ້ນສຸດສັນຍາ ສຳລັບການບໍລິການທີ່ໃຫ້ໃນໄລຍະເວລາ (ເວັ້ນເສຍແຕ່ໄດ້ລະບຸໄວ້ໃນຂໍ້ 3.3.2.1 ແລະ 3.3.2.2 ຢູ່ດ້ານລຸ່ມ). ໂດຍທົ່ວໄປແລ້ວທະນາຄານໄດ້ຂໍ້ສະຫຼຸບວ່າເປັນຫຼັກໃນການຈັດກຽມລາຍຮັບ ເນື່ອງຈາກໂດຍທົ່ວໄປຈະຄວບຄຸມການບໍລິການກ່ອນທີ່ຈະໂອນໄປໃຫ້ລູກຄ້າ.

3.3.2 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

3.3.2.1 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ຈາກການບໍລິການທີ່ມີຄວາມເພິ່ງພໍໃຈໃນພາລະຜູກພັນ ຕະຫຼອດໄລຍະເວລາ

ພັນທະປະຕິບັດທີ່ພໍໃຈໃນແຕ່ຕະຫຼອດໄລຍະເວລາ ລວມເຖິງ ມີການບໍລິການທີ່ລູກຄ້າໄດ້ຮັບ ແລະ ຊົມໃຊ້ຜົນປະໂຫຍດຈາກການປະຕິບັດຂອງທະນາຄານທີ່ທະນາຄານດຳເນີນງານ.

3.3.2.2 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ຈາກການບໍລິການທີ່ມີຄວາມເພິ່ງພໍໃຈໃນພາລະຜູກພັນໃນເວລາ

ການບໍລິການທີ່ສະໜອງໃຫ້ເມື່ອພັນທະປະຕິບັດຂອງທະນາຄານມີຄວາມເພິ່ງພໍໃຈໃນເວລາໃດໜຶ່ງແມ່ນຖືກຮັບຮູ້ເມື່ອໄດ້ຄວບຄຸມການບໍລິການດັ່ງກ່າວໃຫ້ລູກຄ້າ. ໂດຍທົ່ວໄປຈະເກີດຂຶ້ນເມື່ອສຳເລັດການເຄື່ອນໄຫວ ຫຼື ການບໍລິການທີ່ຕິດພັນ ຫຼື ສຳລັບຄ່າທຳນຽມ ຫຼື ສ່ວນປະກອບຂອງຄ່າທຳນຽມທີ່ຕິດພັນກັບການປະຕິບັດສະເພາະໃດໜຶ່ງ, ຫຼັງຈາກປະຕິບັດຕາມມາດຖານທີ່. ສິ່ງເຫລົ່ານີ້ລວມມີ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ເກີດຂຶ້ນຈາກການເຈລະຈາ ຫລື ເຂົ້າຮ່ວມໃນການເຈລະຈາຂອງລາຍການເຄື່ອນໄຫວສຳລັບພາກສ່ວນທີສາມ ເຊັ່ນການກະກຽມ/ການມີສ່ວນຮ່ວມ ຫຼື ການເຈລະຈາການ ຊື້ຮຸ້ນ ຫຼື ຫຼັກຊັບອື່ນໆ, ຫຼື ການຊື້ຫຼືການຂາຍທຸລະກິດ, ຄ່ານາຍໜ້າ ແລະ ຄ່າທຳນຽມປະກັນໄພ.

ໂດຍທົ່ວໄປ, ທະນາຄານມີພັນທະການປະຕິບັດງານດຽວທີ່ກ່ຽວຂ້ອງກັບການບໍລິການເຫຼົ່ານີ້, ແມ່ນເພື່ອເຮັດໃຫ້ສຳເລັດລາຍການເຄື່ອນໄຫວ ທີ່ລະບຸໄວ້ໃນສັນຍາ.

3.3.3 ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນ ຖືກຮັບຮູ້ເມື່ອທະນາຄານມີສິດທິໃນການໄດ້ຮັບການຈ່າຍເງິນເງິນປັນຜົນ

3.3.4 ລາຍຮັບຈາກການຄ້າສຸດທິ

ຜົນໄດ້ຮັບທີ່ເກີດຂຶ້ນຈາກກິດຈະກຳການຄ້າ ປະກອບມີກຳໄລ ແລະ ຂາດທຶນທັງໝົດ ຈາກການປ່ຽນແປງຂອງ ມູນຄ່າ ຍຸດຕິ ທຳ ແລະ ລາຍຮັບດອກເບ້ຍ ຫລື ລາຍຈ່າຍດອກເບ້ຍທີ່ກ່ຽວຂ້ອງ ແລະ ເງິນປັນຜົນ ສຳລັບຊັບສິນ ທາງການເງິນ ແລະ ໜີ້ ສິນທາງການເງິນ 'ຖືໄວ້ເພື່ອຂາຍ'

3.4 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດ ຕາມທີ່ອ້າງອີງໃນໃບລາຍງານກະແສເງິນສົດ ປະກອບມີເງິນສົດໃນມື, ບັນຊີເງິນຝາກ ກະແສລາຍວັນກັບ ທຫລ ແລະ ຈຳນວນເງິນຝາກກັບທະນາຄານສາມາດຖອນເກັບຕາມຄວາມຕ້ອງການຫຼື ມີກຳນົດ ສາມເດືອນ ຫຼື ໜ້ອຍກວ່າ.

3.5 ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ

ທະນາຄານມີສ່ວນໄດ້ສ່ວນເສຍກັບວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, ເຊິ່ງເປັນບໍລິສັດຮ່ວມຮຸ້ນໂດຍ ກິດຈະການມີຂໍ້ຕົກລົງຕາມສັນຍາທີ່ກຳນົດໃຫ້ມີການຄວບຄຸມຮ່ວມກັນໃນກິດຈະກຳທາງເສດຖະກິດຂອງກິດຈະການ. ຂໍ້ຕົກລົງ ດັ່ງກ່າວຈຳເປັນຕ້ອງມີຂໍ້ຕົກລົງເປັນເອກະພາບ ສຳລັບການຕັດສິນໃຈດ້ານການເງິນ ແລະ ການດຳເນີນງານໃນບັນດາບໍລິສັດຮ່ວມ.

ທະນາຄານຮັບຮູ້ສ່ວນໄດ້ສ່ວນເສຍໃນວິສາຫະກິດຂາຮຸ້ນ ແລະວິສາຫະກິດປະສົມໂດຍການຄິດໄລ່ກຳໄລຕາມສັດສ່ວນ ຮຸ້ນ ໂດຍການນຳໃຊ້ຂໍ້ມູນທາງດ້ານການເງິນທີ່ມີຢູ່ໃນມື.

ການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ

ພາຍໃຕ້ການຄິດໄລ່ກຳໄລຕາມສັດສ່ວນຮຸ້ນຂອງການບັນຊີ, ການລົງທຶນໄດ້ຖືກຮັບຮູ້ໃນເບື້ອງຕົ້ນໃນລາຄາຕົ້ນທຶນ ແລະ ປັບປຸງຈາກນັ້ນ, ເພື່ອຮັບຮູ້ ສ່ວນແບ່ງຂອງທະນາຄານໃນກຳໄລ ຫລັງການລົງທຶນ ຫລື ຂາດທຶນຂອງຜູ້ລົງທຶນໃນ ກຳໄລ ຫລື ຂາດທຶນ, ແລະ ສ່ວນແບ່ງການເຄື່ອນໄຫວຂອງທະນາຄານໃນໃບລາຍງານຜົນໄດ້ຮັບສັງລວມຂອງທຸລະກິດ ຂອງຜູ້ລົງທຶນໃນລາຍ ຮັບສັງລວມອື່ນໆ.

ເງິນປັນຜົນທີ່ໄດ້ຮັບ ຫຼື ໜີ້ຕ້ອງຮັບຈາກວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມໄດ້ຖືກຮັບຮູ້ໃນມູນຄ່າຕາມບັນຊີ ຂອງການລົງທຶນລຸດລົງ. ໃນກໍລະນີທີ່ ສ່ວນແບ່ງຂາດທຶນ ຂອງທະນາຄານ ໃນບັນຊີສ່ວນໄດ້ສ່ວນເສຍຂອງການລົງທຶນເທົ່າກັນ ຫຼື ສູງຜົນປະໂຫຍດໃນກິດຈະການ, ທະນາຄານຈະບໍ່ຮັບຮູ້ຂາດທຶນເພີ່ມເຕີມ, ເວັ້ນເສຍແຕ່ຈະມີພາລະຜູກພັນ ຫຼື ການຊຳລະໃນນາມ ຂອງໜ່ວຍງານອື່ນ. ຄ່າເຜື່ອ ສຳລັບຄ່າເສື່ອມມູນຄ່າ ໄດ້ຕັ້ງຂຶ້ນສຳລັບການລົງທຶນຂອງວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ເມື່ອມີການຂາດທຶນ (ຍົກເວັ້ນການຂາດທຶນຖືກລະບຸໄວ້ໃນແຜນທຸລະກິດກ່ອນການສ້າງຕັ້ງ). ດັ່ງນັ້ນ, ຄ່າເຜື່ອແມ່ນຕັ້ງຂຶ້ນເພື່ອ ຄວາມແຕກຕ່າງລະຫວ່າງການລົງທຶນທີ່ແທ້ຈິງໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມແລະ ສ່ວນແບ່ງຕາມສັດສ່ວນຂອງ ທະນາຄານໃນສ່ວນໄດ້ສ່ວນເສຍ ໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ.

3.6 ເຄື່ອງມືທາງການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການປະເມີນໃນເວລາຕໍ່ມາ

3.6.1 ລັນທີຮັບຮູ້

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນເງິນໃຫ້ກູ້ຢືມແກ່ລູກຄ້າ ແລະ ຍອດຄົງເຫຼືອທີ່ຕ້ອງຊຳລະໃຫ້ແກ່ລູກຄ້າ ຈະຮັບຮູ້ເບື້ອງຕົ້ນໃນມື້ການຄ້າ ເຊັ່ນ:ມື້ທີທະນາຄານກາຍເປັນຄູ່ສັນຍາຕາມເງື່ອນໄຂຕາມສັນຍາຂອງເຄື່ອງມື ເຊິ່ງປະກອບມີ “ການຊື້ຂາຍແບບປົກກະຕິ” - ການຊື້ ຫລືການຂາຍຊັບສິນທາງການເງິນທີ່ຕ້ອງການການຈັດສົ່ງສິນຊັບພາຍໃນເວລາທີ່ກຳນົດໂດຍທົ່ວໄປຕາມລະບຽບການ ຫຼື ສິນທີສັນຍາໃນຕະຫລາດ.

ເງິນໃຫ້ກູ້ຢືມແກ່ລູກຄ້າ ແມ່ນຖືກຮັບຮູ້ເມື່ອມີການໂອນເງິນເຂົ້າບັນຊີຂອງລູກຄ້າ. ທະນາຄານຮັບຮູ້ຍອດຄົງເຫຼືອທີ່ຕ້ອງຊຳລະໃຫ້ແກ່ລູກຄ້າ ເມື່ອມີເງິນເຂົ້າເຖິງທະນາຄານ.

3.6.2 ການປະເມີນເບື້ອງຕົ້ນຂອງເຄື່ອງມືທາງການເງິນ

ການຈັດປະເພດເຄື່ອງມືທາງການເງິນໃນການຮັບຮູ້ເບື້ອງຕົ້ນແມ່ນຂຶ້ນກັບຈຸດປະສົງ ແລະ ຄຸນລັກສະນະ ແລະ ເຈດຕະນາຂອງຜູ້ບໍລິຫານໃນການຊື້ເຄື່ອງມືເຫລົ່ານັ້ນ. ເຄື່ອງມືທາງການເງິນທັງໝົດ ຖືກປະເມີນໃນເບື້ອງຕົ້ນດ້ວຍມູນຄ່າຍຸດຕິທຳບວກກັບຄ່າໃຊ້ຈ່າຍໃນການເຄື່ອນໄຫວ, ຍົກເວັ້ນໃນກໍລະນີຊັບສິນທາງການເງິນ ແລະ ໜີ້ສິນ ທາງການເງິນທີ່ບັນທຶກໃນມູນຄ່າຍຸດຕິທຳຜ່ານກຳໄລ ຫລື ຂາດທຶນ.

3.6.3 ວິທີອັດຕາດອກເບ້ຍທີ່ແທ້ຈິງ

ອັດຕາດອກເບ້ຍທີ່ແທ້ຈິງ (EIR) ແມ່ນອັດຕາສ່ວນຫຼຸດທີ່ແນ່ນອນການຄາດຄະເນການຈ່າຍເງິນສົດ ຫຼື ໃບຮັບເງິນໃນອະນາຄົດໂດຍຜ່ານອາຍຸການທີ່ຄາດໄວ້ຂອງເຄື່ອງມືທາງການເງິນ ຫຼື, ເມື່ອມີໄລຍະເວລາທີ່ສັ້ນກວ່າ, ເຖິງມູນຄ່າຕາມບັນຊີສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ຕົ້ນທຶນແບ່ງຈ່າຍຂອງຊັບສິນ ຫຼື ໜີ້ສິນທາງການເງິນ ແມ່ນຖືກປັບປຸງຖ້າທະນາຄານປັບປຸງການຄາດຄະເນຂອງການຈ່າຍ ຫລື ລາຍຮັບ. ການປັບປຸງຕົ້ນທຶນແບ່ງຈ່າຍແມ່ນແລ້ວຖືກຄິດໄລ່ໂດຍອີງໃສ່ຕົ້ນສະບັບ ຫລື EIR ທີ່ຖືກປະເມີນຄືນໃໝ່ ແລະ ການປ່ຽນແປງແມ່ນບັນທຶກເປັນ 'ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ' ສຳລັບຊັບສິນທາງການເງິນ ແລະ 'ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ' ສຳລັບຫນີ້ສິນທາງການເງິນ.

3.6.4 ‘ມື້ທີ 1’ ກຳໄລ ຫຼື ຂາດທຶນ

ເມື່ອລາຄາຊື້ຂາຍ ແຕກຕ່າງຈາກມູນຄ່າຍຸດຕິທຳ ຂອງການຊື້ຂາຍອື່ນໆໃນຕະຫຼາດໃນປະຈຸບັນທີ່ສາມາດສັງເກດໄດ້ໃນເຄື່ອງມືດຽວກັນ ຫຼືອີງໃສ່ເຕັກນິກການປະເມີນມູນຄ່າທີ່ມີຕົວປ່ຽນແປງປະກອບມີພຽງແຕ່ຂໍ້ມູນຈາກຕະຫຼາດທີ່ສັງເກດໄດ້, ທະນາຄານຮັບຮູ້ທັນທີ ຄວາມແຕກຕ່າງລະຫວ່າງລາຄາການຊື້ຂາຍ ແລະ ມູນຄ່າຍຸດຕິທຳ (‘ມື້ທີ 1’ ກຳໄລ ຫຼື ຂາດທຶນ) ໃນ' ລາຍໄດ້ຈາກການຄ້າສຸດທິ ' ໃນກໍລະນີທີ່ມູນຄ່າຍຸດຕິທຳ ຖືກກຳນົດໂດຍການນຳໃຊ້ຂໍ້ມູນທີ່ບໍ່ສາມາດສັງເກດໄດ້, ຄວາມແຕກຕ່າງລະຫວ່າງລາຄາການຊື້ຂາຍ ແລະ ມູນຄ່າແບບຈຳລອງ ແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ ເມື່ອຂໍ້ມູນນຳເຂົ້າສາມາດສັງເກດເຫັນໄດ້, ຫຼື ເຄື່ອງມືແມ່ນ ການຕັດລາຍການບັນຊີ.

3.6.5 ການລົງທຶນທາງການເງິນມີໄວ້ເພື່ອຂາຍ

ການລົງທຶນເພື່ອຂາຍປະກອບມີການລົງທຶນໃນສ່ວນໄດ້ສ່ວນເສຍ. ການລົງທຶນໃນສ່ວນໄດ້ສ່ວນເສຍຈັດປະເພດເປັນການລົງທຶນເພື່ອຂາຍ ແມ່ນການລົງທຶນທີ່ບໍ່ໄດ້ຈັດປະເພດໄວ້ເພື່ອຄ້າ ຫຼື ບໍ່ກຳນົດດ້ວຍມູນຄ່າຍຸດຕິທຳ ໂດຍຜ່ານ ກຳໄລ ຫລື ຂາດທຶນ.

ທະນາຄານບໍ່ໄດ້ກຳນົດເງິນໃຫ້ກູ້ຢືມ ຫຼື ໜີ້ຕ້ອງຮັບ ທີ່ມີໄວ້ເພື່ອຂາຍ.

ຫຼັງຈາກປະເມີນໃນເບື້ອງຕົ້ນ, ການລົງທຶນທາງການເງິນທີ່ມີໄວ້ເພື່ອຂາຍແມ່ນຖືກປະເມີນໃນເວລາຕໍ່ມາໃນມູນຄ່າຍຸດຕິທຳ.

ກຳໄລ ແລະ ຂາດທຶນ ທີ່ຍັງບໍ່ໄດ້ເກີດຂຶ້ນຈິງ ຈະຮັບຮູ້ໂດຍກົງໃນສ່ວນຂອງຜູ້ຖືຮຸ້ນ (ຜົນໄດ້ຮັບສັງລວມອື່ນ) ໃນ “ຄັງສຳຮອງສຳລັບຫຼັກຊັບມີໄວ້ເພື່ອຂາຍ”. ເມື່ອການລົງທຶນຖືກສາງ, ກຳໄລ ຫລື ຂາດທຶນສະສົມທີ່ຜ່ານມາຮັບຮູ້ໃນສ່ວນໄດ້ສ່ວນເສຍໃນໃບລາຍງານຜົນໄດ້ຮັບໃນ 'ລາຍຮັບຈາກການດຳເນີນງານອື່ນ'. ໃນກໍລະນີທີ່ທະນາຄານຖືການລົງທຶນຫລາຍກ່ວາໜຶ່ງ ລາຍການໃນຫຼັກຊັບດຽວ ຖືວ່າຖືກສະສາງບົນພື້ນຖານເຂົ້າກ່ອນອອກກ່ອນ.

ເງິນປັນຜົນທີ່ໄດ້ຮັບໃນຂະນະທີ່ຖືຄອງໄວ້ເພື່ອຂາຍທາງການເງິນຈະຖືກຮັບຮູ້ໃນເອກະສານລາຍງານຜົນໄດ້ຮັບເປັນ ‘ລາຍຮັບຈາກການດຳເນີນງານອື່ນ’ ເມື່ອມີການກຳນົດສິດໃນການຮັບຊຳລະ. ການສູນເສຍທີ່ເກີດຂຶ້ນຈາກ ຄ່າເສື່ອມຂອງການລົງທຶນດັ່ງກ່າວແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ 'ການສູນເສຍຄ່າເສື່ອມມູນຄ່າໃນການລົງທຶນທາງການເງິນ' ແລະ ຖືກເອົາອອກຈາກ 'ການສຳຮອງທີ່ມີໄວ້ເພື່ອຂາຍ'.

3.6.6 ການລົງທຶນທາງການເງິນທີ່ຖືໄວ້ຈົນຄົບກຳນົດ

ການລົງທຶນທາງການເງິນທີ່ຖືຈົນຄົບກຳນົດແມ່ນຊັບສິນທາງການເງິນບໍ່ແມ່ນອະນຸພັນ ໂດຍມີການຊຳລະທີ່ມີກຳນົດ ຫລື ກຳນົດການຊຳລະ ແລະ ກຳນົດເວລາ, ເຊິ່ງທະນາຄານມີຄວາມຕັ້ງໃຈ ແລະ ຄວາມສາມາດໃນການຖືຈົນຄົບກຳນົດ. ຫຼັງຈາກການວັດແທກໃນເບື້ອງຕົ້ນ, ການລົງທຶນທາງການເງິນທີ່ຖືຈົນຄົບກຳນົດໄດ້ຖືກວັດແທກຕໍ່ມາ ໃນມູນຄ່າຕົ້ນທຶນແບ່ງຈ່າຍໂດຍນຳໃຊ້ EIR. ໃນແຕ່ລະໄລຍະ, ຫຼັກຊັບທີ່ຖືຈົນຄົບກຳນົດ ຕ້ອງໄດ້ຮັບການທົບທວນຄືນຄ່າເສື່ອມມູນຄ່າ. ຄ່າເຜື່ອສຳລັບຄ່າເສື່ອມມູນຄ່າຂອງຫລັກຊັບເຫລົ່ານີ້ເກີດຂຶ້ນເມື່ອມູນຄ່າຍຸດຕິທຳຂອງຫຼັກຊັບດັ່ງກ່າວຫຼຸດລົງຢ່າງມີສາລະສຳຄັນ ຫຼື ເປັນເວລາດົນ ຜົນຂາດທຶນທີ່ເກີດຈາກຄ່າດ້ອຍຄ່າຂອງການລົງທຶນດັ່ງກ່າວຮັບຮູ້ໃນໃບລາຍງານຜົນໄດ້ຮັບ ‘ລາຍຈ່າຍການສູນເສຍຄ່າເສື່ອມມູນຄ່າ’.

ຖ້າທະນາຄານຈະຂາຍ ຫລື ຈັດປະເພດໃໝ່ຫຼາຍກ່ວາ ຈຳນວນທີ່ບໍ່ເປັນສາລະສຳຄັນຂອງການລົງທຶນທີ່ຖືຈົນຄົບກຳນົດກ່ອນກຳນົດ (ນອກເໜືອຈາກໃນສະຖານະການສະເພາະບາງກໍລະນີ) ໝວດໝູ່ທັງໝົດຈະເສຍໄປ ແລະ ຈະຖືກຈັດປະເພດໃໝ່ເປັນມີໄວ້ເພື່ອຂາຍ. ນອກຈາກນີ້ ຫ້າມບໍ່ໃຫ້ທະນາຄານຈັດປະເພດຊັບສິນທາງການເງິນໃດ ເປັນຖືຈົນຄົບກຳນົດໃນລະຫວ່າງສອງປີຂ້າງໜ້າ.

3.6.7 ເງິນຝາກກັບທະນາຄານ ແລະ ເງິນໃຫ້ກູ້ຢືມແກ່ລູກຄ້າ

'ເງິນຝາກກັບທະນາຄານ' ແລະ 'ເງິນໃຫ້ກູ້ຢືມແກ່ລູກຄ້າ' ລວມມີຊັບສິນທາງການເງິນ ທີ່ບໍ່ແມ່ນອະນຸພັນທີ່ມີກຳນົດຄົງທີ່ ຫຼື ກຳນົດການຊຳລະທີ່ບໍ່ໄດ້ສະເໜີລາຄາໃນຕະຫຼາດທີ່ມີການເຄື່ອນໄຫວນອກເໜືອຈາກ:

- ທີ່ທະນາຄານຕັ້ງໃຈຈະຂາຍໃຫ້ທັນທີ ຫຼື ໃນໄລຍະອັນໃກ້ ແລະ ຜູ້ທີ່ທະນາຄານຮັບຮູ້ໃນເບື້ອງຕົ້ນກຳນົດໃຫ້ເປັນມູນຄ່າຍຸດຕິທຳຜ່ານ ກຳໄລ ຫຼື ຂາດທຶນ;
- ສິ່ງທີ່ທະນາຄານຮັບຮູ້ໃນເບື້ອງຕົ້ນກຳນົດວ່າມີໄວ້ເພື່ອຂາຍ;
- ກໍລະນີທີ່ທະນາຄານບໍ່ສາມາດກູ້ເງິນລົງທຶນເບື້ອງຕົ້ນທັງໝົດໄດ້ຢ່າງມີສາລະສຳຄັນ ນອກເໜືອຈາກການເສື່ອມສະພາບຄ່ອງທາງສິນເຊື່ອ.

ຫຼັງຈາກການວັດແທກໃນເບື້ອງຕົ້ນ, ຈຳນວນ 'ເງິນຝາກກັບທະນາຄານ' ແລະ 'ເງິນໃຫ້ກູ້ຢືມແກ່ລູກຄ້າ' ແມ່ນໄດ້ຖືກວັດແທກໃນເວລາຕໍ່ມາດ້ວຍມູນຄ່າຕົ້ນທຶນແບ່ງຈ່າຍໂດຍນຳໃຊ້ວິທີ EIR, ຫັກຄ່າເຜື່ອຄ່າເສື່ອມມູນຄ່າ. ຕົ້ນທຶນແບ່ງຈ່າຍແມ່ນຖືກຄິດໄລ່ໂດຍຄຳນຶງເຖິງສ່ວນຫຼຸດ ຫຼື ສ່ວນເກີນຕ່າງໆກ່ຽວກັບການໄດ້ມາ ແລະ ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍທີ່ເປັນສ່ວນ ໜຶ່ງ ຂອງ EIR. ສະນັ້ນ, ທະນາຄານຮັບຮູ້ລາຍໄດ້ດອກເບ້ຍ ໂດຍນຳໃຊ້ອັດຕາຜົນຕອບແທນທີ່ສະແດງໃຫ້ເຫັນການຄາດຄະເນທີ່ດີທີ່ສຸດຂອງອັດຕາຜົນຕອບແທນຄົງທີ່ຕະຫຼອດອາຍຸພຶດຕິກຳທີ່ຄາດຫວັງຂອງເງິນໃຫ້ກູ້ຢືມ, ດັ່ງນັ້ນ, ການຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ແຕກຕ່າງກັນທີ່ອາດເກີດຂຶ້ນໃນໄລຍະຕ່າງໆ, ແລະລັກສະນະອື່ນໆຂອງວົງຈອນຊີວິດຜະລິດຕະພັນ (ການຈ່າຍລ່ວງໜ້າ, ດອກເບ້ຍປັບໃໝ ແລະ ຄ່າບໍລິການ).

ຖ້າຫາກມີການແກ້ໄຂຄວາມຄາດຫວັງການປັບປຸງຈະຖືກບັນທຶກການປັບປຸງໃນທາງບວກ ຫຼື ລົບ ຕໍ່ມູນຄ່າ ຕາມບັນຊີ ໃນໃບລາຍງານຖານະການເງິນ ເຊິ່ງເພີ່ມຂຶ້ນ ຫຼື ຈຸດລົດໃນລາຍຮັບດອກເບ້ຍ. ການປັບປຸງໄດ້ແບ່ງຈ່າຍໃນເວລາຕໍ່ມາຜ່ານລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ ໃນໃບລາຍງານໃບລາຍງານຜົນໄດ້ຮັບ.

3.6.8 ເງິນຝາກຈາກທະນາຄານອື່ນ ແລະ ລູກຄ້າ ແລະ ເງິນກູ້ຢືມອື່ນ

"ເງິນຝາກຈາກທະນາຄານອື່ນ ແລະ ລູກຄ້າ ແລະ ເງິນກູ້ຢືມອື່ນ" ລວມທັງການກະກຽມທີ່ເນື້ອໃນຂອງຂໍ້ຕົກລົງຕາມສັນຍາສົ່ງຜົນໃຫ້ທະນາຄານມີພັນທະໃນການສົ່ງມອບເງິນສົດ ຫລື ຊັບສິນທາງການເງິນໃຫ້ແກ່ຜູ້ຖືຮຸ້ນ.

ຫຼັງຈາກການວັດແທກໃນເບື້ອງຕົ້ນ, "ເງິນຝາກຈາກທະນາຄານອື່ນ ແລະ ລູກຄ້າ ແລະ ເງິນກູ້ຢືມອື່ນ" ແມ່ນຖືກວັດແທກດ້ວຍຕົ້ນທຶນແບ່ງຈ່າຍ ໂດຍໃຊ້ EIR. ຕົ້ນທຶນແບ່ງຈ່າຍແມ່ນຖືກຄິດໄລ່ໂດຍ ຄຳນຶງເຖິງສ່ວນຫຼຸດ ແລະ ສ່ວນເພີ່ມຕ່າງໆສຳລັບບັນຫາ ແລະ ຕົ້ນທຶນທີ່ເປັນສ່ວນໜຶ່ງຂອງ EIR.

3.6.9 ການຈັດປະເພດຄືນໃໝ່ຂອງຊັບສິນທາງການເງິນ

ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່, ໃນບາງສະຖານະການ, ຊັບສິນທາງການເງິນບໍ່ແມ່ນອະນຸພັນ ອອກຈາກປະເພດ "ມີໄວ້ເພື່ອການຄ້າ" ແລະ ເຂົ້າໄປໃນ "ມີໄວ້ເພື່ອຂາຍ", "ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ", ຫຼື "ຖືຈົນຄົບກຳນົດ". ນັບແຕ່ມື້ນີ້ໄດ້ຖືກອະນຸຍາດໃຫ້ຈັດປະເພດຄືນໃໝ່, ໃນບາງສະຖານະການ, ເຄື່ອງມືການເງິນອອກຈາກປະເພດ "ມີໄວ້ເພື່ອຂາຍ"

ແລະ ເຂົ້າໃນປະເພດ “ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ”ການຈັດປະເພດ ຄືນໃໝ່ແມ່ນຖືກບັນທຶກດ້ວຍມູນຄ່າຍຸດຕິທຳໃນວັນທີ ການຈັດປະເພດຄືນໃໝ່, ເຊິ່ງກາຍເປັນຕົ້ນທຶນແບ່ງຈ່າຍໃໝ່.

ສຳລັບຊັບສິນທາງການເງິນທີ່ຖືກຈັດປະເພດຄືນໃໝ່ອອກຈາກປະເພດ “ມີໄວ້ເພື່ອຂາຍ”, ຜົນກຳໄລ ຫຼື ຂາດທຶນຜ່ານມາ ກ່ຽວກັບຊັບສິນທີ່ໄດ້ຮັບຮູ້ໃນສ່ວນຂອງຜູ້ຖືຮຸ້ນແມ່ນແບ່ງຈ່າຍເຂົ້າໃນ ກຳໄລ ຫຼື ຂາດທຶນ ຕະຫຼອດອາຍຸທີ່ເຫຼືອຂອງການລົງທຶນ ໂດຍໃຊ້ວິທີ EIR. ຄວາມແຕກຕ່າງລະຫວ່າງຕົ້ນທຶນແບ່ງຈ່າຍໃໝ່ ແລະກະແສເງິນສົດທີ່ຄາດວ່າຈະແບ່ງຈ່າຍຕະຫຼອດອາຍຸການ ໃຊ້ງານທີ່ຍັງເຫຼືອຂອງຊັບສິນໂດຍໃຊ້ວິທີEIR. ຖ້າຊັບສິນຖືກພິຈາລະນາວ່າມີ ຄ່າເສື່ອມໃນເວລາຕໍ່ມາ,ຈຳນວນທີ່ຖືກບັນທຶກໃນ ສ່ວນຂອງທຶນຈະຖືກນຳໄປໃຊ້ຄືນໃໝ່ໃນໃບລາຍງານຜົນໄດ້ຮັບ.

ໃນສະຖານະການທີ່ຫາຍາກ, ທະນາຄານອາດຈະຈັດປະເພດຊັບສິນການຄ້າທີ່ບໍ່ແມ່ນອະນຸພັນ ອອກຈາກປະເພດ ‘ມີໄວ້ ເພື່ອການຄ້າ’ ແລະ ເຂົ້າໄປໃນປະເພດ ‘ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ’ ຖ້າເປັນໄປຕາມຄຳນິຍາມຂອງ ເງິນໃຫ້ກູ້ຢືມ ແລະ ໜີ້ ຕ້ອງຮັບ ແລະ ທະນາຄານມີຄວາມຕັ້ງໃຈ ແລະ ຄວາມສາມາດໃນການຖືຊັບສິນທາງການເງິນໃນອະນາຄົດທີ່ຄາດລ່ວງໜ້າ ຫລື ຈົນ ຄົບກຳນົດ. ຖ້າຊັບສິນທາງການເງິນຖືກຈັດປະເພດຄືນໃໝ່, ແລະຖ້າທະນາຄານເພີ່ມການຄາດຄະເນລາຍຮັບເງິນສົດໃນອະນາຄົດ ເປັນຜົນມາຈາກການເພີ່ມຄວາມສາມາດ ໃນການຮັບເງິນສົດ, ຜົນຂອງການເພີ່ມຂຶ້ນນັ້ນແມ່ນຖືກຮັບຮູ້ວ່າເປັນການປັບປຸງ EIR ນັບແຕ່ມື້ມີການປ່ຽນແປງໃນການຄາດຄະເນ.

ການຈັດປະເພດຄືນໃໝ່ຂຶ້ນຢູ່ກັບການເລືອກຂອງຜູ້ບໍລິຫານ ແລະ ພິຈາລະນາຈາກເຄື່ອງມືໂດຍພື້ນຖານຂອງເຄື່ອງມື.

3.7 ການຕັດບັນຊີຊັບສິນ ແລະ ໜີ້ສິນທາງການເງິນ

3.7.1 ຊັບສິນທາງການເງິນ

ຊັບສິນທາງການເງິນ (ຫຼື, ສ່ວນໜຶ່ງຂອງຊັບສິນການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກຢຸດ ຮັບຮູ້ເປັນຊັບສິນ ກ່ຕໍ່ເມື່ອສິດທິທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນທີ່ໄດ້ໝົດອາຍຸແລ້ວ. ນອກຈາກນີ້, ທະນາຄານຍັງຢຸດຮັບ ຮູ້ເປັນຊັບສິນ ໃນກໍລະນີທີ່ຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້.

ທະນາຄານຖືວ່າໄດ້ໂອນຊັບສິນຖ້າຫາກວ່າ:

- ທະນາຄານໄດ້ໂອນກຳມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ ຫຼື
- ການຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຈ່າຍກະແສເງິນສົດທີ່ຈະໄດ້ຮັບທັງໝົດ ໃນອະນາຄົດໂດຍທັນທີໃຫ້ພາກສ່ວນທີສາມພາຍໃຕ້ຮູບແບບ ‘ການຕິດພັນ’.

ການໂອຍຍ້າຍພຽງແຕ່ມີຄຸນນະສົມບັດສຳລັບການຕັດບັນຊີໃນກໍລະນີ:

- ທະນາຄານໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼື
- ທະນາຄານບໍ່ໄດ້ໂອນ ຫຼື ບໍ່ໄດ້ຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ, ແຕ່ໄດ້ໂອນການຄວບຄຸມຊັບ ສິນ.

ອີງຕາມຂໍ້ມູນຂ້າງເທິງ, ທະນາຄານຈະພິຈາລະນາວ່າການຄວບຄຸມ ຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈຳກັດໃດໆກ່ຽວກັບການໂອນ.

ເມື່ອທະນາຄານໄດ້ໂອນສິດໃນການຮັບເງິນສົດຈາກຊັບສິນການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ, ແລະ ບໍ່ໄດ້ໂອນ ຫຼື ຍັງຄົງຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼືໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ທະນາຄານຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ທະນາຄານ ຍັງຮັບຮູ້ເປັນໜີ້ສິນທີ່ຕິດພັນ, ການໂອນຊັບສິນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ວ່າມັນຈະ ສິ່ງຜົນກະທົບຕໍ່ສິດ ແລະ ພັນທະຂອງທະນາຄານທີ່ມີຢູ່.

ການສືບຕໍ່ຂອງຮູບແບບຂອງການຄ້ຳປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຕີມູນຄ່າໃນລະດັບຕ່ຳກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ທະນາຄານມີຄວາມສາມາດໃນການຊຳລະໜີ້.

ນອກຈາກນີ້ທະນາຄານຍັງຢຸດຮັບຮູ້ບັນດາຊັບສິນທາງການເງິນໂດຍສະເພາະການໃຫ້ກູ້ຢືມແກ່ລູກຄ້າ ເມື່ອເງື່ອນໄຂ ແລະ ຂໍ້ຕົກລົງສ່ວນໃຫຍ່ໄດ້ມີການເຈລະຈາກັນໃໝ່ ແລະ ຖືກພິຈາລະນາເປັນກູ້ຢືມໃໝ່, ສ່ວນຜິດດ່ຽງຈະ ຖືກບັນທຶກເປັນຄ່າເສື່ອມໃນໃບລາຍງານຜົນໄດ້ຮັບ.

3.7.2 ໜີ້ສິນທາງການເງິນ

ໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ໃນບັນຊີເມື່ອພັນທະຕ່ຳກັບໜີ້ສິນດັ່ງກ່າວໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່. ສ່ວນຜິດດ່ຽງຂອງມູນຄ່າເດີມທີ່ບັນທຶກບັນຊີຂອງໜີ້ສິນທາງການເງິນ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

3.8 ການເສື່ອມມູນຄ່າຂອງຊັບສິນທາງການເງິນ

ທະນາຄານປະເມີນໃນມື້ເຮັດໃບລາຍງາຍຖານະການເງິນວ່າມີຫຼັກຖານຊັດເຈນທີ່ສະແດງໃຫ້ເຫັນວ່າຊັບສິນການເງິນ - ເງິນໃຫ້ກູ້ຢືມແກ່ລູກຄ້າ ມີການເສື່ອມມູນຄ່າ ຫຼື ບໍ່. ຊັບສິນການເງິນ - ເງິນໃຫ້ກູ້ຢືມແກ່ລູກຄ້າຈະຖືວ່າມີຄວາມເສຍຫາຍ ຖ້າພຽງແຕ່ວ່າມີ ຫຼັກຖານຊັດເຈນຂອງຄວາມເສຍຫາຍຈາກຜົນຂອງໜຶ່ງ ຫຼື ຫຼາຍເຫດການທີ່ປະກົດຂຶ້ນຫຼັງຈາກ ມີການຮັບຮູ້ຊັບສິນ (ເກີດມີ 'ເຫດການເສຍຫາຍ') ແລະ ເຫດການເສຍຫາຍໜຶ່ງ (ຫຼື ຫຼາຍເຫດການ) ໄດ້ສົ່ງຜົນກະທົບເຖິງການຄາດຄະເນກະແສເງິນສົດໃນອະນາຄົດ ຂອງຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນທີ່ສາມາດຄາດຄະເນໄດ້ຢ່າງໜ້າເຊື່ອຖື.

ຫຼັກຖານຂອງການເສື່ອມມູນຄ່າອາດລວມມີ: ຕົວຊີ້ວັດວ່າຜູ້ກູ້ຢືມ ຫຼື ກຸ່ມຂອງຜູ້ກູ້ຢືມແມ່ນມີຄວາມຫຍຸ້ງຍາກທາງດ້ານການເງິນ, ການຜິດສັນຍາ ຫຼື ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າ ພວກເຂົາຈະລົ້ມລະລາຍ ຫຼື ການປັບປຸງລະບົບ ການເງິນຄືນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດ ຫຼຸດລົງ ເຊັ່ນ: ການປ່ຽນແປງໜີ້ ເກີນກຳນົດ ຫຼື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

3.8.1 ຊັບສິນທາງການເງິນທີ່ຮັບຮູ້ຕາມຕົ້ນທຶນຄ່າເສື່ອມມູນຄ່າ

ການສູນເສຍຄ່າເສື່ອມມູນຄ່າສ່ວນບຸກຄົນ

ສຳລັບຊັບສິນທາງການເງິນ- - ເງິນໃຫ້ກູ້ຢືມແກ່ລູກຄ້າ ທີ່ບັນທຶກຕາມມູນຄ່າສຸດທິຫຼັງຫັກຄ່າເສື່ອມ (ເຊັ່ນ: ໜີ້ຕ້ອງສົ່ງ ທະນາຄານອື່ນ ແລະ ເງິນໃຫ້ກູ້ຢືມແກ່ລູກຄ້າ), ທະນາຄານຈະປະເມີນຫຼັກຖານຂອງການເສື່ອມມູນຄ່າຂອງຊັບສິນທາງການເງິນວ່າ ມີຫຼັກຖານການເສື່ອມຄ່າຂອງຊັບສິນການເງິນນັ້ນສຳຄັນ ຫຼືວ່າ ຖືກພິຈາລະນາສະເພາະໂດຍຜູ້ບໍລິຫານ.

ຖ້າຫາກມີຫຼັກຖານວ່າຄ່າເສື່ອມເກີດຂຶ້ນ,ຈຳນວນຄ່າເສື່ອມຈະຖືກຕີມູນຄ່າເປັນສ່ວນຕ່າງລະຫວ່າງຍອດຍົກມາຂອງຊັບ ສິນ ແລະ ຍອດເຫຼືອປະຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາຄ່າເສື່ອມທີ່ອາດຈະເກີດຂຶ້ນໃນອະນາຄົດ). ການຄາດ ຄະເນກະແສເງິນສົດໃນອະນາຄົດຂອງເງິນກູ້ຢືມໃຫ້ແກ່ລູກຄ້າພາຍໃຕ້ການຈັດປະເພດເງິນໃຫ້ກູ້ຢືມທີ່ບໍ່ເກີດດອກອອກຜົນ ຄິດໄລ່ ຈາກ 40% ຂອງມູນຄ່າຫຼັກຊັບຄ້ຳປະກັນທີ່ປະເມີນໂດຍຜູ້ປະເມີນພາຍໃນ ປະກອບກັບການພິຈາລະນາໄລຍະເວລາທີ່ຄາດວ່າ ຈະຂາຍຫຼັກຊັບຄ້ຳປະກັນ ແລະ ຄາດຄະເນກະແສເງິນສົດ

ໃນອະນາຄົດພາຍໃຕ້ການຈັດປະເພດເງິນກູ້ຢືມທີ່ເກີດດອກອອກຜົນ ທີ່ໄດ້ມາຈາກການເກັບຄືນເງິນຕົ້ນ ແລະ ດອກເບ້ຍ ຕະຫຼອດອາຍຸການຂອງສັນຍາປະກອບກັບການພິຈາລະນາ ອັດຕາການກູ້ຄືນທີ່ຄາດວ່າຈະນຳໃຊ້ອັດຕາເກຣດ A 99% ແລະ B 97%-95%) ບວກ 20% ຂອງມູນຄ່າຄ້ຳປະກັນທີ່ປະເມີນໂດຍຜູ້ປະເມີນພາຍໃນ.

ຍອດທີ່ບັນທຶກບັນຊີຂອງຊັບສິນແມ່ນຫຼຸດລົງຍ້ອນນຳໃຊ້ບັນຊີຄ່າເສື່ອມ ແລະ ຍອດທີ່ຫຼຸດລົງແມ່ນຖືກຮັບຮູ້ເປັນລາຍຈ່າຍ ສູນເສຍສິນເຊື່ອໃນໃບລາຍງານຜົນໄດ້ຮັບ. ລາຍຮັບດອກເບ້ຍຈະຖືກສືບຕໍ່ຄິດໄລ່ຕາມຍອດຍົກມາທີ່ຫຼຸດລົງ ແລະ ຖືກຄິດໄລ່ໂດຍ ນຳໃຊ້ອັດຕາດອກເບ້ຍຫຼຸດຄ່າກະແສເງິນສົດໃນອະນາຄົດເພື່ອ ປະເມີນຄ່າເສື່ອມ. ລາຍຮັບດອກເບ້ຍຖືກລົງບັນຊີໃນ “ລາຍຮັບ ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ”.

ເງິນກູ້ພ້ອມກັບລາຍຈ່າຍທີ່ຕິດພັນຈະຖືກສະສາງອອກ ເມື່ອທະນາຄານໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອ ຫຼັກຊັບຄ້ຳປະກັນຖືກໂອນໃຫ້ທະນາຄານ. ຖ້າໃນປີຕໍ່ມາ, ຄ່າເສື່ອມໜີ້ເສຍຈະເພີ່ມຂຶ້ນ ຫຼື ຫຼຸດລົງຍ້ອນວ່າມີເຫດການ ເກີດ ຂຶ້ນຫຼັງຈາກໄດ້ ຫັກຄ່າເສື່ອມ, ຄ່າເສື່ອມໜີ້ເສຍທີ່ຖືກຫັກໄວ້ກ່ອນໜ້ານີ້ຈະເພີ່ມຂຶ້ນ ຫຼື ຫຼຸດລົງໂດຍການດັດແກ້ໃນບັນຊີລາຍຈ່າຍ, ຖ້າໃນອະນາຄົດຈະສາມາດເກັບຄືນໄດ້ ມູນຄ່າທີ່ເກັບຄືນໄດ້ນັ້ນຈະຖືກລົງບັນຊີເບື້ອງມີໃນລາຍຮັບ.

ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ ແມ່ນມູນຄ່າໃນປະຈຸບັນຕາມອັດຕາດອກເບ້ຍຕາມສັນຍາ ຊັບສິນການເງິນ. ຖ້າທະນາຄານໄດ້ຈັດປະເພດຊັບສິນການຄ້າເປັນເງິນກູ້ ແລະ ເງິນລ່ວງໜ້າ, ອັດຕາສ່ວນຫຼຸດສຳລັບຄິດໄລ່ຄ່າ ເສື່ອມແມ່ນອັດຕາດອກເບ້ຍທີ່ແທ້ຈິງໃໝ່ທີ່ພິຈາລະນາໃນວັນທີຈັດປະເພດຄືນໃໝ່.

ການຄິດໄລ່ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດ ທີ່ຄາດຄະເນໄວ້ຂອງຫຼັກຊັບຄ້ຳປະກັນ ມີຜົນກະທົບຕໍ່ກະແສ ເງິນສົດ ຊຶ່ງອາດເປັນຜົນມາຈາກຫຼັກຊັບຄ້ຳປະກັນທີ່ຍຶດມາໄດ້ລົບໃຫ້ຕົ້ນທຶນຂອງຫຼັກຊັບຄ້ຳປະກັນທີ່ໄດ້ຮັບ ແລະ ຂາຍ ບໍ່ ວ່າການຍຶດຫຼັກຊັບຈະເປັນໄປໄດ້ ຫຼື ບໍ່ກໍ່ຕາມ.

ຮູບແບບການເສື່ອມມູນຄ່າເປັນກຸ່ມ

ເພື່ອຈຸດປະສົງໃນການປະເມີນຄ່າເສື່ອມເປັນກຸ່ມ, ຊັບສິນການເງິນແມ່ນຖືກຈັດເປັນກຸ່ມ ຕາມລັກສະນະຄວາມສ່ຽງທີ່ຄ້າຍຄືກັນ ຊຶ່ງເປັນຕົວຊີ້ວັດຄວາມສາມາດຂອງລູກໜີ້ໃນການຈ່າຍເງິນຈຳນວນທັງໝົດອີງຕາມເງື່ອນໄຂໃນສັນຍາ (ຕົວຢ່າງເຊັ່ນ, ອີງຕາມພື້ນຖານຂອງການປະເມີນຜົນຄວາມສ່ຽງການປ່ອຍສິນເຊື່ອ ຫຼື ການໃຫ້ຄະແນນ).

ກະແສເງິນສົດໃນອະນາຄົດຂອງກຸ່ມຊັບສິນທາງການເງິນທີ່ຖືກປະເມີນຜົນລວມ ສຳລັບຄ່າເສື່ອມມູນຄ່າແມ່ນຖືກຄາດຄະເນບົນພື້ນຖານຂອງປະສົບການດ້ານການສູນເສຍທີ່ຜ່ານມາ ສຳລັບຊັບສິນທີ່ມີຄຸນລັກສະນະຄວາມສ່ຽງດ້ານສິນເຊື່ອຄ້າຍຄືກັນກັບໃນກຸ່ມ. ປະສົບການດ້ານການສູນເສຍທີ່ຜ່ານມາແມ່ນຖືກປັບປຸງບົນພື້ນຖານຂອງຂໍ້ມູນທີ່ສັງເກດໄດ້ໃນປະຈຸບັນເພື່ອສະທ້ອນເຖິງຜົນກະທົບຂອງສະພາບການໃນປະຈຸບັນທີ່ອີງຕາມປະສົບການດ້ານການສູນເສຍທີ່ຜ່ານມາ ແລະ ເພື່ອກຳຈັດຜົນກະທົບຂອງເງື່ອນໄຂຕ່າງໆໃນໄລຍະທີ່ຜ່ານມາທີ່ບໍ່ມີຢູ່.

ການຄາດຄະເນຂອງການປ່ຽນແປງຂອງກະແສເງິນສົດໃນອະນາຄົດສະທ້ອນ ແລະ ສອດຄ່ອງກັບທິດທາງການປ່ຽນແປງຂໍ້ມູນທີ່ສັງເກດຈາກແຕ່ລະໄລຍະ (ເຊັ່ນ: ການປ່ຽນແປງຂອງອັດຕາການຫວ່າງງານ, ການເປັນໜີ້ສ່ວນບຸກຄົນ, ມູນຄ່າຊັບສິນລວມ ທັງລາຄາຊັບສິນ ສຳລັບການຈຳນອງ, ລາຄາສິນຄ້າ, ສະຖານະການຊຳລະ ຫຼື ປັດໃຈອື່ນໆ ທີ່ ແມ່ນຕົວຊີ້ບອກຂອງການສູນເສຍທີ່ເກີດຂຶ້ນໃນກຸ່ມ ແລະ ຂະໜາດຂອງພວກເຂົາ). ວິທີການ ແລະ ຂໍ້ສົມມຸດທີ່ໃຊ້ໃນການຄາດຄະເນກະແສເງິນສົດໃນອະນາຄົດແມ່ນຖືກທົບທວນເປັນປົກກະຕິ ເພື່ອຫຼຸດຜ່ອນຄວາມແຕກຕ່າງລະຫວ່າງການຄາດຄະເນການສູນເສຍແລະປະສົບການການສູນເສຍຕົວຈິງ.

3.8.2 ການເສື່ອມມູນຄ່າຂອງການລົງທຶນທາງການເງິນມີໄວ້ເພື່ອຂາຍ

ທະນາຄານຍັງໄດ້ບັນທຶກຄ່າເສື່ອມຕ່ຳການລົງທຶນທີ່ມີໄວ້ເພື່ອຂາຍ ເມື່ອເກີດການຫຼຸດລົງທີ່ສຳຄັນ ຫຼື ການຫຼຸດລົງ ໃນມູນຄ່ຍຸຕິທຳທີ່ຕ່ຳກວ່າຕົ້ນທຶນ ຂໍ້ກຳນົດທີ່ ‘ສຳຄັນ’ ຫຼື ‘ຍາວນານ’ ຕ້ອງຖືກພິຈາລະນາ, ການພິຈາລະນາດັ່ງກ່າວນີ້ ທະນາຄານປະເມີນລະຫວ່າງຫຼາຍປັດໄຈ ແລະ ການເໜັງຕີງຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ກຳນົດຂອບເຂດຂອງມູນຄ່ຍຸຕິທຳທີ່ຕ່ຳກວ່າຕົ້ນທຶນ.

3.8.3 ການປະເມີນມູນຄ່າຫຼັກຊັບຄ้ຳປະກັນ

ທະນາຄານຊອກຫາວິທີທີ່ຈະນຳໃຊ້ຫຼັກຊັບຄ้ຳປະກັນ, ຖ້າເປັນໄປໄດ້, ເພື່ອຫຼຸດຜ່ອນຄວາມສ່ຽງຂອງຊັບສິນການເງິນ. ຫຼັກຊັບຄ้ຳປະກັນອາດເປັນໄດ້ຫຼາຍຮູບແບບ ເຊັ່ນ: ເງິນສົດ, ຫຼັກຊັບ, ໜັງສືສິນເຊື່ອ/ໜັງສືຄ้ຳປະກັນ, ອະສັງຫາລິມະຊັບ, ໜີ້ຕ້ອງຮັບ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການຍົກລະດັບສິນເຊື່ອ ເຊັ່ນ ຂໍ້ຕົກລົງທີ່ຮັດກຸມ. ໂດຍທົ່ວໄປ, ມູນຄ່ຍຸຕິທຳຂອງຫຼັກຊັບຄ้ຳປະກັນແມ່ນຖືກປະເມີນໃນມູນຄ່ຕ່ຳສຸດໃນ ມື້ເລີ່ມຕົ້ນ ແລະ ກຳນົດເວລາການລາຍງານປະຈຳປີຂອງທະນາຄານ.

ເພື່ອກຳນົດຂອບເຂດທີ່ຄວນເປັນໄປໄດ້ ທະນາຄານໄດ້ນຳໃຊ້ຂໍ້ມູນຕາມທ້ອງຕະຫຼາດສຳລັບປະເມີນຊັບສິນ ການເງິນ ທີ່ໃຊ້ເປັນຫຼັກຊັບຄ้ຳປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດກຳນົດມູນຄ່າຕາມທ້ອງຕະຫຼາດ ຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫຼັກຊັບຄ้ຳປະກັນທີ່ບໍ່ແມ່ນທາງການເງິນເຊັ່ນ: ອະສັງຫາລິມະຊັບ ຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກພາກສ່ວນພາຍນອກ (ຖ້າມີ) ເຊັ່ນ: ນາຍໜ້າ, ດັດສະນີລາຄາທີ່ພັກອາໄສ, ບົດລາຍງານການເງິນທີ່ຖືກກວດສອບແລ້ວ ແລະ ແຫຼ່ງຂໍ້ມູນທີ່ໜ້າເຊື່ອຖືອື່ນໆ.

3.8.4 ຫຼັກຊັບຄ้ຳປะกันที่ถืกยึด

ນะโยบายทะนาคานแม่นกำนิดอ่าชับสินที่ยึดมา สามาดนำใช้เข้ำในกานดำเนินกิดจะกานพายในของทะนาคาน ซึ่ ถอนจะขาย. ชับสินที่เป้นปะโทยดสำลับกานดำเนินงานพายในจะถืกโอนเข้ำไปเป้นชับสินตามแต่ละปะเพดที่ก่ຽอข้อง เซิ่งจะถืกติมูนค่าหุดลิงจากมูนค่าที่ยึดมา ซึ่ ยอดบันทึกบันชีของชับสินที่ถืกค้ำปะกัน. ชับสินที่ถืกกำนิดอ่าจะขายออกจะถืกโอนเป้นชับสินมีไว้สำลับขาย และ ถืกติมูนค่าตามมูนค่าติอจิงนะมื้ที่ยึดชับสินโดยสอดค่องกับนะโยบายของทะนาคาน.

3.9 กานหักล้างเถื่องมือทางกานเงิน

ชับสิน และ หนี้สินทางกานเงินแม่นถืกหักล้างกัน และ มูนค่าสุดทิจะถืกลายงานในใบลายงานถานะกานเงิน, ถ้ำหากอ่า ทะนาคานถืกบังคับทางกิดหมายให้สะสางจำนอนเงินดั่งก่าอนั้น และ ทะนาคานตั้งใจจะสะสางในมูนค่าสุดที ซึ่ ขายชับสินเพื่อชำละหนี้สินในเอลาดຽวกัน. นี้บ่แม่นกໍละนิที่อ่ไปในข้อติกลิงอ่าด้วยกานหักล้างละหว่าง ชับสิน และ หนี้สิน ที่ก่ຽวข้องได้ถืกสะแดงมูนค่าลอมในใบลายงานถานะกานเงิน.

3.10 ชับสิมบัดถิงที่ และ อุปะกอน

ชับสิมบัดถิงที่ และ อุปะกอน แม่นได้ลายงาน ตามต้นทึนของกานบໍลิกานมื้ต่ำมื้ ลิบค่าหลุ้ยห้ຽมสะสิม และ ค่าเสื่อมสะสิม. กานป่ຽนแปง ของอายุกานนำใช้ แม่นได้ลิงบันชีตามกานป่ຽนแปงของไลยะกานเสื่อมค่า ซึ่ อิทิหักค่าเสื่อมตามถอามเหมาะสิม และ เธ็ดให้มีกานป่ຽนแปงตามกานถาดถะเนทางกานบันชี.

ค่าหุ้ยห้ຽมถืกคิดไล่อิงตามพื้นถานกานคิดไล่ค่าหุ้ยห้ຽมแบบสะเหมิติอ เพื่อหุดต้นทึนของชับสิมบัด และ อุปะกอนให้ถืกตามมูนค่าที่ยังเหืออติอจิงตามอายุกานใช้งาน. อายุกานนำใช้ที่ได้ถาดถะเนแม่นมิดั่ง ลุ่มนี้:

อาถาน & ส่อมปับปุง	5%-10%
เถื่องใช้ห้องกาน	20%
เฟินิเจ้ & กานติดตั้ง	20%
ยานพาหะนะ	20%

ชับสิมบัดถิงที่ และ อุปะกอนจะบ่ถืกธับธู้เมื่อมิกานสะสางออก ซึ่ เมื่อเห้นอ่าบ่มิผินปะโทยดต่ำทุละกิด ในอะนาคิดจากกานนำใช้ชับสิมบัด และ อุปะกอนดั่งก่าอ. กำไล ซึ่ ขาดทึนที่เกิดจากกานสะสางชับสิมบัด (คิดไล่ได้ละหว่างมูนค่าสะสางออก และ มูนค่ายังเหือของชับสิมบัด) แม่นถืกธับธู้เป้น “ลายธับจากกานดำเนินงานอื่นๆ’ ในใบลายงานผินได้ธับของปิที่ชับสิมบัดได้ถืกสะสางออก.

3.11 ชับสิมบัดถิงที่บ่มิติอติน

ชับสิมบัดถิงที่บ่มิติอตินของทะนาคานปะกอบด้อย สิดนำใช้ที่ดิน และ ซ้อบแอ.

ຊັບສິນບັດຖີ່ທີ່ບໍ່ມີຕົວຕົນຖືກຮັບຮູ້ເມື່ອຕົ້ນທຶນຂອງຊັບສິນບັດຖີ່ທີ່ສາມາດປະເມີນໄດ້ຢ່າງແນ່ນອນ ແລະ ມັນຈະສາມາດສ້າງຜົນປະໂຫຍດໃຫ້ແກ່ທະນາຄານໃນອະນາຄົດ.

ຊັບສິນບັດຖີ່ທີ່ບໍ່ມີຕົວຕົນທີ່ທະນາຄານຍຶດມາໄດ້ຈະຖືກປະເມີນມູນຄ່າຕົ້ນທຶນເບື້ອງຕົ້ນ. ຕົ້ນທຶນຂອງຊັບສິນບັດຖີ່ທີ່ບໍ່ມີຕົວຕົນທີ່ໄດ້ມາ ຈາກການລວມທຸລະກິດຈະຖືກຮັບຮູ້ຕາມມູນຄ່າຍຸຕິທຳໃນມື້ທີ່ໄດ້ມາ. ຕໍ່ຈາກນັ້ນ, ຊັບສິນບັດຖີ່ທີ່ບໍ່ ມີຕົວຕົນຈະຖືກຮັບຮູ້ ໂດຍການເອົາຕົ້ນທຶນລົບໃຫ້ຄ່າເສື່ອມສະສົມ.

ອາຍຸການນຳໃຊ້ຂອງຊັບສິນທີ່ບໍ່ມີຕົວຕົນ ແມ່ນໄດ້ຖືກປະເມີນໂດຍຈັດເປັນ ມີກຳນົດ ແລະ ບໍ່ມີກຳນົດ. ຊັບສິນບັດຖີ່ທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນຖືກຫັກຄ່າເສື່ອມຕາມອາຍຸການນຳໃຊ້. ໄລຍະຂອງການຫັກຄ່າເສື່ອມ ແລະ ວິທີ ການຫັກຄ່າເສື່ອມສຳລັບຊັບສິນບັດຖີ່ທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ກຳນົດຈະຖືກທົບທວນຄືນເປັນຢ່າງນ້ອຍສຸດໃນທ້າຍປີ ການບັນຊີ. ການປ່ຽນແປງອາຍຸການນຳໃຊ້ຄາດຄະເນແມ່ນຈະໄດ້ລົງບັນຊີເປັນການປ່ຽນແປງໄລຍະ ແລະ ວິທີຂອງການຫັກຄ່າ ເສື່ອມ, ຕາມຄວາມເໝາະສົມ ແລະ ຖືເປັນການປ່ຽນແປງການຄາດຄະເນໃນບັນຊີ. ລາຍຈ່າຍກ່ຽວກັບ ການຫັກຄ່າເສື່ອມຂອງ ຊັບສິນບັດຖີ່ທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນໄດ້ຖືຮັບຮູ້ໃນໃບລາຍງານຜົນໄດ້ຮັບ ໃນໝວດຂອງລາຍຈ່າຍທີ່ ພົວພັນກັບຊັບສິນບັດຖີ່ທີ່ທີ່ບໍ່ມີຕົວຕົນ.

ຄ່າເສື່ອມຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າເສື່ອມແບບສະໝ່ຳສະເໝີຕົວເພື່ອຫຼຸດຕົ້ນທຶນຂອງຊັບສິນທີ່ບໍ່ມີຕົວຕົນໃຫ້ ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອັດຕາຄາດຄະເນການຫັກຄ່າເສື່ອມມີດັ່ງນີ້:

ຊອບແວ	20% - 50%

ສິດໃນການນຳໃຊ້ທີ່ດິນຂອງທະນາຄານແມ່ນບໍ່ມີຄ່າເສື່ອມ ເນື່ອງຈາກສິດໃນການນຳໃຊ້ທີ່ດິນແມ່ນມີອາຍຸການນຳໃຊ້ແບບ ບໍ່ຈຳກັດ ແລະ ອອກໃຫ້ໂດຍລັດຖະບານຂອງ ສປປ ລາວ.

3.12 ຄ່າເສື່ອມຂອງຊັບສິນທີ່ບໍ່ແມ່ນທາງການເງິນ

ທະນາຄານປະເມີນນະມື້ເຮັດເອກະສານລາຍງານ ວ່າມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດ ສອບ ການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດ ທະນາຄານປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ ສາມາດເກັບກູ້ ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກ ມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸຕິທຳຂອງຊັບສິນ ຫຼື ມູນຄ່າຍຸຕິທຳຂອງຫົວໜ່ ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາຂອງຊັບສິນ ຫຼື ມູນຄ່າ ຂອງ CGU ຫຼາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫຼຸດລົງ ເພື່ອໃຫ້ໄດ້ມູນຄ່າປະຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫຼຸດກ່ອນອາກອນ ທີ່ສົ່ງຜົນຕໍ່ການປະເມີນມູນຄ່າຕາມທ້ອງຕະຫຼາດໃນປະຈຸບັນຂອງເງິນ ແລະ ຄວາມ ສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້.

ການຄິດໄລ່ຈະຖືກປະຕິບັດໂດຍເອົາຜົນຄູນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບ ບໍລິສັດໃນເຄືອ ຫຼື ຕົວຊີ້ບອກມູນຄ່າຍຸຕິທຳອື່ນໆ.

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງ ການ ເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫຼຸດລົງ. ຖ້າຫາກມີຕົວຊີ້ບອກ, ທະນາຄານຈະຄາດຄະເນ ຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ ຫຼື ຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ. ການເສື່ອມຄ່າຜ່ານມາຈະ ສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນ ມີການປ່ຽນແປງ ໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການ ເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປັ້ນຄືນແມ່ນຖືກກຳນົດຂຶ້ນ ສະນັ້ນ ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດຍົກມາທີ່ຖືກກຳນົດລົບໃຫ້ຄ່າຫລຸ້ຍຫ້ຽນ, ບໍ່ມີຄ່າເສື່ອມຂອງຊັບສິນໃນປີຜ່ານມາ. ການປັ້ນຄືນ ແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

3.13 ການຄ້ຳປະກັນທາງການເງິນ

ໂດຍທົ່ວໄປ ທະນາຄານໄດ້ໃຫ້ການຄ້ຳປະກັນທາງການເງິນ, ປະກອບມີ ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ ແລະ ໜັງສືຕອບ ຮັບ. ການຄ້ຳປະກັນທາງການເງິນແມ່ນຖືກຮັບຮູ້ ໃນໄລຍະເອກະສານລາຍງານການເງິນ (ພາຍໃຕ້ 'ໜີ້ສິນອື່ນໆ') ທີ່ມູນຄ່າຍຸຕິທຳ, ພ້ອມຄ່າທຳນຽມ.

ພາຍຫຼັງການຮັບຮູ້ໜີ້ສິນຂອງທະນາຄານພາຍໃຕ້ໜັງສືຄ້ຳປະກັນແມ່ນຄິດໄລ່ໂດຍເອົາມູນຄ່າທີ່ຮັບຮູ້ຫົ້ນຖານທີ່ສູງກວ່າ ລົບຄ່າເສື່ອມສະສົມທີ່ຮັບຮູ້ໃນໃບລາຍງານຜົນໄດ້ຮັບ ແລະ ການຄາດຄະເນລາຍຈ່າຍທີ່ດີທີ່ສຸດທີ່ຕ້ອງຊຳລະຕາມພັນທະທີ່ເກີດຂຶ້ນ ຈາກໜັງສືຄ້ຳປະກັນ.

ທຸກໆການເພີ່ມຂຶ້ນຂອງໜີ້ສິນທີ່ກ່ຽວຂ້ອງກັບການຄ້ຳປະກັນທາງການເງິນ ແມ່ນຖືກບັນທຶກໄວ້ໃນໃບລາຍງານຜົນໄດ້ຮັບ ສັງລວມ ໃນ 'ລາຍຈ່າຍເງິນແຮໜີ້ເສຍ'. ຄ່າທຳນຽມແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໃນ 'ລາຍຮັບສຸດທິຄ່າ ທຳນຽມ ແລະ ຄ່າບໍລິການ' ຕາມວິທີສະເໜີຕົວຕາມອາຍຸຂອງການຄ້ຳປະກັນ.

3.14 ສັນຍາເຊົ່າ

3.14.1. ສິດນຳໃຊ້ຊັບສິນ

ໃນມື້ເລີ່ມຕົ້ນເຮັດສັນຍາ, ທະນາຄານຈະປະເມີນວ່າສັນຍາແມ່ນເປັນສັນຍາເຊົ່າ, ຫຼືປະກອບມີເງື່ອນໄຂການເຊົ່າ ຫຼືບໍ່ ໂດຍ ອີງໃສ່ສັນຍາທີ່ບົ່ງບອກເຖິງຜູ້ໃຊ້ (ຜູ້ເຊົ່າ) ທີ່ມີສິດຄວບຄຸມການນຳໃຊ້ຊັບສິນທີ່ໄດ້ລະບຸໄວ້ເປັນໄລຍະເວລາໃດໜຶ່ງແລກປ່ຽນເພື່ອ ພິຈາລະນາ. ຖ້າສັນຍາປະກອບດ້ວຍສ່ວນປະກອບຂອງສັນຍາເຊົ່າຫຼາຍກວ່າໜຶ່ງລາຍການ ຫຼື ລວມກັນຂອງທຸລະກຳການໃຫ້ເຊົ່າ ແລະ ການບໍລິການ, ການພິຈາລະນາຈະຖືກຈັດສັນໃຫ້ແຕ່ລະສ່ວນຂອງສັນຍາເຊົ່າ ແລະ ສ່ວນທີ່ບໍ່ໄດ້ເຊົ່າຕາມຂໍ້ສະຫຼຸບ ແລະ ໃນ ການວັດແທກຄືນໃໝ່ຂອງສັນຍາແຕ່ລະຄັ້ງບົນພື້ນຖານຂອງລາຄາຂາຍແບບດ່ຽວ. ທະນາຄານຮວບຮວມອົງປະກອບຂອງການເຊົ່າ ແລະ ທີ່ບໍ່ແມ່ນການເຊົ່າໃນກໍລະນີທີ່ບໍ່ສາມາດແຍກສ່ວນປະກອບທີ່ບໍ່ແມ່ນການເຊົ່າອອກໄດ້.

ທະນາຄານຮັບຮູ້ສິດນຳໃຊ້ຊັບສິນໃນວັນທີເລີ່ມຕົ້ນຂອງສັນຍາເຊົ່າ (ຕົວຢ່າງ, ວັນທີທີ່ຊັບສິນທີ່ຕິດພັນສາມາດນຳໃຊ້ໄດ້). ສິດໃນການນຳໃຊ້ຊັບສິນແມ່ນຖືກວັດແທກດ້ວຍລາຄາຕົ້ນທຶນຫັກຄ່າເສື່ອມສະສົມ ແລະ ຂາດທຶນຈາກການເສື່ອມຄ່າ, ແລະ ດັດແກ້ສຳລັບການວັດແທກມູນຄ່າຄືນໃໝ່ ຂອງໜີ້ສິນການເຊົ່າ.

ຕົ້ນທຶນຂອງສິດໃນການນຳໃຊ້ຊັບສິນປະກອບມີໜີ້ສິນຕາມສັນຍາເຊົ່າທີ່ຖືກດັດແກ້ສຳລັບການຈ່າຍຄ່າເຊົ່າທີ່ເກີດຂຶ້ນໃນ ຫຼື ກ່ອນວັນທີ່ເລີ່ມຕົ້ນ, ບວກໃຫ້ຕົ້ນທຶນທາງກົງໃນເບື້ອງຕົ້ນ ແລະ ຄາດຄະເນລາຍຈ່າຍໃນ ການຮື້ຖອນ ຫຼື ຕິດຕັ້ງຄືນຂອງຊັບສິນດັ່ງກ່າວ ຫຼື ສະຖານທີ່ຕັ້ງ ຫັກສ່ວນຫຼຸດຈູງໃຈໃຫ້ເຊົ່າທີ່ໄດ້ຮັບ.

ໄລຍະເວລາຂອງການເຊົ່າລວມທັງໄລຍະເວລາທີ່ຄອບຄຸມທາງເລືອກ ໃນການຕໍ່ເວລາຖ້າທະນາຄານມີຄວາມເຊື່ອທີ່ແນ່ນອນຢ່າງສົມເຫດສົມຜົນໃນເລືອກທາງເລືອກດັ່ງກ່າວ. ເວັ້ນເສຍແຕ່ວ່າທະນາຄານ ມີຄວາມເຊື່ອທີ່ແນ່ນອນທີ່ຈະມີສິດເປັນເຈົ້າຂອງຊັບສິນທີ່ເຊົ່າໃນວັນທີສິ້ນສຸດຂອງສັນຍາເຊົ່າ, ສິດໃນການນຳໃຊ້ຊັບສິນທີ່ຖືກຮັບຮູ້ແມ່ນຖືກຫັກຄ່າເສື່ອມໂດຍວິທີເສັ້ນຊື່ຕາມອາຍຸການນຳໃຊ້ທີ່ສັ້ນກວ່າອາຍຸການນຳໃຊ້ ທີ່ຄາດຄະເນ ແລະ ອາຍຸສັນຍາເຊົ່າ. ສິດໃນການນຳໃຊ້ຊັບສິນແມ່ນຈະຖືກຄິດໄລ່ການເສື່ອມຄ່າ.

3.14.2 ໜີ້ສິນຕາມສັນຍາເຊົ່າ

ໃນວັນທີ ທີ່ເລີ່ມຕົ້ນຂອງການເຊົ່າ, ທະນາຄານໄດ້ຮັບຮູ້ ໜີ້ສິນທີ່ເກີດຈາກການເຊົ່າຖືກຕີມູນຄ່າຕາມມູນຄ່າ ປັດຈຸບັນຂອງການຈ່າຍຄ່າເຊົ່າຕາມໄລຍະເວລາຂອງການເຊົ່າ. ການຈ່າຍຄ່າເຊົ່າແມ່ນລວມເຖິງການຈ່າຍ ແບບຄົງທີ່ (ລວມທັງການຈ່າຍເປັນກຳມະສິດ) ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ, ການຈ່າຍຄ່າເຊົ່າຜັນແປ ເຊິ່ງຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ມູນຄ່າຄາດຄະເນວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າລວມເຖິງລາຄາການໃຊ້ສິດຂອງທາງເລືອກໃນການຊື້ທີ່ສົມເຫດສົມຜົນທີ່ທະນາຄານຈະຕ້ອງໃຊ້ ແລະ ການຈ່າຍຄ່າປັບໃໝສຳລັບການຍົກເລີກສັນຍາຫາກໄລຍະເວລາການເຊົ່າສະທ້ອນໃຫ້ເຫັນເຖິງການໃຊ້ສິດຂອງທະນາຄານໃນການຍົກເລີກ. ຄ່າເຊົ່າຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນຊ່ວງເວລາທີ່ເຫດການ ຫຼື ເງື່ອນໄຂທີ່ເຮັດໃຫ້ເກີດມີການຊຳລະ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງຄ່າເຊົ່າ, ທະນາຄານນຳໃຊ້ອັດຕາດອກເບ້ຍເງິນກູ້ຢືມສ່ວນເພີ່ມໃນມື້ທີ່ ເລີ່ມການເຊົ່າ ຖ້າຫາກວ່າອັດຕາດອກເບ້ຍໃນການເຊົ່າບໍ່ສາມາດຫາໄດ້ໂດຍງ່າຍ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ມູນຄ່າຂອງໜີ້ສິນທີ່ເກີດຈາກການເຊົ່າແມ່ນຖືກເພີ່ມຂຶ້ນຕາມການເພີ່ມຂຶ້ນຂອງດອກເບ້ຍ ແລະ ຫຼຸດລົງສຳລັບຄ່າເຊົ່າທີ່ຕ້ອງຈ່າຍ. ນອກຈາກນີ້ ມູນຄ່າຕາມບັນຊີຂອງໜີ້ສິນທີ່ເກີດຈາກການເຊົ່າຈະຖືກຮັບຮູ້ ກໍຕໍ່ເມື່ອມີການປ່ຽນແປງໃນສ່ວນຂອງໄລຍະເວລາຂອງການຈ່າຍຄ່າເຊົ່າແບບຄົງທີ່ ທີ່ມີເນື້ອຫາສຳຄັນ ຫຼື ການປ່ຽນແປງ ທາງດ້ານການປະເມີນເພື່ອຊື້ຊັບສິນ.

3.14.3 ການເຊົ່າຊັບສິນໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ

ທະນາຄານນຳໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າໄລຍະສັ້ນທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ເລີ່ມຕົ້ນ ແລະ ບໍ່ມີຕົວເລືອກໃນການຊື້. ນອກຈາກນີ້ ຍັງໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ມາເປັນການເຊົ່າຊັບສິນທີ່ຖືກພິຈາລະນາໃຫ້ເປັນມູນຄ່າຕ່ຳ. ການຈ່າຍຄ່າເຊົ່າ ສຳລັບການເຊົ່າທີ່ມີໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ແມ່ນຖືກຮັບຮູ້ເປັນຄ່າໃຊ້ຈ່າຍຕາມວິທີເສັ້ນຊື່ຕາມອາຍຸສັນຍາເຊົ່າ.

3.15 ພັນປະໂຫຍດຂອງພະນັກງານ

ພັນປະໂຫຍດພາຍຫຼັງອອກການ

ພັນປະໂຫຍດພາຍຫຼັງອອກການ ຈະຈ່າຍໃຫ້ແກ່ພະນັກງານທີ່ກະສຽນອາຍຸຂອງພະນັກງານຂອງທະນາຄານ ເມື່ອເວລາທີ່ກະສຽນອາຍຸ ໂດຍເອົາຈຳນວນວັນ ເທົ່າກັບ (ເງິນເດືອນພື້ນຖານຄັ້ງລ່າສຸດ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ (ຖ້າມີ) + 25% ຂອງພັນປະໂຫຍດອື່ນໆ) x 1,5 x ປີການເຮັດວຽກ.

ກອງທຶນເພື່ອພັນປະໂຫຍດພາຍຫຼັງອອກການ ແມ່ນມາຈາກ:

(i) ຄັງສຳຮອງກະສຽນອາຍຸທີ່ຮັບຈາກພະນັກງານ ເຊິ່ງທະນາຄານໄດ້ຫັກເງິນເດືອນຂອງພະນັກງານ (5,5%) ຂອງ ຈຳນວນເງິນ (ເທົ່າກັບເງິນເດືອນພື້ນຖານ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ + 25% ຂອງພັນປະໂຫຍດອື່ນໆ); ແລະ
(ii) ເງິນສົມທົບຈາກທະນາຄານເປັນລາຍເດືອນ ເຊິ່ງເທົ່າກັບ 6% ຂອງຈຳນວນເງິນ (ເທົ່າກັບ ເງິນເດືອນພື້ນຖານ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ + 25% ຂອງພັນປະໂຫຍດອື່ນໆ);

ທະນາຄານໄດ້ບັນທຶກເງິນສົມທົບເປັນ'ເງິນເດືອນແລະຄ່າໃຊ້ຈ່າຍພະນັກງານອື່ນໆ' ເຂົ້າໃນໃບລາຍງານພັນການດຳເນີນງານ ເມື່ອມີການຈ່າຍເງິນດັ່ງກ່າວ. ພາລະຜູກພັນກ່ຽວກັບພັນປະໂຫຍດຂອງພະນັກງານ ຄິດໄລ່ເປັນລາຍປີໂດຍຜູ້ບໍລິຫານໃຊ້ວິທີຄິດໄລ່ແບບສ່ວນຫຼຸດແຕ່ລະຫົວໜ່ວຍ ມູນຄ່າປັດຈຸບັນສຸດທິຂອງພາລະຜູກພັນພັນປະໂຫຍດຂອງພະນັກງານ ຖືກຄິດໄລ່ໂດຍນຳໃຊ້ສ່ວນຫຼຸດຂອງກະແສເງິນສົດໃນອະນາຄົດທີ່ຄາດການໄວ້ ໂດຍໃຊ້ອັດຕາພັນຕອບແທນທາງຕະຫຼາດຂອງພັນທະບັດລັດຖະບານທີ່ສອດຄ່ອງກັບເວລາທີ່ຄາດການໄວ້ ແລະ ສະກຸນເງິນຂອງກະແສເງິນສົດໄຫຼອອກທີ່ຄາດການໄວ້.

ໃນເດືອນ ຕຸລາ ປີ 2022, ທາງທະນາຄານໄດ້ມີເຂົ້າຮ່ວມກອງທຶນປະກັນສັງຄົມ ໂດຍທາງທະນາຄານຕ້ອງຈ່າຍເງິນສົມທົບໃນອັດຕາ 6% ຂອງເງິນເດືອນພື້ນຖານຕໍ່ເດືອນເຂົ້າກອງທຶນປະກັນສັງຄົມ ແລະທະນາຄານຍັງຄົງຈ່າຍເງິນພັນປະໂຫຍດພາຍຫຼັງອອກການຕາມທີ່ກ່າວໄວ້ຂ້າງເທິງ.

ພັນປະໂຫຍດຈາກການເລີກຈ້າງ

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ທະນາຄານມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ແຂງແຮງ ແລະ ບໍ່ສາມາດສືບຕໍ່ເຮັດ ວຽກໄດ້;

- ກໍລະນີທະນາຄານພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງການເຮັດວຽກພາຍໃນອົງກອນ

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານ ໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານກ່ອນການເລີກຈ້າງ.

ໃນວັນທີ 31 ທັນວາ 2022, ບໍ່ມີພະນັກງານທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ທະນາຄານ ບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

3.16 ເງິນແຮ

ເງິນແຮ ຈະຖືກຮັບຮູ້ກໍຕໍ່ເມື່ອທະນາຄານມີພັນທະ (ທາງດ້ານກົດໝາຍ ຫຼື ຕາມການຕົກລົງ) ເນື່ອງມາ ຈາກເຫດການທີ່ ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວ ຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ທະນາຄານກຳນົດລະດັບເງິນແຮດ້ວຍວິທີຄິດໄລ່ອັດຕາສ່ວນຫຼຸດ ກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນການພາສີ ເຊິ່ງແມ່ນອັດຕາການປັດຈຸບັນທີ່ກຳນົດໄວ້ສະເພາະກັບ ໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນໄດ້ຮັບສັງລວມພາຍຫຼັງໄດ້ຮັບເງິນຄືນ.

3.17 ອາກອນກຳໄລ

ອາກອນພາຍໃນປີ

ຊັບສິນ ແລະ ໜີ້ສິນອາກອນພາຍໃນໄລຍະ ສຳລັບປີປະຈຸບັນ ແລະ ປີກ່ອນ ແມ່ນຖືກຕີມູນຄ່າຕາມຈຳນວນທີ່ຄາດວ່າຈະ ເກັບຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນແມ່ນມີຜົນ ສັກສິດນຳໃຊ້ໃນມື້ສ້າງໃບລາຍງານຖານະການເງິນ ພາຍໃນປະເທດທີ່ທະນາຄານດຳເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງ ເສຍອາກອນ.

ອາກອນລາຍໄດ້ພາຍໃນໄລຍະທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີທຶນແມ່ນຖືກຮັບຮູ້ໃນທຶນເຈົ້າຂອງ ແລະ ບໍ່ໄດ້ ມີການບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຜູ້ບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະໂດຍອີງ ຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

ອາກອນເຍື່ອນຊຳລະ

ອາກອນຊັບສິນເຍື່ອນຊຳລະແມ່ນຖືກຄິດໄລ່ ຈາກສ່ວນຜິດຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ອາກອນໜີ້ສິນເຍື່ອນຊຳລະແມ່ນຖືກຮັບຮູ້ເປັນສ່ວນຕ່າງ ອາກອນຊົ່ວຄາວ, ຍົກເວັ້ນເມື່ອອາກອນໜີ້ສິນເຍື່ອນຊຳລະເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນ ການເຄື່ອນໄຫວທີ່ບໍ່ແມ່ນການສັງລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທີ່ຖືກອາກອນ.

ຍອດຍົກມາຂອງອາກອນຊັບສິນເຍື່ອນຊຳລະ ແລະອາກອນໜີ້ສິນເຍື່ອນຊຳລະແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫຼຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງອາກອນຊັບສິນເຍື່ອນຊຳລະ ແລະອາກອນໜີ້ສິນເຍື່ອນຊຳລະຈະຖືກອະນຸຍາດໃຫ້ຫັກ. ອາກອນຊັບສິນເຍື່ອນຊຳລະທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ອາກອນຊັບສິນເຍື່ອນຊຳລະສາມາດຫັກອອກໄດ້.

ອາກອນຊັບສິນເຍື່ອນຊຳລະ ແລະອາກອນໜີ້ສິນເຍື່ອນຊຳລະແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ພາຍໃນປີ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍວ່າດ້ວຍ ສ່ວຍສາອາກອນ) ທີ່ປະກາດນຳໃຊ້ກ່ອນໜ້າ ຫຼື ປະກາດໃຊ້ນະວັນທີໃບລາຍງານຖານະການເງິນ.

ອາກອນໃນປະຈຸບັນ ແລະ ອາກອນເຍື່ອນຊຳລະຖືກຮັບຮູ້ໃນ ໃນກຳໄລ ຫລື ຂາດທຶນ, ຍົກເວັ້ນໃນສ່ວນທີ່ກ່ຽວຂ້ອງກັບລາຍການທີ່ຮັບຮູ້ ໃນ ໃບລາຍງານຜົນໄດ້ຮັບລວມ ຫຼື ໂດຍກົງໃນທຶນ. ໃນກໍລະນີນີ້, ອາກອນຍັງຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບອື່ນ ຫຼື ໂດຍກົງໃນທຶນ ຕາມລຳດັບ.

ອາກອນຊັບສິນເຍື່ອນຊຳລະ ແລະອາກອນໜີ້ສິນເຍື່ອນຊຳລະ ຈະຖືກສະແດງຫັກລ້າງກັນ ເມື່ອມີສິດຕາມກົດໝາຍທີ່ຈະນຳອາກອນຊັບສິນເຍື່ອນຊຳລະ ແລະອາກອນໜີ້ສິນເຍື່ອນຊຳລະ ມາຫັກລ້າງກັນກັບໜີ້ຕ້ອງສົ່ງອາກອນຂອງປີປະຈຸບັນ ແລະ ທັ້ງອາກອນຊັບສິນ ແລະໜີ້ສິນເຍື່ອນຊຳລະກ່ຽວຂ້ອງກັບອາກອນກຳໄລທີ່ຖືກປະເມີນໂດຍໜ່ວຍງານສ່ວຍສາອາກອນດຽວກັນເຊິ່ງຕັ້ງໃຈຈະຈ່າຍໜີ້ຕ້ອງຮັບ ແລະ ຫນີ້ຕ້ອງສົ່ງອາກອນຂອງປີປະຈຸບັນ ໂດຍຍອດສຸດທິ.

3.18 ຄັງສະສົມຕາມລະບຽບການ

ອີງຕາມຂໍ້ກຳນົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດສະບັບລົງວັນທີ 7 ທັນວາ 2018, ທະນາຄານທຸລະກິດຈຳເປັນຕ້ອງໄດ້ແບ່ງກຳໄລສຸດທິທີ່ເໝາະສົມເພື່ອປະຕິບັດຕາມການສຳຮອງ:

- ກອງທຶນສຳຮອງຕາມລະບຽບການ
- ກອງທຶນຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆ

ອີງຕາມມາດຕາ 156, ວ່າກົດໝາຍວິສາຫະກິດສະບັບລົງວັນທີ 26 ທັນວາ 2013, ທະນາຄານ ຕ້ອງແບ່ງ 10% ຂອງກຳໄລ ຫຼັງຈາກຫັກອາກອນໃນແຕ່ລະປີເຂົ້າໃນກອງທຶນສຳຮອງທີ່ກຳນົດໄວ້. ເມື່ອກອງທຶນສຳຮອງນີ້ຄົບເຖິງ 50% ຂອງທຶນຈົດທະບຽນ, ທະນາຄານອາດຈະຢຸດການສຳຮອງດັ່ງກ່າວ, ເວັ້ນເສຍແຕ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ. ທະນາຄານ ຈະບັນທຶກຫຼັງຈາກໄດ້ຮັບການອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນທົ່ວໄປ.

ກອງທຶນຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆຈະຖືກສ້າງຂຶ້ນຕາມການຕັດສິນໃຈຂອງສະພາບໍລິຫານ.

4. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງຂໍ້ສົມມຸດຖານ

ໃນການກະກຽມເອກະສານລາຍງານການເງິນຂອງທະນາຄານ, ຮຽກຮ້ອງໃຫ້ຄະນະບໍລິຫານຕ້ອງມີການພິຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວຂ້ອງ, ລວມ

ທັງການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາ ອາດຈະເຮັດໃຫ້ເກີດມີຄວາມຮຽກຮ້ອງຕ້ອງການດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງທະນາຄານ, ຄະນະບໍລິຫານໄດ້ເຮັດການປະເມີນ ແລະ ສົມມຸດຖານດັ່ງຕໍ່ໄປນີ້ ເຊິ່ງກ່ຽວຂ້ອງກັບອະນາຄົດ ແລະ ຄວາມບໍ່ແນ່ນອນການຄາດຄະເນໃນວັນທີລາຍງານ, ເຊິ່ງມີຄວາມສ່ຽງຫຼາຍ ແລະ ມີຜົນຕໍ່ການດັດແກ້ທີ່ສຳຄັນໃນຍອດທີ່ບັນທຶກບັນຊີຂອງຊັບສິນ ແລະ ໜີ້ສິນ ພາຍໃນໄລຍະການເງິນຕໍ່ໜ້າ. ສະພາບການ ແລະ ສົມມຸດຖານທີ່ມີຢູ່ກ່ຽວກັບການພັດທະນາໃນອະນາຄົດອາດຈະມີການປ່ຽນແປງເນື່ອງມາຈາກສະຖານະການທີ່ເໜືອການຄວບຄຸມຂອງທະນາຄານ ແລະ ມັນຖືກສະທ້ອນໃນຂໍ້ສົມມຸດຖານໃນເວລາທີ່ເກີດຂຶ້ນ. ລາຍການທີ່ມີຜົນກະທົບທີ່ສຳຄັນທີ່ສຸດໃນຍອດທີ່ຖືກຮັບຮູ້ໃນໃບລາຍງານການເງິນ ພ້ອມກັບການປະເມີນການບໍລິຫານທີ່ສຳຄັນ ແລະ/ຫຼື ການຄາດຄະເນ ແມ່ນຖືກປຽບທຽບຂ້າງລຸ່ມນີ້

4.1 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ

ວິທີອັດຕາດອກເບ້ຍທີ່ແທ້ຈິງຂອງທະນາຄານ, ຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກຳນົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາຄົງທີ່ ຕາມອາຍຸຂອງເງິນກູ້ ແລະ ເງິນຝາກ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍ ທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍລ່ວງໜ້າ, ຄ່າປັບໄໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງ ການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນສ່ວນສຳຄັນຂອງເຄື່ອງມື.

4.2 ການຂາດທຶນຈາກຄ່າເສື່ອມຂອງເງິນໃຫ້ກູ້ຢືມແກ່ລູກຄ້າ

ທະນາຄານໄດ້ມີການທົບທວນເງິນໃຫ້ກູ້ຢືມທີ່ສຳຄັນເປັນແຕ່ລະບຸກຄົນຕາມແຕ່ລະວັນທີລາຍງານ ເພື່ອປະເມີນວ່າການຂາດທຶນຈາກຄ່າເສື່ອມ ຄວນຖືກບັນທຶກລົງໃນໃບລາຍງານຜົນໄດ້ຮັບ ຫຼື ບໍ່.

ວິທີການປະເມີນຄ່າເສື່ອມຂອງທະນາຄານສຳລັບຊັບສິນທີ່ບັນທຶກໂດຍວິທີຫັກລົບຕົ້ນທຶນ ເປັນຜົນໃຫ້ມີການບັນທຶກເງິນແຮສຳລັບ:

- ການຂາດທຶນຈາກການເສື່ອມມູນຄ່າແບບລາຍບຸກຄົນສະເພາະຕາມຄວາມສຳຄັນ ຫຼື ສະເພາະລາຍການເຈາະຈົງ;

ການປະມານການນີ້ຈຳເປັນຕ້ອງໃຊ້ການຕັດສິນໃຈຂອງຝ່າຍບໍລິຫານ ໂດຍສະເພາະສຳລັບການປະມານຈຳນວນເງິນແລະໄລຍະເວລາຂອງກະແສເງິນສົດໃນອະນາຄົດ ແລະມູນຄ່າຫຼັກຊັບຄ້ຳປະກັນໃນການພິຈາລະນາການຂາດທຶນຈາກການເສື່ອມມູນຄ່າຂອງແຕ່ລະບຸກຄົນ. ການປະມານການນີ້ໄດ້ມາຈາກຫຼາຍໆປັດໄຈ ໂດຍການປ່ຽນແປງນີ້ອາດສົ່ງຜົນໃຫ້ເກີດຄວາມແຕກຕ່າງຂອງປະມານການຄ່າເສື່ອມ

- ການເສື່ອມມູນຄ່າໂດຍລວມ.

ການຂາດທຶນສຳລັບຊັບສິນທາງການເງິນທີ່ເປັນໄປຕາມຂໍ້ສົມມຸດຕິຖານ ກ່ຽວກັບຄວາມສ່ຽງຈາກການຜິດນັດ ຊຳລະໜີ້ ແລະອັດຕາການສູນເສຍ. ທະນາຄານອາດຈະຕ້ອງໃຊ້ການຕັດສິນໃຈໃນການຕັ້ງຂໍ້ສົມມຸດຕິຖານ ແລະ ເລືອກປັດໄຈທີ່ໃຊ້ໃນການຄຳນວນການເສື່ອມມູນຄ່າໂດຍພິຈາລະນາຈາກປະວັດໃນອະດີດຂອງທະນາຄານ ແລະສະພາບຕະຫຼາດທີ່ມີຢູ່ໃນວັນສິ້ນຮອບໄລຍະເວລາລາຍງານໃນແຕ່ລະຮອບ.

4.3 ການເສື່ອມມູນຄ່າຂອງຊັບສິນມີໄວ້ເພື່ອຂາຍ

ທະນາຄານທົບທວນຄືນຕາສານໜີ້ຂອງຕົນທີ່ຈັດປະເພດເປັນການລົງທຶນທີ່ມີໄວ້ເພື່ອຂາຍໃນແຕ່ລະວັນທີ່ລາຍງານເພື່ອປະເມີນວ່າພວກມັນໄດ້ເສື່ອມມູນຄ່າ ຫຼື ບໍ່.

ການປະເມີນຜົນດັ່ງກ່າວນີ້, ລວມທັງການຄາດຄະເນກະແສເງິນສົດໃນອະນາຄົດ ແລະ ຂໍ້ມູນທີ່ປະກອບເຂົ້າອື່ນໆເຂົ້າໃນຮູບແບບກະແສເງິນສົດແບບສ່ວນຫຼຸດ ແລະ ໃນກໍລະນີຂອງການທຶນ, ການຕີມູນຄ່າຂອງສິ່ງທີ່ເປັນ ‘ທີ່ສຳຄັນທຽບຖານ’ ຫຼື ‘ເປັນເວລາດົນ’ ແມ່ນຮຽກຮ້ອງໃຫ້ມີການຕັດສິນໃຈ. ໃນການຕັດສິນໃຈດັ່ງກ່າວນີ້, ທະນາຄານປະເມີນ, ໃນບັນດາ ປັດໄຈອື່ນໆ, ປະຫວັດການເຄື່ອນໄຫວຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ຂອບເຂດ ທີ່ມູນຄ່າຍຸຕິທຳຂອງການລົງທຶນແມ່ນຕ່ຳກວ່າຕົ້ນທຶນ.

4.4 ກຳນົດເງື່ອນໄຂສັນຍາເຊົ່າ

ການພິຈາລະນາທີ່ສຳຄັນໃນການກຳນົດໄລຍະເວລາຂອງການເຊົ່າ, ທະນາຄານຈະພິຈາລະນາທຸກໆຂໍ້ເທັດຈິງ ແລະ ສະພາບການທີ່ສ້າງແຮງຈູງໃຈທາງດ້ານເສດຖະກິດໃຫ້ໃຊ້ທາງເລືອກໃນການອາຍຸສັນຍາ, ຫຼືບໍ່ໃຊ້ທາງເລືອກໃນການຍົກເລີກສັນຍາ. ທາງເລືອກໃນການຕໍ່ອາຍຸສັນຍາ (ຫລື ໄລຍະຫຼັງຈາກຕົວເລືອກການຍົກເລີກສັນຍາ) ແມ່ນລວມຢູ່ໃນສັນຍາການເຊົ່າເທົ່ານັ້ນຖ້າວ່າສັນຍາເຊົ່າແມ່ນມີຄວາມສົມເຫດສົມຜົນທີ່ຈະໄດ້ຮັບການຕໍ່ອາຍຸສັນຍາ (ຫລືບໍ່ໝົດອາຍຸ).

ສຳລັບການເຊົ່າຊັບສິນ, ປັດໃຈທີ່ກ່ຽວຂ້ອງທີ່ສຸດແມ່ນໄລຍະເວລາເຊົ່າໃນອະດີດ, ຕົ້ນທຶນ ແລະ ສະພາບເງື່ອນໄຂຂອງຊັບສິນທີ່ເຊົ່າ.

ທາງເລືອກໃນການຕໍ່ເວລາສ່ວນໃຫຍ່ໃນການເຊົ່າຫ້ອງການ ແລະ ພາຫະນະບໍ່ໄດ້ຖືກລວມເຂົ້າໃນໜີ້ສິນສັນຍາເຊົ່າ, ເພາະວ່າທະນາຄານພິຈາລະນາ i) ສະພາບເງື່ອນໄຂຂອງຊັບສິນທີ່ຕິດພັນ ແລະ / ຫຼື ii) ຕົ້ນທຶນບໍ່ມີສາລະສຳຄັນ ເພື່ອທົດແທນຊັບສິນທີ່ເຊົ່າ.

ໄລຍະເວລາຂອງການເຊົ່າແມ່ນຖືກປະເມີນຄືນໃໝ່ ຖ້າວ່າທາງເລືອກໜຶ່ງຖືກປະຕິບັດຕົວຈິງ (ຫລືບໍ່ປະຕິບັດ) ຫຼື ທະນາຄານມີພາລະຜູກພັນທີ່ຈະຕ້ອງໃຊ້ສິດ (ຫລືບໍ່ປະຕິບັດ). ການປະເມີນຄວາມແນ່ນອນທີ່ສົມເຫດສົມຜົນຈະຖືກປັບປຸງໃໝ່ກໍ່ຕໍ່ເມື່ອມີເຫດການສຳຄັນ ຫຼື ການປ່ຽນແປງຢ່າງມີສາລະສຳຄັນໃນສະພາບການທີ່ມີຜົນກະທົບຕໍ່ການປະເມີນນີ້ເກີດຂຶ້ນ, ແລະ ຢູ່ໃນການຄວບຄຸມຂອງທະນາຄານ.

4.5 ກຳນົດອັດຕາສ່ວນຫຼຸດສຳລັບສັນຍາເຊົ່າ

ທະນາຄານປະເມີນອັດຕາດອກເບ້ຍການກູ້ຢືມມສ່ວນເພີ່ມຂອງຜູ້ເຊົ່າ ດັ່ງນີ້

- ໃຊ້ຂໍ້ມູນທີ່ການຈັດຫາເງິນທຶນຈາກບຸກຄົນທີ່ສາມຂອງແຕ່ລະກິດຈະການທີ່ເປັນຜູ້ເຊົ່າ ແລະ ປັບປຸງຂໍ້ມູນທີ່ໄດ້ຮັບໃຫ້ແທກເໝາະກັບການປ່ຽນແປງໃນທັດໄຈທາງດ້ານການເງິນຂອງຜູ້ເຊົ່າຫາກເປັນໄປໄດ້
- ປັບປຸງສັນຍາເຊົ່າໂດຍສະເພາະເຈາະຈົງ ເຊັ່ນ ອາຍຸສັນຍາເຊົ່າ, ສະກຸນເງິນ ແລະຫຼັກປະກັນ

5. ລາຍຮັບສຸດທິຈາກດອກເບ້ຍ

	2022	2021
	ລ້ານກີບ	**ລ້ານກີບ**
ລາຍຮັບດອກເບ້ຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງຈາກ:		
ເງິນກູ້ຢືມໃຫ້ກັບລູກຄ້າ	2.537.667	1.912.270
ການລົງທຶນໃນຫຼັກຊັບ	315.734	263.777
ເງິນຝາກຢູ່ທະນາຄານອື່ນໆ	262.725	55.786
ກິດຈະກຳອື່ນໆ	-	13.080
	3.116.126	**2.244.913**
ລາຍຈ່າຍດອກເບ້ຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ		
ສຳລັບ:		
ເງິນຝາກຈາກລູກຄ້າ	(1.604.004)	(1.291.278)
ເງິນຝາກຈາກທະນາຄານ	(241.239)	(201.038)
	(1.845.243)	**(1.492.316)**
ລາຍຮັບສຸດທິດອກເບ້ຍ	**1.270.883**	**752.597**

6. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	2022 ລ້ານກີບ	2021 ລ້ານກີບ
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	421.069	247.792
ທຸລະກຳທາງດ້ານການເງິນ	16.493	17.374
ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ	76.256	52.726
	513.818	**317.892**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ບໍລິການຊຳລະສະສາງ	(57.119)	(36.200)
ທຸລະກຳທາງດ້ານການເງິນ	(92.554)	(3.494)
	(149.673)	**(39.694)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**364.145**	**278.198**

7. ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ

	2022 ລ້ານກີບ	2021 ລ້ານກີບ
ກຳໄລສຸດທິຈາກການຊື້ຂາຍເງິນຕາ ແລະ ການຕີມູນຄ່າລາຍການທີ່ເປັນເງິນ	19.843.888	5.834.698
ຂາດທຶນຈາກການຊື້ຂາຍເງິນຕາ ແລະ ການຕີມູນຄ່າລາຍການທີ່ເປັນເງິນ	(19.882.042)	(5.830.785)
	(38.154)	**3.913**

8. ຂາດທຶນສຸດທິຈາກການຊື້-ຂາຍອະນຸພັນ

	2022 ລ້ານກີບ	2021 ລ້ານກີບ
ກຳໄລຈາກອະນຸພັນທາງການເງິນ	-	1.787
ຂາດທຶນຈາກອະນຸພັນທາງການເງິນ	-	(1.616)
	-	**171**

9. ລາຍຮັບອື່ນໆຈາກການດຳເນີນງານ

	2022 ລ້ານກີບ	2022 ລ້ານກີບ
ເກັບຄືນໜີ້ເສຍທີ່ຖືກສະສາງອອກ	79.983	156.784
ລາຍຮັບເງິນປັນຜົນ	1.918	3.835
ອື່ນໆ	39.359	19.766
	121.260	**180.385**

10. ລາຍຈ່າຍພະນັກງານ

	2022 ລ້ານກີບ	2021 ລ້ານກີບ
ເງິນເດືອນ	175.210	175.293
ເງິນບຳເນັດ ແລະ ເງິນອຸດໜູນອື່ນໆ	131.925	115.602
ຄ່າໃຊ້ຈ່າຍຜົນປະໂຫຍດຫຼັງການຈ້າງງານ	9.288	8.784
ຄ່າໃຊ້ຈ່າຍອື່ນໆຂອງພະນັກງານ	12.926	6.127
	329.249	**305.806**

11. ລາຍຈ່າຍອື່ນໆຈາກການດຳເນີນງານ

	2022 ລ້ານກີບ	2021 ລ້ານກີບ
ເບ້ຍປະກັນເງິນຝາກໃຫ້ກອງທຶນປົກປ້ອງຜູ້ຝາກເງິນ	66.506	48.435
ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການ	19.473	18.766
ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາ	23.698	19.060
ສາທາລະນຸປະໂພກ	9.085	9.766
ຄ່າໂທລະຄົມມະນາຄົມ	9.435	9.538
ຄ່າປະກັນໄພ	6.885	8.652
ຄ່າອາກອນ ແລະ ພາສີອື່ນໆ	2.019	5.900
ຄ່າເຝິກອົບຮົມ, ການປະຊຸມ ແລະ ການສຳມະນາ	9.162	4.582
ຄ່າເຊົ່າ	7.533	4.497
ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	5.052	4.424
ຄ່າທີ່ປຶກສາ ແລະ ຄ່າທຳນຽມການບໍລິການທາງການເງິນ	2.783	3.096
ຄ່ານ້ຳມັນ	4.502	2.067
ລາຍຈ່າຍດອກເບ້ຍສຳລັບສັນຍາເຊົ່າ	1.016	1.210
ອື່ນໆ	28.114	35.303
	195.263	**175.296**

12. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ (“ທຫລ”)

	2022 ລ້ານກີບ	2021 ລ້ານກີບ
ເງິນສົດໃນຄັງເປັນເງິນກີບ	1.836.261	1.641.453
ເງິນສົດໃນຄັງເປັນເງິນຕາຕ່າງປະເທດ	2.003.515	1.232.341
ຍອດເຫຼືອຢູ່ ທຫລ		
- ເງິນຝາກກະແສລາຍວັນ	21.205.571	14.445.195
- ເງິນແຮຝາກບັງຄັບ (*)	2.196.153	1.350.120
- ເງິນຝາກປະຈຳ	516.600	334.890
ດອກເບ້ຍຄ້າງຮັບ	28.194	18.277
	27.786.294	**19.022.276**

ເງິນຝາກຢູ່ກັບທະນາຄານແຫ່ງ ສປປ ລາວ ລວມມີບັນຊີເງິນຝາກເພື່ອການຊຳລະສະສາງ ແລະ ເງິນຝາກແຮບັງຄັບ. ເງິນຝາກປະເພດນີ້ບໍ່ມີດອກເບ້ຍ.

(*) ພາຍໃຕ້ລະບຽບການຂອງທະນາຄານກາງ, ທະນາຄານຖືກຮຽກຮ້ອງໃຫ້ຮັກສາຄັງສະສົມເງິນສົດກັບທະນາຄານກາງ ໃນຮູບແບບເງິນຝາກແຮບັງຄັບ, ເຊິ່ງຖືກຄິດໄລ່ 5,00% ສຳລັບສະກຸນເງິນກີບ ແລະ 5,00% ສຳລັບສະກຸນເງິນຕ່າງປະເທດ, ສອງອາທິດຕໍ່ຄັ້ງ (2021 3,00% ແລະ 5,00%) ຂອງເງິນຝາກລູກຄ້າທີ່ມີມື້ຄົບກຳນົດຕ່ຳກວ່າ 12 ເດືອນ. ພາຍໃນປີ, ທະນາຄານໄດ້ຮັກສາຍອດເງິນຝາກແຮບັງຄັບໃນມູນຄ່າທີ່ຖືກຕ້ອງຕາມລະບຽບຂອງທຫລ. ເງິນຝາກທີ່ຖືກຈຳກັດນີ້ກັບທຫລ. ແມ່ນບໍ່ສາມາດນຳໃຊ້ໃນການດຳເນີນງານປະຈຳວັນໄດ້.

13. ເງິນຝາກຢູ່ທະນາຄານອື່ນ

	2022 ລ້ານກີບ	2021 ລ້ານກີບ
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ	**7.033.415**	**7.639.523**
- ເປັນເງິນກີບ	255.257	181.421
- ເປັນເງິນຕາຕ່າງປະເທດ	6.778.158	7.458.102
ເງິນຝາກມີກຳນົດ	**4.722.038**	**1.468.772**
- ເປັນເງິນກີບ	3.105.000	747.890
- ເປັນເງິນຕາຕ່າງປະເທດ	1.617.038	720.882
ດອກເບ້ຍຄ້າງຮັບ	**100.266**	**6.675**
	11.855.719	**9.114.970**

ອັດຕາດອກເບ້ຍສຳລັບໜີ້ຕ້ອງຮັບທະນາຄານອື່ນພາຍໃນປີມີດັ່ງລຸ່ມນີ້:

	2022 % ຕໍ່ປີ	2021 % ຕໍ່ປີ
ເງິນຝາກກະແສລາຍວັນ	0,15% - 1,20%	0,07% - 1,10%
ເງິນຝາກປະຢັດ	2,16%	0,07% - 2,16%
ເງິນຝາກມີກຳນົດ	2,00% - 7,50%	0,15% - 6,36%

14. ເງິນໃຫ້ກູ້ຢືມແກ່ລູກຄ້າ

	2022 ລ້ານກີບ	2021 ລ້ານກີບ
ເງິນໃຫ້ກູ້ຢືມແກ່ລູກຄ້າ	42.808.801	30.080.974
ປະກອບມີ:		
ລົບ: ເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າ (ປົດອະທິບາຍຂໍ້ທີ 15)	(1.809.562)	(1.457.635)
ດອກເບ້ຍຄ້າງຮັບ	6.236.133	3.748.731
	47.235.372	**32.372.070**

ອັດຕາດອກເບ້ຍສຳລັບເງິນກູ້ທຸລະກິດພາຍໃນໄລຍະມີ ດັ່ງລຸ່ມນີ້:

	2022 ອັດຕາດອກເບ້ຍ % ຕໍ່ປີ	2021 ອັດຕາດອກເບ້ຍ % ຕໍ່ປີ
ເງິນກູ້ເປັນເງິນ ກີບ	5,00% - 16,00%	5,00% - 16,00%
ເງິນກູ້ເປັນເງິນ ໂດລາ	4,99% - 16,00%	4,15% - 16,00%
ເງິນກູ້ເປັນເງິນ ບາດ	6,00% - 11,50%	6,00% - 10,00%

ການວິເຄາະຖານະເງິນກູ້ຂອງລູກຄ້າຕາມສະກຸນເງິນ

	2022 ລ້ານກີບ	2021 ລ້ານກີບ
ເງິນກູ້ເປັນເງິນ ກີບ	12.763.474	10.920.255
ເງິນກູ້ເປັນເງິນ ໂດລາ	24.790.269	15.408.832
ເງິນກູ້ເປັນເງິນ ບາດ	5.255.058	3.751.887
	42.808.801	**30.080.974**

ການວິເຄາະຖານະເງິນກູ້ຂອງລູກຄ້າຕາມມື້ຄົບກຳນົດເດີມ:

	2022 ລ້ານກີບ	2021 ລ້ານກີບ
ເງິນກູ້ໄລຍະສັ້ນ	4.560.760	2.714.300
ເງິນກູ້ໄລຍະກາງ	24.929.587	17.234.346
ເງິນກູ້ໄລຍະຍາວ	13.318.454	10.132.328
	42.808.801	**30.080.974**

ການວິເຄາະຖານະເງິນກູ້ຂອງລູກຄ້າສຳລັບແຕ່ລະຂະແໜງອຸດສາຫະກຳ:

	2022		2021	
	ລ້ານກີບ	%	ລ້ານກີບ	%
ຂະແໜງ ອຸດສາຫະກຳ	23.252.832	54,32%	16.367.536	54,41%
ຂະແໜງ ບໍລິການ	5.667.984	13,24%	4.609.807	15,31%
ຂະແໜງ ການຄ້າ	4.672.093	10,91%	3.830.878	12,73%
ຂະແໜງ ກໍ່ສ້າງ	5.120.441	11,96%	3.723.445	12,37%
ຂະແໜງ ຂົນສົ່ງ	1.751.815	4,09%	1.199.632	3,99%
ຂະແໜງ ປະກອບວັດຖຸເຕັກນິກ	1.755.682	4,10%	50.507	0,17%
ຂະແໜງ ກະສິກຳ - ປ່າໄມ້	80.631	0,19%	45.683	0,15%
